# ຄະນະກຳມະການຄຸ້ມຄອງແຫ່ງຊາດ
# ເພື່ອການແກ້ໄຂບັນຫາລະເບີດບໍ່ທັນແຕກ
# ທີ່ຕົກຄ້າງ ຢູ່ ສປປ ລາວ

## ບົດລາຍງານ ຂອງ ຂະແໜງການ
## ປະຕິບັດງານ ເກັບກູ້ລະເບີດ
## ບໍ່ທັນແຕກ ແຫ່ງ ສປປ ລາວ ປະຈຳປີ 2006

ນະຄອນຫຼວງວຽງຈັນ

ສປປ ລາວ

# ບົດລາຍງານ ຂອງ ບັນດາຂະແໜງ ກາຸນປະຕິບັດງານ ເກັບກູ້ລະເບີດ ແຫ່ງ ສປປ ລາວ ປະຈຳປີ 2006

*ຖ້າຕ້ອງການຂໍ້ມູນເພີ່ມເຕີມ ກະລຸນາພົວພັນ:*

ຄະນະກຳມະການຄຸ້ມຄອງແຫ່ງຊາດ ເພື່ອແກ້ໄຂ
ບັນຫາລະເບີດບໍ່ທັນແຕກ ທີ່ຕົກຄ້າງ ຢູ່ ສປປ ລາວ
ບ້ານ ສີສະຫວາດໄຕ້
ເມືອງ ຈັນທະບູລີ
ນະຄອນຫຼວງວຽງຈັນ, ສປປ ລາວ
ຕູ້ ປ.ນ 345
ແວບໄຊ: www.nra.gov.la
ອີແມວ: nra@laopdr.com
ໂທ: (856-21) 244 228, 252 617, 244 218
ແຟກ: (856-21) 244 219

ລວບລວມ ແລະ ອອກແບບ
ບຸນເພັງ ສີສະຫວັດ ແລະ ຣຸດ ບົດທົມເລ

ສາລະບານ ໜ້າ


ຄຳນຳ: ປະທານ ຄຄຊ 6
ຄຳນຳ: ຫົວໜ້າຫ້ອງການ ຄຄຊ. 8
ຄຳນຳ: ທີ່ປຶກສາອາວຸໂສ. 10

ແຜນທີ່ 1: ຄວາມທຸກຍາກ ໃນ ສປປ ລາວ 11
ແຜນທີ່ 2: ຜົນກະທົບ ຈາກລະເບີດບໍ່ທັນແຕກ ທີ່ຕົກຄ້າງ ຢູ່ ສປປ ລາວ 12
ແຜນທີ່ 3: ສະຖານທີ່ປະຕິບັດງານ ຂອງ ບັນດາໂຄງການ ເກັບກູ້ລະເບີດບໍ່ທັນແຕກ ຢູ່ ສປປ ລາວ 13
ແຜນທີ່ 4: ສະຖານທີ່ເກີດອຸປະຕິເຫດ 14

1. ພາກສະເໜີ 15
1.1. ບັນຫາ ລະເບີດບໍ່ທັນແຕກ/ມີນຢູ່ ສປປ ລາວ 15
1.2. ອຸປະຕິເຫດ ຈາກລະເບີດບໍ່ທັນແຕກ/ມີນ ຢູ່ ສປປ ລາວ 15
1.3. ສະຫຼຸບ ຜົນງານຕົ້ນຕໍຂອງຂະແໜງການເກັບກູ້ລະເບີດບໍ່ທັນແຕກໃນປີ 2006 16
1.4. ຄວາມຄືບໜ້າ ຂອງ ແຜນຍຸດທະສາດປີ 2003 -2013 16
1.5. ລາຍຈ່າຍສຳລັບປີ 2006 ຂອງຂະແໜງການເກັບກູ້ລະເບີດບໍ່ທັນແຕກ 18
2. ຄະນະກຳມະການຄຸ້ມຄອງແຫ່ງຊາດເພື່ອການແກ້ໄຂບັນຫາລະເບີດບໍ່ທັນແຕກ ທີ່ຕົກຄ້າງຢູ່ ສປປ ລາວ. 19
2.1. ຄວາມເປັນມາ 19
2.2. ວິໄສທັດ ຂອງ ຄຄຊ 19
2.3. ເປົ້າໝາຍຂອງ ຄຄຊ 19
2.4. ຈຸດປະສົງ ຂອງ ຄຄຊ 19
2.5. ຜົນສຳເລັດຕົ້ນຕໍໃນປີ 2006 20
2.6. ການປະຕິບັດງານ 20
2.7. ການພັດທະນາມາດຕະຖານແຫ່ງຊາດກ່ຽວກັບລະເບີດບໍ່ທັນແຕກ/ມີນ 22
2.8. ການຝຶກອົບຮົມ ຍົກລະດັບຂີດຄວາມສາມາດ 23
2.9. ບຸກຄະລາກອນໃນປີ 2006 23
2.10. ຜູ້ໃຫ້ທຶນ 23
2.11. ຂໍ້ຕົກລົງສັນຍາ 23
2.12. ຜູ້ໃຫ້ທຶນຕົ້ນຕໍ 24
2.13. ການໃຊ້ຈ່າຍ 24
2.14 ໂຄງຮ່າງການຈັດຕັ້ງຂອງຫ້ອງການຄະນະກຳມະການຄຸ້ມຄອງ ແຫ່ງຊາດ ເພື່ອແກ້ໄຂບັນຫາລະເບີດບໍ່ທັນແຕກທີ່ຕົກຄ້າງ ຢູ່ ສປປ ລາວ 25
3. ໂຄງການເກັບກູ້ລະເບີດແຫ່ງ ສປປ ລາວ (ຄກລ) 26
3.1. ຄວາມເປັນມາ 26
3.2. ຜົນສຳເລັດຕົ້ນຕໍໃນປີ 2006 26
3.3. ການປະຕິບັດງານ 26
3.4. ການຝຶກອົບຮົມ 27
3.5. ບຸກຄະລາກອນ 27
3.6. ຄູ່ຮ່ວມງານປະຕິບັດ 27
3.7. ຜູ້ໃຫ້ທຶນຕົ້ນຕໍ 27
3.8. ການໃຊ້ຈ່າຍ 28
4. ອົງການທີ່ປຶກສາດ້ານລະເບີດ (ແມັກ/MAG) 29
4.1. ຄວາມເປັນມາ 29
4.2. ການປະຕິບັດງານ 29
4.3. ການຝຶກອົບຮົມ 30
4.4. ບຸກຄະລາກອນ 31

4.5. ຄູ່ຮ່ວມປະຕິບັດງານ 31
4.6. ຜູ້ໃຫ້ທຶນຕົ້ນຕໍ 31
4.7. ຜູ້ໃຫ້ທຶນຕົ້ນຕໍ 32
4.8. ການໃຊ້ຈ່າຍ 32
5. ອົງການສາກົນເພື່ອຄົນພິການແບບຍຸງມ (ສພບ) 33
5.1. ຄວາມເປັນມາ 33
5.2. ບໍລິບົດສະເພາະ 33
5.3. ການປະຕິບັດງານ 33
5.4. ຜົນສໍາເລັດໃນປີ 2006 33
5.5. ການຝຶກອົບຮົມ 34
5.6. ບຸກຄະລາກອນ 34
5.7. ຄູ່ຮ່ວມປະຕິບັດງານ 34
5.8. ຜູ້ໃຫ້ທຶນຕົ້ນຕໍ 34
5.9. ຜູ້ໃຫ້ທຶນຕົ້ນຕໍ 34
6. ໂຄງການເກັບກູ້ລະເບີດສະວິດ (FSD) 35
6.1. ຄວາມເປັນມາ 35
6.2. ຜົນສໍາເລັດຕົ້ນຕໍໃນປີ 2006 35
6.3. ການປະຕິບັດງານ 35
6.4. ການຝຶກອົບຮົມ 35
6.5. ບຸກຄະລາກອນ 36
6.6. ຄູ່ຮ່ວມປະຕິບັດງານ 36
6.7. ຜູ້ໃຫ້ທຶນຕົ້ນຕໍ 36
6.8. ການໃຊ້ຈ່າຍ 36
7. ໂຄງການຮ່ວມມືດ້ານການເກັບກູ້ລະເບີດມິນເຊີດຈໍາກັດ 37
7.1. ຄວາມເປັນມາ 37
7.2. ຜົນສໍາເລັດຕົ້ນຕໍສໍາລັບປີ 2006 37
7.3. ການຝຶກອົບຮົມ 37
7.4. ບຸກຄະລາກອນ 37
8. ໂຄງການເກັບກູ້ລະເບີດຟີນິກຈໍາກັດ. (PCL) 38
8.1. ຄວາມເປັນມາ 38
8.2. ການປະຕິບັດງານໃນປີ 2006 38
8.3. ບຸກຄະລາກອນ 38
9. ກະຊວງສຶກສາທິການ 39
9.1. ຄວາມເປັນມາ 39
9.2. ຜົນໄດ້ຮັບຕົ້ນຕໍໃນປີ 2006 39
9.3. ການປະຕິບັດງານ 40
9.4. ການຝຶກອົບຮົມ 40
9.5. ບຸກຄະລາກອນ 40
9.6. ຄູ່ຮ່ວມປະຕິບັດງານ 40
9.7. ຜູ້ໃຫ້ທຶນຕົ້ນຕໍ 40
10. ຊາວໜຸ່ມ ປປ ລາວ 41
10.1. ຄວາມເປັນມາ 41
10.2. ຜົນໄດ້ຮັບຕົ້ນຕໍໃນປີ 2006 41
10.3. ການປະຕິບັດງານ 42
10.4. ການຝຶກອົບຮົມ 42
10.5 ຄູ່ຮ່ວມປະຕິບັດງານ 42
10.6. ຜູ້ໃຫ້ທຶນຕົ້ນຕໍ 42
11. ກະຊວງສາທາລະນະສຸກ 43

12. ອົງການໂຄບ (COPE) 44
12.1.ຄວາມເປັນມາ 44
12.2.ຜົນສຳເລັດຕົ້ນຕໍໃນປີ 2006 44
12.3.ການປະຕິບັດງານ 44
12.4. ການຝຶກອົບຮົມ 44
12.5.ບຸກຄະລາກອນ 44
12.6.ຄູ່ຮ່ວມປະຕິບັດງານ 45
12.7.ຜູ້ໃຫ້ທຶນຕົ້ນຕໍ 45
12.8.ການໃຊ້ຈ່າຍ 45
13. ໂຄງການຟື້ນຟູຄົນພິການໃນຊຸມຊົນຂອງອົງການສາກົນ ເພື່ອຄົນພິການ ແບບຢຽມ (CBR) 46
13.1. ຄວາມເປັນມາ 46
13.2. ຈຸດປະສົງຂອງໂຄງການ 46
13.3. ບໍລິບົດສະເພາະ 46
13.4. ການປະຕິບັດງານ ຈັດລຽງຕາມການເວລາ 46
13.5. ຜົນສຳເລັດຕົ້ນຕໍໃນປີ 2006 47
13.6. ການຝຶກອົບຮົມ 48
13.7. ບຸກຄະລາກອນ 48
13.8. ຄູ່ຮ່ວມປະຕິບັດງານ 48
13.9. ຜູ້ໃຫ້ທຶນຕົ້ນຕໍ 48
13.10. ຜູ້ໃຫ້ທຶນຕົ້ນຕໍ 48
14. ອົງການສຶກສາໂລກ/ຄອນຊອກຊຽມປະຈຳ ສປປ ລາວ 49
14.1.ຄວາມເປັນມາ 49
14.2.ຜົນສຳເລັດຕົ້ນຕໍໃນປີ 2006 50
14.3.ການປະຕິບັດງານ 50
14.4. ການຝຶກອົບຮົມ 51
14.5. ຄູ່ຮ່ວມປະຕິບັດງານ 51
14.6. ຜູ້ໃຫ້ທຶນຕົ້ນຕໍ 51
15. ສະມາຄົມການຊ່ວຍເຫຼືອແລະບັນເທົາທຸກ (AAR) 52
15.1.ຄວາມເປັນມາ 52
15.2.ຜົນສຳເລັດຕົ້ນຕໍໃນປີ 2006 52
15.3.ການປະຕິບັດງານ 52
15.4 ການຝຶກອົບຮົມ 53
15.5. ຄູ່ຮ່ວມປະຕິບັດງານ 53
15.6. ຜູ້ໃຫ້ທຶນຕົ້ນຕໍ 53
15.7.ການໃຊ້ຈ່າຍ 53
16. ສະມາຄົມຄົນພິການລາວ (LDPA) 54
16.1.ຄວາມເປັນມາ 54
16.2.ຜົນສຳເລັດຕົ້ນຕໍໃນປີ 2006 55
16.3.ການປະຕິບັດງານ 55
16.4 ການຝຶກອົບຮົມ 55
16.5. ຄູ່ຮ່ວມປະຕິບັດງານ 56
16.6. ຜູ້ໃຫ້ທຶນຕົ້ນຕໍ 56
16. ເອກະສານຊ້ອນທ້າຍ
ເອກະສານຊ້ອນທ້າຍ1 : ແຜນຍຸດທະສາດແຫ່ງຊາດ ກ່ຽວກັບ ການແກ້ໄຂບັນຫາລະເບີດບໍ່ທັນແຕກ ທີ່ ຕົກຄ້າງ ຢູ່ໃນ ສ.ປ.ປ.ລາວ (2003 - 2013) 57
ເອກະສານຊ້ອນທ້າຍ2 : ດຳລັດວ່າດ້ວຍການແຕ່ງຕັ້ງ ຄະນະກຳມະການຄຸ້ມຄອງແຫ່ງຊາດ (ຄຄຊ) ເພື່ອແກ້ໄຂບັນຫາລະເບີດບໍ່ທັນແຕກ ທີ່ຕົກຄ້າງ ໃນ ສປປ ລາວ 67
ເອກະສານຊ້ອນທ້າຍ3 : ຂໍ້ຕົກລົງວ່າດ້ວຍ ການຈັດຕັ້ງ ແລະ ການເຄື່ອນໄຫວຂອງ ຄຄຊ 69

## ຄຳນຳ: ປະທານ ຄຄຊ



ຂ້າພະເຈົ້າຮູ້ສຶກປິຕິຍິນດີທີ່ໄດ້ນຳສະເໜີບົດລາຍງານ ປະຈຳປີ 2006 ຂອງຄະນະກຳມະການ ຄຸ້ມຄອງແຫ່ງຊາດ ກ່ຽວກັບ ການແກ້ໄຂ ບັນຫາ ລະເບີດບໍ່ທັນແຕກ ທີ່ຕົກຄ້າງຢູ່ ສປປລາວ (ຄຄຊ), ໂດຍຈະນຳສະເໜີ ຜົນສຳເລັດອັນຕົ້ນຕໍ ໃນ ການຈັດຕັ້ງ ປະຕິບັດກິດຈະການ ຂອງຂະແໜງການນີ້, ຕາມ ແຜນບຸລິມະສິດ ທີ່ໄດ້ກຳນົດໄວ ໃນແຜນຍຸດທະສາດແຫ່ງຊາດ "**ເສັ້ນທາງກ້າວໄປສູ່ຄວາມປອດໄພ**". ທາງ ຄຄຊ ພວກຂ້າພະເຈົ້າ, ໄດ້ພະຍາຍາມລະດົມທຶນຮອນ ເພື່ອປະຕິບັດໜ້າທີ່ການຄຸ້ມຄອງ,ການບໍ ລິຫານງານ, ການປະສານງານ ແລະການຮ່ວມມືກັບບັນດາອົງການປະຕິບັດງານທັງໝົດ, ເພື່ອພັດ ທະນາແຜນນະໂຍບາຍ, ກົນໄກໃນການອອກ ໃບຢັ້ງຢືນຮັບຮອງ ແລະອະນຸຍາດ, ການສະໜອງຂໍ້ມູນໃຫ້ບັນດາອົງການປະຕິບັດງານ ແກ້ໄຂບັນຫາລະເບີດບໍ່ທັນແຕກທີ່ຕົກຄ້າງໃນສປປລາວ.ນອກນັ້ນ, ຄຄຊ ພວກຂ້າພະເຈົ້າຍັງສາມາດດຳເນີນ ບົດບາດໃນການຄວບຄຸມ ແລະ ຕິດຕາມກວດກາເບິ່ງ ບັນດາອົງການປະຕິບັດງານ ໃນທຸກກິດຈະການ ເປັນຕົ້ນ: ການສຳຫຼວດ ແລະ ເກັບກູ້ລະເບີດ, ທຳລາຍເຄື່ອນທີ່, ການສຶກສາຄວາມສ່ຽງໄພຕໍ່ບັນຫາລະເບີດບໍ່ທັນແຕກໃຫ້ແກ່ຊຸມຊົນ, ກິດຈະການ ຊ່ວຍເຫຼືອຜູ້ປະສົບເຄາະ ຮ້າຍ ແລະການຝຶກອົບຮົມຍົກລະດັບຂີດຄວາມສາມາດຂອງນັກວິຊາການໃນຂະແໜງ ການກວດເກັບກູ້ລະເບີດໃນທົ່ວປະເທດ.

ນັບແຕ່ປີ1964 ຫາ1973, ສປປລາວ ໄດ້ເປັນສະໜາມລົບອັນກວ້າງຂວາງ ເປັນປະເທດໜຶ່ງ ທີ່ໄດ້ຖືກຖິ້ມລະເບີດໃສ່ຢ່າງໜັກໜ່ວງໂດຍຄິດສະເລ່ຍແລ້ວມີຫຼາຍກວ່າ 580,000ຖ້ຽວບິນ ທີ່ໄດ້ຖິ້ມລະເບີດ ໃນຈຳນວນກວ່າ2 ລ້ານໂຕນ. ໃນນັ້ນ, ປະມານ 30% ຂອງຈຳນວນລະເບີດທັງໝົດທີ່ໄດ້ຖິ້ມລົງ ແມ່ນຍັງບໍ່ທັນແຕກ, ອັນເຮັດໃຫ້ ສປປ ລາວ ມີຜົນກະທົບຢ່າງໜັກໜ່ວງ ແລະເປັນໄພຂົ່ມຂູ່ ຕໍ່ ການດຳລົງຊີວິດຂອງປະຊາຊົນບັນດາເຜົ່າ ໃນ 14 ແຂວງ ໃນຈຳນວນ 17 ແຂວງທົ່ວປະເທດ. ການສຳຫລວດໃນປີ1996 ເຫັນວ່າເນື້ອທີ່ຜົນກະທົບຈາກລະເບີດບໍ່ທັນແຕກທີ່ຕົກຄ້າງ ປາງສິງຄາມໄດ້ກວມ 87,231 ຕາລາງກິໂລແມັດ, ຄິດປະມານ 25% ຂອງເນື້ອທີ່ທັງໝົດໃນທົ່ວປະເທດ,ໃນນັ້ນ ເປັນພູມລຳເນົາ ຂອງ ປະຊາຊົນ ໃນ 2,861 ບ້ານ ທີ່ຖືກກະທົບ, ປະມານ 25% ຂອງຈຳນວນບ້ານ ທັງໝົດໃນ ສປປ ລາວ.

ເນື່ອງຈາກວ່າລະເບີດບໍ່ທັນແຕກ ຍັງຕົກຄ້າງຢັ້ງຢ່າຍຢູ່ຕາມເນື້ອທີ່ດິນ ສຳລັບການຜະລິດກະ ສິກຳ, ທົ່ງນາຮົ້ວສວນ, ແມ່ນ້ຳລຳເຊ, ພູຜາປ່າດົງແລະຂອບເຂດເນື້ອທີ່ພັກພາອາໄສ ຂອງປະຊາຊົນ ບັນດາເຜົ່າ,ຈຶ່ງມັກເກີດອຸປະຕິເຫດ ຍອ້ນລະເບີດເຮັດໃຫ້ມີຜູ້ຖືກເຄາະຮ້າຍ,ບາດເຈັບແລະລົ້ມຕາຍໄປປະມານ200 ຫາ 400 ຄົນຕໍ່ປີ. ສະນັ້ນ, ບັນຫາລະເບີດບໍ່ທັນແຕກຈຶ່ງເປັນອຸປະສັກອັນໃຫຍ່ຫຼວງຕໍ່ການດຳລົງຊີວິດຂອງປະຊາຊົນບັນດາເຜົ່າ,ການພັດທະນາໂຄງລາງເສດຖະກິດ-ສັງຄົມໃນ ສປປ ລາວ.

ສປປ ລາວໄດ້ເລີ່ມດຳເນີນໂຄງ ການກວດເກັບກູ້ລະເບີດບໍ່ທັນແຕກແຕ່ປີ 1995 ເຖິງປະຈຸບັນນີ້, ເປັນເວລາ 11 ປີ ກວ່າແລ້ວ ທີ່ບັນດາ ອົງການປະຕິບັດງານໄດ້ພະຍາຍາມ ແກ້ໄຂ ບັນຫາ ລະເບີດບໍ່ທັນແຕກ ທີ່ຕົກຄ້າງຢັ້ງຢາຍ ຢູ່ຫຼາຍແຂວງ ທີ່ມີຜົນກະທົບຢ່າງຮ້າຍແຮງ,ເພື່ອຕອບສະໜອງຄວາມຮຽກຮ້ອງຕ້ອງການ ຂອງປະຊາຊົນບັນດາເຜົ່າ ໃຫ້ສາມາດ ດຳລົງຊີວິດ ດ້ວຍຄວາມປອດໄພ, ຫຼຸດຜ່ອນຈຳນວນຄົນ ທີ່ປະສົບເຄາະຮ້າຍ, ຖືກບາດເຈັບ,ລົ້ມຕາຍ ແລະສະໜອງເນື້ອທີ່ດິນປູກຝັງ ຜະລິດກະສິກຳໂດຍປະສະຈາກລະເບີດບໍ່ທັນແຕກ. ພອ້ມກັນນັ້ນ,ຍັງໄດ້ກວດເກັບກູ້ເນື້ອທີ່ ສຳລັບ ບັນດາໂຄງການ ພັດທະນາຊົນນະບົດ, ໂຄງການ ພັດທະນາເສດຖະກິດ-ສັງຄົມອີກດ້ວຍ.

ໃນຂອບເຂດທົ່ວປະເທດ,ກວ່າໜຶ່ງສ່ວນສາມຂອງເນື້ອທີ່ທັງໝົດໄດ້ຮັບຜົນກະທົບຈາກລະເບີດບໍ່ທັນແຕກ,ຊຶ່ງຮຽກຮ້ອງໃຫ້ຫັນເປັນພາລະກິດອັນຍາວນານ ນັບເປັນຫລາຍສິບໆປີ ໃນການແກ້ໄຂ ບັນ ຫາລະເບີດບໍ່ທັນແຕກດັ່ງກ່າວ. ສະນັ້ນເພື່ອປະຕິບັດພາລະກິດແກ້ໄຂບັນຫາຜົນກະທົບດັ່ງກ່າວ, ບັນດາອົງການປະຕິບັດງານກວດເກັບກູ້ລະເບີດຈຶ່ງໄດ້ວາງແຜນການແລະ ຈັດຕັ້ງປະຕິບັດ ໂຄງການຂອງຕົນ ໂດຍ ສອດຄ່ອງກັບແຜນຍຸດທະສາດແຫ່ງຊາດ, ຕິດພັນກັບ ແຜນພັດທະນາເສດຖະກິດສັງຄົມແຫ່ງຊາດ ຄັ້ງທີ V(2001-2005)ແລະ ຄັ້ງທີ VI(2006-2010), ລວມທັງເປົ້າໝາຍສະຫະສະວັດເພື່ອການພັດທະນາ.ບັນດາອົງການປະຕິບັດງານ ກວດເກັບກູ້ລະເບີດໄດ້ດຳເນີນງານຢູ່ໃນໝູ່ບ້ານຂອງບັນດາເມືອງ ທີ່ທຸກຍາກກວ່າໝູ່ ພາຍໃນ 9 ແຂວງ ທີ່ໄດ້ຮັບຜົນກະທົບຢ່າງຮ້າຍແຮງ ໃນທົ່ວປະເທດ.

ໃນນາມຄະນະກຳມະການຄຸ້ມຄອງແຫ່ງຊາດເພື່ອການແກ້ໄຂບັນຫາລະເບີດບໍ່ທັນແຕກທີ່ຕົກຄ້າງຢູ່ສປປລາວ (ຄຄຊ), ຂ້າພະເຈົ້າ ຂໍຊົມເຊີຍ ແລະ ຕີລາຄາສູງ ຕໍ່ຜົນສຳເລັດ ທີ່ ບັນດາອົງການປະຕິ ບັດງານກວດເກັບກູ້ລະເບີດບໍ່ທັນແຕກ, ຊຶ່ງມີພະນັກງານວິຊາການລາວ ແລະຊ່ຽວຊານຕ່າງປະເທດຈຳນວນ ພັນກວ່າຄົນທີ່ໄດ້ຕັ້ງໜ້າປະຕິບັດໜ້າທີ່ດ້ວຍຄວາມຮັບຜິດຊອບສູງ. ຂໍຖືໂອກາດນີ້, ຕາງໜ້າໃຫ້ລັດຖະບານແຫ່ງ ສປປ ລາວ, ສະແດງຄວາມຂອບໃຈຢ່າງເລິກເຊິ່ງ ມາຍັງບັນດາຄູ່ຮ່ວມງານ,ຜູ້ໃຫ້ທຶນ ແລະວົງຄະນາຍາດສາກົນ ທີ່ໄດ້ມີນ້ຳໃຈມະນຸດສະທຳ ໂດຍໄດ້ສະໜັບສະໜູນ ດ້ານທຶນຮອນ ແລະ ວັດຖຸ-ອຸປະກອນ ສະໜອງ ໃຫ້ແກ່ ບັນດາອົງການປະຕິບັດງານ ແລະ ຄຄຊ ພວກຂ້າພະເຈົ້າ; ຫວັງຢ່າງຍິ່ງວ່າ ພວກທ່ານຈະສືບຕໍ່ໃຫ້ການສະໜັບສະໜູນ ຄຄຊ ພວກຂ້າພະເຈົ້າໄປອີກ ເພື່ອເຮັດໃຫ້ ສປປລາວ ກາຍເປັນ **"ປະເທດ ທີ່ປອດ ຜົນກະທົບ "** ຈາກລະເບີດບໍ່ທັນແຕກ,ໃຫ້ປະຊາຊົນບັນດາເຜົ່າ ສາມາດທຳມາຫາກິນ ດ້ວຍຄວາມປອດໄພສູງ, ປະກອບສ່ວນ ໃຫ້ ສປປ ລາວ ບັນລຸ ຜົນສຳເລັດ ໃນພາລະກິດ ລຶບລ້າງ ຄວາມທຸກຍາກ ໃນ ປີ 2020 ຕາມຄາດໝາຍ.

ດວງໃຈ ພິຈິດ,
ຮອງນາຍົກລັດຖະມົນຕີ, ລັດຖະມົນຕີ ວ່າການ ກະຊວງ ປ້ອງກັນປະເທດ
ປະທານຄະນະກຳມະການຄຸ້ມຄອງແຫ່ງຊາດ ເພື່ອການແກ້ໄຂ
ບັນຫາລະເບີດບໍ່ທັນແຕກທີ່ຕົກຄ້າງຢູ່ ສປປ ລາວ.

## ຄຳນຳ: ຫົວໜ້າຫ້ອງການ ຄຄຊ



ຂ້າພະເຈົ້າມີຄວາມຍິນດີເປັນຢ່າງຍິ່ງ ທີ່ໄດ້ນຳສະເໜີບົດລາຍງານປະຈຳປີ 2006 ຂອງ ຄະນະກຳມະ ການຄຸ້ມຄອງແຫ່ງຊາດເພື່ອການແກ້ໄຂບັນຫາລະເບີດບໍ່ທັນແຕກທີ່ຕົກຄ້າງຢູ່ ສປປລາວ(ຄຄຊ),ສຳລັບ2006ນີ້ເປັນປີທີ່ມີຄວາມ ທ້າທາຍຢ່າງສູງຕໍ່ຫ້ອງການ ຄຄຊ ຂອງ ພວກຂ້າພະເຈົ້າ,ເນື່ອງຈາກວ່າເປັນປີທຳອິດທີ່ຫ້ອງການ ຄຄຊໄດ້ຮັບການສ້າງຕັ້ງ ຂຶ້ນຢ່າງເປັນ ທາງການ,ການຄຸ້ມຄອງກິດຈະການລະເບີດບໍ່ທັນແຕກກໍຍັງເປັນວຽກງານໃໝ່ສຳລັບພວກ ຂ້າພະເຈົ້າ.

ດັ່ງທີ່ ພະນະທ່ານ ດວງໃຈ ພິຈິດ, ຮອງນາຍົກລັດຖະມົນຕີ, ປະທານຄະນະກຳມະການ ຄຸ້ມຄອງແຫ່ງຊາດ ເພື່ອການແກ້ໄຂບັນຫາລະເບີດບໍ່ທັນແຕກຕົກຄ້າງຢູ່ ສປປ ລາວ ໄດ້ກ່າວ ມາແລ້ວວ່າ ສປປ ລາວ ເປັນປະເທດໜຶ່ງ ທີ່ມີຜົນກະທົບຢ່າງຮ້າຍແຮງທີ່ສຸດຈາກລະເບີດບໍ່ທັນແຕກ,ຊຶ່ງເປັນໄພ ຂົ່ມຂູ່ແລະຜົນສະທ້ອນອັນໜັກໜ່ວງ ຕໍ່ການລົງດຳຊີວິດຂອງ ປະຊາຊົນບັນດາເຜົ່າ.ໃນກໍລະນີຂອງລາວນີ້,ສະພາບ ການກະທົບດັ່ງກ່າວມີປະຕິສຳພັນກັບສະພາບຄວາມທຸກຍາກ,ຍອມວ່າໃນບັນດາ 47 ເມືອງ ທີ່ຖືວ່າທຸກຍາກທີ່ ສຸດມີ 46 ເມືອງທີ່ຖືກກະທົບ ຈາກ ລະເບີດບໍ່ທັນແຕກ. ການແກ້ບັນຫາລະເບີດບໍ່ທັນແຕກຢູ່ ສປປລາວແມ່ນ ສອດຄ່ອງ ກັບແຜນຍຸດທະສາດແຫ່ງຊາດ"ເສັ້ນທາງກ້າວໄປສູ່ຄວາມປອດໄພ"ກ່ຽວກັບການແກ້ໄຂບັນຫາລະເບີດ ບໍ່ທັນແຕກທີ່ຕົກຄ້າງແລະຕິດພັນກັບແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດຄັ້ງທີ V (2001-2005) ແລະ ທີ VI (2006-2010), ລວມທັງເປົ້າໝາຍ ສະຫະສະວັດ ເພື່ອ ການພັດທະນາ.

ຫ້ອງການ ຄຄຊ ໄດ້ເລີ່ມຕົ້ນດຳເນີນງານ ແຕ່ເດືອນ ເມສາ 2006 ເປັນຕົ້ນມາໃນການເຄື່ອນໄຫວ ກິດຈະກຳ ຄຄຊ ໃນໄລຍະ 8 ເດືອນ ຜ່ານມານີ້, ພວກຂ້າພະເຈົ້າໄດ້ສຳເລັດ ໜ້າວຽກຕົ້ນຕໍ ບາງປະການເຊັ່ນ : ສ້າງພື້ນຖານນິຕິກຳ ໃນການກໍ່ຕັ້ງ ສະຖາບັນ ການຈັດຕັ້ງ ຄຄຊ ແລະ ພັດທະນາຂີດຄວາມສາມາດໃຫ້ ພະນັກງານ,ໄດ້ຮ່າງມາດຕະຖານແຫ່ງຊາດກ່ຽວກັບ ກິດຈະການ ຄຸ້ມຄອງລະເບີດບໍ່ທັນແຕກ, ຮ່າງລະບຽບ ການຮັບຮອງເອົາບັນດາໂຄງການ ຫຼື ບໍລິສັດທີ່ມາເຄື່ອນໄຫວວຽກງານ ການເກັບກູ້ລະເບີດບໍ່ທັນແຕກ ຢູ່ ສປປ ລາວ , ຮ່າງຍຸດທະສາດ ສຳລັບ ໜ່ວຍງານ ສຶກສາຄວາມສ່ຽງ ເພື່ອການແກ້ໄຂບັນຫາລະເບີດບໍ່ທັນແຕກ ສຳລັບ 2007 ຫາ 2010 , ສ້າງລະບົບຖານຂໍ້ມູນ ລະດັບຊາດ ແລະ ເຜີຍແຜ່ໂຄສະນາຂໍ້ມູນຂ່າວ ທາງແວຟໄຊ; ຮັບ ຕ້ອນແຂກລະດັບຂັ້ນສູງຂອງບັນດາປະເທດຜູ້ໃຫ້ທຶນ; ຈັດກອງປະຊຸມເພື່ອຄົ້ນຄ້ວາຮ່າງກົດໝາຍເພື່ອການແກ້ໄຂ ບັນຫາລະເບີດບໍ່ທັນແຕກຢູ່ສປປລາວ, ຈັດກອງປະຊຸມຜູ້ໃຫ້ທຶນ, ດຳເນີນການສຶກສາ ວິໄຈຄວາມສ່ຽງໄພເພື່ອ ຈະທົບທວນຄືນບຸລິມະສິດທີ່ໄດ້ກຳນົດໄວ້ໃນຍຸດທະສາດແຫ່ງຊາດເພື່ອຈຸດປະສົງ ໃນການວາງ ແຜນການດຳເນີນ ງານໃຫ້ແກ່ບັນດາອົງການປະຕິບັດງານກວດເກັບກູ້ລະເບີດຢູ່ ສປປລາວ,ໄດ້ຄັດເລືອກ ເອົາພະນັກງານ ວິຊາການ ເພື່ອ ສັບຊ້ອນເຂົ້າຕຳແໜ່ງງານຕ່າງໆ ສ້າງລະບຽບການພາຍໃນຫ້ອງການ ຄຄຊ ແລະ ນຳໃຊ້ ລະບົບປະກັນສັງຄົມ ພາກ ວິສາຫະກິດ ພາຍໃຕ້ດຳລັດ 207/ນຍ.

ນອກຈາກນັ້ນ,ຫ້ອງການ ຄຄຊ ຍັງໄດ້ເຊັນບົດບັນທຶກຄວາມຊົງຈຳກັບບັນດາ ອົງການ ເຊັ່ນ :ອົງການ MAG,HIBແລະ FSD ເພື່ອຈັດຕັ້ງປະຕິບັດໂຄງການກວດເກັບກູ້ລະເບີດເພື່ອມະນຸດສະທຳ ,ໄດ້ເຮັດໜ້າ ທີ່ປະສານງານ,ໄດ້ເຂົ້າຮ່ວມກອງປະຊຸມ ກ່ຽວກັບ ບັນຫາລະເບີດບໍ່ທັນແຕກ ຢູ່ພາຍໃນ ແລະ ຕ່າງປະເທດ.

ເພື່ອຕອບສະໜອງພາລະກິດອັນຍາວນານ ດ້ານການແກ້ໄຂ ບັນຫາລະເບີດບໍ່ທັນແຕກ ຫ້ອງການ ຄຄຊ ຈຶ່ງໄດ້ວາງແຜນການພັດທະນາ ຄຄຊ ໄລຍະຍາວແບບບືນຍົງ ໃນທົ່ວປະເທດ ໂດຍຈະສ້າງ ຫ້ອງການ ສາຂາໃນ ທົ່ວແຂວງທີ່ມີຜົນກະທົບ ພາຍໃຕ້ການຊີ້ນຳ ຈາກ ຫ້ອງການ ຄຄຊ ສູນກາງ,ໄດ້ດຳເນີນການຝຶກອົບຮົມທັງພາຍ ໃນ ແລະຕ່າງປະເທດ ເພື່ອຍົກຂີດຄວາມສາມາດ ຂອງ ຜູ້ບໍລິຫານ ແລະ ພະນັກງານທົ່ວໄປ ໂດຍພະຍາຍາມສົ່ງ ເສີມໃຫ້ ຫ້ອງການ ຄຄຊ ກາຍເປັນ ອົງກອນແຫ່ງການຮຽນຮູ້ ຢ່າງຕໍ່ເນື່ອງ.

ຜ່ານການຈັດຕັ້ງປະຕິບັດກິດຈະການແກ້ໄຂບັນຫາລະເບີດບໍ່ທັນແຕກຢູ່ ສປປລາວໃນປີ2006 ບັນດາ ອົງການປະຕິບັດງານໄດ້ກວດເກັບກູ້ເນື້ອທີ່ດິນປູກຝັງກະສິກຳແລະພັດທະນາດ້ານອື່ນໆຈຳ ນວນ 4,726.77 ເຮັກຕາ, ທຳລາຍລະເບີດໄດ້ທັງໝົດຈຳນວນ 60,110ໜ່ວຍ,ໄດ້ໂຄສະນາສຶກສາ ປະຊາຊົນ ໃນຈຳນວນ 152,579 ຄົນໃນ ບັນດາບ້ານ ທີ່ຢູ່ໃນບໍລິເວນເນື້ອທີ່ໆມີຜົນກະທົບຈາກລະເບີດບໍ່ທັນແຕກເພື່ອຮັບຮູ້ເຖິງໄພ ຂົ່ມຂູ່ຄວາມອັນຕະລາຍວິທີການປ້ອງກັນ ແລະ ລົກລ້ຽງ ຕໍ່ຄວາມສ່ຽງໄພ ຈາກ ລະເບີດບໍ່ທັນແຕກ.

ໃນນາມຕາງໜ້າ ຫ້ອງການ ຄະນະກຳມະການຄຸ້ມຄອງແຫ່ງຊາດ ເພື່ອການແກ້ໄຂບັນຫາລະເບີດບໍ່ທັນ ແຕກຕົກຄ້າງຢູ່ ສປປລາວ(ຄຄຊ),ຂ້າພະເຈົ້າຂໍສະແດງ ຄວາມຂອບໃຈ ມາຍັງ ບັນດາພະນັກງານ,ນັກວິຊາການ ຊ່ຽວຊານຕ່າງປະເທດບັນດາຄູ່ຮ່ວມງານທີ່ໄດ້ທຸ້ມເທສະຕິປັນຍາແລະເຫື່ອແຮງເພື່ອປະຕິບັດໜ້າທີ່ ຂອງຕົນດ້ວຍ

ຄວາມຮັບຜິດຊອບສູງ,ຂໍສະ ແດງຄວາມຮູ້ບຸນຄູນຕໍ່ບັນດາຜູ້ ໃຫ້ທຶນ,ວົງຄະນາຍາດສາກົນທີ່ໄດ້ມີນໍ້າ ໃຈມະນຸດສະທຳສູງໂດຍ ໃຫ້ການສະໜັບສະໜູນດ້ານທຶນຮອນແລະອຸປະກອນແກ່ ຄຄຊແລະ ບັນດາອົງການ ປະຕິບັດງານດັ່ງກ່າວ ຕະຫຼອດມາ .ຫັວງຢ່າງຍິ່ງວ່າຈະສືບຕໍ່ໄດ້ຮັບການຊ່ວຍເຫລືອສະໜັບສະໜູນໃນຂັ້ນຕໍ່ ໄປ, ບິນ ເສັ້ນທາງກ້າວໄປ ສູ່ຄວາມປອດໄພ ເພື່ອ ຜົນປະໂຫຍດ ຂອງ ປະຊາຊົນ ບັນດາເຜົ່າ ທີ່ ດຳລົງຊີວິດ ໃນ ເຂດເນື້ອທີ່ໆ ຖືກກະທົບ ຈາກ ລະເບີດບໍ່ທັນແຕກ.



ມາລີຍາ ໄຊຍະວົງສ໌,
ຫົວໜ້າ ຫ້ອງການ ຄຄຊ

## ຄຳນຳ ທີ່ປຶກສາອາວຸໂສ



ຕັ້ງແຕ່ໄດ້ເລີ້ມປະຕິບັດໂຄງການແກ້ໄຂບັນຫາລະເບີດບໍ່ທັ້ນແຕກ ໃນ ປີ 1996ເປັນຕົ້ນມາ, ບັນດາອົງການປະຕິບັດງານຕ່າງໆ ກັນໄດ້ສ້າງ ແລະຈັດຕັ້ງ ປະຕິບັດ ແຜນງານປະຈຳປີ ຂອງໃຜລາວໂດຍອີງຕາມ ຂົງເຂດຄວາມຊ່ຽວຊານ ແລະຈຸດເລັ່ງຂອງຕົນເອງ.ແຕ່ວ່າໃນຊຸມປີທີ່ຜ່ານມານີ້ ພວກເຮົາໄດ້ສັງເກດເຫັນວ່າມີການພັດທະນາແບບລັກສະນະເອກກະພາບກັນ ພາຍໃນຂະແໜງ ກິດຈະການ ແກ້ໄຂບັນຫາລະເບີດບໍ່ທັນແຕກ.ໃນປີ 2004 ແຜນຍຸດທະສາດແຫ່ງຊາດ ພາຍໃຕ້ຫົວຂໍ້" ເສັ້ນທາງໄປສູ່ຄວາມປອດໄພ "ໄດ້ຖືກປະກາດໃຊ້ ໂດຍມະຕິຕົກລົງຂອງ ລັດຖະບານ, ທີ່ໄດວາງແຜນການໄລຍະ 10 ປີ ໂດຍກຳນົດເປົ້າໝາຍປະຈຳປີຢ່າງໜັກແໜ້ນ ສຳລັບ ທັງໝົດ ທົ່ວຂະແໜງກິດຈະການແກ້ໄຂລະເບີດບໍ່ທັນແຕກ. ດັ່ງທີ່ ພົນໂທ. ດວງໃຈ ພິຈິດ ໄດ້ກ່າວໃນບົດຄຳນຳວ່າ ແຜນຍຸດທະສາດແຫ່ງຊາດ: "ເສັ້ນທາງໄປສູ່ຄວາມປອດໄພ" ໄດ້ລະບຸ ການສ້າງຕັ້ງ ຄະນະກຳມະ ການຄຸ້ມຄອງແຫ່ງຊາດ ເພື່ອການແກ້ໄຂບັນຫາລະເບີດບໍ່ທັນແຕກທີ່ຕົກຄ້າງຢູ່ ສປປລາວ (ຄຄຊ) ໃນຖານະອົງການຂອງລັດ ທີ່ຊີ້ນຳ ບັນດາອົງການຈັດຕັ້ງຕ່າງໆ ຂອງ ຂະແໜງກິດຈະການ ແກ້ໄຂບັນຫາລະ ເບີດບໍ່ທັນແຕກ ແລະຈາກນັ້ນກໍ່ໄດ້ບອນອີງພື້ນຖານໃຫ້ແກ່ ຄຄຊ.

ດັ່ງທີ່ ທ່ານ ດຣ. ມາລີຍະ ໄຊຍະວົງສ໌ ໄດ້ ກ່າວໃນ ຄຳນຳວ່າ ໃນ ປີ 2006 ຄຄຊ ໄດ້ ເລີ້ມພັດທະນາຕົນຈາກ ສະຖາບັນທີ່ມີແຕ່ຊື່ ມາເປັນອົງການທີ່ດຳເນີນງານຢ່າງຂອນຂ້າງເຕັມສວນ. ພາຍຫລັງ ການແຕ່ງຕັ້ງ ຫົວໜ້າຫ້ອງການ ຄຄຊ ໃນຕົ້ນປີນັ້ນ 2006 ຈຶ່ງມີການເລືອກຮັບເອົາບັນດາ ພະນັກງານຫລັກແລ່ງຜູ້ອື່ນໆຕາມມາໂດຍໄວ.ພະນັກງານ ຫ້ອງການ ຄຄຊ ທຸກຄົນທີ່ຖືກຊັບຊອນມາແຕ່ເບື້ອງຕົ້ນ ກຳລັງຜ່ານເຂົ້າສູ່ໄລຍະປີທີສອງນອກຈາກ ທ່ານ ໂຈ ແວັນກອັບ ( Joe Wenkoff) ທີ່ເຄີຍເປັນທີ່ປຶກສາອາວຸໂສ ຈາກ ສປຊ ມາປະຈຳ ຫ້ອງການ ຄຄຊ. ຂ້າພະເຈົ້າໄດ້ມາເປັນສະມາຊິກໃໝ່ໃນທີມງານ ຫ້ອງການ ຄຄຊ ເພື່ອແທນ ທ່ານ ໂຈ ທີ່ໄດ້ອອກໄປເບັ້ຍບຳນານໃນກາງ ປີ 2006. ຂ້າພະເຈົ້າມາສັງກັດ ຫ້ອງການ ຄຄຊ ພຽງໄລຍະເວລາສັ້ນໆ ກໍ່ສັງເກດເຫັນໄດ້ວ່າ ການພັດທະນາ ສະຖາບັນການຈັດຕັ້ງ ຄຄຊ ມີບາດກ້າວ ຂະຫຍາຍຕົວ ອັນໜັກແໜ້ນ, ຊຶ່ງ ຫວັງວ່າ ຈະສາມາດ ຍືນຍົງຄົງຕົວໄດ້ ເພື່ອ ຕອບສະໜອງຄວາມຄາດຫວັງ ຂອງ ບັນດາອົງການປະຕິບັດງານ ທີ່ອີງໃສ່ ຫ້ອງການ ຄຄຊ ໃຫ້ເປັນຈຸດປະສານງານ ຂອງ ພວກເຂົາ ໃນລະບົບການບໍລິຫານງານ ຂອງ ລັດຖະບານ.

ສົກປີ 2006 ຈະຖືວ່າເປັນປີ ແຫ່ງ ນິມິດໝາຍ ທາງສາກົນ ໃນຂະນະທີ່ເອກະສານສາກົນ ເພື່ອ ເກືອດຫ້າມການນຳໃຊ້ ລະເບີດ "ບົມບີ "ໄດ້ພາໃຫ້ມີຄວາມຄິດລິເລີ້ມຂຶ້ນ. ຄາດວ່າ ສົນທິສັນຍາລະຫວ່າງຊາດ ທີ່ກ່ຽວຂອງ ຈະຖືກຮ່າງຂຶ້ນໃນສົກປີ 2007 ແລະ ຈະສຳເລັດຜົນ ໃນຕົ້ນປີ 2008, ຊຶ່ງ ຈະກາຍເປັນເຄື່ອງມືທາງນິຕິກຳໃນການເກືອດຫ້າມ ການນຳໃຊ້ ລະເບີດ "ບົມບີ " ທີ່ເຄີຍມີຜົນກະທົບຢ່າງຮ້າຍແຮງໃສ່ ປະຊາຊົນ ພົນລະເຮືອນໃນຫລາຍໆປະເທດໃນຊຸມປີທີ່ຜ່ານມາ. ໃນກອນໜ້າໜີ່ໆນີ້ ອາວຸດ ຊະນິດດັ່ງກ່າວເຄີຍຖືກນຳໃຊ້ ໃນບາງປະເທດເຊັ່ນ ອັບການິສຖານ, ອີຣັກ ແລະ ເລບັນນອນ, ຊຶ່ງມັກຈະກາຍເປັນຂ່າວໜ້າໜຶ່ງຢູ່ສະເໝີ. ເຖິງຢ່າງໃດຕາມ, ເຮົາສາມາດເວົ້າໄດ້ວ່າ: ບໍ່ມີປະເທດອື່ນໃດທີ່ຖືກກະທົບຈາກ ວາວຸດລະເບີດ "ບົມບີ " ຢ່າງມາກມາຍ ແລະ ຮ້າຍແຮງກວ່າ ສປປ ລາວ, ດັ່ງນັ້ນ, ບົດລາຍງານນີ້ ຈຶ່ງເປັນ ການວັດແທກ ທີ່ ບົ່ງບອກວ່າ ບັນຫາລະເບີດ "ບົມບີ " ແລະ ລະເບີດຊະໜິດອື່ນໆ ທີ່ຍັງຕົກຄ້າງແຕ່ປາງສົງຄາມ ໄດ້ຖືກແກ້ໄຂຢ່າງເປັນລະບົບ ແລະ ດ້ວຍ ກຳມະວິທີແນວໃດ ໃນສົກປີ 2006.



ທິມ ຮອກເນີ້,
ທີ່ປຶກສາອາວຸໂສ ຫ້ອງການ ຄຄຊ

**ແຜນທີ່ 1: ຄວາມທຸກຍາກ ຂອງ ສປປ ລາວ**



ແຜນທີ່ 2:  ຝົນກະທົບ ຈາກລະເບີດບໍ່ທັນແຕກ ທີ່ຕົກຄ້າງ ຢູ່ ສປປ ລາວ



แผนที่ 3: สะถานที่ปะติบัดงาน ຂອງ บັນດາໂຄງການ ເກັບກູ້ລະເບີດບໍ່ທັນແຕກ ຢູ່ ສປປ ລາວ



ແຜນທີ່ 4: ສະຖານທີ່ເກີດອຸປະຕິເຫດ



# 1. ພາກສະເໜີ

## 1.1. ບັນຫາລູກມີນ/ລະເບີດບໍ່ທັນແຕກຢູ່ ສປປ ລາວ

ສປປ ລາວ ເປັນປະເທດທີ່ມີຄວາມແຕກຕ່າງເປັນພິເສດ ໂດຍຖືກຂະໜານນາມວ່າເປັນປະເທດທີ່ໄດ້ຮັບຜົນກະທົບຈາກ ລະເບີດບໍ່ທັນແຕກຢ່າງໜັກທີ່ສຸດໃນໂລກ. ຍ້ອນເຫດຜົນຂອງການຕໍ່ສູ້ຂອງສົງຄາມອິນດູຈີນໃນລະຫວ່າງປີ 1960 ແລະ 1970 ທີ່ໄດແຜ່ລາມເປັນວົງກວ້າງ ຈຶ່ງເຮັດໃຫ້ ສປປ ລາວໄດ້ກາຍເປັນສະໜາມສູຮົບພາກ ພື້ນດິນຢ່າງຕໍ່ເນື່ອງ ແລະ ຖິ້ມລະເບີດທາງອາກາດຢ່າງໜັກ.

ເລີ່ມແຕ່ປີ 1964 ເຖິງ 1973 ໄດ້ມີຝູງຍົນຖິ້ມລະເບີດມາປະຕິບັດ ຈຳນວນຫຼາຍກວ່າເຄິ່ງລ້ານ ຖ້ຽວບິນໂດຍຂົນສົ່ງລະເບີດຫຼາຍກວ່າ 2 ລ້ານໂຕນ ມາຖິ້ມໃສ່ຜືນແຜ່ນດິນລາວ. ມີການຄາດສະເລ່ຍໄວ້ ວ່າລູກລະເບີດທີ່ຖືກຖິ້ມລົງມາທັງໝົດນັ້ນມີເຖິງ 30% ບໍ່ທັນແຕກ ຫລັງຈາກກະທົບກັບພື້ນດິນ ກໍ່ໃຫ້ເກີດ ຄວາມຫາຍຍານະອັນໃຫຍ່ຫຼວງ ແລະ ສືບຕໍ່ຂ້າຊີວິດ ເຮັດໃຫ້ເສຍອົງຄະ ແລະປະສົບກັບຄວາມທຸກຍາກມາກວ່າ 30 ປີ. ລະເບີດດັ່ງກ່າວນີ້ລວມມີ ລະເບີດກະປາງຈຳນວນ ມະຫາສານ ຊຶ່ງພວກມັນບັນຈຸມີລະເບີດຕໍ່ຕ້ານບຸກຄົນ 'ລະເບີດບົມບີ' (ຊຶ່ງຄົນລາວມັກເອີ້ນ ລະເບີດຊະນິດນີ້ວ່າ : ບົມບີ). ເມື່ອບົມບີໄດ້ຖິ້ມລົງມາ ແລ້ວກໍ່ຈະກາຍເປັນມີນຕໍ່ຕ້ານບຸກຄົນໂດຍປະລິຍາຍ. ການສຶກສາຄົ້ນຄວ້າທີ່ຜ່ານມາໄດ້ຊີ້ໃຫ້ເຫັນວ່າ ມີບົມບີຫຼາຍກວ່າ 260 ລ້ານໜ່ວຍທີ່ໄດ້ຖິ້ມລົງໃສ່ຜືນແຜ່ນດິນລາວ. ນອກຈາກ ບົມບີ ຍັງມີບົມໃຫຍ່, ລູກຈະຫຼວດ, ໝາກແຕກລູກປືນກົນ(ລູກປືນໃຫຍ່) ລູກປືນຄົກ, ມີນຕໍ່ຕ້ານບຸກຄົນ ພ້ອມທັງວັດຖຸລະເບີດຫຼາຍຊະນິດ ເປັນຈຳນວນມະຫາສານ.

ການສຳຫຼວດທົ່ວປະເທດຊຶ່ງໄດ້ຈັດຂຶ້ນໃນປີ 1996 ກ່ຽວກັບຜົນກະທົບຂອງລະເບີດທີ່ບໍທັນແຕກຕໍ່ເສດຖະກິດ-ສັງຄົມຢູ່ ສປປ ລາວ ໄດ້ຊີ້ໃຫ້ເຫັນວ່າ 25% ຂອງບ້ານທັງໝົດໃນທົ່ວປະເທດ ໄດ້ຮັບຜົນກະທົບຈາກລູກລະເບີດບໍ່ທັນແຕກຕົກຄ້າງຢູ່, ມີເນື້ອທີ່ 87,213 ກິໂລຕາແມັດ ຂອງເນື້ອທີ່ທັງໝົດທົ່ວປະເທດ 236,800 ກິໂລຕາແມັດ ຍັງມີລະເບີດບໍ່ທັນແຕກຕົກຄ້າງຢູ່, ເນື້ອທີ່12,427 ກິໂລຕາແມັດ ຢູ່ໃນພາວະຄວາມສ່ຽງໄພສູງ ແລະ ອີກ 74,786 ກິໂລຕາແມັດ ຢູ່ໃນພາວະຄວາມສ່ຽງໄພໃນລະດັບປານກາງ.

ຫຼາຍຊຸມຊົນ ໃນຊົນນະບົດທີ່ຢູ່ໃນສະພາບ ຄວາມທຸກຍາກທີ່ສຸດຍັງຕິດພັນກັບເນື້ອທີ່ໆມີລະເບີດບໍ່ທັນແຕກຕົກຄ້າງ ຢູ່ໃນ ລະດັບສູງເຊັ່ນກັນ, ປະຊາຊົນດຳລົງຊີວິດໃນເງື່ອນໄຂທີ່ຍາກລຳບາກ ແລະ ເຮັດໃຫ້ ພວກເຂົາປະເຊີນໜ້າກັບ 'ຄວາມສ່ຽງໄພ': ພວກເຂົາສືບຕໍ່ດຳລົງຊີວິດດ້ວຍຄວາມທຸກຍາກລຳບາກ ແລະ ມີຫຼາຍໆຄົນທີ່ຂາດອາຫານ ຢ່າງໜັກ ຫຼື ພວກເຂົາມີຄວາມສ່ຽງຕໍ່ການບາດເຈັບ ແລະ ເສຍຊີວິດໃນຂະນະທີ່ ເຮັດວຽກຢູ່ເນື້ອທີ່ໆຍັງມີລະເບີດບໍ່ທັນແຕກ ຕົກຄ້າງ.

## 1.2. ອຸປະຕິເຫດ ຈາກລະເບີດບໍ່ທັນແຕກ/ມີນ ຢູ່ ສປປ ລາວ

ປະຈຸບັນນີ້ຢູ່ ສປປ ລາວ ຍັງບໍ່ທັນມີຕົວເລກທີ່ຊັດເຈນກ່ຽວກັບຜູ້ເຄາະຮ້າຍຈາກອຸປະຕິເຫດ ຍ້ອນລະເບີດ. ໃນປີ 1996 ອົງການສາກົນເພື່ອຄົນພິການປະເທດແບນຢຽມ(HIB) ໄດ້ດຳເນີນການສຳຫຼວດ ກ່ຽວກັບ ລະເບີດບໍ່ທັນແຕກ ແລະ ຜູ້ຖືກເຄາະຮ້າຍຈາກລະເບີດບໍ່ທັນແຕກ. ການສຳຫຼວດຄັ້ງນັ້ນໄດ້ຊີ້ບອກວ່າ ໃນລະຫວ່າງປີ 1973 ເຖິງ 1996 ມີຜູ້ຖືກອຸບັດຕິເຫດ/ຜູ້ຖືກເຄາະຮ້າຍ 10,649 ຄັ້ງ. ສະຫຼຸບລວມ ແລ້ວມີຜູ້ຄົນ ຈຳນວນ 5,495 ຄົນໄດ້ເສຍຊີວິດ ແລະ 5154 ຄົນລອດຊີວິດ, ຈຳນວນຜູ້ທີ່ລອດຊີວິດດັ່ງກ່າວນີ້ 65% ແມ່ນເສຍແຂນ, ຂາ ແລະ ອີກ 13% ແມ່ນເປັນຄົນພິການ, ນອກຈາກນີ້ຍັງມີການລາຍງານ ການບາດເຈັບ ເພີ່ມເຕີມອີກລວມ ທັງພາວະຫູໜວກ ເສຍແສງຕາ ແລະ ເປັນບາດແຜໄໝ້.

ໃນລະ ຫວ່າງປີ 1973 ເຖິງ 1976 ຕົວເລກສະເລ່ຍຂອງອຸບັດຕິເຫດແມ່ນ 1,100 ຄັ້ງຕໍ່ປີ, ແຕ່ໃນຊຸມປີ 1977 ເຖິງ 1986 ຕົວເລກ ດັ່ງກ່າວໄດ້ຫຼຸດລົງມາເປັນ 360 ຄັ້ງ ແລະຈາກປີ 1987 ເຖິງ 1996 ໄດຫຼຸດລົງອີກເຫຼືອພຽງ 240 ຄັ້ງຕໍ່ປີ. ນັບແຕ່ປີ1996 ເປັນຕົ້ນມາ ໂຄງການ ເກັບກູ້ລະເບີດແຫ່ງຊາດລາວໄດ້ເກັບກຳຂໍ້ມູນກ່ຽວກັບຜູ້ຖືກເຄາະຮາຍຈາກລະເບີດ ຢູ 9 ແຂວງ ໂດຍການເກັບກຳຂໍ້ມູນໃນປີ ທຳອິດແມນບໍ່ມີຄົບຖວນ, ມີພຽງ ແຕ 8

---

*ອົງການ ສາກົນເພື່ອຄົນພິການແບນຢຽມ (HIB) (2006), ຮອຍຍ່າງແຫ່ງຄວາມອັນຕະລາຍ: ລະເບີດທີ່ສົ່ງຜົນກະທົບ ຕໍ່ມະນຸດໃນໂລກ. ແບນຢຽມ: ຄົນພິການ*

*ຂໍ້ມູນການຖິ້ມລະເບີດຂອງສະຫະລັດ ແລະ ອົງການສາກົນເພື່ອຄົນພິການ ແບນຢຽມ (1997), ດຳລົງຊີວິດຢູ່ກັບລະເບີດບໍ່ທັນແຕກ: ບົດລາຍງານຂັ້ນສຸດທາຍ ວຽງຈັນ: ຄົນພິການສາກົນ, ກະຊວງແຮງງານ ແລະ ສະຫວັດດີການ ສັງຄົມ ແລະ ໂຄງການ ເກັບກູລະເບີດແຫງ ສປປ ລາວ.*

ປີທີ່ສາມາດເກັບກຳຂໍ້ມູນລະອຽດ ດັ່ງລຸ່ມນີ້:

| | 1999 | 2000 | 2001 | 2002 | 2003 | 2004 | 2005 | 2006 | ສະເລ່ຍ |
|---|---|---|---|---|---|---|---|---|---|
| ອຸບັດຕິເຫດ | 63 | 58 | 57 | 43 | 60 | 90 | 98 | 25 | 62 |
| ບາດເຈັບ | 75 | 63 | 86 | 70 | 76 | 128 | 128 | 33 | 82 |
| ເສຍຊີວິດ | 26 | 39 | 35 | 28 | 33 | 66 | 36 | 16 | 35 |
| ລວມ | 101 | 102 | 121 | 98 | 109 | 194 | 164 | 49 | 117 |
| ເດັກນ້ອຍ | 59 | 50 | 52 | 47 | 50 | 112 | 88 | 24 | 60 |
| ເດັກຊາຍ | 43 | 36 | 32 | 36 | 95 | 77 | 17 | 48 | 47 |
| ເດັກຍິງ | 12 | 7 | 16 | 15 | 14 | 17 | 11 | 7 | 12 |
| ແມ່ຍິງ | 3 | 15 | 13 | 8 | 14 | 12 | 7 | 3 | 9 |

ນັກສັງເກດການບາງທ່ານໄດ້ແນະນຳໄວ້ວ່າຈຳນວນຕົວເລກລວມຂອງຜູ້ຖືກບາດເຈັບ ແລະ ເສຍຊີວິດ ອາດສູງກວ່າສອງເທົ່າທີ່ໄດ້ບັນທຶກໄວ້.[3] ເຖິງຢ່າງໃດກໍດີ ເຫັນໄດ້ວ່າການຫຼຸດລົງຂອງຕົວເລກທີ່ພົບ ເຫັນໃນປີ 2006 ນັ້ນມີຄວາມເປັນຈິງຫຼາຍ ຊຶ່ງມັນໄດ້ສະທ້ອນເຖິງຮູບແບບທີ່ຄ້າຍຄືກັນກັບ ກໍລະນີ ປະເທດກຳປູເຈຍ.

ການຈັດພິມຈຳໜ່າຍປຶ້ມຄັ້ງຫລ້າສຸດ ກ່ຽວກັບ ເຫດການທີ່ເກີດຂຶ້ນເນື່ອງຈາກລະເບີດບົມບີໃນທົ່ວໂລກ ໄດ້ຊີ້ໃຫ້ເຫັນ ວ່າມີ 23 ປະເທດທີ່ມີລະເບີດບໍ່ທັນແຕກຕົກຄ້າງຢູ່ ໃນນີ້ໄດ້ມີການລາຍງານວ່າມີຜູ້ຄົນຈຳນວນ 11,044 ຄົນຢືນ ຢັນວ່າໄດ້ຮັບເຄາະຮ້າຍ. ສປປ ລາວ ໄດ້ຢືນຢັນວ່າມີຜູ້ໄດ້ຮັບເຄາະຮ້າຍ 4,813 ຄົນ (44% ຂອງຈຳນວນທັງ ໝົດ) ຊຶ່ງຖືວ່າເປັນປະເທດທີ່ໄດ້ຮັບຜົນກະທົບໜັກທີ່ສຸດ. ໃນບົດລາຍງານໄດ້ຊີ້ໃຫ້ເຫັນວ່າ 98% ຂອງຈຳນວນ ທັງໝົດ ແມ່ນເປັນພົນລະເຮືອນທົ່ວໄປ.

## 1.3. ສະຫຼຸບກ່ຽວກັບຜົນໄດ້ຮັບຕົ້ນຕໍຂອງໜ່ວຍງານເກັບກູ້ລະເບີດບໍ່ທັນແຕກໃນປີ 2006.

ບົດສະຫຼຸບກ່ຽວກັບຜົນໄດ້ຮັບຕົ້ນຕໍ ໃນປີ 2006 ມີດັ່ງນີ້:

- ກວດກູ້ເນື້ອທີ່ໄດ້ຫຼາຍກວ່າ 4,726 ເຮັກຕາ, ທຳລາຍບົມໃຫຍ່ໄດ້ 28 ໜ່ວຍ, ບົມບີ 15,052 ໜ່ວຍ, ມີນ 40 ໜ່ວຍ ແລະ ລະເບີດຊະນິດອື່ນໆອີກຈຳນວນ 16,590 ໜ່ວຍ.
- ໜ່ວຍງານໂຄສະນາສຶກສາຊຸມຊົນຢັ້ງຢາມຫຼາຍກວ່າ 571 ບ້ານ, ໄດ້ເຂົ້າເຖິງປະຊາຊົນຢ່າງນ້ອຍ 152,579 ຄົນ.
- ໄດ້ມີການຈັດຕັ້ງການປະເມີນຄວາມຕ້ອງການກ່ຽວກັບລະເບີດບໍ່ທັນແຕກໃຫ້ແກ່ໜ່ວຍງານການສຶກ ສາຄວາມສ່ຽງໄພ.
- ໜ່ວຍງານທຳລາຍເຄື່ອນທີ່ໄດ້ປະຕິບັດວຽກຫຼາຍກວ່າ 770 ບ້ານ, ໄດ້ທຳລາຍລະເບີດທັງໝົດໄດ້ 40,950 ໜ່ວຍ ( ບົມໃຫ່ຍ 392 ໜ່ວຍ, ບົມບີ 20,356 ໜ່ວຍ, ມີນ 106 ໜ່ວຍແລະລະເບີດ ຊະນິດອື່ນໆອີກຈຳນວນ 20,096 ໜ່ວຍ.)
- ໃນທ້າຍປີ 2006, ໜ່ວຍງານຊ່ວຍເຫຼືອຜູ້ໄດ້ຮັບເຄາະຮ້າຍຂອງ ຄຄຊ ກໍໄດ້ກ້າວເຖິງຂັ້ນຕອນການ ວາງແຜນ ແລະ ກະກຽມເພື່ອສຳຫຼວດກ່ຽວກັບອຸບັດຕິເຫດຈາກລະເບີດບໍ່ທັນແຕກ ແລະ ຜູ້ໄດ້ ຮັບເຄາະຮ້າຍທັງໝົດ. ຫວັງວ່າການສຳຫຼວດນີ້ຈະສຳເລັດຜົນໃນປີ 2007 ນີ້ ແລະ ຫລັງຈາກນັ້ນກໍ່ຈະມີແຜນທີ່ຄວບຄຸມ 100% ແລະ ກວມລວມເອົາຜູ້ຖືກເຄາະ ຮ້າຍ 100%.

## 1.4. ຄວາມຄືບໜ້າຕໍ່ແຜນຍຸດທະສາດປີ 2003 -2013

"ເສັ້ນທາງກ້າວໄປສູ່ຄວາມປອດໄພ" ແມ່ນແຜນຍຸດທະສາດ ແຫ່ງ ຊາດໄລຍະ 10 ປີ ຄືຊຸມປີ 2003-2013. ຄືດັ່ງທີ່ ຮູ້ກັນດີແລ້ວວ່າແຜນການດັ່ງກ່າວມີການທົບທວນຄືນແລະປັບປຸງອີກ ຊຶ່ງໄດ້ທົບທວນຄືນໂດຍອີງໃສ່ແຕ່ພຽງ ອົງການເກັບກູ້ລະເບີດແຫ່ງຊາດ(ຄກລ), ແທນທີ່ຈະກວມເອົາ ອົງການປະຕິບັດງານອື່ນໆນຳດວຍ. ໃນປະຈຸບັນ ມັນເປັນເຄື່ອງມືອັນຕົ້ນຕໍເພື່ອວັດແທກຄວາມຄືບໜາຂອງທົ່ວຂະແໜງການແກ້ໄຂບັນຫາລະເບີດບໍ່ທັນແຕກ. ຕາຕະລາງຕໍ່ໄປນີ້ ຈະສະແດງສະຫຼຸບ ຜົນທີ່ໄດ້ຮັບປະຈຳປີຂອງອົງການເກັບກູ້ລະເບີດຈາກປີ 2003-2006 ຊຶ່ງໄດ້ ລະບຸໄວໃນບົດແຜນຍຸດທະສາດ ແຫ່ງຊາດ ແລະ ໃນບົດສະຫຼຸບຄວາມຄືບໜ້າເຖິງປະຈຸບັນ.

---

*(*) ເນື່ອງຈາກວ່າລະບົບການລາຍງານຂອງ ຄກລ ຍັງບໍ່ທັນຊັດເຈນ, ບໍ່ກວມລວມເອົາຈຳນວນທັງໝົດ 9 ແຂວງທີ່ ຄກລ ເຄື່ອນໄຫວຢູ່ ແລະ ມີອຸບັດຕິເຫດທີ່ບໍ່ຕ້ອງສົງໄສຢູ່ໃນບາງແຂວງໃນຈຳນວນ 9 ແຂວງທີ່ມີ.*
*ອົງການສາກົນເພື່ອຄົນພິການແບນຢຽມ(2006), ຮອຍຍາງແຫ່ງຄວາມອັນຕະລາຍ:ລະເບີດທີ່ສົ່ງຜົນກະທົບຕໍ່ມະນຸດໃນໂລກ. ແບນຢຽມ*

| ປີ | ກິດຈະກຳ | ວັນທີສຳເລັດ | ຄວາມຄືບໜ້າເຖິງປະຈຸບັນ |
|---|---|---|---|
| 2003 | 1. ຄວາມເປັນໄປໄດ້ຂອງຖານຂໍ້ມູນຜູ້ໄດ້ຮັບເຄາະຮ້າຍລະດັບຊາດ | 30 ກັນຍາ 03 | ດຳເນີນໂດຍອົງການສພບ |
| | 2. ທວນຄືນການບໍລິຫານຂອງ ຄກລ | 30 ກັນຍາ 03 | ປະຕິບັດສຳເລັດໂດຍ ອົງການແມັກ ໃນປີ 2005. |
| | 3. ລິເລີ່ມໂດຍການກວດກູ້ກ່ອນປະເມີນຜົນການກະທົບ(PCIA)ໂຄງການທົດລອງປະເມີນຜົນການກະທົບ | 01ຕຸລາ03 | ໂດຍອົງການ ສປຊ |
| | 4. ຈັດຕັ້ງຍົກລະດັບຄວາມສາມາດກ່ຽວກັບເຕັກນິກການສຳຫຼວດ | 31 ທັນວາ 03 | ໄດ້ມີການກໍ່ຕັ້ງແຕ່ຄວາມສາມາດບໍ່ພຽງພໍຈົນເຖິງປີ 2006. |
| | 5. ກໍ່ຕັ້ງຄະນະກຳມະການຄຸ້ມຄອງ | 31 ທັນວາ 03 | ສ້າງຕັ້ງຂຶ້ນໂດຍດຳລັດປີ 2004 |
| | 6. ຕິດຕັ້ງ IMSMA ແລະ ດຳເນີນການເຄື່ອນໄຫວ | 31 ທັນວາ 03 | ນຳໃຊ້ເວີຊັນ 2. ເວີຊັນ 4 ສຳລັບ ປັບປຸງແຜນການສຳລັບປີ 2007 |
| | 7.ຖ່າຍທອດຄວາມສາມາດຂອງໜ່ວຍງານໂຄສະນາ | 31 ທັນວາ 03 | ຄູຮວມງານອື່ນໆກໍໄດ້ສ້າງຄວາມສາມາດໃຫ້ໜ່ວຍງານໂຄສະນາແກ່ ຄກລ ເປັນພິເສດ. |
| | 8. ສຳຫຼວດດ້ານເຕັກນິກ 500 ໝູ່ບ້ານ | 31 ທັນວາ 03 | ໄດ້ລິເລີ່ມແຕ່ບໍ່ສຳເລັດ |
| | 9. ຄກລ ກວດກູ້ເນື້ອທີ່ 942 ເຮັກຕາ | 31 ທັນວາ 03 | 880ເຮັກຕາກວດກູ້ເນື້ອທີ່ໂດຍ ຄກລ |
| | 10. ໜ່ວຍງານສຶກສາຊຸມຊົນໄດ້ຢ້ຽມຢາມ 60 ບ້ານ (ບ້ານໃໝ່). | 31 ທັນວາ 03 | ຢ້ຽມຢາມແລ້ວ 512 ບ້ານ |
| | 11. ແຜນປະຕິບັດງານການຊ່ວຍເຫຼືອຜູ້ໄດ້ຮັບເຄາະຮ້າຍ | 31 ທັນວາ 03 | ຍັງບໍ່ທັນໄດ້ປັບປຸງຈົນເຖິງປີ 2006 |
| 2004 | 1. ປັບປຸງແຜນໂຄສະນາຊຸມຊົນຄືນໃໝ່ | 30 ມິຖຸນາ 04 | ປັບປຸງແຜນໂດຍຄອນຊອກຊຽມ ແລະ ກະຊວງສຶກສາທິການ |
| | 2. ທົບທວນແຜນຍຸດທະສາດ | | |
| | 3. ໜ່ວຍໂຄສະນາຊຸມຊົນເຂົ້າເຖິງ 300 ບ້ານ "ບ້ານໃໝ່" | 31 ສິງຫາ 04 | ທົບທວນຂັ້ນຕອນປີ 2007 |
| | 4. ສຳຫຼວດດ້ານເຕັກນິກ 1300 ບ້ານ | 31 ສິງຫາ 04 | ຢ້ຽມຢາມ 495 ບ້ານ |
| | 5. ຄກລ ກວດກູ້ເນື້ອທີ່ 1300 ເຮັກຕາ | 31 ທັນວາ 04 | ບໍ່ທັນສຳເລັດກວດກູ້ເນື້ອທີ່ໄດ້ 1,255 ເຮັກຕາ |
| 2005 | 1. ສຳຫຼວດດ້ານເຕັກນິກ 840 ບ້ານ | 30 ມິຖຸນາ 05 | ບໍ່ທັນສຳເລັດ |
| | 2. ທົບທວນແຜນຍຸດທະສາດ | 31 ສິງຫາ 05 | ທົບທວນຂັ້ນຕອນປີ 2007 |
| | 3. ໜ່ວຍໂຄສະນາຊຸມຊົນເຂົ້າເຖິງ 450 ບ້ານ "ບ້ານໃໝ່" | 31 ທັນວາ 05 | ຢ້ຽມຢາມໄດ້ 535 ບ້ານ |
| | 4. ຄກລ ກວດກູ້ເນື້ອທີ່ 1500 ເຮັກຕາ | 31 ທັນວາ 05 | ກວດກູ້ເນື້ອທີ່ໄດ້ 1,566 ເຮັກຕາ |
| 2006 | 1. ທົບທວນແຜນຍຸດທະສາດ | 31 ສິງຫາ 06 | ທົບທວນຂັ້ນຕອນປີ 2007 |
| | 2. ໜ່ວຍໂຄສະນາຊຸມຊົນເຂົ້າເຖິງ 450 ບ້ານ "ບ້ານໃໝ່" | 31 ທັນວາ 06 | ຢ້ຽມຢາມໄດ້ 571 ບ້ານ |
| | 3. ຄກລ ກວດກູ້ເນື້ອທີ່ 1800 ເຮັກຕາ | 31 ທັນວາ 06 | ກວດກູ້ເນື້ອທີ່ໄດ້ 2,097 ເຮັກຕາ |

**1.5. ລາຍຈ່າຍສຳລັບປີ 2006 ຂອງໜ່ວຍງານເກັບກູ້ລະເບີດບໍ່ທັນແຕກ.**

ຕາຕະລາງຂ້າງລຸ່ມນີ້ແມ່ນລາຍຈ່າຍສະເລ່ຍປະຈຳປີ 2006 ຂອງໜ່ວຍງານຮັບຜິດຊອບລະເບີດບໍ່ທັນແຕກ, ໂດຍອີງໃສ່ຕົວເລກທີ່ໄດ້ມາຈາກຜູ້ປະກອບການເກັບກູ້ລະເບີດທີ່ບໍ່ທັນແຕກແມ່ນເຊີງທຸລະກິດ.

| **ຜູ້ປະກອບການ** | **ລາຍຈ່າຍປີ 2006** |
| --- | --- |
| ຄະນະກຳມະການຄຸ້ມຄອງແຫ່ງຊາດ ເພື່ອແກ້ໄຂ ບັນຫາລະເບີດ ບໍ່ທັນແຕກ ທີ່ຕົກຄ້າງຢູ່ ສປປ ລາວ (ຄຄຊ) | 578,762 ໂດລາສະຫະລັດ |
| ໂຄງການເກັບກູ້ລະເບີດແຫ່ງຊາດລາວ (ຄກລ) | 4,286,954 ໂດລາສະຫະລັດ |
| ອົງການແມັກ (MAG) | 2,460,804 ໂດລາສະຫະລັດ |
| ອົງການສາກົນເພື່ອຄົນພິການແບນຢຽມ (HIB) | 1,549,225 ໂດລາສະຫະລັດ |
| ອົງການເກັບກູ້ລະເບີດສະວິດ (FSD) | 1,490,845 ໂດລາສະຫະລັດ |
| ອົງການຄອນຊອກຊຽມ/ກະຊວງສຶກສາທິການ (Consortium/MoE) | 114,000 ໂດລາສະຫະລັດ |
| ຊາວໜຸ່ມ ປປ ລາວ(LYU) | 61,159 ໂດລາສະຫະລັດ |
| ອົງການຟື້ນຟູຄົນພິການ ສພບ (HI CBR) | 1,117,600 ໂດລາສະຫະລັດ |
| ອົງການຄອນຊອກຊຽມ/ກະຊວງສາທາລະນະສຸກ (Consortium/MOU) | 440,000 ໂດລາສະຫະລັດ |
| ສະມາຄົມການຊ່ວຍເຫຼືອແລະບັນເທົາທຸກ (AAR) | 118,755 ໂດລາສະຫະລັດ |
| ອົງການໂຄບ (COPE) | 360,488 ໂດລາສະຫະລັດ |
| ສະມາຄົມຄົນພິການລາວ (LDPA) | 300,000 ໂດລາສະຫະລັດ |
| ໂຟນບິດ (PCL) | ປະມານ 2,000,000 ໂດລາສະຫະລັດ |
| ມິລເຊີດ (Millsearch) | ປະມານ 4,000,000 ໂດລາສະຫະລັດ |
| ມາຍເທັກ (Mine Tech) | - |
| ກອງທັບ ປະຊາຊົນລາວ | - |
| **ລວມ** | **18,878,592** ໂດລາສະຫະລັດ |

## 2. ຄະນະກຳມະການຄຸ້ມຄອງ ແຫ່ງຊາດເພື່ອການແກ້ໄຂບັນຫາລະເບີດບໍ່ທັນແຕກ ຕົກຄ້າງຢູ່ ສປປ ລາວ.

### 2.1. ຄວາມເປັນມາ

ຄະນະກຳມະການຄຸ້ມຄອງແຫ່ງຊາດເພື່ອການແກ້ໄຂບັນຫາລະເບີດບໍ່ທັນແຕກທີ່ຕົກຄ້າງຢູ່ ສປປ ລາວ (ຄຄຊ) ແມ່ນສະຖາບັນຂອງລັດຖະບານ ສປປ ລາວ ມີໜ້າທີ່ຮັບຜິດຊອບການຊີ້ນຳດ້ານນະໂຍບາຍອອກສິດແຕ່ງຕັ້ງ ບໍລິຫານຈັດການ ແລະ ໃຫ້ການປະສານງານ ແກ່ຜູ້ປະກອບການພາຍໃນ ແລະ ສາກົນ. ຄຄຊ ໄດ້ ຖືກມອບໝາຍຈາກລັດຖະບານ ສປປ ລາວໃຫ້ເຮັດໜ້າທີ່ເປັນຈຸດໃຈກາງດ້ານ ເຕັກນິກ ສຳລັບທຸກໆບັນຫາທີ່ກ່ຽວ ຂ້ອງກັບການປະຊຸມລະດັບສາກົນ ແລະ ສົນທິສັນຍາ ລະຫວ່າງຊາດ ພ້ອມນີ້ກໍຍັງຖືກແຕ່ງຕັ້ງໃຫ້ ເປັນຕົວແທນເຂົ້າຮ່ວມກອງເຂົ້າປະຊຸມໃນລະດັບສາກົນ ແລະ ປຶກສາຫາລືບັນ ຫາທີ່ພົວພັນເຖິງ ກິດຈະການແກ້ໄຂບັນຫາ ລະເບີດບໍ່ທັນແຕກ/ມິນ ແລະ ລະເບີດຈາກສົງຄາມ (ERW) . ຄຄຊ ມີໜ້າທີ່ຮັບຜິດຊອບໃນການພັດທະນາ ແລະ ຈັດຕັ້ງປະຕິບັດ ແຜນຍຸດທະສາດແຫ່ງຊາດ ກ່ຽວກັບ ກິດຈະການເກັບກູ້ລະເບີດບໍ່ທັນແຕກ/ ມິນໂດຍ ຜ່ານຂັ້ນຕອນການປຶກສາ ຫາລືກັບຕົວແທນອົງການ ຈັດຕັ້ງປະຕິບັດ. ການຮັບ ປະກັນຄຸນນະພາບ ຈາກພາຍນອກ ການປະເມີນຜົນກະທົບ ຫຼັງການກວດ ກູ້ ແລະ ການກວດຕິດຕາມ ການປະຕິບັດງານ ຂອງ ອົງການປະຕິບັດງານທັງໝົດ ກໍລ້ວນແລ້ວແຕ່ຂຶ້ນ ກັບຄວາມຮັບຜິດຊອບ ຂອງ ຄຄຊ.



ໃນຕົ້ນເດືອນເມສາ ໄດ້ເປີດຫ້ອງການ ຄຄຊ ຢ່າງເປັນທາງການ, ເປັນກຽດພິທີເປີດໂດຍພະນະທ່ານ ອາຊາງ ລາວລີ, ຮອງນາຍົກລັດຖະມົນຕີ ແລະ ທັງເປັນປະທານ ຄຄຊ ຜູ້ທຳອິດ.

ຄຄຊ ມີໜ້າທີ່ຮັບຜິດຊອບໃນການຊີ້ນຳ ການຈັດຕັ້ງປະຕິບັດແຜນຍຸດທະສາດແຫ່ງຊາດ 2003-2013 ສຳລັບຂະແໜງການເກັບ ກູ້ລະເບີດບໍ່ທັນແຕກ ຊຶ່ງໄດ້ບັນຍັດໃນມະຕິຕົກລົງ ເລກທີ 01/ນຍ ລົງວັນທີ 29 ເມສາ 2004 (ເບິ່ງເອກະສານຊ້ອນ ທ້າຍ1).

### 2.2. ວິໄສທັດ ຂອງ ຄຄຊ

ຄຄຊ ຈະກາຍເປັນສະຖາບັນນຳໜ້າໃນກິດຈະການເກັບກູ້ລະເບີດບໍ່ທັນແຕກ/ມິນ ເພື່ອເຮັດໃຫ້ ສປປ ລາວ ກາຍເປັນ ປະເທດທີ່ປອດໄພຈາກຜົນກະທົບຂອງ ລະເບີດບໍ່ທັນແຕກ/ມິນ.

### 2.3. ເປົ້າໝາຍຂອງ ຄຄຊ

ເພື່ອໃຫ້ປະຊາຊົນທີ່ດຳລົງຊີວິດຢູ່ໃນເນື້ອທີ່ໆມີ ລະເບີດບໍ່ທັນແຕກ/ມິນຕົກຄ້າງຢູ່ ໄດ້ມີສ່ວນຮ່ວມໃນການ ພັດທະນາເສດຖະກິດ-ສັງຄົມໃນ ສປປ ລາວ ຜົນກະທົບຈາກ ລະເບີດບໍ່ທັນແຕກ/ມິນ.

### 2.4. ຈຸດປະສົງ ຂອງ ຄຄຊ

ໂດຍອີງຕາມ "ເສັ້ນທາງໄປສູ່ຄວາມປອດໄພ" ຈຸດປະສົງຂອງ ຄຄຊ ມີດັ່ງຕໍ່ໄປນີ້:

- ຫຼຸດຜ່ອນຈຳນວນຜູ້ໄດ້ຮັບບາດເຈັບຈາກອຸບັດຕິເຫດຂອງລະເບີດບໍ່ທັນແຕກ/ລູກມິນໃຫ້ຢູ່ໃນອັດຕາບໍ່ໃຫ້ເກີນ 100 ຄົນຕໍ່ປີ
- ເພີ່ມເນື້ອທີ່ການຜະລິດກະສິກຳເພື່ອການຜະລິດສະບຽງອາຫານ ແລະ ເພື່ອການພັດທະນາຂະແໜງການອື່ນໆ

- ຮັບປະກັນການຟື້ນຟູ ແລະ ສະໜັບສະໜູນຜູ້ລອດຊີວິດຈາກລະເບີດບໍ່ທັນແຕກ/ມີນ ເພື່ອໃຫ້ພວກເຂົາ ສາມາດມີສ່ວນຮ່ວມໃນການພັດທະນາເສດຖະກິດສັງຄົມ.

## 2.5. ຜົນສຳເລັດຕົ້ນຕໍໃນປີ 2006

- ເດືອນມັງກອນ 2006 ລັດຖະບານ ສປປ ລາວໄດ້ແຕ່ງຕັ້ງຫົວໜ້າຫ້ອງການ ຂອງ ຄະນະກຳມະ ການຄຸ້ມຄອງ ແຫ່ງ ຊາດເພື່ອການແກ້ໃຂບັນຫາລະເບີດບໍ່ທັນແຕກຕົກຄ້າງຢູ່ ສປປ ລາວ (ຄຄຊ)
- ເດືອນມີຖຸນາໄດ້ຈັດກອງປະຊຸມຂຶ້ນທີ່ຫ້ອງການ ຄຄຊ ໂດຍມີພະນະທ່ານ ເທເຣຊາ ແກມບາໂຣ, ສະມາຊິກສະພາ ແລະ ເລຂານຸການລັດຖະສະພາຂອງກະຊວງການຕ່າງປະເທດ, ອິດສະຕາລີ ເປັນ ກຽດເຂົ້າຮ່ວມໃນພິທີດັ່ງກ່າວ.
- ເດືອນກໍລະກົດ ຄຄຊ ໄດ້ຈັດຕັ້ງກອງປະຊຸມສຳມະນາໃນຫົວຂໍ້ບົດສະເໜີ ຂອງສູນກາງເກັບກູ້ລະເບີດເພື່ອ ມະນຸດສະທຳສາກົນເຈນີວາ(GICHD) ກ່ຽວກັບການສຶກສາບໍລິຫານຫຼຸດຜ່ອນຄວາມສ່ຽງໄພ. ການ ຮ່ວມມືລະຫວ່າງ ຄຄຊ ກັບ ສູນກາງເກັບກູ້ລະເບີດເພື່ອມະນຸດສະທຳສາກົນເຈນີວາ ກໍ່ໄດ້ນຳສູ່ກິດຈະກຳການ ການສຶກສານີ້ອີກດ້ວຍ.
- ກຸ່ມໜ່ວຍງານວິຊາການເກັບກູ້ລະເບີດ, ການສຶກສາຄວາມສ່ຽງໄພຈາກລູກ ລະເບີດ (MRE) ແລະ ໜ່ວຍງານ ຊ່ວຍເຫຼືອຜູ້ໄດ້ຮັບເຄາະຮ້າຍ (VA) ກໍໄດ້ມີການຈັດຕັ້ງກອງປະຊຸມ ແລກ ປ່ຽນບົດຮຽນຢ່າງເປັນປະຈຳ.
- ເດືອນກັນຍາ ພະນັກງານຂັ້ນນຳຈາກ 14 ແຂວງ ອັດຕະປື ຈຳປາສັກ ເຊກອງ ສາລະວັນ ສະຫວັນນະເຂດ ຄຳມ່ວນ ບໍລິຄຳໄຊ ວຽງຈັນ ຫຼວງພະບາງ ຫົວພັນ ຊຽງຂວາງ ອຸດົມໄຊ ຜົ້ງສາລີ ແລະແຂວງ ຫຼວງນ້ຳທາ ກໍ່ໄດ້ເຂົ້າຮ່ວມກອງປະຊຸມປຶກສາຫາລືກ່ຽວກັບພາລະບົດບາດ ແລະ ໜ້າທີ່ຮັບຜິດຊອບ ຂອງ ຄຄຊ ແລະໃນອານາຄົດກໍ່ມີການວາງແຜນທີ່ຈະສ້າງຕັ້ງຫ້ອງການ ຄຄຊ ຂື້ນຢູ່ແຕ່ລະແຂວງ ດັ່ງກ່າວ.
- ເດືອນ ຕຸລາ ອົງການສະຫະປະຊາຊາດເພື່ອການພັດທະນາ (ສປຊ) ແລະ ຄຄຊ ກໍໄດ້ຈັດກອງປະຊຸມ ກ່ຽວກັບ ຮ່າງກົດໝາຍສຳລັບກິດຈະການແກ້ໄຂບັນຫາຕໍ່ລະເບີດບໍ່ທັນແຕກ/ມີນ ລະດັບຊາດຢູ່ ສປປ ລາວ.
- ເດືອນ ຕຸລາ ກອງປະຊຸມຜູ້ໃຫ້ທຶນ ສຳລັບ ກິດຈະການແກ້ໄຂບັນຫາລະເບີດບໍ່ທັນແຕກ ໄດ້ຈັດຂຶ້ນທີ່ຫ້ອງການ ຄຄຊ.
- ເດືອນ ພະຈິກ ກໍໄດ້ມີການຈັດກອງປະຊຸມນຳສະເໜີກ່ຽວກັບການຫຼຸດຜ່ອນຄວາມສ່ຽງໄພຕໍ່ ສູນກາງເກັບກູ້ລະເບີດເພື່ອມະນຸດສະທຳສາກົນເຈນີວາ ຂຶ້ນທີ່ ສປປ ລາວ, ຈັດຂຶ້ນໂດຍ ຄຄຊ ແລະ ສູນກາງເກັບກູ້ລະເບີດເພື່ອມະນຸດສະທຳສາກົນເຈນີວາ
- ຄຄຊ ໄດ້ພັດທະນາ ມາດຕະຖານແຫ່ງຊາດ ໃຫ້ແກ່ໜ່ວຍງານເກັບກູ້ລະເບີດ ໂດຍໄດ້ຮັບການສະໜັບສະໜູນທາງດ້ານເຕັກນິກຈາກກອງທຶນສະວິດ ເພື່ອການພັດທະນາ (FSD) ແລະ ທຶນການສະໜັບສະໜູນໂດຍ ອົງການອົສເອດ (AusAID)
- ກົດລະບຽບພາຍໃນຫ້ອງການຂອງ ຄຄຊ ກໍໄດ້ຮັບການ ພັດທະນາ ແລະ ຖືກຮັບຮອງ.
- ລະບົບການຢັ້ງຢືນຮັບຮອງ ອົງການ ປະຕິບັດງານເກັບກູ້ລະເບີດບໍ່ທັນແຕກ/ມີນ ໄດ້ມີການລິເລີ່ມ ພັດທະນາ ໂດຍ ຄຄຊ
- ຄຄຊ ໄດ້ພັດທະນາລະບົບບັນທຶກຄວາມເຂົ້າໃຈ ແລະ ກໍໄດ້ເຊັນບົດບັນທຶກຄວາມເຂົ້າໃຈລະຫວ່າງ ຄຄຊ ກັບອົງການທີ່ປຶກສາດ້ານລະເບີດໃນເດືອນມີຖຸນາ ປີນີ້ 2006 ແລະ ກັບ ກອງທຶນສະວິດເພື່ອການພັດທະນາ (FSD), ໃນເດືອນມັງກອນ 2006
- ໃນທ້າຍປີ ຫ້ອງການສຳນັກງານໃຫ່ຍ ຄຄຊ ກໍມີພະນັກງານຄົນລາວຄົບຈຳນວນ 22 ຄົນ ແລະ ທີ່ປຶກສາຈາກຕ່າງປະເທດອີກ 5 ຄົນ.

## 2.6. ການປະຕິບັດງານ

### 2.6.1. ໜ່ວຍງານການສຶກສາດ້ານຄວາມສ່ຽງໄພຈາກລະເບີດບໍ່ທັນແຕກ/ມີນ (MRE Unit)

ໜ່ວຍງານການສຶກສາຄວາມສ່ຽງໄພຈາກລະເບີດບໍ່ທັນແຕກ/ມີນ ຂອງ ຄຄຊ ມີໜ້າທີ່ຮັບຜິດຊອບ ໃນການປະສານງານ ແລະ ຮ່ວມມືກັບອົງການ ປະຕິບັດງານ ການສຶກສາຄວາມສ່ຽງໄພຈາກລະເບີດບໍ່ທັນແຕກ/ມີນ.

ໜ່ວຍງານນີ້ ຈະຮັບປະກັນແກ່ບັນດາອົງການປະຕິບັດງານ ໃຫ້ປະຕິບັດຢ່າງຖືກຕ້ອງຕາມມາດຕະຖານ ແຫ່ງຊາດ ແລະ ຊ່ວຍເຫຼືອການພັດທະນາອຸປະກອນທີ່ເໝາະສົມດວຍ.

**ຜົນສຳເລັດໃນປີ 2006**

- ເດືອນກັນຍາ 2006 ໄດ້ມີການແຕ່ງຕັ້ງ ຫົວໜ້າກຸ່ມຜູ້ເຮັດວຽກດ້ານເຕັກນິກ ກ່ຽວກັບ ການສຶກສາຄວາມສ່ຽງໄພຈາກລະເບີດ ບໍ່ທັນແຕກ/ມິນ ແລະ ແຕ່ງຕັ້ງວິຊາການ ດ້ານເຕັກນິກກ່ຽວກັບການສຶກ ສາຄວາມສ່ຽງ ໄພຈາກ ລະເບີດບໍ່ທັນແຕກ ໃນເດືອນພະຈິກ 2006



ຮູບ. 2. ກອງປະຊຸມ ຄຄຊ ຮ່ວມກັບສະພາ ແມ່ຍິງເບັດຕີແມັກຄໍລໍາ ຈາກສະຫະລັດອາເມີກາ ເພື່ອປຶກສາຫາລືການສືບຕໍ່ສະໜັບສະໜູນກິດຈະການເກັບກູ້ລະ ເບີດໃນ ສປປ ລາວ, 28 ທັນວາ 2006.

- ເດືອນກັນຍາ ນັກວິຊາການໜ່ວຍງານສຶກສາຄວາມສ່ຽງໄພ ໄດ້ໃຫ້ການຊວຍເຫຼືອ ແລະ ເຂົ້າຮ່ວມໃນ ການສຶກສາ ຂອງ ສູນເກັບກູ້ລະເບີດເພື່ອມະນຸດ ສະທຳສາກົນ ເຈເນວາ ຮ່ວມກັບ ທ້ອງ ຖິ່ນ ທີ່ກ່ຽວຂ້ອງ ກ່ຽວກັບການດຳລົງຊີວິດ ຢູ່ໃນພື້ນທີ່ໆມີລູກລະເບີດ ຂອງ ສອງໝູ່ບ້ານທີ່ ແຂວງ ຊຽງຂວາງ ແລະ ສະຫວັນນະເຂດ.
- ເດືອນ ກັນຍາ ນັກວິຊາການ ໜ່ວຍງານ ສຶກສາຄວາມສ່ຽງໄພ ໄດ້ເຂົ້າຮ່ວມ ຫຼັກສູດ ການປະຕິບັດງານກ່ຽວ ກັບລະເບີດບໍ່ທັນແຕກ/ມິນ ແລະ ພະຍາດລະບາດພາກສະໜາມ (FEMAC) ທີ່ນະຄອນ ຫຼວງພະນົມເປັນ ປະເທດ ກຳປູເຈຍ, ຈັດຂຶ້ນໂດຍສູນກາງ ຄວບຄຸມພະຍາດ (CDC) ແລະ ໃຫ້ທຶນສະ ໜັບສະໜູນໂດຍ ອົງການຢູນີເຊັບ
- ເດືອນຕຸລາ ໜ່ວຍງານການສຶກສາຄວາມສ່ຽງໄພ ອົງການຢູນີເຊັບ ແລະ ຜູ້ມີສ່ວນຮ່ວມ ກ່ຽວກັບວຽກງານລະເບີດບໍ່ທັນແຕກ/ມິນ ກໍໄດ້ຮ່ວມກັນຮ່າງແຜນຍຸດທະສາດ 2007-2010 ສຳລັບສຶກສາຄວາມສ່ຽງໄພຈາກລະເບີດບໍ່ທັນແຕກ/ມິນຢູ່ ສປປ ລາວ, ກອງປະຊຸມໄດ້ ຈັດຂຶ້ນ ທີ່ສະຫະພັນຊາວໜຸ່ມລາວ ຊຶ່ງດຳເນີນໂດຍ ສູນກາງເກັບກູ້ລະເບີດເພື່ອມະນຸດ ສະທຳ ສາກົນເຈເນວາ.
- ເດືອນພະຈິກ ໜ່ວຍງານສຶກສາຄວາມສ່ຽງໄພຈາກລະເບີດບໍ່ທັນແຕກ/ມິນຂອງ ຄຄຊ ກໍໄດ້ດຳເນີນກອງປະຊຸມ ກຸມວິຊາການ ດານການສຶກສາ ຄວາມສ່ຽງໄພຈາກລະ ເບີດບໍ່ທັນ ແຕກ/ມິນ.
- ເດືອນທັນວາ ໜ່ວຍງານສຶກສາຄວາມສ່ຽງໄພຈາກລະເບີດບໍ່ທັນແຕກ/ມິນ ກໍໄດ້ກະກຽມແຜນງານ ປະຈຳປີ 2007 ຮ່ວມກັບ ອົງການຢູນີເຊັບ

## 2.6.2. ໜ່ວຍງານເກັບກູ້ລະເບີດ (Demining Unit)

ດ້ານວຽກງານສຳຫຼວດ ແລະ ກວດກູ້ນີ້ ຄຄຊ ຈະຕ້ອງຮັບປະກັນ ວ່າການປະຕິບັດງານເກັບກູ້ລະເບີດທຸກ ພາກສ່ວນຕ້ອງປະຕິບັດໃຫ້ຖືກຕ້ອງຕາມມາດຕະຖານແຫງຊາດ ແລະ ຈະໃຫ້ການຊ່ວຍເຫຼືອໃນປະສານງານສຳລັບຂະບວນການວາງແຜນວຽກຂອງພວກເຂົາ. ຄຄຊ ຍັງມີໜ້າທີ່ຮັບຜິດຊອບ ໃນການຝຶກອົບຮົມດ້ານເຕັກນິກ ແລະ ກວດຕິດຕາມຂະບວນການ ກ່ອນການກວດເກັບກູ້ ແລະຜົນກະທົບຫລັງການກວດເກັບກູ້.

**ຜົນສຳເລັດໃນປີ 2006**

- ກອງປະຊຸມກຸ່ມວິຊາການດ້ານການກວດເກັບກູ້ລະເບີດບໍ່ທັນແຕກ/ມິນ ໄດ້ຈັດຂຶ້ນໃນ ເດືອນຕຸລາ ແລະ ພະຈິກ 2006.
- ໜ່ວຍງານໄດ້ລົງຢັ້ງມຢາມພາກສະໜາມເພື່ອກວດຕິດຕາມການຈັດຕັ້ງປະຕິບັດກິດຈະກຳຂອງອົງການປະຕິບັດງານເກັບກູລະເບີດ.
- ເດືອນກໍລະກົດ 2006 ໜ່ວຍງານຮ່ວມກັບ ສູນກາງເກັບກູ້ລະເບີດເພື່ອມະນຸດສະທຳສາກົນເຈເນວາ ເພື່ອສຶກສາການບໍລິຫານແລະຫຼຸດຜ່ອນຄວາມສ່ຽງໄພຈາກລະເບີດບໍ່ທັນແຕກ/ມິນ ທີ່ ແຂວງ ເຊກອງ ຈຳປາສັກ ແລະ ຫຼວງພະບາງ.

- ສືບຕໍ່ປະສານງານກັບບັນດາກະຊວງ ແລະ ອົງການ ປະຕິບັດງານເກັບກູ້ລະເບີດ.

### 2.6.3. **ໜ່ວຍງານຊ່ວຍເຫຼືອຜູ້ຖືກເຄາະຮ້າຍ** (Victim assistant Unit)

ໜ່ວຍງານຊ່ວຍເຫຼືອຜູ້ຖືກເຄາະຮ້າຍຂອງ ຄຄຊ ມີໜ້າທີ່ຮັບຜິດຊອບໃນການສ້າງຕັ້ງລະບົບຖານຂໍ້ມູນແຫ່ງຊາດກ່ຽວກັບຜູ້ໄດ້ຮັບບາດເຈັບແລະເສຍຊີວິດຈາກລະ ເບີດ ບໍ່ທັນແຕກ/ມິນ ແລະ ເພື່ອຄວາມໝັ້ນໃຈວ່າຄວາມຕ້ອງການສະເພາະຂອງຜູ້ລອດຊີວິດຈາກອຸບັດຕິເຫດ ຍ້ອນລະເບີດນັ້ນ ໄດ້ຮັບຊາບໂດຍ ອົງການ ປະຕິບັດງານ ທີ່ກ່ຽວຂ້ອງ.

**ຜົນສໍາເລັດໃນປີ 2006**

- ເດືອນສິງຫາ 2006 ໄດ້ແຕ່ງຕັ້ງທີ່ປຶກສາດ້ານເຕັກນິກ ການຊ່ວຍເຫຼືອ ຜູ້ຖືກເຄາະຮ້າຍ, ແລະໃນເດືອນກັນຍາ 2006 ກໍໄດ້ແຕ່ງຕັ້ງ ນັກວິຊາການຂອງ ໜ່ວຍງານການຊ່ວຍ ເຫຼືອຜູ້ຖືກເຄາະຮ້າຍ.
- ໜ່ວຍງານຊ່ວຍເຫຼືອຜູ້ຖືກເຄາະຮ້າຍ ໄດ້ກະກຽມແຜນວຽກລະອຽດສໍາລັບໄຕມາດ ທີ່ຜ່ານມາ ຂອງ 2006 ແລະ ສໍາລັບປີ 2007, ຈັດ ບູລິມະສິດ ການເກັບກໍາຂໍ້ມູນ ຜູ້ຖືກເຄາະຮ້າຍ ແລະ ອຸບັດ ຕິເຫດຈາກລະເບີດຊຶ່ງເປັນກິດຈະກໍາ ໃນເບື້ອງ ຕົ້ນ.
- ເດືອນ ຕຸລາ ໜ່ວຍງານກໍໄດ້ໄປຢ້ຽມຢາມປະເທດກໍາປູເຈຍ ເພື່ອເກັບກໍາຂໍ້ມູນກ່ຽວກັບ ລະບົບຂໍ້ມູນຂອງ ຜູ້ຖືກເຄາະຮ້າຍທີ່ກໍາປູເຈຍ (CMVIS) ແລະກິດຈະກໍາຊ່ວຍເຫຼືອຜູ້ຖືກເຄາະຮ້າຍ.
- ໜ່ວຍງານຊ່ວຍເຫຼືອຜູ້ຖືກເຄາະຮ້າຍໄດ້ຈັດ ກອງປະຊຸມພາກສ່ວນທີ່ກ່ຽວຂ້ອງລະດັບຊາດ ເພື່ອປຶກສາ ຫາລືການເກັບກໍາຂໍ້ມູນອຸບັດຕິເຫດ ແລະຜູ້ຖືກເຄາະຮ້າຍ.
- ໄດ້ພັດທະນາແບບຟອມເກັບກໍາຂໍ້ມູນສໍາລັບ ອຸບັດຕິເຫດ ແລະ ຜູ້ຖືກເຄາະຮ້າຍ.
- ໄດ້ມີການສ້າງຕັ້ງເຄືອຂ່າຍເກັບກໍາຂໍ້ມູນ ໂດຍການຮ່ວມມືຂອງບັນດາອົງການຈັດຕັ້ງທີ່ມີຢູ່.



ຮູບ. 3. ທ່ານນາງ ເທເຣຊາ ແກມບາໂຣ, ເລຂານຸການລັດຖະສະພາຂອງກະຊວງການຕ່າງປະເທດ, ອົດສະຕາລີ ແລະທັງເປັນຕົວແທນພິເສດດ້ານ ການປະຕິບັດຕໍ່ລູກມິນ, ມອບເງິນຊ່ວຍເຫຼືອໃຫ້ ທ່ານ ດຣ. ມາລີຍາ, ຜູ້ອໍານວນການ ຄຄຊ ຈໍານວນ 300,000 ໂດລາ ສະຫະລັດ. ພຶດສະພາ 2006

### 2.6.4. **ໜ່ວຍງານຖານຂໍ້ມູນ**

**ຜົນສໍາເລັດໃນປີ 2006**

- ພັດທະນາເວັບໄຊ ຄຄຊ (www.nra.gov.la)
- ເຜີຍແຜ່ຂໍ້ມູນຂ່າວສານລົງໃນເວັບໄຊ
- ສ້າງແຜນທີ່ພູມມີປະເທດໄດ້ 142 ແຜ່ນ
- ສ້າງແຜນທີ່ການປະຕິບັດງານກ່ຽວກັບລະເບີດບໍ່ທັນແຕກ
- ສ້າງແຜນທີ່ສະແດງຜົນກະທົບຈາກລະເບີດບໍ່ທັນແຕກ ຢູ່ໃນທົ່ວປະເທດ
- ອອກແບບ ແລະ ພັດທະນາຖານຂໍ້ມູນແຫ່ງ ຊາດ ຂອງ ຄຄຊ

### 2.7. **ການພັດທະນາມາດຕະຖານແຫ່ງຊາດ ກ່ຽວກັບ ລະເບີດບໍ່ທັນແຕກ/ມິນ ລະດັບຊາດໃຫ້ແກ່ ສປປ ລາວ**

ພະແນກມາດຕະຖານ ແລະ ກວດກາຄຸນນະພາບຂອງ ຄຄຊ ທີ່ໄດ້ຕັ້ງໜ້າ ກະກຽມ ເອກະສານ ສໍາລັບທ້າຍປີ 2006 ແລະໃນຕົ້ນປີ 2007 ກໍໄດ້ມີການພັດທະນາມາດຕະຖານ ກ່ຽວກັບ ລະເບີດບໍ່ທັນແຕກ/ມິນຂຶ້ນ. ຊ່ຽວຊານດ້ານເຕັກນິກ ຈາກກອງທຶນ ສະວິດ ເພື່ອການພັດທະນາ (FSD) ເປັນຜູ້ດໍາເນີນການຮ່າງ ມາດຕະຖານແຫ່ງຊາດຂຶ້ນ, ໂດຍໄດ້ຮັບທຶນສະໜັບສະໜູນ ຈາກອົງການພັດທະນາ ສາກົນຈາກອົດສະຕາລີ (AusAID), ໂດຍໄດເລີ່ມຮ່າງອອກແບບ ແຕ່ວັນທີ 1 ສິງຫາ 2006 ຈົນເຖິງ 31 ກໍລະກົດ 2007 ຈຶ່ງສໍາເລັດ. ໃນໄລຍະດັ່ງກ່າວໄດ້ເຮັດສໍາເລັດ 24 ບົດ, ຊຶ່ງເປັນຂັ້ນຕອນ ຂອງ ການມີສ່ວນຮ່ວມກັບທຸກພາກສ່ວນ ທີ່ກ່ຽວຂ້ອງ ກັບບັນຫາລະເບີດບໍ່ທັນແຕກ/ມິນ ຢູ່ ສປປ ລາວ.

ນອກນີ້ກໍຍັງມີສ່ວນຮ່ວມເຂົ້າໃນການພັດທະນາມາດຕະຖານການແຫ່ງຊາດ, ພະແນກມາດຕະຖານ ແລະ ກວດກາຄຸນນະພາບຂອງ ຄຄຊ ໄດ້ຈັດແປປື້ມມາດຕະຖານເປັນພາສາລາວ ແລະ ສຳເລັດລົງ ໂດຍພື້ນຖານໃນເດືອນກຸມພາ 2007. ຫລັງຈາກນັ້ນພະແນກມາດຕະຖານ ແລະ ກວດກາຄຸນນະພາບຂອງ ຄຄຊ ກໍ່ໄດ້ສືບຕໍ່ປະຕິບັດໜ້າທີ່ ຊີ້ນຳການບໍລິຫານ ແລະ ຈັດຕັ້ງປະຕິບັດມາດຕະຖານແຫ່ງຊາດ ແລະ ການສູລະບົບອອກໃບຢັ້ງຢືນຮັບຮອງ ແລະ ລະບົບຈັດການຄຸນນະພາບ ຊຶ່ງກຳລັງດຳເນີນຢູ່ .

## 2.8. ການຝຶກອົບຮົມ ຍົກຂີດຄວາມສາມາດ

- ເດືອນ ພຶດສະພາ 2006 ຄະນະບໍລິຫານງານ ຂອງ ຄຄຊ ໜຶ່ງທ່ານໄດ້ເຂົ້າຮ່ວມການຝຶກອົບຮົມຫຼັກສູດການບໍລິຫານ ກິດຈະການ ເກັບກູ້ລະເບີດຂັ້ນນຳຂອງ ສປຊ ທີ່ມະຫາວິທະຍາໄລເຈມເມດີສັນ, ສູນກາງຂໍ້ມູນ ຂ່າວສານ ກ່ຽວກັບລະເບີດ ທີ່ປະເທດ ສະຫະລັດອາເມລິກາ.
- ເດືອນ ສິງຫາ ພະນັກງານສະມາຊິກຂັ້ນນຳຂອງ ຄຄຊ ໄດ້ເຂົ້າຮ່ວມຝຶກອົບຮົມກ່ຽວກັບການຊ່ວຍ ເຫຼືອພັດທະນາ (ODA) ປະສານງານແລະບໍລິຫານ ທີ່ນະຄອນຫຼວງ ມະນີລາ ປະເທດ ຟີລິບປິນ.
- ເດືອນ ທັນວາ ຄະນະບໍລິຫານງານ ສອງທ່ານ ກໍໄດ້ເຂົ້າຮ່ວມຝຶກອົບຮົມກ່ຽວກັບ ການບໍລິຫານຈັດ ການໂຄງການ ສປຊ ທີ່ປະເທດໄທ.
- ຄະນະບໍລິຫານງານ ສາມທ່ານ ແລະ ພະນັກງານ ສອງທ່ານ ຂອງ ຄຄຊ ໄດ້ເຂົ້າຮ່ວມຝຶກອົບຮົມ ການບໍລິຫານໂຄງການຊວຍເຫຼືອຈາກ ສປຊ ສຳລັບ Nex Project ແລະ ຮູບແບບບໍລິຫານ ໂຄງການ ແບບໃໝ່ ທີ່ ວຽງຈັນ ສປປ ລາວ
- ເດືອນ ກໍລະກົດ ວິຊາການດ້ານການເກັບກູ້ຂອງ ຄຄຊ ໄດ້ເຂົ້າຮ່ວມຫຼັກສູດຝຶກອົບຮົມວິຊາການເກັບກູ້ລະເບີດ ທີ່ສູນຝຶກອົບຮົມ ຄກລ.

## 2.9. ບຸກຄະລາກອນໃນປີ 2006

| ພາກສ່ວນ | ພາຍໃນປະເທດ | ສາກົນ | ລວມ |
|---|---|---|---|
| ຄະນະກຳມະການປົກຄອງ | 10 | | 10 |
| ຊີ້ນຳ | 1 | 1 | 2 |
| ໜ່ວຍປະຕິບັດງານ | 8 | 2 | 10 |
| ນະໂຍບາຍແລະບໍລິຫານ | 11 | 1 | 12 |
| ມາດຕະຖານແລະຄຸ້ມຄອງຄຸນນະພາບ | 2 | 1 | 3 |
| **ລວມ** | **32** | **5** | **37** |

## 2.10. ຜູ້ໃຫ້ທຶນ.

ໃນປີ 2006 ຄະນະກຳມະການຄຸ້ມຄອງແຫ່ງຊາດເພື່ອການແກ້ໄຂບັນຫາລະເບີດບໍ່ທັນແຕກຕົກຄ້າງຢູ່ ສປປ ລາວ (ຄຄຊ) ໄດ້ຮັບທຶນຊ່ວຍເຫຼືອດ້ານການເງິນ ຈາກອົງການ ສປຊ (UNDP), ອົດສະເຕຣເລຍ (AusAID) ແລະ ການຮ່ວມຂອງ ສະວິດເພື່ອການພັດທະນາ (SDC). ສ່ວນການຊ່ວຍເຫຼືອດ້ານວັດຖຸ ອຸປະກອນ ແມ່ນໄດ້ ຈາກ ອົງການກອງທຶນສະວິດ ເພື່ອການພັດທະນາ (FSD).

## 2.11. ຂໍ້ຕົກລົງສັນຍາ.

ປີ 2006 ຄະນະກຳມະການຄຸ້ມຄອງແຫ່ງຊາດເພື່ອການແກ້ໄຂບັນຫາລະເບີດບໍ່ທັນແຕກຕົກຄ້າງຢູ່ ສປປ ລາວ (ຄຄຊ) ໄດ້ເຊັນສັນຍາຮ່ວມກັບ ອົງການ ເພື່ອມະນຸດສະທຳ ແລະ ອົງການປະຕິບັດງານເຊີງທຸລະກິດ, ດັ່ງຕໍ່ໄປນີ້:

| ຊື່ໂຄງການ | ງົບປະມານ | ຜູ້ໃຫ້ທຶນ | ແຂວງ | ເຊັນບົດບັນທຶກຄວາມເຂົ້າໃຈ | ອົງການຈັດຕັ້ງປະຕິບັດ | ໄລຍະໂຄງການ |
|---|---|---|---|---|---|---|
| ໂຄງການເກັບກູ້ລະເບີດ ສະໜັບສະໜູນ ອົງການອາຫານໂລກ | 700,000 ໂດລາສະຫະລັດ | ອິດສເອັດ | ສະຫວັນນະເຂດ | 01 ມັງກອນ 06 | ອົງການເກັບກູ້ລະເບີດສະວິດ(FSD) | 1 ປີ |
| ເກັບກູ້ລະເບີດ ຊ່ວຍເຫຼືອໝູ່ ບ້ານ | 332,048 ປອນສະເຕີລິງ | JOAC, ອັງກິດ | ສະຫວັນນະເຂດ | 12 ມີຖຸນາ 06 | ແມັກ(MAG) | 2 ປີ |
| ເກັບກູ້ລະເບີດ ເພື່ອມະນຸດສະທຳ | 1,303,404 ໂດລາສະຫະລັດ | ສະຖາບັນ ຮຳຕິດຳຕີ, ສະຫະລັດ ອາເມລິກາ | ຄຳມ່ວນ | 13 ຕຸລາ 06 | ແມັກ(MAG) | 2 ປີ |
| ເກັບກູ້ລະເບີດ ເພື່ອຄວາມປອດໄພແລະ ພັດທະນາ | 482,833 ໂດລາສະຫະລັດ | ຫ້ອງວ່າການລັດ, ສະຫະລັດ ອາເມລິກາ | ຄຳມ່ວນ | 13 ຕຸລາ 06 | ແມັກ(MAG) | 1 ປີ |

## 2.12. ຜູ້ໃຫ້ທຶນຕົ້ນຕໍ

ນັບຕັ້ງແຕ່ເລີ່ມຈັດຕັ້ງປະຕິບັດແຕ່ເດືອນມີນາ 2004, ຄະນະກຳມະການຄຸ້ມຄອງແຫ່ງຊາດເພື່ອການແກ້ໄຂບັນຫາລະເບີດບໍ່ທັນແຕກຕົກຄ້າງຢູ່ ສປປ ລາວ ໄດ້ຮັບທຶນຊ່ວຍເຫຼືອຈາກອົງການ ສປຊ ເປັນຈຳນວນຫຼາຍໂດຍຜ່ານກອງທຶນພິເສດ (Trust Fund), ຂ້າງລຸ່ມນີ້ແມ່ນທຶນປະກອບສ່ວນທີ່ໄດ້ຮັບໃນປີ 2006, ໃນນີ້ບໍ່ລວມເອົາທຶນຊ່ວຍເຫຼືອດ້ານ ວັດຖຸອຸປະກອນ ທີ່ໄດ້ຮັບຈາກກອງທຶນສະວິດເພື່ອການພັດທະນາ (FSD).

| ຜູ້ໃຫ້ທຶນ | 2006 |
|---|---|
| ກອງທຶນພິເສດຂອງ ສປຊ (Trust fund) | 350,000 ໂດລາສະຫະລັດ |
| ອົງການ ສປຊ (ການສຶກສາວິໄຈຄວາມສ່ຽງໄພ) | 80,000 ໂດລາສະຫະລັດ |
| ອິດສະຕາລີ | 229,007 ໂດລາສະຫະລັດ |
| ສະວິດ (SDC) | 99,980 ໂດລາສະຫະລັດ |
| **ລວມ** | **758,987 ໂດລາສະຫະລັດ** |

## 2.13. ການໃຊ້ຈ່າຍ

ໃນປີ 2006 ຄຄຊ ໄດ້ໃຊ້ຈ່າຍລວມທັງໝົດ 578, 762 ໂດລາສະຫະລັດ, ຊຶ່ງມີລາຍລະອຽດດັ່ງລຸ່ມນີ້:

| | |
|---|---|
| ພັດທະນາ ບຸກຄະລາກອນ ແລະ ການປະຕິບັດງານ | 456,171 ໂດລາສະຫະລັດ |
| ອຸປະກອນຮັບໃຊ້ຫ້ອງການ | 42,591 ໂດລາສະຫະລັດ |
| ສຳລັບ: ເຮັດການສຶກສາວິໄຈຄວາມສ່ຽງໄພ | 80,000 ໂດລາສະຫະລັດ |
| **ລວມທັງໝົດ** | **578,762 ໂດລາສະຫະລັດ** |

## 2.14 ໂຄງຮ່າງການຈັດຕັ້ງຂອງຫ້ອງການຄະນະກຳມະການຄຸ້ມຄອງ ແຫ່ງຊາດ ເພື່ອແກ້ໄຂບັນຫາລະເບີດບໍ່ທັນແຕກ ທີ່ຕົກຄ້າງ ຢູ່ ສປປ ລາວ

<u>ຄະນະກຳມະການປະກອບດ້ວຍ:</u>

1. ຮອງນາຍົກລັດຖະມົນຕີແຫ່ງ ສປປ ລາວ ເປັນປະທານ
2. ລັດຖະມົນຕີວ່າການ ກະຊວງແຮງງານ
3. ກະຊວງ ການຕ່າງປະເທດ
4. ກະຊວງ ປ້ອງກັນປະເທດ
5. ກະຊວງ ປ້ອງກັນຄວາມສະຫງົບ
6. ກະຊວງ ສຶກສາທິການ
7. ກະຊວງ ຖະແຫລງຂ່າວ ແລະ ວັດທະນະທຳ
8. ກະຊວງ ສາທາລະນະສຸກ
9. ກະຊວງ ກະສິກຳ ແລະ ປ່າໄມ້
10. ຄະນະກຳມະການ ແຜນການ ແລະ ການລົງທຶນ



## 3. ໂຄງການເກັບກູ້ລະເບີດແຫ່ງ ສປປ ລາວ (ຄກລ)

### 3.1. ຄວາມເປັນມາ

ໃນປີ 2006 ຄກລ ໄດ້ສະເຫຼີມສະຫຼອງວັນຄົບຮອບ10 ປີທີ່ໄດ້ເຮັດວຽກຮ່ວມກັບລັດຖະບານລາວ ໂດຍໄດ້ທຶນສະໜັບສະໜູນຈາກອົງການ ສປຊ, ຢູນີເຊັບ ແລະ ຜູ້ມີສ່ວນຮ່ວມອື່ນໆແຕ່ ປີ 1995. ປີ 1996 ສຳນັກງານໃຫ່ຍ ຄກລ ໄດ້ຖືກສ້າງຕັ້ງຂຶ້ນ ແລະ ໄດ້ສ້າງຕັ້ງສາຂາຫ້ອງການເກັບກູ້ລະເບີດຂຶ້ນທີ່ແຂວງຊຽງຂວາງ ສະຫວັນນະເຂດ ແລະ ຫົວພັນ. ອົງການສາກົນເພື່ອຄົນພິການແບນຢຽມ ໄດ້ສຳຫຼວດເບິ່ງຜົນກະທົບຈາກລະ ເບີດບໍ່ທັນແຕກໃນລະດັບຊາດ ແລະ ໄດ້ລິເລີ່ມກິດຈະກຳໂຄສະນາຊຸມຊົນໃນເນື້ອທີ່ໆໄດ້ຮັບ ຜົນກະທົບຈາກລະເບີດບໍ່ທັນແຕກ ໃນປີ 1997 ໄດ້ເລີ່ມປະຕິບັດງານພາກສະໜາມທີ່ແຂວງສະຫວັນນະເຂດ (ໂດຍໄດ້ຮັບການຊ່ວຍ ເຫຼືອ ທາງດ້ານເຕັກນິກຈາກ ອົງການສາກົນເພື່ອຄົນພິການແບນຢຽມ) ແລະຢູ່ ແຂວງ ສາລະວັນ (ໄດ້ຮັບການຊ່ວຍເຫຼືອ ທາງດ້ານເຕັກນິກຈາກອົງການທີ່ປຶກສາດ້ານລະເບີດ). ໃນປີ 1999 ເລີ່ມປະ ຕິບັດງານທີ່ແຂວງຄຳມ່ວນ ໂດຍໄດ້ ຮັບການຊ່ວຍເຫຼືອດ້ານເຕັກນິກຈາກອົງການເວີນວິເຊີນອົດສະຕາລີ. ໃນປີ 2000, ຄກລ ສຳເລັດການຮຽບຮຽງປຶ້ມມາດຕະຖານການປະ ຕິບັດງານ (SOP) ແລະ ໃນປີ 2002 ໄດ້ສຳເລັດ ຫຼັກສູດ ຂັ້ນສູງ ວິຊາ ການທຳລາຍລະເບີດ (SEOD).

ປະຈຸບັນນີ້ ຄກລ ເຄື່ອນໄຫວຢູ່ໃນ 9 ແຂວງທີ່ໄດ້ຮັບຜົນກະທົບຈາກລະເບີດບໍ່ທັນແຕກຢ່າງໜັກໜ່ວງ ທີ່ສຸດໃນປະເທດ. ໃນແຕ່ລະແຂວງ ຄກລ ມີຫ້ອງການສາຂາປະຈຳແຂວງ ແລະ ດຳເນີນງານຢູ່ພາກສະໜາມ.

### 3.2. ຜົນສຳເລັດຕົ້ນ ໃນປີ 2006

**ປັບປຸງລະບົບການກວດກູ້**

- ຮັບຮອງເອົາເຄື່ອງກວດລະເບີດຊະນິດໃໝ່/ນຳໃຊ້ເຄື່ອງກວດເລິກ
- ລົບລ້າງຕຳແໜ່ງຫົວໜ້າຈຸງານອອກ
- ຮັບຮອງເອົາລະບົບການກວດກູ້ສະໜາມຮົບ (BACs) ແບບ 100% ປອດລະເບີດ, ແທນທີ່ຈະແມ່ນ 100% ປອດໂລຫະ.
- ຝຶກອົບຮົມຂ້າມຂະແໜງໃຫ້ແກ່ພະນັກງານຂັບລົດ ແລະ ແພດສະໜາມ ໃຫ້ສາມາດເປັນນັກເກັບກູ້ (ເຮັດຫຼາຍໜ້າທີ່)

**ສົ່ງເສີມການສຳຫຼວດດ້ານເຕັກນິກ**

- ຮັບຮອງເອົາກຳມະວິທີສຳຫຼວດດ້ານເຕັກນິກ ເພື່ອກຳນົດບູລິມະສິດໜ້າວຽກໃຫ້ສອດຄ່ອງກັບການຈັດການ ກັບ ຄວາມສ່ຽງໄພ.

### 3.3. ການປະຕິບັດງານ

- ໜ່ວຍງານໂຄສະນາຊຸມຊົນ(CA) ໄດ້ຢ້ຽມຢາມ 571 ບ້ານ, ເຂົ້າເຖິງ 152,579 ຄົນ, 106.5 % ຂອງເປົ້າໝາຍປະຈຳປີ.
- ໜ່ວຍງານສຳຫຼວດປະຕິບັດວຽກໄດ້ 1,643 ໜ້າວຽກຢູ່ໃນ 967 ບ້ານ, ຄົ້ນພົບລະເບີດບໍ່ທັນແຕກໄດ້ 19,304 ໜວຍ (ບົມໃຫ່ຍ 284 ໜວຍ, ບົມບີ 11,755 ໜວຍ, ລູກມິນ 106 ໜວຍ ແລະ ລະເບີດຊະນິດອື່ນໆອີກ ຈຳນວນ 7,159 ໜວຍ).
- ໜ່ວຍງານທຳລາຍເຄື່ອນທີ່ເຮັດວຽກໄດ້ 1,216 ໜ້າວຽກ ຢູ່ໃນ 754 ບ້ານ, ຈັດການທຳລາຍ ລະເບີດບໍ່ທັນແຕກລວມທັງໝົດໄດ້ 37,115 ໜວຍ (ບົມໃຫ່ຍ 266 ໜວຍ, ບົມບີ 18,360 ໜວຍ, ມິນ 106 ໜ່ວຍ ແລະລະເບີດຊະນິດອື່ນໆຈຳນວນ 8,383 ໜວຍ).
- ໜ່ວຍງານກວດກູ້ເນື້ອທີ່ກວດກູ້ໄດ້ຫຼາຍກວ່າ 2,097 ເຮັກຕາ (115% ຂອງເປົ້າໝາຍປະຈຳປີ). ພ້ອມດຽວ ກັນນີ້ຍັງທຳລາຍລະເບີດໄດ້ 30,160 ໜວຍ (ບົມໃຫ່ຍ 25 ໜວຍ, ບົມບີ 14,796 ໜວຍ, ມິນ 39 ໜ່ວຍ ແລະ ລະເບີດຊະນິດອື່ນໆຈຳນວນ 15,300 ໜວຍ).

### 3.4. ການຝຶກອົບຮົມ

| ຫຼັກສູດຝຶກອົບຮົມ | ຈຳນວນຫຼັກສູດທີ່ໄດ້ຈັດຕັ້ງ | ຈຳນວນຜູ້ໄດ້ຮຽນຈົບຫຼັກສູດ |
|---|---|---|
| ນັກເກັບກູ້ລະເບີດ ຂັ້ນອາວຸໂສ | 1 | 21 |
| ແພດສະໜາມ | 1 | 5 |
| ນັກເກັບກູ້ລະເບີດ | 2 | 72 |
| ກວດສອບພາຍໃນດ້ານບັນຊີ | 2 | 57 |
| **ລວມ** | **6** | **155** |

### 3.5. ບຸກຄະລາກອນ

| ພາກສ່ວນ | ພາຍໃນປະເທດ | ສາກົນ | ລວມ |
|---|---|---|---|
| ພະນັກງານຫ້ອງການ | 153 | 5 | 158 |
| ພະນັກງານພາກສະໜາມ | 881 | 3 | 884 |
| **ລວມ** | **1,034** | **8** | **1,042** |

### 3.6. ຄູ່ຮ່ວມງານຈັດຕັ້ງປະຕິບັດ

- ກອງທຶນຊ່ວຍເຫຼືອຈາກປະຊາຊົນນອກແວ (NPA) ໄດ້ຂໍທຶນຈາກລັດຖະບານສະຫະລັດອາເມລິກາເພື່ອຊ່ວຍເຫຼືອການປະຕິບັດງານ ຂອງ ຄກລ. ຈົນຮອດເດືອນກໍລະກົດ ກອງທຶນຊ່ວຍເຫຼືອຈາກປະຊາຊົນນອກແວຈຶ່ງໄດ້ໃຫ້ທຶນຊ່ວຍເຫຼືອ ຂອງ ຄກລ ໃນການປະຕິບັດງານຢູ່ແຂວງອັດຕະປື ແລະ ເຊກອງ ແລະ ຊ່ວຍ 6 ເດືອນທ້າຍປີໃຫ້ແກ່ແຂວງສະຫວັນນະເຂດ ແລະ ຈຳປາສັກ. ສະໜອງທີ່ປຶກສາດ້ານເຕັກ ນິກຈຳນວນໜຶ່ງ ໃຫ້ໜ່ວຍງານການເງິນແລະໜ່ວຍງານກວດກາຄຸນນະພາບ ແລະ ນັກວິຊາການ ດ້ານການທຳລາຍລະເບີດ ອີກສອງທ່ານ.
- ອົງການທີ່ປຶກສາດ້ານລະເບີດ (ແມັກ) ໄດ້ຂໍທຶນຈາກລັດຖະບານໄອແລນຊ່ວຍເພື່ອເຫຼືອການປະຕິບັດງານ ຢູ່ແຂວງຫົວພັນ. ສະໜອງທີ່ປຶກສາດ້ານເຕັກນິກກ່ຽວກັບລະບົບການບໍລິຫານ/ການທຳລາຍລະເບີດ.
- ໂຄງການເກັບກູ້ລະເບີດຈາກຍີ່ປຸ່ນ (JMAS)ຂໍທຶນຈາກລັດຖະບານຍີ່ປຸ່ນເພື່ອຊ່ວຍເຫຼືອການປະຕິບັດງານຢູ່ແຂວງຊຽງຂວາງ, ສະໜອງທີ່ປຶກສາທາງເຕັກນິກການທຳລາຍລະເບີດໃຫ້ສອງທ່ານ.

### 3.7. ຜູ້ໃຫ້ທຶນຕົ້ນຕໍ

| ຜູ້ໃຫ້ທຶນໂດຍຜ່ານກອງທຶນພິເສດ ສຳລັບ ສປປ ລາວ | ປີ 2006 |
|---|---|
| ການາດາ | 175,439 ໂດລາສະຫະລັດ |
| ເຢຍລະມັນ | 566,052 ໂດລາສະຫະລັດ |
| ໄອຣິສ | 628,140 ໂດລາສະຫະລັດ |
| ຍີ່ປຸ່ນ | 805,153 ໂດລາສະຫະລັດ |
| ຍີ່ປຸ່ນ (JMAS) | 554,489 ໂດລາສະຫະລັດ |
| ລຸກຊຳບວກ | 318,878 ໂດລາສະຫະລັດ |
| ສະວິດເຊີແລນ | 900,000 ໂດລາສະຫະລັດ |
| ສະຫະລາຊະອານາຈັກອັງກິດ | 172,117 ໂດລາສະຫະລັດ |
| ສະຫະປະຊາຊາດ | 500,000 ໂດລາສະຫະລັດ |
| **ລວມທັງໝົດໂດຍຜ່ານກອງທຶນພິເສດ** | **4,620,268 ໂດລາສະຫະລັດ** |

### 3.8. ການໃຊ້ຈ່າຍ

ໃນປີ 2006, ຄກລ ໄດ້ໃຊ້ຈ່າຍໄປແລ້ວລວມ 4,286,954 ໂດລາສະຫະລັດ ດັ່ງລຸ່ມນີ້:

| | |
|---|---|
| ບຸກຄະລາກອນ | 2,639,093 ໂດລາສະຫະລັດ |
| ການປະຕິບັດງານ | 644,901 ໂດລາສະຫະລັດ |
| ການປະຕິບັດງານພິເສດ | 238,192 ໂດລາສະຫະລັດ |
| ຊັບສິນບັດຄົງທີ່ | 409,889 ໂດລາສະຫະລັດ |
| ຊັບສິນບັດບໍ່ຄົງທີ່ | 231,060 ໂດລາສະຫະລັດ |
| ຈັດການບໍລິຫານ ຂອງ ສປຊ | 123,819 ໂດລາສະຫະລັດ |
| **ລວມ** | **4,286,954 ໂດລາສະຫະລັດ** |

## 4. ອົງການທີ່ປຶກສາດ້ານລະເບີດ (ແມັກ)

### 4.1. ຄວາມເປັນຈິ່ງມາ

ອົງການທີ່ປຶກສາດ້ານລະເບີດ (MAG) ໄດ້ເລີ່ມການປະຕິບັດງານຢູ່ ສປປ ລາວ ແຕ່ປີ 1994. ດັ່ງນັ້ນ, ຈື່ງເຮັດໃຫ້ ອົງການແມັກມີຄວາມເຂົ້າໃຈດີທີ່ສຸດ ກ່ຽວກັບ ໃນເນື້ອທີ່ໆຖືກກະທົບຈາກເບີດບໍ່ທັນແຕກ ແລະ ຂໍ້ຈໍາກັດດ້ານການປະຕິບັດງານອື່ນໆຢູ່ໃນປະເທດ. ອົງການ ແມັກ ເອົາຄວາມຮັບຜິດຊອບ ໃນການປະກອບສວນກັບລັດຖະບານ ແຫ່ງ ສປປ ລາວ ເພື່ອບັນລຸເປົ້າໝາຍການເຕີບໃຫ່ຍຂະຫຍາຍຕົວ ແລະ ແຜນຍຸດທະສາດລົບລ້າງຄວາມ ທຸກຍາກ ແລະ ເປົ້າໝາຍ ສະຫະສະວັດ. ໄດ້ສາງຄູ່ຮ່ວມງານພາຍໃນປະເທດ ເປັນຈໍານວນຫຼາຍ ເພື່ອຮັບປະກັນໃຫ້ອົງການ ແມັກ ຈັດສັນຊັບພະຍາກອນ ແລະ ລົງປະຕິບັດງານ ໃນເນື້ອທີ່ບ່ອນໃດ ທີ່ຈະໄດ້ຮັບຜົນກະທົບຫຼາຍກວາໝູ.

ອົງຕາມບົດຮຽນທີ່ຜ່ານມາ ອົງການ ແມັກ ໄດ້ພະຍາຍາມດັດປັບ ແລະ ປັບປຸງ ວິທີທາງແກ້ໄຂຂໍ້ຂັດແຍ້ງ ແລະ ການປະຕິບັດງານເກັບກູ້ລະເບີດ, ເພື່ອຮັບປະກັນ ປະສິດທິພາບ ປະສິດທິຜົນຄວາມປອດໄພ ແລະ ເລັ່ງໃສ່ຈຸດທີ່ໄດ້ຮັບຜົນກະທົບ. ອົງການ ແມັກ ໄດ້ສະໜອງເຄື່ອງມື ກວດລະເບີດ ລຸ້ນລ່າສຸດໃຫ້ໜ່ວຍງານກວດກູ້, ໄດ້ທົດລອງ ພັດທະ ນາແລະຈັດຕັ້ງ ປະຕິບັດ ກໍາມະວິທີການກວດ ກູ້ ແບບໃໝ່ເຊັ່ນ: ກໍາມະວິທີ ການກວດກູ້ແບບປະຊາຊົນຊ່ວຍ (VAC).ໂດຍເອົາໃຈໃສ່ການ ເກັບກູໃນຊຸມຊົນ ທີ່ຖືກ ກະທົບຈາກລະເບີດ, ອົງການ ແມັກ ຍັງໄດປະເມີນ ເບິ່ງຜົນຮັບ ແລະ ສາງຕົວຊີ້ ເພື່ອ ສາມາດວັດ ແທກປະ ສິດທິ ພາບ ຂອງ ບັນດາຊັບພະຍາກອນ ທີ່ນໍາໃຊ. ໜ່ວຍປະສານງານຊຸມ ຊົນຂອງ ແມັກໄດ້ເຮັດ ວຽກຢ່າງໃກ້ສິດຕິດ ແທດກັບຊຸມຊົນ ທີ່ມີຄວາມ ສ່ຽງໄພ ເພື່ອຢາກຮູ້ວ່າລະເບີດທີ່ຕົກຄ້າງຢູ່ ນັ້ນ ໄດ້ສົ່ງຜົນກະທົບແນ່ວ ໃດຕໍ່ ຊີວິດປະຈໍາວັນ ຂອງເຂົາເຈົ້າ. ເມື່ອໄດ້ ຂໍ້ມູນນີ້ມາແລ້ວໜ່ວຍງານຂອງ ອົງການ ແມັກ ກໍສາມາດ ເລືອກ ແບບວິທີປະຕິບັດ ທີ່ເໝາະສົມກວາໝູ ເພື່ອແກ້ໄຂບັນຫາດັ່ງກ່າວ. ນັກວິຊາການ ຂອງ ອົງການ ແມັກ ບໍ່ໄດ້ເຮັດວຽກ ໂດຍລໍາພັງ, ຊຶ່ງໃນການຄາດກະເບິ່ງ ຜົນຮັບຂອງ ໜາວຽກໄດດໍາເນີນໂດຍການຮວມມື ກັບ ຊຸມຊົນ, ຄູ່ຮວມງານຈາກ ອົງການ ທີ່ບໍ່ສັງກັດລັດ ແລະ ອົງການແຫ່ງ ຊາດ ແລະ ອໍານາດການປົກຄອງທອງຖິ່ນດວຍ.

ປະຈຸບັນນີ້ ອົງການ ແມັກ ມີໜ່ວຍປະຕິບັດງານ ເອກະລາດຢູ່ທີ່ແຂວງຄໍາມ່ວນແລະຊຽງຂວາງ ໂດຍວ່າຈ້າງພະນັກງານ ຫຼາຍ ກວ່າ 200 ຄົນ ໃນນີ້ລວມມີຜູ້ຍິງ 33%. ອົງການ ແມັກ ມີປະຫວັດສາດ ອັນຍາວນານ ດ້ານການຮ່ວມມື ແລະ ເປັນ ຄູ່ຮ່ວມງານທີ່ມີປະສິດຕິພາບກັບ ຄກລ. ໃນປີ 2006 ອົງການ ແມັກໄດ້ຮັບທຶນສະ ໜັບສະໜູນຈາກລັດຖະບານສະຫະລັດ ອາເມລິກາເພື່ອຊ່ວຍເຫຼືອ ຄກລ ໃນການເກັບກູ້ ລະເບີດຢູ່ 3 ແຂວງຄື: ສາລະວັນ ຄໍາມ່ວນ ແລະສະຫວັນ ນະເຂດ, ແຕ່ເດືອນສິງຫາ 2006 ໄດ້ເຮັດວຽກຮ່ວມ ກັບ ຄກລທີ່ແຂວງ ຫົວພັນໂດຍໄດ້ຮັບທຶນຊ່ວຍ ເຫຼືອຈາກ ໄອຣິສ (Irish Aid).

### 4.2. ການປະຕິບັດງານ

ອົງການແມັກໄດ້ນໍາໃຊ້ຊຸດເຄື່ອງມືແບບປະດິດສ້າງໃໝ່ ແລະ ເປັນລະບົບໂດຍອີງໃສ່ຊຸມຊົນເປັນພື້ນຖານ ເພື່ອຮັບປະກັນວ່າເຄື່ອງມືທີ່ໄດ້ນໍາໃຊ້ເຂົ້າໃນໜ້າວຽກແມນເໝາະສົມທີ່ສຸດ.ຊຸດເຄື່ອງມືດັ່ງ ກ່າວມີຄື:

- **ເຕັກໂນໂລຊີທີ່ມີຢູ່**

ເຄື່ອງຈັກຕັດ/ເຄື່ອນຍ້າຍຕົ້ນໄມ້ ເຄື່ອງກວດເລິກ, ເຄື່ອງກວດເຫຼັກ, ເຄື່ອງກວດເລິກແມ່ເຫຼັກ ເຄື່ອງຈັກການກະເສດ ແລະ ປູກຝັງ , ເຄື່ອງຈັກຕັດແບບບັງຄັບໂດຍໄຮສາຍ ແລະ ເຄື່ອງຈັກຍົກ ທັງໝົດນີ້ປະກອບຢູ່ໃນຊຸດເຄື່ອງມືສໍາລັບ ແບບວິທີແກ້ໄຂ ຂອງ ອົງການ ແມັກ. ອົງການ ແມັກ ສາມາດເພີ້ມຕື່ມເຄື່ອງມືທີ່ມີຢູ່ເປັນຊຸດ ປະສົມປະສານເຂົ້າກັນ ເພື່ອໃຫ້ໄດ້ແຜນການປະຕິບັດທີ່ດີທີ່ສຸດ ແລະ ໃຫ້ແທດເໝາະກັບພູມມີປະເທດແລະການສະເໜີນໍາ ໃຊ້ທີ່ດິນ ອີກດ້ວຍ.

- **ໜ່ວຍປະສານງານຊຸມຊົນ ແລະ ສໍາຫຼວດ**

ນັບແຕ່ເດືອນມີນາ 2006 ໜ່ວຍງານຂອງ ອົງການ ແມັກລາວທັງໝົດໄດ້ເຮັດໜ້າທີ່ປະສານງານຊຸມຊົນ. ໜ່ວຍປະສານງານຊຸມຊົນມີໜາທີ່ຮັບປະກັນໃຫຊຸມຊົນແລະ ບຸກຄົນມີສິດທີ່ຈະໄດ້ຮັບຂໍ້ມູນຂ່າວສານ ມີສ່ວນຮ່ວມ ໃນການຕັດສິນໃຈໃນທຸກໆຂັ້ນຕອນຂອງຂະບວນການເກັບກູ້. ສວນໃນບ້ານ ໜ່ວຍປະສານງານ ຊຸມຊົນກໍຍັງເກັບກໍາຂໍ້ມູນ ແລະ ແຕ້ມແຜນວາດບ່ອນທີ່ມີລະເບີດທີ່ອັນຕະລາຍ ຫລັງຈາກ ລາຍງານຂໍ້ມູນທີ່ ໄດ້ຮັບໃຫ້ໜ່ວຍງານດ້ານເຕັກນິກ ຊຶ່ງເປັນຜູ້ທີ່ຈະຕິດຕາມເຄື່ອນຍ້າຍ ແລະ ທໍາລາຍລະເບີດດັ່ງ ກ່າວຖິ້ມ.

- **ໜ່ວຍງານສຶກສາຄວາມສ່ຽງໄພ ຈາກ ລະເບີດບໍ່ທັນແຕກ**

ໂດຍໄດ້ຮັບການມອບໝາຍຈາກອົງການຢູນີເຊັບ, ອົງການ ແມັກ ໄດ້ເຮັດການປະເມີນຜົນ ການ ສຶກສາຄວາມສ່ຽງໄພ ຈາກ ລະເບີດບໍ່ທັນແຕກ ຢູ່ 5 ແຂວງ ເພື່ອລົງເລິກເບິ່ງບັນດາປັດໃຈ ຂອງພຶດຕິກໍາຄວາມສ່ຽງໄພ ແລະ ຂໍ້ຊີ້ ແນະຕໍ່ ຍຸດທະສາດແລະ ໃນການວາງຊອງທາງແກ້ໄຂບັນຫາຄວາມສ່ຽງໄພ ຕໍ່ລະເບີດບໍ່ທັນແຕກ ຢູ່ໃນ ສປປ ລາວ.

- **ໜ່ວຍທໍາລາຍເຄື່ອນທີ່**

ມັນເປັນປະສົບການຂອງ ອົງການ ແມັກທີ່ໜ່ວຍງານທໍາລາຍ ຫຼືໜ່ວຍງານເກັບກູ້ເລັ້ມມາດທໍາລາຍລະເບີດໄດ້ ໃນທຸກໆພື້ນທີ່ໆມອບໝາຍ, ເມື່ອໃດ ປະຊາຊົນລາຍງານລະເບີດ ທີ່ພວກເຂົາ ໄດ້ພົບເຫັນໃຫ້ໜ່ວຍງານ ຮັບຊາບ ອົງການ ແມັກ ກໍມີໜ່ວຍ ທໍາລາຍເຄື່ອນ ທີ່ປະຈໍາຢູ່ ແຕ່ລະ ແຂວງ ເພື່ອຕອບສະໜອງຄໍາສະເໜີຕ່າງໆ ແລະ ເຮັດໜ້າວຽກຢູ່ຕາມຈຸດຕ່າງໆ, ຕົວຢ່າງຢູ່ແຂວງຊຽງ ຂວາງ ທີ່ໄດ້ຮັບ ທຶນ ສໍາໜັບສະໜູນ ໂຄງການໂດຍສະຫະພັນເອີລົບ ອົງການ ແມັກສາມາດເຮັດວຽກເຄື່ອນທີ່ໄດ້ 78 ໜ້າວຽກ ໂດຍໄດ້ ຮັບການລາຍງານ ແລະ ຮ້ອງຂໍຄວາມຊ່ວຍເຫຼືອຈາກຊຸມຊົນ, ສາມາດທໍາລາຍລະເບີດທີ່ບໍ່ ທັນແຕກ ໄດ້ 2,760 ໜ່ວຍ ໃນນີ້ລວມມີບົມໃຫ່ຍ 44 ໜ່ວຍ ແລະ ບົມບີອີກຈໍານວນ 1,464 ໜ່ວຍ (BLU).

- **ໜ່ວຍກວດກູ້ເນື້ອທີ່**

ໃນປີ 2006 ທີ່ເມືອງໜອງແຮດ ແຂວງຊຽງຂວາງ ອົງການ ແມັກໄດ້ກວດກູ້ໃນເນື້ອທີ່ເດີ່ນໂຮງຮຽນປະຖົມ ແລະ ມັດທະຍົມ ຖໍ້າໄຊ ໂດຍໄດ້ຮັບທຶນຊ່ວຍເຫຼືອຈາກ ດີຟິດ(DFID), ກວດພົບບົມບີ 198 ໜ່ວຍ, 76 ໜ່ວຍ ຕໍ່ ເຮັກຕາ, ຊຶ່ງຝັງຢູ່ພື້ນດິນຢູ່ຕື້ນກວ່າ 25 ຊມ. ຖ້າມີເດັກນ້ອຍຜູ້ໃດຫາກຂຸດເຂ່ຍ ໃນບໍລິເວນນີ້ກໍສາມາດເກີດ ລະເບີດຂຶ້ນ ໄດ້ຢ່າງງ່າຍດາຍ.

ນອກນີ້ ອົງການ ແມັກ ຍັງໄດ້ກວດກູ້ເນື້ອທີ່ເດີ່ນໂຮງຮຽນ 4 ແຫ່ງ ໂດຍການສະໜັບສະໜູນ ຈາກອົງການກາ ແດງລາວທີ່ ເມືອງໜອງແຮດ ລວມທັງເນື້ອທີ່ເດີ່ນໂຮງຮຽນອີກໜຶ່ງແຫ່ງທີ່ຖໍ້າພອງ. ໂຮງຮຽນຖໍ້າພອງຫລັງ ໃໝ່ນີ້ ໄດ້ນໍາຄຸນປະໂຫຍດ ໃນຫຼາຍດ້ານ ໂດຍປະຈຸບັນສາມາດສອນນັກຮຽນທີ່ມີອາຍຸເຖິງ 15 ປີ. ກ່ອນໜ້າ ນີ້ເດັກທີ່ມີ ອາຍຸ 6 ປີຕ້ອງ ໄປເຂົ້າໂຮງຮຽນຢູ່ໃນຕົວເມືອງໜອງແຮດພຸ້ນ ຊຶ່ງໄລຍະທາງໄກກວ່າ 20 ກິໂລແມັດ, ໂດຍໃຊ້ເວລາຍ່າງສີ່ ຊົ່ວໂມງຜ່ານພູຜາບ່ອນທີ່ມັກມີກະແສລົມໜາວຕາມຖະໜົນແລະທາງຍ່າງ. ໃນໄລຍະຮຽນ ນັກຮຽນ ຕ້ອງພັດພາກ ຈາກຄອບຄົວເປັນເວລາຫ້າວັນໃນທຸກໆອາທິດແຕ່ ວັນຈັນ ເຖິງ ວັນສຸກ ປະຈຸບັນນີ້ ນ້ອງນັກຮຽນ ກໍບໍ່ຈໍາເປັນຕ້ອງເດີນທາງໄກຫຼືເສຍຄ່າໃຊ້ຈ່າຍຄ່າທີ່ພັກເຊົາທີ່ ເມືອງ ໜອງແຮດ ອີກແລວ.

ທີ່ບ້ານຫ້ວຍດອກຄໍາ, ໄດ້ນໍາໃຊ້ວິທີການກວດກູ້ແບບມີຊາວບ້ານຊ່ວຍ, ອົງການ ແມັກ ສາມາດກວດກູ້ເນື້ອ ທີ່ໄດ້ຫຼາຍ ກວ່າ 40 ເຮັກຕາ ໂດຍມີ 20 ຄອບຄົວທີ່ໄດ້ຮັບຜົນປະໂຫຍດ. ອີງຕາມບອກເລົ່າຈາກປະຊາຊົນບານນັ້ນ ວ່າ: “ຢູ່ດິນຕອນນີ້ ພວກເຮົາໄດ້ຮັບອຸບັດຕິເຫດຫຼາຍກວ່າ 10 ເທື່ອ, ເວລາເຮັດນາຢູ່ມີສອງຄົນ ເສຍຊີວິດ ແລະ ອີກຫາຄົນບາດເຈັບ, ນອກນີ້ກໍຍັງມີຄົນເສຍຊີວິດອີກສີ່ຄົນຍ້ອນການມ້າງບົມໃຫ່ຍເພື່ອເອົາເສດເຫຼັກ ແລະ ສ່ວນອຸບັດຕິເຫດຄັ້ງສຸດທ້າຍໄດເກີດຂຶ້ນເມື່ອສອງປີທີ່ແລ້ວ ກ່ອນໜາທີ່ ອົງການ ແມັກ ໄດເຂົ້າມາ ກວດກູເນື້ອທີ່ນີ້.”

## 4.3. ການຝຶກອົບຮົມ

ອົງການ ແມັກ ສືບຕໍ່ເອົາຄວາມຮັບຜິດຊອບໃນການຍົກຂີດຄວາມສາມາດ ຂອງນັກເກັບກູ້ ລາວ ປະຈໍາຄກລ ໃນດ້ານການຈັດການແລະການທໍາລາຍລະເບີດ ໃນນີ້ລວມທັງການຝຶກອົບຮົມ ແລະ ສ້າງໜ່ວຍ ງານທໍາລາຍບົມໃຫ່ຍເຄື່ອນທີ່ໃຫ້ແກ່ສາມແຂວງທີ່ ຄກລ ປະຕິບັດງານ. ນອກນີ້ ອົງການ ແມັກ ຍັງໄດ້ຝຶກອົບ ຮົມໜ່ວຍປະສານງານຊຸມຊົນ ດ້ານເຕັກນິກການເກັບກໍາຂໍ້ມູນຂ່າວສານ ແບບມີສ່ວນຮ່ວມ ແລະ ຝຶກອົບຮົມນັກເກັບກູ້ລະເບີດ 27 ຄົນ, ຫົວໜ້າແລະຮອງຫົວໜ້າໜ່ວຍງານໃໝ່ 12 ຄົນ, ແພດສະໜາມ 5 ຄົນ ແລະ ຜູ້ປະສານງານຊຸມຊົນ ອີກ 5 ຄົນ ແລະ ຍັງໄດ້ມີການ ຝຶກອົບຮົມໃຫ້ແກ່ບັນດາພະນັກງານ ຊວຍວຽກໂຄງການອີກດວຍ.

ອົງການ ແມັກລາວ ຍັງເອົາຄວາມຮັບຜິດຊອບໃນການພັດທະນາຂີດຄວາມສາມາດຂອງພະນັກງານຊວຍວຽກໂຄງການ ແລະ ໄດ້ຝຶກອົບຮົມໃຫ້ແກ່ຜູ້ບໍລິຫານ ດ້ານການຈັດການແລະ ພາວະການເປັນຜູ້ນໍາ ແລະ ປະ ຈຸບັນກໍາລັງຝຶກອົບຮົມດ້ານພາສາ ແລະ ຄອມພິວເຕີຢູ່.

| ຫຼັກສູດຝຶກອົບຮົມ | ຫຼັກສູດ | ຈຳນວນຜູ້ໄດ້ຮຽນຈົບຫຼັກສູດ |
|---|---|---|
| ຝຶກອົບຮົມນັກເກັບກູ້ລະເບີດ | ກຸມພາ ແລະ ທັນວາ 06 | 27 |
| ຝຶກອົບຮົມຫົວໜ້າໜ່ວຍງານ | ກຸມພາ ແລະ ທັນວາ 06 | 12 |
| ຝຶກອົບຮົມແພດສະໜາມ | ກຸມພາ ແລະ ທັນວາ 06 | 5 |
| ຝຶກອົບຮົມຜູ້ປະສານງານຊຸມຊົນ | ກຸມພາ ແລະ ທັນວາ 06 | 5 |
| ກວດກາຕິດຕາມແລະປະເມີນຜົນ | ມີນາ 06 | 1 |
| ໂຄງການແມັກກຳປູເຈ່ຍມາທັດສະນະສຶກສາ | 26 ພຶດສະພາ 06 | 2 |
| ຝຶກອົບຮົມການບໍລິຫານແລະຊີ້ນຳ | 12-14 ມິຖຸນາ 06 | 2 |
| ຝຶກອົບຮົມການນຳໃຊ້ຂໍ້ມູນຂ່າວສານລາວ | 12-14 ມິຖຸນາ 06 | 1 |
| ພາສາອັງກິດທົ່ວໄປ | ກໍລະກົດເຖິງກັນຍາ 06 | 1 |
| ຝຶກອົບຮົມຖານຂໍ້ມູນຂ່າວສານແອັກແຊັສ | 7-18 ກໍລະກົດ 06 | 3 |
| ຝຶກອົບຮົມການບໍລິຫານໂຄງການ | 2225 ສິງຫາ 06 | 2 |
| ຮຽນຂັບລົດໃຫ່ຍ | 1 ສິງຫາເຖິງ 31 ຕຸລາ 06 | 1 |
| ວາງແຜນຍຸດທະສາດ | 18-22 ກັນຍາ 06 | 2 |
| ກ່ຽວກັບບັນຫາເຊື້ອເອັສໄອວີ (ເອດ) | ກັນຍາ 06 | 1 |
| ຝຶກອົບຮົມຄອມພິວເຕີ | ກັນຍາ 06 | 5 |
| ສຳມະນາຄວາມເປັນຜູ້ນຳຂອງຊາວໜຸ່ມ | ຕຸລາ 06 | 3 |

### 4.4. ບຸກຄະລາກອນ

| ພາກສ່ວນ | ພາຍໃນປະເທດ | ສາກົນ | ລວມ |
|---|---|---|---|
| ພະນັກງານເກັບກູ້ລະເບີດ | 86 | 4 | 90 |
| ປະສານງານຊຸມຊົນ | 11 | 1 | 12 |
| ແພດສະໜາມ | 17 | | 17 |
| ອາສາສະມັກບ້ານ | 48 | | 48 |
| ພະນັກງານສະໜັບສູນ | 41 | 2 | 43 |
| **ລວມ** | **203** | **7** | **210** |

### 4.5. ຄູ່ຮ່ວມຈັດຕັ້ງປະຕິບັດ

ອົງການ ແມັກ ເຮັດວຽກຮ່ວມກັບຫຼາຍຄູ່ຮ່ວມງານ ເພື່ອຮັບປະກັນໃຫ້ໄດ້ຮັບຜົນສູງສຸດ. ໃນປີ 2006 ຜູ້ໃຫ້ທຶນສະໜັບສະໜູນອົງການແມັກລວມມີອົງການອາຫານໂລກ, ອົງການກາແດງລາວ-ເດນມາກ, ອົງການສຸພານິມິດ ແລະ ສາມຫຼ່ຽມ ແລະ ພັດທະນາການບັນເທົາທຸກສາກົນ.

### 4.6. ຜູ້ໃຫ້ທຶນຕົ້ນຕໍ

ປີ 2006 ອົງການ ແມັກລາວ ໄດ້ຮັບທຶນສະໜັບສະໜູນໂຄງການຈາກຜູ້ໃຫ້ທຶນດັ່ງນີ້:

- ກົມພັດທະນາສາກົນ (DFID), ລັດຖະບານລາຊະອານາຈັກອັງກິດ
- ສະຫະພັນເອີລົບ
- ທຶນຊ່ວຍເຫຼືອໄອຣິສ
- ສະຫະພັນຊ່ວຍເຫຼືອເຈີຊີ (JOAC)
- ສະຖາບັນຮຳຕິດຳຕີ
- ລັດຖະບານສະຫະລັດອາເມລິກາ (DOS PM/WRA)
- ຢູນິເຊັບ

## 4.7. ການປະກອບສ່ວນຈາກຜູ້ໃຫ້ທຶນ

| | | |
|---|---|---|
| ກົມພັດທະນາສາກົນ | ອັງກິດ 1 ກຸມພາ 2006 ເຖິງ 31 ມີນາ 2007 | 621,099 ໂດລາສະຫະລັດ |
| ສະຫະພັນເອີລົບ | 1 ມັງກອນ 2006 ເຖິງ 31 ທັນວາ 2008 | 1,200,000 ໂດລາສະຫະລັດ |
| ສະຖາບັນຮໍາຕິດໍາຕີ ສາຫະລັດອາເມລິກາ | 1 ຕຸລາ 2006 ເຖິງ 30 ພະຈິກ 2007 | 1,400,000 ໂດລາສະຫະລັດ |
| ທຶນຊ່ວຍເຫຼືອໄອຣິສ (ຊ່ວຍເຫຼືອ ຄກລ) | 1 ສິງຫາ 06 ເຖິງ 31ກໍລະກົດ 07 | 605,000 ໂດລາສະຫະລັດ |
| ສະຫະພັນຊ່ວຍເຫຼືອເຈີຊີ | 1 ກັນຍາ 06 ເຖິງ 31 ສິງຫາ 07 | 63,841 ໂດລາສະຫະລັດ |
| ຢູນີເຊັບ | 1 ມິຖຸນາ 06 ເຖິງ 30 ກັນຍາ 06 | 52,995 ໂດລາສະຫະລັດ |
| ກະຊວງການຕ່າງປະເທດ ຂອງ ສະຫະລັດອາເມລິກາ (ຊ່ວຍເຫຼືອ ຄກລ) | 1 ກໍລະກົດ 05 ເຖິງ 30 ມິຖຸນາ 06 | 952,000 ໂດລາສະຫະລັດ |
| ກະຊວງການຕາງປະເທດ ຂອງສະຫະລັດອາເມລິກາ | 1 ຕຸລາ 06 ເຖິງ 30 ກັນຍາ 07 | 557,643 ໂດລາສະຫະລັດ |
| **ລວມ** | | **5,452,578 ໂດລາສະຫະລັດ** |

## 4.8. ການໃຊ້ຈ່າຍ

ໃນປີ 2006 ອົງການ ແມັກໄດ້ໃຊ້ຈ່າຍລວມທັງໝົດ 2,460,804 ໂດລາສະຫະລັດ, ຊຶ່ງລາຍລະອຽດມີ ດັ່ງນີ້:

| | |
|---|---|
| ບຸກຄະລາກອນ | 1,028,228 ໂດລາສະຫະລັດ |
| ການປະຕິບັດງານ | 753,412 ໂດລາສະຫະລັດ |
| ການປະຕິບັດງານພິເສດ | 160,987 ໂດລາສະຫະລັດ |
| ຊັບສິນບັດຄົງທີ່ | 347,783 ໂດລາສະຫະລັດ |
| ຊັບສິນບັດບໍ່ຄົງທີ່ | 170,394 ໂດລາສະຫະລັດ |
| **ລວມ** | **2,460,804 ໂດລາສະຫະລັດ** |

ໝາຍເຫດ. ລາຍຈ່າຍນີ້ລວມທັງການຊ່ວຍເຫຼືອໃຫ້ ຄກລ, ໂດຍເພີ່ມໃສ່ມູນຄ່າ ສໍາລັບ ການປະຕິບັດ 3 ໂຄງການ ແລະ ການຝຶກອົບຮົມໜ່ວຍງານກວດກູ້ໃໝ່ຈໍານວນ 8 ໜ່ວຍງານ ແລະ ໜ່ວຍປະສານງານຊຸມຊົນ ໃໝ່ອີກ 5 ໜ່ວຍງານ.

**ຮູບ. 4. ເກັບກ່ຽວເຂົ້ານາໃນ ເນື້ອທີ່ປອດໄພ, ບ້ານຫ້ວຍດອກຄໍາ ແຂວງຊຽງຂວາງ, ຖ່າຍຮູບ ໂດຍ ຊຽນຊັດຕັນ, ອົງການ ແມັກ.**



## 5. ອົງການ ສາກົນເພື່ອຄົນພິການແບັນຢຽມ (HIB)

### 5.1. ຄວາມເປັນມາ

ໃນປີ1996 ອົງການ ສາກົນເພື່ອຄົນພິການແບັນຢຽມ (HIB) ໄດ້ຈັດຕັ້ງການສຳຫຼວດໃນທົ່ວປະເທດ ກ່ຽວກັບຜົນກະທົບ ຈາກລະເບີດຕໍ່ກັບເສດຖະກິດສັງຄົມ. ປີ 1997 ອົງການ ສາກົນເພື່ອຄົນພິການແບັນຢຽມ ໄດ້ໃຫ້ການຊ່ວຍເຫຼືອ ດ້ານເຕັກນິກ ເກັບກູ້ລະເບີດໃຫ້ແກ່ ຄກລ ທີ່ແຂວງສະຫວັນນະເຂດ, ໂຄງການ ດັ່ງກ່າວໄດ້ສິ້ນສຸດລົງໃນ ເດືອນ ທັນວາ 2004. ເດືອນພຶດສະພາ 2004 ເຖິງ ເມສາ 2005 ອົງການ ສາກົນເພື່ອຄົນພິການແບັນຢຽມ ໄດ້ໃຫ້ການ ຊ່ວຍເຫຼືອດ້ານເຕັກນິກເກັບກູ້ລະເບີດໃຫ້ແກ່ ຄກລ ທີ່ແຂວງຄຳມ່ວນ. ນອກນີ້ ອົງການ ສາກົນເພື່ອຄົນພິການແບັນຢຽມ ກໍ່ຍັງມີຄວາມ ຈິງຈັງຕໍ່ ການຊ່ວຍເຫຼືອຜູ້ຖືກເຄາະຮ້າຍໂດຍການ ເຂົ້າປະຕິບັດງານ ໂດຍກົງໃນການດູແລ ແລະ ນຳສົ່ງຜູ້ປະສົບເຄາະຮ້າຍ ຍ້ອນອຸບະຕິເຫດ ຈາກລະເບີດ, ເພື່ອໃຫ້ ການຟື້ນຟູ, ຊ່ວຍໃນການຈັດສຳມະນາ ລະດັບຊາດ.

### 5.2. ບໍລິບົດສະເພາະ

ແຂວງ ສະຫວັນນະເຂດ ເປັນແຂວງທີ່ໄດ້ຮັບຜົນກະທົບຈາກລະເບີດບໍ່ທັນແຕກຢ່າງໜັກທີ່ສຸດໃນ ສປປ ລາວ. ບັນດາເມືອງທີ່ຖືວ່າເປັນຈຸດສຸມໃນການເຂົ້າປະຕິບັດງານນັ້ນເປັນ ເມືອງທີ່ໄດ້ຮັບ ຜົນກະທົບ ໜັກທີ່ສຸດ ຢູ່ໃນແຂວງ. ປະຊາຊົນທີ່ຢູ່ໃນເຂດຫ່າງໄກສອກຫຼີກເຫລົ່ານີ້ມີຄວາມທຸກທໍລະມານ ອັນເນື່ອງຈາກສະພາບ ການໂດດດ່ຽວ ແລະ ຂາດການຕິດຕໍ່ຈາກໂລກພາຍນອກ ແລະ ຍິ່ງກວ່ານັ້ນເກືອບວ່າໝົດທຸກ ໝູ່ບ້ານແມ່ນ ພົບສະພາບການຄວາມຫຍຸ້ງຍາກໃນການ ເຂົ້າເຖິງໄດ້ໂດຍສະເພາະໃນຍາມລະດູຝົນ ຫຼື ໃນບາງ ກໍລະນີກໍ່ບໍ່ສາ ມາດເຂົ້າເຖິງໄດ້ເລີຍ, ອັນເນື່ອງຈາກສະພາບການຢູ່ຫ່າງໄກສອກຫຼີກ ແລະ ຂາດເສັ້ນທາງທີ່ຈະເຂົ້າເຖິງໄດ້ບວກ ໃສ່ ມີປະຊາກອນນ້ອຍ ດັ່ງນັ້ນຈຶ່ງເຮັດໃຫ້ໝູ່ບ້ານດັ່ງກ່າວ ມັກຈະຖືກຈັດຢູ່ໃນ ບຸລິມະສິດ ຕ່ຳສຳ ລັບການດຳ ເນີນການ ກວດກູ້ ແລະ ການສຶກສາຄວາມສ່ຽງໄພ.

ເພື່ອສັງເຂບບັນຫາແລ້ວການເກັບເສດເຫຼັກຊຶ່ງມີການພົວພັນກັບລະເບີດທີ່ບໍ່ທັນແຕກໃນສ່ວນໃດສ່ວນໜຶ່ງມັນ ກາຍເປັນກິດຈະກຳເສີມສ້າງລາຍໄດ້ ໃຫ້ແກ່ຄອບຄົວ, ຊຶ່ງມີປະຊາຊົນຈຳນວນໜຶ່ງທີ່ໄດ້ ປະຕິບັດກັນ ເພື່ອບັນເທົາ ຄວາມທຸກຍາກ ແລະ ເພື່ອຫາລ້ຽງຊີບ ແລະ ຄວາມຢູ່ລອດ. ການເກັບເສດເຫຼັກ ແລະ ການພະຍາຍາມມາງ ລະເບີດທີ່ບໍ່ທັນແຕກ ເປັນກິດຈະກຳທີ່ອັນຕະລາຍ ແລະ ມີຄວາມສ່ຽງໄພສູງທີ່ສຸດ ມັນບໍ່ພຽງແຕ່ຍາມມາງ ເປັນອັນ ຕະລາຍຕໍ່ຜູ້ທີ່ ໄດ້ສຳພັດກັບລະເບີດເທົ່ານັ້ນ ແຕ່ມັນຍັງເປັນອັນຕະລາຍ ຕໍ່ຜູ້ທີ່ຢູ່ ໃກ້ຄຽງ ທີ່ບໍ່ໄດ້ ມີການລະ ວັງຕົວ ມາກ່ອນວ່າ ມີການກະທຳທີ່ມີ ຄວາມສ່ຽງຢູ່ທາງຂ້າງ. ເປົ້າໝາຍ ຂອງ ອົງການ ສາກົນເພື່ອຄົນພິການ ແບຢຽມ ແມ່ນເພື່ອ ຫຼຸດຜ່ອນຄວາມ ສ່ຽງໄພເຫຼົ່ານີ້ໃຫ້ແກ່ຊຸມຊົນ ໂດຍການ ຈັດຕັ້ງ ໂຄງການ ເກັບກູ້ລະເບີດ ແບບປະສົມ ປະສານ ແລະ ປະຕິບັດກິດຈະກຳການໂຄສະນາສຶກສາ ຄວາມສ່ຽງໄພໃຫ້ແກ່ຊຸມຊົນ.

### 5.3. ການປະຕິບັດງານ

ວັນທີ 7 ເດືອນມິຖຸນາ 2006 ອົງການ ສາກົນເພື່ອຄົນພິການແບັນຢຽມ ໄດ້ເລີ່ມລົງມືປະຕິບັດງານເກັບກູ້ລະເບີດທີ່ ແຂວງ ສະຫວັນນະເຂດ ໂດຍ ຢູ່ອ້ອມແອ້ມຕົວເມືອງເຊໂປນ. ຫລັງຈາກນັ້ນໜ່ວຍງານກໍໄດ້ເຄື່ອນຍ້າຍໄປ ເມືອງນອງ ເພື່ອສະ ໜັບສະໜູນ ໂຄງການປູກຝັງແລະຊົນລະປະທານ ຂອງອົງການຮ່ວມມື ດ້ານເຕັກນິກຈາກ ແບນຢຽມ (BTC). ໃນເວລານັ້ນ ໄດ້ມີຕົວແທນຈາກອົງການສຸພານິມິດ ເຂົ້າມາທາບທາມ ເພື່ອໃຫ້ສະໜັບ ສະໜູນ ໂຄງການ ພັດທະນາຊົນນະບົດ ຫ້າປີ ທີ່ເມືອງເຊໂປນແລະເມືອງນອງ.

ການປະຕິບັດງານໂຄສະນາສຶກສາ ຄວາມສ່ຽງໄພໄດ້ເລີ່ມຂຶ້ນຈາກການປະເມີນຜົນຄວາມຕ້ອງການ ໃນ ເດືອນ ກັນຍາ 2007 ແລະກ້າວເຂົ້າສູ່ການຝຶກອົບຮົມກ່ຽວກັບການໂຄສະນາສຶກສາຄວາມສ່ຽງໄພໃຫ້ແກ່ ອາສາສະ ໝັກບ້ານ (CBREV) ໃນ 12 ໝູ່ບ້ານຂອງ ເມືອງ ເຊໂປນ ໃນອານາຄົດອາສາສະໝັກຈາກ ເມືອງ ນອງ ແລະ ວິລະບູລີ ຈະມາຮ່ວມເຮັດວຽກ ກັບອາສາສະໝັກ ເມືອງ ເຊໂປນ ອີກ.

### 5.4. ຜົນສຳເລັດປະຈຸບັນ

- **ໜ່ວຍງານສຳຫຼວດ**

ເລີ່ມແຕ່ໂຄງການລົງມືປະຕິບັດງານ ໜ່ວຍງານສຳຫຼວດໄດ້ຢ້ຽມຢາມ 21 ບ້ານ

■ **ໜ່ວຍທຳລາຍເຄື່ອນທີ່**

ໜ່ວຍງານໄດ້ລົງຢັ້ງມຢາມ 16 ບ້ານ, ຢັ້ງມຢາມທັງໝົດລວມ 23 ຄັ້ງ, ທຳລາຍແລະເຄື່ອນຍ້າຍບົມໃຫ່ຍໄດ້ 82 ໜວຍ, ບົມບີ 532 ໜວຍ ແລະ ລະເບີດຊະນິດອື່ນໆອີກຈຳນວນ 461 ໜວຍ.

■ **ໜ່ວຍກວດກູ້**

ໜ່ວຍງານສາມາດກວດກູ້ເນື້ອທີ່ໄດ້ 200,871 ຕາແມັດ ມີຜູ້ໄດ້ຮັບຜົນປະໂຫຍດໂດຍກົງຫຼາຍກວ່າ 3,774 ຄົນ (ເນື້ອທີ່ກະສິກຳ 178,327 ຕາແມັດ ແລະເນື້ອທີ່ອື່ນໆອີກ 22,544 ຕາແມັດ). ໃນຂະນະທີ່ໜ່ວຍງານປະຕິບັດງານຢູ່ນັ້ນ ໄດ້ທຳລາຍແລະເຄື່ອນຍ້າຍບົມໃຫ່ຍໄດ້ 3 ໜວຍ, ບົມບີ 256, ມີນ 1 ໜ່ວຍ ແລະລະ ເບີດຊະນິດອື່ນໆອີກຈຳນວນ 1,290 ໜວຍ.

ຈຳນວນລວມທັງໝົດຂອງການປະຕິບັດງານກວດກູ້ ແລະທຳລາຍເຄື່ອນທີ່ລວມມີ: ກວດເນື້ອທີ່ແລະມອບເນື້ອທີ່ປອດໄພໃຫ້ຜູ້ຊົມໃຊ້ໄດ້ທັງໝົດ 200,871 ຕາແມັດ, ທຳລາຍລະເບີດໄດ້ 2,625 ໜວຍ, ລວມທັງບົມໃຫ່ຍ 82 ໜວຍ.

## 5.5. ການຝຶກອົບຮົມ

| ຫຼັກສູດຝຶກອົບຮົມ | ຈຳນວນຫຼັກສູດ | ຈຳນວນຜູ້ໄດ້ຮຽນຈົບຫຼັກສູດ |
|---|---|---|
| ນັກເກັບກູ້ | 1 | 18 |
| ແພດສະໜາມ | 1 | 3 |
| ອາສາສະມັກ ສຶກສາຄວາມສ່ຽງໃຫ້ຊຸມຊົນ | 1 | 18 |
| ສຳຫຼວດ | 1 | 1 |
| **ລວມ** | **4** | **40** |

## 5.6. ບຸກຄະລາກອນ

| ພາກສ່ວນ | ພາຍໃນປະເທດ | ສາກົນ | ລວມ |
|---|---|---|---|
| ຜູ້ປະສານງານໂຄງການ | | 1 | 1 |
| ຜູ້ຊ່ວຍປະສານງານ | 1 | | 1 |
| ນັກເກັບກູ້ | 21 | 1 | 22 |
| ນັກສຳຫຼວດ | 2 | | 2 |
| ການສຶກສາວິໄຈຄວາມສ່ຽງໄພ | 3 | | 3 |
| ຊ່ວຍເຫຼືອຜູ້ໄດ້ຮັບເຄາະຮ້າຍ | 0 | | 0 |
| ພະນັກງານຊ່ວຍວຽກ | 19 | | 19 |
| ແພດສະໜາມ | 3 | | 3 |
| ຜູ້ແປພາສາພາກສະໜາມ | 1 | | 1 |
| **ລວມ** | **49** | **2** | **51** |

## 5.7. ຄູ່ຮ່ວມງານຈັດຕັ້ງປະຕິບັດ

ອົງການ ສາກົນເພື່ອຄົນພິການແບັນຢຽມ ປະຕິບັດງານໂດຍຮ່ວມມືກັບ ອົງການຮ່ວມມືດ້ານເຕັກນິກ ແບັນຢຽມ ແລະ ອົງການສຸພານິມິດ, ແຕ່ຍັງບໍ່ມີຂໍ້ຕົກ ລົງເປັນຄູ່ຮ່ວມງານຢ່າງເປັນທາງການເທື່ອ.

## 5.8. ຜູ້ໃຫ້ທຶນຕົ້ນຕໍ

ສະຫະພັນເອີລົບ

## 5.9. ການປະກອບສ່ວນຈາກຜູ້ໃຫ້ທຶນ

ອົງການ ສາກົນເພື່ອຄົນພິການແບັນຢຽມ ໄດ້ຮັບທຶນສຳລັບການປະຕິບັດງານທັງໝົດ 1,139,548 ເອີໂຣ.

## 6. ໂຄງການ ມູນລິທິສະວິດເພື່ອການພັດທະນາ (FSD)

### 6.1. ຄວາມເປັນມາ

ອົງການ ມູນນິລິທິສະຫວິດເພື່ອການພັດທະນາ (FSD) ເປັນໂຄງການເກັບກູ້ລະເບີດເພື່ອມະນຸດສະທຳທີ່ເຮັດວຽກຢູ່ທົ່ວໂລກ. ພາຍຫລັງທີ່ໂຄງ ການ ໄດ້ເຊັນບົດບັນທຶກຄວາມເຂົ້າໃຈກັບ ຄຄຊ ໃນເດືອນມັງກອນ 2006, ອົງການກໍ່ໄດ້ເລີ່ມການຝຶກອົບຮົມ ການສຳຫຼວດແລະກວດກູ້ໃນ ສປປ ລາວ. ອົງການອາຫານໂລກ ເປັນຄູ່ຮ່ວມງານຂອງອົງການ FSD ສຳລັບການເກັບກູ້ລະເບີດ, ຢູ່ ສປປ ລາວ ເພື່ອສະໜັບສະໜູນໂຄງການອາຫານເພື່ອງານຂອງອົງການອາຫານໂລກ. FSD ກວດກູ້ເນື້ອ ທີ່ສຳລັບໂຄງການ ເພື່ອເຮັດນາຜື້ນໃໝ່ ໜອງປາ ລະບົບຊົນລະປະທານ ແລະ ທົນທາງ.

ໂຄງການ FSD ຍັງຈະເຮັດວຽກທີ່ມີຄວາມສາມາດຄ້າຍຄືກັນກັບເພື່ອຮ່ວມງານແລນໂກຄາ(Langoca) ຂອງອົງການແຄສາກົນໃນປີ 2007 ໂດຍສືບຕໍ່ວກພື້ນຖານ, ຊຶ່ງຄູ່ຮ່ວມງານໄດ້ປະຕິບັດມາໃນປີ 2006.

ນອກຈາກນີ້ FSD ຍັງໄດ້ໃຫ້ຄວາມຊ່ວຍເຫຼືອແກ່ຕົວແທນພາກລັດເປັນຕົ້ນແມ່ນ ຄກລ (ດ້ານ ການຝຶກອົບຮົມ) ແລະ ຄຄຊ (ດ້ານຂໍ້ມູນຂ່າວສານ ແລະ ມາດຕະຖານແຫ່ງ ຊາດ ກ່ຽວກັບ ບັນຫາລະເບີດບໍ່ທັນແຕກ/ມິນ).

### 6.2. ຜົນສຳເລັດຕົ້ນຕໍໃນປີ 2006

- ຝຶກອົບຮົມແລະຈັດສົ່ງ 4 ໜ່ວຍງານເກັບກູ້ລົງເຮັດວຽກຢູ່ ແຂວງ ສະຫວັນນະເຂດ.
- ກວດກກູ້ໄດ້ 24 ໜ້າວຽກ ສຳລັບການພັດທະນາພາຍໃຕ້ ໂຄງການ ອາຫານເພື່ອງານ ຂອງ ອົງການ ອາຫານໂລກ.
- ຝຶກອົບຮົມວິຊາການຂັ້ນສູງດ້ານການທຳລາຍລະເບີດໃຫ້ແກ່ ຄກລ ແລະ FSD.
- ຮ່າງມາດຕະຖານແຫ່ງ ຊາດ ກ່ຽວກັບ ບັນຫາລະເບີດບໍ່ທັນແຕກ.
- ສ້າງຖານຂໍ້ມູນແຫ່ງ ຊາດ ກ່ຽວກັບ ການເກັບກູ້ລະເບີດບໍ່ທັນແຕກ.

### 6.3. ການປະຕິບັດງານ

- **ສຳຫຼວດ:** ໃນໄລຍະປີ 2006, ດຳເນີນການສຳຫຼວດໄດ້ 30 ສະໜາມເພື່ອການກະກຽມສຳລັບການກວດກູ້.
- ທຳລາຍເຄື່ອນທີ່: ໃນໄລຍະປີ 2006, ວຽກທຳລາຍເຄື່ອນທີ່ເອກະລາດສຳລັບວຽກກວດກູ້ແມ່ນ ບໍ່ໄດ້ເຄື່ອນໄຫວເລີຍ ເນື່ອງຈາກວ່າບໍ່ໄດ້ລະບຸຢູ່ໃນບົດບັນທຶກຄວາມເຂົ້າໃຈຂອງ FSD. ເຖິງແມ່ນ ໃດກໍຕາມ ໃນກໍລະນີທີ່ມີປະຊາຊົນມາລາຍງານກ່ຽວກັບລູກລະເບີດທີ່ຢູ່ໃກ້ກັບສະໜາມທີ່ກວດກູ້ຢູ່ ນັ້ນ ໜ່ວຍງານຂອງພວກເຮົາກໍໄດ້ຊ່ວຍທຳລາຍຖິ້ມແລ້ວບັນທຶກເຂົ້າເປັນພາກສ່ວນວຽກໜຶ່ງຂອງ ໜ່ວຍງານກວດກູ້.
- **ກວດກູ້ເນື້ອທີ່.** ໃນໄລຍະປີ 2006, ໜ່ວຍງານກວດກູ້ສະໜາມໃຫ້ອົງການອາຫານໂລກໄດ 24 ແຫ່ງ ຊຶ່ງທຸກໆສະໜາມພາຍຫລັງທີ່ກວດກູ້ສຳເລັດແລ້ວ ກໍມີກິດຈະກຳ ການພັດທະນາຕາມມາພ້ອມ.

### 6.4. ການຝຶກອົບຮົມ

| ຫຼັກສູດຝຶກອົບຮົມ | ຫຼັກສູດ | ຈຳນວນຜູ້ໄດ້ຮຽນຈົບຫຼັກສູດ |
|---|---|---|
| T1 ນັກເກັບກູ້ | 1 | 27 |
| T2 ຫົວໜ້າຈຸງານ | 1 | 9 |
| T4 ວິຊາການຂັ້ນສູງດ້ານການທຳລາຍ ລະເບີດ(ຮ່ວມກັບ ຄກລ/ສພບ /ແມັກ/ເອັນພີເອ | 1 | 21 (ຄກລ 20 / FSD 1) |

| | | |
|---|---|---|
| ແພດສະໜາມ (ຢູ່ນຳ ຄກລ) | 1 | 5 |
| ໂຄສະນາສຶກສາ ຄວາມສ່ຽງ ຕໍ່ເອັສໄອວີ (PSI) | 1 | 29 |
| ຄູຝຶກດ້ານໂຄສະນາ ກ່ຽວກັບ ຄວາມສ່ຽງ ຕໍ່ເອັສໄອວີ | 1 | 9 (FSD 7 ຄົນ/ສພບ 2 ຄົນ)(ຮ່ວມກັບອົງການ ແຄ ແລະ ສພບ) |
| **ລວມ** | **6** | **100** |

## 6.5. ບຸກຄະລາກອນ

| **ພາກສ່ວນ** | **ພາຍໃນປະເທດ** | **ສາກົນ** | **ລວມ** |
|---|---|---|---|
| ນັກເກັບກູ້ | 34 | 5 | 39 |
| ນັກສຳຫຼວດ | 3 | 1 | 4 |
| ນັກໂຄສະນາສຶກສາຊຸມຊົນດ້ານຄວາມສ່ຽງໄພ | 0 | 0 | 0 |
| ກູ້ຊ່ວຍເຫຼືອຜູ້ໄດ້ຮັບເຄາະຮ້າຍ | 0 | 0 | 0 |
| ຜູ້ຊ່ວຍວຽກ ໂຄງການ | 10 | 0 | 10 |
| **ລວມ** | **47** | **6** | **53** |

## 6.6. ຄູ່ຮ່ວມງານຈັດຕັ້ງປະຕິບັດ

FSD ເຮັດວຽກຮ່ວມກັບຄູ່ຮ່ວມງານດັ່ງລຸ່ມນີ້:

ການປະຕິບັດງານເກັບກູ້ລະເບີດ: ອົງການອາຫານໂລກ
ຝຶກອົບຮົມນັກເກັບກູ້ແລະແພດສະໜາມ: ຄກລ / ສພບ / ແມັກ / ເອັນພີເອ / ພີເອສໄອ / ອົງການແຄ
ຖານຂໍ້ມູນລູກລະເບີດ ແລະມາດຕະຖານແຫ່ງຊາດ: ຄຄຊ (ໃນຖານະເປັນຜູ້ໃຊ້ບໍລິການ)

## 6.7. ຜູ້ໃຫ້ທຶນຕົ້ນຕໍ

| **ແຫຼ່ງທຶນ** | **ຈຳນວນ (ໂດລາສະຫະລັດ)** |
|---|---|
| FSD ອອກທຶນດ້ວຍຕົນເອງໂດຍລ່ວງໜ້າ | 374,590 ໂດລາສະຫະລັດ |
| ວິນເດີເຊີແນວ | 38,170 ໂດລາສະຫະລັດ |
| ອິສເອດ (ຄວດທີ 1) | 443,000 ໂດລາສະຫະລັດ |
| ອິສເອດ (ຄວດທີ 2) | 443,000 ໂດລາສະຫະລັດ |
| ເອຕັດເດີເຊີແນວ | 78,739 ໂດລາສະຫະລັດ |
| ຊຸມຊົນຊູເລັກ | 4,982 ໂດລາສະຫະລັດ |
| ມູນລະນິທິຈອນສັນ | 32,136 ໂດລາສະຫະລັດ |
| ກົມຕອນເດີວາລາອີສ | 15,998 ໂດລາສະຫະລັດ |
| ອິສເອດ (ໂຄງການສະໜັບສະໜູນ ຄຄຊ) | 127,884 ໂດລາສະຫະລັດ |

## 6.8. ການໃຊ້ຈ່າຍ

| | |
|---|---|
| ຄ່າບຸກຄະລາກອນ | 705,738 ໂດລາສະຫະລັດ |
| ຄ່າການປະຕິບັດງານ | 189,611 ໂດລາສະຫະລັດ |
| ຄ່າການປະຕິບັດງານພິເສດ | 126,868 ໂດລາສະຫະລັດ |
| ຊັບສິນບັດຄົງທີ່ | 346,345 ໂດລາສະຫະລັດ |
| ຊັບສິນບັດບໍ່ຄົງທີ່ | 32,283 ໂດລາສະຫະລັດ |
| **ລວມ** | **1,490,845 ໂດລາສະຫະລັດ** |

## 7. ໂຄງການ ຮ່ວມມືດ້ານການເກັບກູ້ລະເບີດ ມິນເຊີດ ຈຳກັດ (Milsearch BPKP)

### 7.1. ຄວາມເປັນມາ

ໂຄງການຮ່ວມມືດ້ານການເກັບກູ້ລະເບີດມິນເຊີດຈຳກັດ ເປັນບໍລິສັດທີ່ໄດ້ຈົດທະບຽນລະ ຫວ່າງ ບໍລິສັດເກັບກູ້ລະເບີດອົດສະຕາລີ ແລະ ບໍລິສັດການຄ້າຂອງກະຊວງປ້ອງກັນຊາດ ໃນນາມບໍລິສັດພັດທະນາເຂດພູດອຍ (ບພດ) ພາຍໃຕ້ການຊີ້ນຳ ຂອງ ສຳນັກງານນາຍົກລັດຖະມົນຕີ. ຄູ່ຮ່ວມງານໄດ້ເຮັດ ວຽກຮ່ວມກັນເລີ່ມແຕ່ປີ 1993, ທຳອິດໄດ້ເຮັດຂໍ້ຕົກລົງ ສ້າງໜ່ວຍງານຂຶ້ນກ່ອນແລະຮ່ວມມືກັນນັບແຕ່ປີ 1997. ໃນຖານະທີ່ ເປັນບໍລິສັດ ການຄ້າມິນເຊີດ ມີຄວາມຊ່ຽວຊານທາງດ້ານການເກັບກູ້ລະເບີດ ເພື່ອສະໜັບສະໜູນການພັດທະນາໂຄງລ່າງຂອງ ລັດ ແລະ ເອກະຊົນ. ເຖິງແນວໃດກໍດີເມື່ອໃດມີທຶນໂຄງການ ຍັງໄດ້ຊ່ວຍການເກັບກູ້ລະເບີດເພື່ອ ມະນຸດສະທຳອີກດ້ວຍ.

### 7.2. ຜົນສຳເລັດຕົ້ນຕໍໃນກູ້ປີ 2006

**ການກວດກູ້ເນື້ອທີ່**

- ກວດກູ້ເນື້ອທີ່ບໍ່ຄຳ ແລະ ທອງ ເຊໂປນ ໃຫ້ແກ່ບໍລິສັດລ້ານຊ້າງບໍ່ແຮ່ທີ່ແຂວງສະຫວັນນະເຂດ. ກວດກູ້ເນື້ອທີ່ໄດ້ 524.25 ເຮັກຕາ, ທຳລາຍລູກລະເບີດໄດ້ 1,313 ໜ່ວຍ.
- ບໍລິສັດພະລັງງານໄຟຟ້ານ້ຳເທີນ 2, ໂຄງການພະລັງງານໄຟຟ້ານ້ຳເທີນ 2 ທີ່ແຂວງບໍລິຄຳໄຊ, ຄຳມ່ວນ ແລະ ສະຫວັນນະເຂດ. ກວດກູ້ ເນື້ອທີ່ໄດ້ 580.69 ເຮັກຕາ, ທຳລາຍລະເບີດໄດ້ 2,085 ໜ່ວຍ.
- ບໍ່ແຮ່ພູເບ້ຍ, ບໍ່ແຮ່ພູເບ້ຍ ແລະ ສຳຫຼວດບໍ່ແຮ່ ຢູ່ແຂວງ ຊຽງຂວາງແລະໄຊສົມບູນ. ກວດກູ້ເນື້ອທີ່ໄດ້ 13.66 ເຮັກຕາ, ທຳລາຍລະເບີດໄດ້ 222 ໜ່ວຍ.
- CRWRC, ໂຄງການ ພັດທະນາຊີວິດການເປັນຢູ່ຊຸມຊົນ ທີ່ ແຂວງ ຊຽງຂວາງ. ກວດກູ້ເນື້ອທີ່ໄດ້1.92ເຮັກຕາ, ທຳລາຍລະເບີດໄດ້ 14 ໜ່ວຍ.
- ໄຟຟ້າເຈຄອບເຊັ້ນ, ໂຄງການ ສາຍສົ່ງໄຟຟ້າ ແລະ ແຈກຈຳໜ່າຍພາກເໜືອ ທີ່ແຂວງບໍລິຄຳໄຊ. ກວດກູ້ເນື້ອທີ່ໄດ້ 8.32 ເຮັກຕາ.
- ມິລິຄອມລາວ, ໂຄງການເຄືອຄ່າຍໂທລະສັບມືຖືແທງໄກທີ່ແຂວງຄຳມ່ວນ.ກວດກູ້ເນື້ອທີ່ໄດ້ 0.95 ເຮັກຕາ, ທຳລາຍລະເບີດໄດ້ 4 ໜ່ວຍ.
- ກວດກູ້ໄດ້ທັງໝົດ 1,129.79 ເຮັກຕາ; ທຳລາຍລະເບີດໄດ້ 3,638 ໜ່ວຍ.

### 7.3. ການຝຶກອົບຮົມ

| ຫຼັກສູດຝຶກອົບຮົມ | ຫຼັກສູດ | ຈຳນວນຜູ້ໄດ້ຮຽນຈົບຫຼັກສູດ |
|---|---|---|
| ການທຳລາຍລະເບີດ | 1 | 2 |

### 7.4. ບຸກຄະລາກອນ

| ພາກສ່ວນ | ພາຍໃນປະເທດ | ສາກົນ | ລວມ |
|---|---|---|---|
| ພະນັກງານຢູ່ຫ້ອງການໃຫຍ່ | 8 | 3 | 11 |
| ພະນັກງານເຕັກນິກພາກສະໜາມ | 560 | 22 | 582 |
| ພະນັກງານຖາງປ່າ ແລະ ພະນັກງານທ້ອງຖິ່ນ | ຫຼາຍຮ້ອຍຄົນ | | |
| **ລວມ** | **568** | **25** | **593** |

**ໝາຍເຫດ:** ຈຳນວນພະນັກງານມີການປ່ຽນແປງຫຼາຍ ອີງຕາມໜ້າວຽກທີ່ລະບຸຕາມສັນຍາ ວ່າຈ້າງແຮງງານ. ຈຳນວນຕົວເລກຂ້າງເທິງນີ້ເປັນພຽງແຕ່ຕົວເລກ ຂາງຄຽງ ໃນເວລາເລັ່ງວຽກ ກ່ອນລະດູຝົນ ຂອງ ປີ 2006

# 8. ໂຄງການເກັບກູ້ລະເບີດຟີນິກຈຳກັດ (PCL).

## 8.1. ຄວາມເປັນມາ

ໂຄງການ ເກັບກູ້ລະເບີດຟີນິກຈຳກັດ (PCL)ເປັນບໍລິສັດເອກະຊົນທີ່ມີຄວາມຊຳນານດ້ານການ ເກັບກູ້ລະເບີດບໍ່ທັນແຕກ/ ມິນ. ຟີນິກລາວ ມີຄວາມສາມາດໃນການຈັດການຕໍ່ທຸກໆບັນຫາ ກ່ຽວຂ້ອງກັບລະເບີດທີ່ບໍ່ທັນແຕກ ບໍ່ວ່າວຽກນັ້ນ ຈະໃຫ່ຍຫຼືນ້ອຍພຽງໃດກໍຕາມ.

ພະນັກງານຂອງໂຄງການຟີນິກມີຄວາມສາມາດສູງໃນການປະຕິບັດງານໃນອາຊີຕາເວັນອອກສຽງໃຕ້, ກິດຈະກຳທີ່ປະຕິບັດເຖິງປະຈຸບັນລວມມີ ໃຫ້ການໂຄສະນາສຶກສາ ຄວາມສ່ຽງໄພຈາກລະເບີດບໍ່ທັນແຕກ/ມິນ, ການສຳຫຼວດ ການຮອງຮັບອຸບັດຕິເຫດສຸກເສີນ ແລະ ການເກັບກູ້ລະເບີດບໍ່ທັນແຕກ/ມິນ.

ຟີນິກມີຄວາມເຊື່ອໝັ້ນໃນການເຊື່ອມສານ ແລະ ການເກັບກູ້ແບບມີສ່ວນຮ່ວມ ໂດຍການເຮັດ ວຽກ ຢ່າງໃກ້ສິດຕິດ ແທດກັບລູກຄ້າ ອຳນາດການປົກຄອງລະດັບສູນກາງແລະທ້ອງຖິ່ນ ຊາວບ້ານແລະພາກສ່ວນ ທີ່ກ່ຽວຂ້ອງອື່ນໆ ເພື່ອຕອບສະໜອງຄວາມຕ້ອງການທີ່ແທ້ຈິງແລະເພື່ອຄວາມຍືນຍົງ ຂອງ ການພັດທະນາ.

## 8.2. ການປະຕິບັດງານໃນປີ 2006

ລູກຄ້າຂອງຟີນິກໃນປີ 2006 ລວມມີ:

- **ບໍລິສັດພະລັງງານໄຟຟ້ານ້ຳເທີນ**
  ກວດກູ້ເນື້ອທີ່ຕັ້ງບ້ານໃໝ່ ໃນເນື້ອທີ່ກວ້າງເຖິງ 1,200 ເຮັກຕາ.
- **ຈີ4 ແລນໂຣເວີທ້າທາຍ (ເມື່ອກ່ອນຮູ້ກັນໃນນາມ ຄາເມວແຮນລີ)**
  ການແຂ່ງຂັນຂັບລົດແລະທົດສອບສະມັດທະນະຄວາມແຂງແຮງ ຂອງ ຮ່າງກາຍລະດັບສາກົນ ຈັດຂຶ້ນໃນຫຼາຍພື້ນທີ່ທົ່ວ ປະເທດ ສປປ ລາວ.
- **ບໍລິສັດພະລັງງານໄຟຟ້ານ້ຳເທີນ**
  ການໂຄສະນາສຶກສາຄວາມສ່ຽງໄພຈາກລະເບີດບໍ່ທັນແຕກໃຫ້ຊຸມຊົນ ແລະ ໜ່ວຍງານຮັບຜິດຊອບດ້ານລະເບີດເກັບກູ້ລະເບີດບໍ່ທັນແຕກ ເປັນ ເວລາ 3 ປີ.
- **ບໍລິສັດສາຍເຄເບີ້ນປະເທດຈີນ**
  ກວດກູ້ເນື້ອທີ່ກໍ່ສ້າງເສົາໄຟຟ້າແຮງສູງທີ່ມີຄວາມຍາວ 273 ກິໂລແມັດ
- **ໂຄງການປະຕິບັດງານຕານຄວາມອຶດຢາກ**
  ກວດກູ້ເນື້ອທີ່ສະໜັບສະໜູນໂຄງການອາຫານເພື່ອງານຢູ່ 3 ບ້ານ ທີ່ຢູ່ຫ່າງໄກສອກຫຼີກ.

## 8.3. ບຸກຄະລາກອນ

| **ພາກສ່ວນ** | **ພາຍໃນປະເທດ** | **ສາກົນ** | **ລວມ** |
|---|---|---|---|
| ພະນັກງານເກັບກູ້ລະເບີດ | ພະນັກງານມີຫຼາຍລະດັບແຕກຕ່າງກັນຈາກ 200 ເຖິງ 40 ຂຶ້ນກັບໜ້າວຽກແລະຂະໜາດຂອງສັນຍາ | | 3 |
| ພະນັກງານສຳຫຼວດ ພະນັກງານຊ່ວຍວຽກຫ້ອງການວຽງຈັນ | ຕາມຄວາມຕ້ອງການ 5 | | |

# 9. ກະຊວງສຶກສາ

## 9.1. ຄວາມເປັນມາ

ກະຊວງສຶກສາ ຈັດຕັ້ງປະຕິບັດແຕ່ພຽງຜູ້ດຽວດ້ານໂຄສະນາສຶກສາຄວາມສ່ຽງ ຈາກ ລະເບີດບໍ່ທັນແຕກ/ມີນ ເຂົ້າໃນໂຄງການຫຼັກສູດ ການສຶກສາ ໂດຍໄດ້ຮັບທຶນສະໜັບສະໜູນຈາກອົງການສຶກສາໂລກ/ຄອນຊອກຊຽມໃນ ສປປ ລາວ. ໂຄງການ ໂຄສະນາສຶກສາຄວາມສ່ຽງໄພ ນີ້ເລີ່ມຕົ້ນຂຶ້ນຈາກອົງການສຶກສາໂລກ/ຄອນຊອກຊຽມ ໃນຖານະທີ່ເປັນເອື້ອຍ ຂອງໂຄງການ ດ້ານການແພດ, ຊຶ່ງໄດ້ຮັບທຶນຊ່ວຍ ເຫຼືອຈາກກອງທຶນຊ່ວຍ ເຫຼືອສະຫະລັດອາເມລິກາ ທີ່ ແຂວງຊຽງຂວາງ. ໂຄງການ ໄດ້ຈັດຕັ້ງ ການຝຶກອົບຮົມ ໃຫ້ທ່ານ ໝໍດ້ານການ ປິ່ນປົວສຸກເສີນ ແລະ ການປິ່ນປົວ ກໍລະນີເຈັບໜັກ ແລະທາງແຂວງຍັງໄດ້ຮຽກຮ້ອງໃຫ້ ເອົາກິດຈະກໍາການໂຄສະນາ ສຶກສາ ຄວາມສ່ຽງໄພ ນີ້ເຂົ້າຮ່ວມຢູ່ໃນໂຄງການ. ໃນປີ 1996/97 ອົງການສຶກສາໂລກໄດ້ເລີ່ມລົງມືເຮັດວຽກ ກັບພະແນກສຶກສາ ແຂວງ ແລະ ປຶ້ມຄູ່ມືການໂຄສະນາສຶກສາ ຄວາມສ່ຽງໄພ ຈາກລະເບີດບໍ່ທັນແຕກ ຫົວທໍາອິດ, ຊຶ່ງໄດ້ມີ ການກະກຽມ ແລະ ຈັດພິມ ໂດຍໄດ້ຮັບທຶນຊ່ວຍເຫຼືອຈາກອິສເອດ. ປະຈຸບັນນີ້ ໂຄງການດັ່ງກ່າວ ໄດກາຍເປັນໂຄງ ການລະດັບຊາດ ໂດຍການດໍາເນີນງານ ຂອງ ກະຊວງສຶກສາ.

ກະຊວງສຶກສາ ຫ້ອງການສຶກສາແຂວງ ແລະ ເມືອງ ໂດຍການຮ່ວມມືກັບອົງການສຶກ ສາໂລກ/ຄອນຊອກຊຽມ ໄດ້ພັດທະນາໂຄງການຫຼັກສູດການສຶກສາກ່ຽວກັບລະເບີດບໍ່ທັນແຕກ ໂດຍລວມມີ 50 ບົດຮຽນ (10 ບົດຕໍ່ຊັ້ນຮຽນ) ແລະ ຈັດເຂົ້າເປັນບົດຮຽນເສີມເຂົ້າໃນຫຼັກສູດສາມັນ. ບົດຮຽນ ກ່ຽວກັບ ລະເບີດບໍທັນແຕກ ໄດ້ສິດສອນຢູ່ໃນຊັ້ນ ປະຖົມປີທີ 1 ເຖິງ ປີທີ 5 ແລະ ນອກນີ້ກໍຍັງໄດ້ສອນຮ່ວມຊັ້ນໃນກໍລະນີທີ່ ມີນັກຮຽນ ບໍ່ຫຼາຍ ໃນແຕ່ລະຊັ້ນ, ອີງຕາມ ນະໂຍບາຍຂອງລັດຖະບານລາວແມ່ນຈະເພີ້ມຈໍານວນ ນັກຮຽນ ໃຫ້ເຖິງ 30-32 ຄົນ ຕໍ່ອາຈານສອນໜຶ່ງຄົນ.

ໂຄງການ ຫຼັກສູດ ແມ່ນເພື່ອຫຼຸດຜ່ອນ ແລະ ກັນອຸບັດຕິເຫດ ແລະ ເພື່ອຊຸກຍູ້ຄູອາຈານ ໃຫ້ມີການນໍາໃຊ້ ກິດຈະກໍາເປັນພື້ນຖານ ໃຊ້ນັກຮຽນເປັນໃຈກາງ ໂດຍເລີ່ມຈາກຄໍາຖາມຂອງອາຈານ, ອຸປະກອນ ປະຈັກຕາ, ບັນດາກິດຈະກໍາ, ການຮ້ອງເພັງ ແລະ ເຮັດວຽກເປັນກຸ່ມ, ເຊື່ອມໂຍງການສິດສອນ ແລະ ຮໍ່າຮຽນໃຫ້ແທດເໝາະກັບຊີວິດປະຈໍາວັນ. ໃນກຸ່ມເປົ້າໝາຍມີນັກຮຽນ ໂຮງຮຽນປະຖົມ, ຄູອາຈານ, ຄອບຄົວ ແລະ ສະມາຊິກໃນຊຸມຊົນຂອງເຂົາ.

## 9.2. ຜົນໄດ້ຮັບຕົ້ນຕໍໃນປີ 2006

**ກອບການປົກຄຸມ**

- ກອງປະຊຸມລິເລີ່ມໂຄງການໄດ້ຈັດຕັ້ງຂຶ້ນສໍາລັບພະນັກງານສຶກສາແຂວງຄໍາມ່ວນ ແລະໃນຂັ້ນ ເມືອງສໍາລັບ8 ຕົວເມືອງໃໝ່ ໃນສົກການສຶກສາປີ 2006-2007.
- ການສໍາມະນາຝຶກອົບຮົມໄດ້ຈັດຂຶ້ນສໍາລັບອາຈານໃໝ່ 9 ທ່ານ (ຊຸດນີ້ງລວມມີອາຈານປະມານ 30 ທ່ານ) ຢູ່ໃນເມືອງເກົ່າໃນສອງສົກສຶກສາປີ 2005-2006 ແລະ 2006-2007 ແລະອີກຊຸດໃໝ່ສໍາ ລັບ 8 ເມືອງໃໝ່ໃນສົກສຶກສາປີ 2006-2007.
- ຕິດຕາມການບໍລິການຝຶກອົບຮົມສໍາລັບຊຸດອົບຮົມໃນ 9 ແຂວງໃນສົກສຶກສາປີ 2005-2006 ແລະ 2006-2007.

**ການຍົກລະດັບຂີດຄວາມສາມາດ**

- ການທົບທວນຄືນປະຈໍາປີລະດັບແຂວງໄດ້ຈັດຂຶ້ນໃນສົກສຶກສາປີ 2005-2006 ໃນ 8 ແຂວງ
- ການທົບທວນຄືນປະຈໍາປີລະດັບສູນກາງໄດ້ຈັດຂຶ້ນໃນ ເດືອນ ກໍລະກົດ 2006 ໃນ 9 ແຂວງ

**ອຸປະກອນແລະການສະໜັບສະໜູນ**

- ໄດ້ມີການທົບທວນອຸປະກອນຮັບໃຊ້ ພັດທະນາແລະຈັດພິມຄູ່ມື 3 ແບບ ສໍາລັບ ຄູສອນໃໝ່.
- ສ້ອມແປງອຸປະກອນຮັບໃຊ້ຫ້ອງການຢູ່ 6 ແຂວງ
- ມອບຊຸດເຄື່ອງມືຮັບໃຊ້ໃຫ້ແກ່ຄູອາຈານໃນສົກສຶກສາ 2005-06 ແລະ 2006-07 ຈໍານວນທັງໝົດ 7,574 ຊຸດ
- ສະໜັບສະໜູນກິດຈະກໍາກ່ຽວກັບລະເບີດໃນວັນເດັກນ້ອຍສາກົນວັນທີ 1 ມິຖຸນາ 2006 ໃຫ້ແກ່ໝົດທຸກເມືອງທີ່ໄດ້ ສະເໜີຂໍໃຫ້ຈັດກິດຈະກໍາ.

- ສະໜອງເຄື່ອງກະຈາຍສຽງໃຫ້ແກ່ກອງລະຄອນຕຸກກະຕາສຳລັບເມືອງໃໝ່ທັງໝົດ.

### 9.3. ການປະຕິບັດງານ

ປະຈຸບັນນີ້ ໂຄງການ ຫຼັກສູດກ່ຽວກັບລະເບີດບໍ່ທັນແຕກ ໄດ້ນຳໄປສິດສອນໃນໂຮງຮຽນຂອງບັນດາແຂວງທີ່ໄດ້ຮັບຜົນ ກະທົບໜັກທີ່ສຸດດັ່ງນີ້:

- ຊຽງຂວາງ
- ຫົວພັນ
- ສະຫວັນນະເຂດ
- ສາລະວັນ
- ຫຼວງພະບາງ
- ຄຳມ່ວນ
- ຈຳປາສັກ
- ເຊກອງ
- ອັດຕະປື

ຫຼັກສູດດັ່ງກ່າວໄດ້ກວມເອົາ 33 ເມືອງ ທີ່ໄດ້ຮັບຜົນກະທົບໜັກທີ່ສຸດ ຄິດສະເລ່ຍປະຈຳປີມີໂຮງຮຽນ 1,300 ແຫ່ງ,ຄູອາຈານ 3,800 ທ່ານ, ນັກຮຽນ 120,000 ຄົນ. ພະນັກງານສຶກສາຂອງລັດປະມານ 175 ຄົນທີ່ ໄດ້ຮັບທຶນຊ່ວຍເຫຼືອຈາກອົງການສຶກສາໂລກ ໃນນີ້ມີຜູ້ປະສານງານພາກສະໜາມ 3 ຄົນ, ແຕ່ລະຄົນ ຮັບຜິດຊອບ 3 ແຂວງ.

### 9.4. ການຝຶກອົບຮົມ

ອາຈານທຸກໆຄົນໄດ້ຮັບການຝຶກອົບຮົມກ່ອນການປະຕິບັດງານ ແລະໃນຂະນະທີ່ປະຕິບັດງານດັ່ງນີ້:

- ນຳໃຊ້ ໂຄງການ ຫຼັກສູດກ່ຽວກັບລະເບີດບໍ່ທັນແຕກແລະບົດຮຽນແບບຢ່າງສຳລັບແຕ່ລະຊັ້ນຮຽນ
- ຂຽນເລື່ອງສັ້ນລະປະຕິດແຕ່ງກ່ຽວກັບລະເບີດ ແລະຮູບພາບປະກອບ
- ຜະລິດລະຄອນຕຸກກະຕາກ່ຽວກັບລະເບີດບໍ່ທັນແຕກ ພ້ອມທັງການສະແດງ
- ຝຶກອົບຮົມກ່ອນແລະຫລັງການທົດລອງ
- ຝຶກອົບຮົມຄູແບບຢ່າງ
- ກິດຈະກຳການຮຽນການສອນອີງໃສ່ນັກຮຽນເປັນໃຈກາງ

ການຝຶກອົບຮົມໄດ້ຈັດຕັ້ງຂຶ້ນແລະສິດສອນໂດຍຜູ້ຊ່ຽວຊານດ້ານການສຶກສາຈາກອົງການສຶກສາໂລກ/ຄອນຊອກຊຽມ ແລະຈາກຝ່າຍລັດຖະບານລາວ.

### 9.5. ບຸກຄະລາກອນ

| ພາກສ່ວນ | ພາຍໃນປະເທດ | ສາກົນ | ລວມ |
|---|---|---|---|
| ພະນັກງານສຶກສາລາວ | 175 | | 175 |
| ອາຈານສອນ | 3,800 | | 3,800 |
| ພະນັກງານອົງການສຶກສາໂລກ | 4 | | 4 |
| **ລວມ** | **3,979** | | **3,979** |

### 9.6. ຄູ່ຮ່ວມປະຕິບັດງານ

ອົງການສຶກສາໂລກຄອນຊອກຊຽມປະຈຳ ສປປ ລາວ.

### 9.7. ຜູ້ໃຫ້ທຶນຕົ້ນຕໍ ແລະ ລາຍຈ່າຍ.

ງົບປະມານປະຈຳປີສຳລັບໂຄງການມີປະມານ 114,000 ໂດລາສະຫະລັດ ໂດຍໄດ້ຮັບທຶນຊ່ວຍເຫຼືອຈາກກະຊວງຕາງປະເທດ ກົມກຳກັບການເຄື່ອນຍ້າຍແລະລົບລ້າງການນຳໃຊ້ອາວຸດສົງຄາມລັດຂອງ ສະ ຫະລັດອາເມລິກາ.

# 10. ຊາວໜຸ່ມ ປປ ລາວ

## 10.1. ຄວາມເປັນມາ

ເລີ່ມແຕ່ປີ 2002- 2005 ອົງການຢູນິເຊັບໄດ້ສະໜັບສະໜູນໂຄງການປູກຈິດສຳນຶກໃຫ້ແກ່ເດັກນ້ອຍ,ຊຶ່ງຈັດຕັ້ງປະຕິບັດໂດຍສະຫະພັນຊາວໜຸ່ມລາວໃນ ສປປ ລາວເພື່ອຈຸດປະສົງ:

- ຫຼຸດຜ່ອນຄວາມສ່ຽງໄພຕໍ່ອຸບັດຕິເຫດຈາກລະເບີດບໍ່ທັນແຕກໃນໝູ່ເດັກນ້ອຍ ແລະຄອບຄົວທີ່ດຳລົງຊີວິດຢູ່ໃນພື້ນທີ່ໆໄດ້ຮັບຜົນກະທົບຈາກລູກລະເບີດບໍ່ທັນແຕກຢູ່ ສປປ ລາວ ໂດຍສະເພາະແມ່ນຢູ່ຕາມບັນດາເມືອງແລະແຂວງທີ່ໄດ້ຮັບຜົນກະທົບໜັກທີ່ສຸດ.
- ປັ້ບປຸງຂີດຄວາມສາມາດຂອງສະຫະພັນຊາວໜຸ່ມລາວແລະຊຸມຊົນໃນທ້ອງຖິ່ນ ເພື່ອການຈັດຕັ້ງປະຕິບັດບັນດາກິດຈະກຳໂຄສະນາ ສຶກສາຄວາມສ່ຽງໄພຈາກ ລະເບີດບໍ່ທັນແຕກ/ມິນ.

ໂຄງການໄດ້ຜະລິດອຸປະກອນເພື່ອການພັດທະນາເດັກນ້ອຍ ແລະກິດຈະກຳສຳລັບຊາວໜຸ່ມທີ່ຢູ່ໃນ ແລະນອກໂຮງຮຽນ, ນອກນີ້ຍັງໄດ້ຍັງໄດ້ພັດທະນາເນື້ອທີ່ເດີ່ນສຳລັບຫຼິ້ນທີ່ມີຄວາມປອດໄພ ແລະເຮັດກິດຈະກຳໃນຊຸມຊົນ. ທາງໂຄງການ ໄດເນັ້ນໃສຂະບວນການຝຶກອົບຮົມບັນດາອາສາສະໝັກຢູ່ໃນບ້ານ ເພື່ອອຳນວຍຄວາມສະດວກໃນການສະແດງລະຄອນ ຫຼິ້ນເກມ ຮ້ອງເພັງ ແລະ ຍັງມີອີກຫຼາຍໆກິດຈະກຳສຳລັບ ເດັກນອຍທີ່ຢູ່ພາຍໃນແລະນອກໂຮງຮຽນ ທີ່ໄດແຊກສອດບັນດາຂໍ້ຄວາມກ່ຽວກັບຄວາມປອດໄພ ຈາກລະເບີດບໍ່ທັນແຕກ. ຊາວໜຸ່ມ ປປ ລາວ ໄດ້ຝຶກອົບຮົມໃຫ້ແກ່ອາສາສະໝັກບ້ານຈຳນວນ 825 ຄົນ, ເດັກນອຍອາສາ ສະໝັກ 462 ຄົນ, ໃນປີ 2004-05 ນີ້ ທາງໂຄງການໄດ້ເຂົ້າເຖິງເດັກນ້ອຍ 39,000 ຄົນ.

## 10.2. ຜົນໄດ້ຮັບຕົ້ນຕໍໃນປີ 2006

ໃນຊ່ວງປີ 2006 ສະຫະພັນຊາວໜຸ່ມລາວບໍ່ໄດ້ຮັບທຶນຊ່ວຍເຫຼືອ ສຳລັບ ການຫຼິ້ນກິລາ ປູກຈິດສຳນຶກຕໍ່ການສຶກສາ ຄວາມສ່ຽງໄພ ແລະການໂຄສະນາກ່ຽວກັບລະເບີດບໍ່ທັນແຕກ ສຳລັບ "ໂຄງການປູກຈິດສຳນຶກໃຫ້ແກ່ເດັກນ້ອຍ". ຍັງມີບາງກິດຈະກຳທີ່ ຊາວໜຸ່ມ ປປ ລາວ ຍັງສືບຕໍ່ດຳເນີນຢູ່ ເຖິງ ແມ່ນວ່າບາງກິດຈະກຳ ທ້າຍສັບປະດາຈະ ຢຸດດຳເນີນການແລ້ວກໍຕາມ.

ໃນປີ 2006 ສະຫະພັນຊາວໜຸ່ມລາວໄດ້ຮ່ວມມືກັບ ອົງການ ແມັກ ໃນການຈັດຕັ້ງການປະເມີນຜົນ ຄວາມຕ້ອງການ ດ້ານການສຶກສາຄວາມສ່ຽງໄພຈາກລະເບີດບໍ່ທັນແຕກ. ການປະເມີນຜົນດັ່ງກ່າວ ໄດ້ຮັບການສະໜັບສະໜູນ ຈາກອົງການຢູນິເຊັບ ອີສ໌ເອດ ແລະ CDC. ຊາວໜຸ່ມ ປປ ລາວ ໄດ້ເຮັດວຽກໃນຖານະເປັນຜູ້ເກັບກຳຂໍ້ມູນສຳລັບການສຳຫຼວດທີ່ສຳຄັນໃນຄັ້ງນີ້ ແລະ ຍັງໄດ້ເຂົ້າຮ່ວມການ ສຳມະນາ ລະດັບຊາດ ເພື່ອເຜີຍແຜ່ຜົນ ຂອງການສຳຫຼວດດັ່ງກ່າວ. ມີຄຳຖາມຫຼາຍກວ່າ 2,032 ຄຳຖາມ (720 ຄຳຖາມ ແມ່ນມາ ເດັກນ້ອຍ) ທີ່ໄດ້ຂຽນ ແລ້ວຈັດວາງລົງໃນ SPSS. ນອກຈາກນີ້ກໍໄດ້ມີການສົນທະນາເປັນກຸ່ມ 44 ກຸ່ມຢູ່ໃນ 5 ແຂວງ.

ໃນເດືອນຕຸລາ ຊາວໜຸ່ມ ປປ ລາວໄດ້ເປີດກອງປະຊຸມສຳມະນາໃຫ້ແກ່ຊາວໜຸ່ມ ກ່ຽວກັບບັນຫາລະເບີດທີ່ບໍ່ທັນແຕກ/ມິນຢູ່ອາຊີຕາເວັນອອກສຽງໃຕ້ ຊຶ່ງຈັດຕັ້ງໂດຍເຄືອ ຄ່າຍອິດສະຕາລີເພື່ອການເກືອດຫ້າມການນຳໃຊ້ມິນ. ໃນການສຳມະນາມີການສາທິດ ການມີສ່ວນຮ່ວມຂອງອາສາສະໝັກເດັກນ້ອຍແລະ ຜູ້ໃຫ່ຍໃນຊຸມຊົນຈາກໂຄງ ການ ປູກຝັງຈິດສຳນຶກໃຫ້ແກ່ເດັກນ້ອຍ.

ນອກນີ້ສະຫະພັນຊາວໜຸ່ມລາວໂດຍໄດ້ຮັບທຶນຊ່ວຍເຫຼືອຈາກອົງການຢູນິເຊັບ ຍັງໄດ້ຈັດກອງປະຊຸມສຳມະນາເປັນເວລາ 4 ວັນ ສຳລັບຜູ້ມີສ່ວນຮ່ວມກັບໂຄງການຈຳນວນ 40 ທ່ານ ເພື່ອພັດທະນາແຜນຍຸດທະສາດ ສຳລັບໜ່ວຍງານການສຶກສາດ້ານຄວາມສ່ຽງໄພຈາກລະເບີດບໍ່ທັນແຕກ/ມິນ. ປະຈຸບັນແຜນການດັ່ງກ່າວຍັງ ເປັນຮ່າງຢູ່ ແລະ ຈະມີການທົບທວນຄືນຮ່ວມກັບບັນດາຜູ້ມີສ່ວນໄດສ່ວນເສຍຕົ້ນຕໍໃນປີ 2007 ນີ້.

## 10.3. ການປະຕິບັດງານ

ກິດຈະກຳປູກຈິດສຳນຶກກ່ຽວກັບລະເບີດບໍ່ທັນແຕກຂອງສະຫະພັນຊາວໜຸ່ມລາວໄດ້ກວມເອົາ 14 ເມືອງ ພາຍໃນ 6 ແຂວງທີ່ໄດ້ຮັບຜົນກະທົບຮາຍແຮງທີ່ສຸດຈາກລູກລະເບີດຄື:

- ແຂວງສາລະວັນ, ເມືອງຕະໂອ່ຍ ແລະ ເມືອງສາລະວັນ
- ແຂວງອັດຕະປື, ເມືອງໄຊ ແລະ ເມືອງພູວົງ
- ແຂວງຈຳປາສັກ, ເມືອງປາກຊ່ອງ ແລະ ເມືອງບາຈຽງຈະເລີນສຸກ
- ແຂວງສະຫວັນນະເຂດ, ເມືອງເຊໂປນ ແລະ ເມືອງພີນ
- ແຂວງຄຳມ່ວນ, ເມືອງບົວລະພາ, ຍົມມະລາດ ແລະ ເມືອງມະຫາໄຊ
- ແຂວງເຊກອງ, ເມືອງດັກຈຶງ, ທ່າແຕງ ແລະ ເມືອງລະມ່າມ

ການສຶກສາເບິ່ງຄວາມຮັບຮູ້ທ່າທີ່ ແລະ ການປະຕິບັດ (KAP) ສຳລັບການປະເມີນຜົນເບິ່ງຄວາມຕ້ອງການ ກ່ຽວກັບ ການສຶກສາດ້ານຄວາມສ່ຽງໄພຈາກລະເບີດບໍ່ທັນແຕກ ໄດ້ຈັດຕັ້ງຂຶ້ນຢູ່ 5 ແຂວງທີ່ຖືກຄັດເລືອກໂດຍ ອົງການ ຢູນີເຊັບ ແລະ ຊາວໜຸ່ມ ປປ ລາວ ຊຶ່ງຈັດເຂດທີ່ມີລະເບີດບໍ່ທັນແຕກຕົກຄ້າງຢູ່ແຕ່ລະດັບສູງ ກາງ ຕ່ຳ ໂດຍອີງໃສ່ຜົນກະທົບ ຂອງ ລະເບີດບໍ່ທັນແຕກ ຕໍ່ເສດຖະກິດ-ສັງຄົມ ທີ່ໄດ້ສຶກສາວິໄຈ ໂດຍ ອົງການກົນເພື່ອຄົນ ພິການ ແບັນຢຽມ (1997). ການສຶກສາ (KAP) ໄດ້ດຳເນີນ ໃນບັນດາ ແຂວງ ຫົວພັນ, ຊຽງຂວາງ, ສາລະວັນ, ສະຫວັນນະເຂດ ແລະ ອັດຕະປື.

## 10.4. ການຝຶກອົບຮົມ

ໜ່ວຍງານເກັບກຳຂໍ້ມູນຂອງ ຊາວໜຸ່ມປປ ລາວ ທີ່ດຳເນີນການປະເມີນຜົນການສຶກສາຄວາມສ່ຽງ ຈາກລະເບີດບໍ່ທັນແຕກ ໄດ້ຮັບການຝຶກອົບຮົມດ້ານເກັບກຳ ຂໍ້ມູນສຳລັບການຄົ້ນຄວ້າດ້ານ ສຸຂະພາບ ແລະ ການຝຶກອົບຮົມພິເສດດ້ານຈັນຍາບັນຂອງການເກັບກຳຂໍ້ມູນ ແລະ ເຮັດວຽກຮ່ວມກັບ ເດັກນ້ອຍ.

## 10.5. ຄູ່ຮ່ວມປະຕິບັດງານ

ອົງການ ແມັກ ແລະ ອົງການ ຢູນິເຊັບ

## 10.6. ຜູ້ໃຫ້ທຶນຕົ້ນຕໍ

| **ແຫຼ່ງທຶນມາຈາກ** | **ຈຳນວນ (ໂດລາສະຫະລັດ)** |
|---|---|
| ຄະນະກຳມະການແຫ່ງຊາດອົດສະຕາລີ ສຳລັບຢູນິເຊັບ | 35,534 ໂດລາສະຫະລັດ |
| ທຶນຢູນິເຊັບ | 2,402 ໂດລາສະຫະລັດ |
| ຊີດາ | 23,223 ໂດລາສະຫະລັດ |
| **ລວມ** | **61,159 ໂດລາສະຫະລັດ** |



ຮູບ.5. ການສະແດງຮ້ອງເພັງແລະເຕັ້ນ ຂອງສະຫະພັນຊາວໜຸ່ມລາວຈາກແຂວງອັດຕະປື ໃນວັນສາກົນແຫ່ງການປຸກລະດົມ ຍຸດຕິການນຳໃຊ້ລະເບີດຝັງດິນ, 4 ມີນາ 2007

## 11. ກະຊວງສາທາລະນະສຸກ

ການປິ່ນປົວສຸກເສີນທາງການແພດ ລວມທັງປະເພດກິດຈະກຳທີ່ຈະສະໜັບຈະສະໜູນ ຜູ້ຖືກເຄາະ ຮ້າຍຈາກລະເບີດທີ່ບໍ່ທັນແຕກ ເລີ່ມຈາກທີ່ເຫດການ/ອຸບັດຕິເຫດເກີດຂື້ນ ຈົນກວ່າຂອງ ຜູ້ບາດເຈັບຈະດີຢ່າງ ຖາວອນ. ໃນນີ້ລວມມີການຊ່ວຍເຫຼືອສຸກເສີນຈາກຊາວບ້ານ ທີ່ເຮັດວຽກຊ່ວຍເຫຼືອດ້ານການແພດ, ນຳສົ່ງຜູ້ບາດເຈັບໄປໂຮງໝໍ, ການຜ່າຕັດອະໄວຍະທີ່ສາຫັດ ແລະ ການຟື້ນຕົວດີຄືນຈາກການຜ່າຕັດ.

ການປິ່ນປົວພະສຸກເສີນການແພດນັ້ນ ອາດຖືໄດ້ວ່າເປັນໜ້າທີ່ຮັບຜິດຊອບທັງໝົດຂອງກະຊວງສາທາລະນະສຸກ. ລະບົບການປະຕິບັດງານເລີ່ມຈາກອາສາສະໝັກແພດບ້ານ(ອສພບ), ສູ່ສູນສຸຂະພາບ ໂຮງໝໍ ເມືອງ ແລະ ແຂວງ ໂຮງໝໍພາກ ຊ່ຽວຊານລະດັບຊາດ (ເຊັ່ນໂຮງໝໍປົວຕາ) ແລະໂຮງໝໍສູນກາງ. ການສືບຕໍ່ປິ່ນປົວທາງແພດ (ໂດຍບໍ່ ລວມເອົາການຟື້ນຄືນພິການຂັ້ນພື້ນຖານຊຸມຊົນ) ກໍຍັງແມ່ນໜ້າທີ່ຮັບຜິດຊອບລະດັບຕ່າງໆໃນລະບົບການປິ່ນປົວທາງ ການແພດ ເພື່ອບໍລິການດານສຸຂະພາບ ຂອງ ລັດຖະບານ ສປປ ລາວ.

| | |
|---|---|
| ໂຮງໝໍ ສູນກາງ | ໂຮງໝໍມະໂຫສົດ ແລະ ມິດຕະພາບ, ທີ່ຂື້ນກັບກະຊວງສາທາລະນະສຸກ<br>ເສດຖາທິລາດ: ສິດສອນ. 105 ຕຽງ:ທະຫານ |
| ຊ່ຽວຊານລະດັບຊາດ | ໂຮງໝໍປິ່ນປົວຕາ, ສູນຟື້ນຟູຄົນພິການແຫ່ງຊາດ, ສູນຄວບຄຸມໂລກຜິວໜັງແຫ່ງຊາດ ແລະ ອື່ນໆ |
| ໂຮງໝໍ ເຂດພາກພື້ນ | ແຂວງ ອຸດົມໄຊ, ຫຼວງພະບາງ, ສະຫວັນນະເຂດ ແລະ ຈຳປາສັກ |
| ໂຮງໝໍແຂວງ | 12 ແຫ່ງ (ລວມທັງຕົວເມືອງວຽງຈັນ, ອຸດົມໄຊ, ຫຼວງພະບາງ, ສະຫວັນນະເຂດ ແລະ ຈຳປາສັກ) |
| ໂຮງໝໍເມືອງ | 127 ແຫ່ງ (ບໍ່ລວມບັນດາເມືອງບ່ອນທີ່ມີໂຮງໝໍແຂວງ ແລະ ອື່ນໆ) |
| ສູນສຸຂະພາບ | 738 ແຫ່ງ, ມີພະຍາບານ,ສັກຢາກັນພະຍາດ ແລະ ນັກວິຊາການອື່ນໆ |
| ອາສາສະມັກແພດບ້ານ | ອາດມີເຖິງ 10,552 ຄົນ; ໝົດທຸກຄົນ ມີຖົງຢາປະຈຳ |

ກະຊວງສາທາລະນະສຸກໂດຍຜ່ານສູນຟື້ນຟູຄົນພິການແຫ່ງຊາດ ຊີ້ນຳສູນຝຶກອົບຮົມໃຫ້ແກ່ໂຮງຮຽນວິຊາຊີບສິເກີດສຳລັບຄົນພິການ ຊຶ່ງຝຶກອົບຮົມວິຊາຊີບ ໃຫ້ນັກຮຽນພິການທີ່ເຄື່ອນທີ່ໄດໂດຍຮັບເອົາ ນັກຮຽນ 100 ຄົນເຂົ້າສຶກສາຮ່ຳຮຽນໃນຫຼັກສູດສາມປີ. ສູນຕ້ອນຮັບສຳລັບຜູ້ທີ່ຈົບຫຼັກສູດຈາກ ສູນຝຶກອົບຮົມ ວິຊາຊີບສິເກີດຈະໄປປະຕິບັດງານຢູ່ແຂວງ ຫຼວງພະບາງ, ຈຳປາສັກ, ສະຫວັນນະເຂດ ແລະ ຄຳມ່ວນ.

# 12. ອົງການໂຄບ (COPE)

## 12.1. ຄວາມເປັນມາ



ຮູບ.6:ເດັກນ້ອຍໃສ່ຂາທຽມ.
ຮູບປະກອບໂດຍໂຄບ

ການຟື້ນຟູທາງຮ່າງກາຍປະກອບມີການສະໜອງກົນໄກອົງຄະທຽມ ແລະ ເຄື່ອງຄ້ຳຊູຕ່າງໆ, ລົດເຂັນແລະອຸປະກອນຊ່ວຍຊູໃນການຍ່າງ ລວມທັງຝຶກອົບຮົມການນຳໃຊ້ອຸປະກອນເຫຼົ່ານັ້ນ. ວິສາຫະກິດການຮ່ວມມືດ້ານອົງຄະທຽມ ແລະເຄື່ອງຄ້ຳຊູ (ໂຄບ) ປະຕິບັດໂຄງການລະດັບຊາດ ດ້ານອົງຄະທຽມແລະ ເຄື່ອງຄ້ຳຊູ ໂດຍການສະໜອງອົງຄະທຽມ ແລະການ ຊ່ວຍເຫຼືອແບບເຄື່ອນທີ່ໃນທົ່ວປະເທດ. ອົງການໂຄບ ສ້າງຕັ້ງຂຶ້ນໂດຍ ອົງການພະລັງແຮງຂອງ ລາຊະອານາຈັກ ອັງກິດໃນປີ 1997, ໄດ້ເຕົ້າໂຮມ ບັນດາອົງການຈັດຕັ້ງ ທີ່ກ່ຽວ ຂ້ອງ ທີ່ເຮັດວຽກ ກ່ຽວກັບ ຄົນພິການເຂົ້າມາ ໃນ ສປປ ລາວ. ອົງການ ໂຄບ ເປັນອົງການ ຮ່ວມມື ລະຫວ່າງກະຊວງສາທາລະນະສຸກ ແລະ ຫຼາຍອົງການຈັດຕັ້ງ ທີ່ບໍ່ສັງກັດລັດ. ໃນອານາຄົດມີແຜນການທີ່ຈະເຮັດໃຫ້ ອົງການ ໂຄບ ກາຍເປັນ ອົງການ ຈັດຕັ້ງ ຂອງລັດຖະບານ ລາວ ຢ່າງເຕັມຕົວ.

## 12.2. ຜົນໄດ້ຮັບຕົ້ນຕໍໃນປີ 2006

ໃນປີ 2006. ອົງການ ໂຄບໄດ້ໃສ່ແຂນຂາທຽມ ແລະ ກົນໄກຊ່ວຍຊູແບບອື່ນໃຫ້ແກ່ຄົນເຈັບໄດ້ 1,264 ຄົນ, ໃນນີ້ 349 ຄົນ ແມ່ນຜູ້ຖືກເຄາະຮ້າຍຈາກລະເບີດບໍ່ທັນແຕກ.

| ແຂນຂາທຽມແລະກົນໄກຊ່ວຍເຫຼືອຕ່າງໆຈາກໂຄບ | | |
|---|---|---|
| ປີ | ໃສ່ໃຫ້ຜູ້ປ່ວຍ | ຜູ້ໄດ້ຮັບເຄາະຮ້າຍຈາກລະເບີດບໍ່ທັນແຕກ |
| 2002 | 714 | 293 |
| 2003 | 1,048 | 344 |
| 2004 | 1,487 | 468 |
| 2005 | 1,268 | 294 |
| 2006 | 1,264 | 349 |

## 12.3. ການປະຕິບັດງານ

ອົງການ ໂຄບ ມີສາຂາຢູ່ໃນທົ່ວໂລກ, ມີສູນຟື້ນຟູຄົນພິການແຫ່ງຊາດທີ່ວຽງຈັນ ແລະອີກ 4 ສູນພາກພື້ນຢູ່ທີ່ແຂວງ ຫຼວງພະບາງ, ຊຽງຂວາງ, ສະຫວັນນະເຂດ ແລະ ຈຳປາສັກ. ປະມານ 40% ຂອງຄົນເຈັບທີ່ມາໃຊ້ບໍລິການ ແມ່ນຜູ້ທີ່ຖືກບາດເຈັບ ຈາກລະເບີດ.

## 12.4. ການຝຶກອົບຮົມ

ອົງການ ໂຄບ ໄດ້ຝຶກອົບຮົມໃຫ້ພະນັກງານລາວ 14 ຄົນ ຢູ່ທີ່ໂຮງຮຽນອົງຄະທຽມ ແລະ ເຄື່ອງຄ້ຳຊູທີ່ປະເທດ ກຳປູເຈ່ຍ, ປະຈຸບັນບັນນີ້ພວກເຂົາເຮັດວຽກດ້ານ ອົງຄະທຽມແລະເຄື່ອງຄ້ຳຊູ(POs) ຢູ່ທົ່ວປະເທດລາວ. ອົງການ ໂຄບ ໄດ້ມີການຝຶກແອບ ຝຶກອົບຮົມ ແລະ ຍົກລະດັບໜ່ວຍງານຢ່າງສະໝ່ຳສະເໝີເພື່ອເຮັດໃຫ້ພະນັກງານ ໝົດທຸກຄົນມີສວນຮ່ວມໃນກິດຈະກຳ.

## 12.5. ບຸກຄະລາກອນ

ອົງການ ໂຄບ ເຮັດວຽກຮ່ວມກັບພະນັກງານທັງໝົດທົ່ວປະເທດລາວ 130 ຄົນ, ໂດຍມີ 80 ຄົນທີ່ໄດ້ຮັບຄ່າແຮງງານຈາກ ອົງການ ໂຄບ, ໃນນັ້ນລວມທັງຊາງອົງຄະທຽບ ແລະ ເຄື່ອງຄ້ຳຊູ, ຄູບໍລິຫານ, ນັກຜາຕັດ, ນັກບຳບັດ ແລະ ນັກວິຊາການ. ທີ່ປຶກສາຈາກສະຫະລາຊະອານາຈັກ ອັງກິດໄດ້ກຳກັບຜູ້ຈັດການ ສຶກສາ ເພື່ອສືບຕໍ່ຝຶກອົບຮົມພວກເຂົາ ມອບ-ຮັບການບໍລິຫານທາງການແພດ ແລະ ທັກສະທີ່ຈຳເປັນອື່ນໆ. ນັກບຳບັດທາງອາຊີບຜ່ານການຝຶກອົບຮົມຈາກສະຫະລາຊະອານາຈັກອັງກິດ ແລະ ນັກບຳບັດຈາກ ປະເທດ ຮອນແລນໄດ້ເຮັດວຽກຮວມ ກັບ ໜວຍກາຍຍະບຳບັດຢູ່ສູນຟື້ນຟູ 5 ແຫ່ງ. ໂຄງການ ໂຄບ ຍັງສືບຕໍ່ພາ ລະບົດບາດເປັນທີ່ປຶກສາ ແລະ ການກວດຕິດຕາມ.

## 12.6. ຄູ່ຮ່ວມປະຕິບັດງານ

ຄູ່ຮ່ວມປະຕິບັດງານ ຂອງ ອົງການ ໂຄບລວມມີ ກະຊວງສາທາລະນະສຸກ, ສະມາຄົມຊ່ວຍເຫຼືອແລະບັນເທົາທຸກ (ຍີປຸ່ນ), ພະລັງແຮງສາກົນ (ສະຫະລາຊະອານາຈັກອັງກິດ), ຄະນະກຳມະການສາກົນດ້ານໂລກເຮື້ອນ (ສະຫະລາຊະ ອານາຈັກອັງກິດ ແລະ ສິງກະໂປ) ແລະອົງການສຸພານິມິດ (ປະເທດລາວແລະອົດສະຕາລີ).

## 12.7. ຜູ້ໃຫ້ທຶນຕົ້ນຕໍ

| ຜູ້ໃຫ້ທຶນປີ 2006-07 | ຈຸດປະສົງ | ຈຳນວນ (ໂດລາສະຫະລັດ) |
|---|---|---|
| ອົງການເຮັດວຽກກ່ຽວກັບສະໜາມມິນ (ສະຫະລັດອາເມລິກາ/ສະຫະລາຊະອານາຈັກອັງກິດ) | ພະນັກງານລາວ | 44,000 ໂດລາສະຫະລັດ |
| ຄະນະກຳມະການເພື່ອຄົນຕາບອດຄິສໂຕເຟວ (ເຢຍລະມັນ/ໄທ) | ຄ່າຜູ້ປ່ວຍ | 6,000 ໂດລາສະຫະລັດ |
| ຄະນະກຳມະການເພື່ອຄົນຕາບອດຄິສໂຕເຟວ (ເຢຍລະມັນ/ໄທ) | ອຸປະກອນ (ຊ່ວຍເຫຼືອລ້າ) | 15,000 ໂດລາສະຫະລັດ |
| ກວດກູ້ທາງຍ່າງສາກົນ (ສະຫະລັດອາເມລິກາ /ການາດາ) | ຊ່ວຍເຫຼືອລ້າ | 25,000 ໂດລາສະຫະລັດ |
| ຄ່າຟື້ນຟູຜູ້ປ່ວຍທີ່ສູນຟື້ນຟູຄົນພິການແຫ່ງຊາດ | ຄ່າຜູ້ປ່ວຍ | 2,602 ໂດລາສະຫະລັດ |
| ສະມາຄົມຜູ້ເຮັດເສື້ອຜ້າຊ່ວຍເຫຼືອເຊິ່ງກັນແລະກັນ (ພະລັງແຮງ/ສະຫະລາຊະອານາຈັກອັງກິດ) | ຫໍພັກທີ່ປາກເຊ | 34,200 ໂດລາສະຫະລັດ |
| ປຸກລະດົມທຶນຈາກໂຄບ | ຄ່າຜູ້ປ່ວຍ | 16,461 ໂດລາສະຫະລັດ |
| ມູນລະນິທິຊ່ວຍເຫຼືອຜູ້ໄດ້ຮັບເຄາະຮ້າຍ (ສະວິດເຊີແລນ) | ອຸປະກອນ/ ພະນັກງານ | 22,500 ໂດລາສະຫະລັດ |
| ອົງການເພື່ອມະນຸດສະທຳ (ການາດາ) | ຫຼາຍດ້ານ | 25,000 ໂດລາສະຫະລັດ |
| ICRC (ສະວິດເຊີແລນ/ຫວຽດນາມ) | ອຸປະກອນ (ຊ່ວຍເຫຼືອລ້າ) | 4,400 ໂດລາສະຫະລັດ |
| ສະມາຄົມຊ່ວຍເຫຼືອອີຊຸມິ (ຍີປຸ່ນ) | ຄ່າຜູ້ປ່ວຍ | 15,000 ໂດລາສະຫະລັດ |
| ມູນລະນິທິການກຸສົນກາດູຣີ (ຮົງກົງ) | ຫຼາຍດ້ານ | 134,980 ໂດລາສະຫະລັດ |
| ອື່ນໆ/ສ່ວນບຸກຄົນ (ສະຫະລັດ, ອົດສະຕາລີ, ສະຫະ ລາຊະອານາຈັກອັງກິດ, ສະວີເດັນ) | ຫຼາຍດ້ານ | 16,788 ໂດລາສະຫະລັດ |
| ຄະນະກຳມະການຄຸ້ມຄອງແຫ່ງຊາດ (ປະເທດລາວ) | ທີ່ປຶກສາ | 39,000 ໂດລາສະຫະລັດ |
| ຄະນະກຳມະການດ້ານໂລກເຮື້ອນ (ສະຫະລາຊະອາ ນາຈັກອັງກິດ/ ສິງກະໂປ/ ການາດາ) | ໂຄບ | 30,000 ໂດລາສະຫະລັດ |
| ຄະນະກຳມະການດ້ານໂລກເຮື້ອນ (ສະຫະລາຊະອາ ນາຈັກອັງກິດ/ ສິງກະໂປ/ ການາດາ) | ຄ່າຜູ້ປ່ວຍ | 30,000 ໂດລາສະຫະລັດ |
| ອົງການ ສປຊ (ລາວ) | ຫຼາຍດ້ານ | 13,293 |
| **ລວມ** | | **474,224 ໂດລາສະຫະລັດ** |

## 12.8. ການໃຊ້ຈ່າຍ

| ລາຍຈ່າຍສຳລັບ | ລວມ (ໂດລາສະຫະລັດ) |
|---|---|
| ບໍລິຫານ, ການຈັດຕັ້ງແລະພະນັກງານ | 151,420 ໂດລາສະຫະລັດ |
| ຊ່ຽວຊານທີ່ປຶກສາໄລຍະສັ້ນ | 23,689 ໂດລາສະຫະລັດ |
| ການພັດທະນາທັກສະ | 58,757 ໂດລາສະຫະລັດ |
| ສະໜອງວັດຖຸອຸປະກອນ, ສ່ວນປະກອບແລະການບໍລິການ | 84,299 ໂດລາສະຫະລັດ |
| ຂໍ້ມູນຂ່າວສານ, ການສະໜັບສະໜູນ ແລະການສຶກສາ | 13,328 ໂດລາສະຫະລັດ |
| ຄ່າໃຊ້ຈ່າຍຫຼັກ | 28,995 ໂດລາສະຫະລັດ |
| **ລວມ** | **360,488 ໂດລາສະຫະລັດ** |

# 13. ໂຄງການ ຟື້ນຟູຄົນພິການ ຊຸມຊົນ ຂອງ ອົງການ ສາກົນເພື່ອຄົນພິການ ແບບຢຽມ (CBR)

## 13.1. ຄວາມເປັນມາ

ໂຄງການ ເຂົ້າເຖິງຜູ້ໃຫ່ຍແລະເດັກນ້ອຍພິການແລະຄອບຄົວຂອງພວກເຂົາ ໂດຍສະໜອງການຟື້ນຟູຮ່າງກາຍ ໃຫ້ຄຳປຶກດ້ານສັງຄົມແລະໃຫ້ການສະໜັບສະໜູນດ້ານການແພດແກ່ບຸກຄົນ ແລະ ຄອບຄົວ, ກໍ່ຕັ້ງກຸ່ມຊ່ວຍ ເຫຼືອຕົນເອງສຳລັບການແກ້ໄຂບັນຫາ ແລະ ກິດຈະກຳຫາລາຍໄດ້ເສີມ, ອົງໃສ່ຄົນພິການໃນອົງການ ຈັດຕັ້ງອື່ນໆ ແລະ ພາກສວນການບໍລິການ, ສົ່ງເສີມເດັກນ້ອຍໃຫ້ໄດ້ຮັບການສຶກສາ, ສະໜັບສະໜູນການຝຶກອົບ ຮົມ ວິຊາຊີບ ແລະ ຈັດຕັ້ງລົງຝຶກຫັດຕົວຈິງ. ນອກນີ້ໂຄງການກໍຍັງໄດ້ປູກຈິດສຳນຶກໃຫ້ຊຸມຊົນ ກ່ຽວກັບຄວາມ ຕ້ອງການ ແລະ ສິດທິຂອງຄົນພິ ການ.

ໂຄງການໄດ້ເສີມສ້າງຄວາມສາມາດໃຫ້ແກ່ພະນັກງານລາວ ດ້ານການຟື້ນຟູຄົນພິການໃນຊຸມຊົນ (ຟພຊ) ໂດຍຜ່ານການວັດແທກຫຼາຍຮູບແບບເຊັ່ນ: ໃຫ້ການຝຶກອົບຮົມເຕັກນິກ; ກໍ່ຕັ້ງສູນຊັບພະ ຍາກອນການ ຟື້ນຟູຄົນພິການໃນຊຸມຊົນ; ກໍ່ຕັ້ງໜ່ວຍງານເຕັກນິກ ການຟື້ນຟູຄົນພິການ ໃນຊຸມຊົນ ຢູ່ທີ່ສູນຟື້ນຟູຄົນ ພິການ ແຫ່ງຊາດ ແລະ ສູນຟື້ນຟູຄົນພິການປະຈຳ ແຂວງ ສະຫວັນນະເຂດ ໂດຍມີຜູ້ຊີ້ນຳ ຢູ່ຂັ້ນເມືອງ, ສົ່ງເສີມການປະສານງານລະຫວ່າງຜູ້ມີສ່ວນຮ່ວມ ທີ່ເຮັດວຽກດ້ານຄົນ ພິການ ແລະ ການຟື້ນຟູ, ຈັດຕັ້ງການສຳມະນາ ກອງປະຊຸມ ແລະ ການຢ້ຽມຢາມແລກປ່ຽນບົດຮຽນໃນລະດັບທ້ອງຖິ່ນ, ຝຶກອົບ ຮົມດ້ານການບໍລິຫານແລະວາງແຜນ ໃຫ້ແກ່ພະນັກງານລາວຂອງສູນຟື້ນຟູຄົນພິການ ແຫ່ງຊາດ ແລະ ປະຈຳແຂວງ, ສົ່ງເສີມການເຊື່ອມໂຍງກັບ ຂະແໜງການຕ່າງໆ ເຊັ່ນ ການສຶກສາ, ສະຫວັດດີການສັງຄົມ ແລະ ກາຍຍະພາບບຳບັດ.

ນອກນັ້ນ, ທິດທາງຍຸດທະສາດຍັງລວມມີ ການຝຶກອົບຮົມດ້ານວິຊາຊີບແລະການວ່າຈ້າງລົງຝຶກຫັດຕົວຈິງ, ການຝຶກອົບຮົມດ້ານສິດທິມະນຸດຂອງ ຄົນພິການ ແລະ ການໂຄສະນາຊຸມຊົນ

## 13.2. ຈຸດປະສົງຂອງໂຄງການ

ເພື່ອສະໜອງການພັດທະນາ ເພື່ອສະໜັບສະໜູນ ຄົນພິການ ແລະ ຄອບຄົວດ້ານການ ບໍລິການຟື້ນຟູການເຊື່ອມສານທາງ ສັງຄົມ ການເຂົ້າເຖິງການທຳມາຫາກິນ ແລະ ການສຶກສາ ເພື່ອຄວາມເປັນອິດສະຫຼະພາບການຍອມຮັບຄົນພິການ ໂດຍການນຳໃຊ້ໂຄງສ້າງ ທີ່ມີຢູ່ໃນລະດັບຊຸມຊົນ.

## 13.3. ບໍລິບົດສະເພາະ

**ທີ່ຕັ້ງ:** 4 ເມືອງຢູ່ນະຄອນຫຼວງວຽງຈັນ ແລະ ແຂວງວຽງຈັນ.
3 ເມືອງ ຢູ່ແຂວງສະຫວັນນະເຂດ ໂດຍເຊື່ອມໂຍງກັບໜ່ວຍງານສຶກສາຢູ່ໃນ 3 ເມືອງເພີ່ມອີກ

**ໄລຍະໂຄງການ:** 1999 – 2007
2002-2006 ໂຄງການຟື້ນຟູຄົນພິການໃນຊຸມຊົນ ກຳແພງນະຄອນວຽງຈັນ ແລະ ແຂວງວຽງຈັນ
2004 ຈົນເຖິງປະຈຸບັນ ໂຄງການຟື້ນຟູຄົນພິການໃນຊຸມຊົນແຂວງສະຫວັນນະ ເຂດ.

**ຜູ້ໄດ້ຮັບຜົນປະໂຫຍດ:** ຜູ້ຖືກເຄາະຮ້າຍຈາກສົງຄາມແລະລະເບີດບໍ່ທັນແຕກ, ຄົນພິການຜູ້ອື່ນໆ, ຄອບຄົວພວກເຂົາ ແລະ ຊຸມຊົນຢູ່ໃນບ້ານເປົ້າໝາຍ ລວມທັງການຍົກລະດັບຂີດຮູ້ຄວາມສາມາດໃຫ້ແກ່ ສູນຟື້ນຟູຄົນພິການ ແຫ່ງ ຊາດ, ຄູ່ຮ່ວມງານຢູ່ທ້ອງຖິ່ນ, ພະນັກງານ ໂຄງການ ຟື້ນຟູຄົນພິການໃນຊຸມຊົນ ແລະສະ ມາຄົມຄົນພິການ ແຫ່ງ ຊາດລາວ.

## 13.4. ການປະຕິບັດງານ ຈັດລຽງຕາມການເວລາ

ມັງກອນ 1999 ສຳຫຼວດກ່ຽວກັບຄົນພິການໃນ 7 ເມືອງຂອງນະຄອນຫຼວງວຽງຈັນ ແລະແຂວງວຽງຈັນ
2001: ລົງມືປະຕິບັດຄັ້ງທຳອິດໃນ 3 ຕົວເມືອງທີ່ໄດ້ຖືກຂັດເລືອກ

ມັງກອນ 2003: ເລີ່ມປະຕິບັດໂຄງການຟື້ນຟູຄົນພິການໃນຊຸມຊົນ ເປັນເວລາ 3 ປີຮ່ວມກັບສູນຟື້ນຟູຄົນພິການແຫ່ງຊາດຢູ່ໃນ 30 ບ້ານ
ພຶດສະພາ 2003: ສໍາມະນາລະດັບຊາດຄັ້ງທໍາອິດກ່ຽວກັບ ການຟື້ນຟູຄົນພິການໃນຊຸມຊົນ.
ພະຈິກ 2003: ຂະຫຍາຍການເຮັດວຽກບ້ານໃໝ່ໄດ້ 30 ບ້ານ ແລະອີກ 1 ເມືອງໃໝ່
ກັນຍາ 2005: ສໍາຫຼວດຂໍ້ມູນພື້ນຖານໃນ 3 ເມືອງຂອງແຂວງສະຫວັນນະເຂດ ແລະ ເມືອງ ວັງວຽງ
ກໍລະກົດ 2006: ເຊັນບົດບັນທຶກຄວາມເຂົ້າໃຈຮ່ວມກັບສູນຟື້ນຟູຄົນພິການແຫ່ງຊາດ ສໍາລັບໂຄງການຟື້ນຟູຄົນພິການໃນຊຸມຊົນຢູ່ແຂວງສະຫວັນນະເຂດເປັນເວລາ 3 ປີ ກ່ຽວກັບ 'ການຊ່ວຍເຫຼືອຜູ້ໄດ້ຮັບ ເຄາະຮ້າຍຈາກສິ່ງຄາມ ແລະຄົນພິການໃນ ສປປ ລາວ'

## 13.5. ຜົນສໍາເລັດສໍາລັບປີ 2006

**ກ) ສັງລວມສໍາລັບວຽງຈັນປີ 2006:** ໂຄງການຟື້ນຟູຄົນພິການໃນຊຸມຊົນ ໄດ້ໃຫ້ການຊ່ວຍເຫຼືອ ຄົນພິການແລະຄອບຄົວ

| | |
|---|---|
| ຈໍານວນຄົນພິການແລະຄອບຄົວທີ່ໄດ້ຮັບຜົນປະໂຫຍດຈາກໂຄງການຟື້ນຟູຄົນພິການໃນຊຸມຊົນ | 1219 |
| ຈໍານວນຄົນພິການທີ່ໄດ້ຮັບອຸປະກອນຊ່ວຍຊູ ຫຼື ການຊ່ວຍເຫຼືອດ້ານເຕັກນິກ | 86 |
| ຈໍານວນຄົນພິການທີ່ໄດ້ຮັບການຟື້ນຟູຢ່າງຕໍ່ເນື່ອງຢູ່ທີ່ເຮືອນ | 87 |
| ໃຫ້ການຕິດຕາມບຸກຄົນທີ່ໄດ້ຮັບຄວາມພິການທາງສະໝອງ | 50 |
| ຈໍານວນກຸ່ມຜູ້ຊ່ວຍເຫຼືອຕົນເອງທີ່ໄດ້ສ້າງຕັ້ງຂຶ້ນ | 19 |
| ຈໍານວນຄົນພິການແລະຄອບຄົວທີ່ໄດ້ຮັບຜົນປະໂຫຍດ ຈາກທຶນສິນເຊື່ອສໍາລັບສ້າງກິດຈະກໍາເສີມລາຍໄດ (ເງິນສະສົມ) | 408 |

**ຂ) ສັງລວມສໍາລັບສະຫວັນນະເຂດ (ຕຸລາ 2006 – ເມສາ 2007)**

ການເຊັນບົດບັນທຶກຄວາມເຂົ້າໃຈກັບກະຊວງສາທາລະນະສຸກ ໄດ້ຮັບຄວາມຫຼ້າຊ້າຈົນມາຮອດເດືອນກໍລະກົດ 2006 ຈຶ່ງໄດ້ເຊັນ. ເຖິງແມ່ນວ່າການສຶກສາຂໍ້ມູນພື້ນຖານສໍາລັບ 3 ເມືອງແມ່ນໄດ້ມີການສໍາຫຼວດກ່ອນແລ້ວ ແຕ່ວ່າການຈັດຕັ້ງປະຕິບັດກິດຈະກໍາຕົວຈິງໄດເລີ່ມຂຶ້ນໃນເດືອນຕຸລາ 2006 ໂດຍເລີ່ມຈາກ ການຝຶກອົບຮົມຂັ້ນພື້ນຖານໃຫ້ແກ່ອາສາສະມັກ ຜູ້ເຮັດວຽກດ້ານຟື້ນຟູຄົນພິການໃນຊຸມຊົນຈໍາ ນວນ 30 ຄົນ ຈາກ 3 ເມືອງ ຄື ເມືອງນອງ, ວິລະບູລີ ແລະ ເຊໂປນ. ຈາກ 30 ໝູ່ບ້ານ ໄດ້ມີ 262 ຄົນທີ່ຖືວ່າເປັນຄົນ ພິການໃນຫຼາຍຮູບແບບ ລວມທັງຄົນພິການໃນປາງສິ່ງຄາມ.

ໜ່ວຍງານໂຄງການຟື້ນຟູຄົນພິການໃນຊຸມຊົນ ແລະ ຄະນະກໍາມະການຊີ້ນໍາສໍາລັບ ແຂວງ ສະຫວັນນະເຂດກໍໄດ້ຖືກສ້າງຕັ້ງຂຶ້ນໂດຍລວມມີ ອົງການສາກົນເພື່ອຄົນພິການແບບຍຽມ ສູນຟື້ນຟູຄົນພິການປະຈໍາແຂວງ ຜູ້ປະສານງານເມືອງ ແລະ ຜູ້ເຮັດວຽກດ້ານຟື້ນຟູຄົນພິການໃນຊຸມຊົນ. ຕໍ່ມາບັນດາອາສາສະໝັກທີ່ ຖືກຄັດເລືອກມາຈາກບ້ານເປົ້າໝາຍ 30 ບ້ານ ກໍໄດ້ຮັບການຝຶກອົບຮົມການຟື້ນຟູຂັ້ນພື້ນຖານ ແລະ ການຝຶກອົບ ຮົມດ້ານການຊ່ວຍຊູ ເດັກນ້ອຍແບບຈໍາລອງ ແລະ ການພັດທະນາເດັກ.

ການທວນຄືນສໍາລັບຄົນພິການທີ່ມາຈາກບ້ານຕ່າງໆ ເພື່ອຢືນຢັນການສຶກສາດ້ານປະຊາກອນຂັ້ນພື້ນ ຖານ ແລະປະເມີນຜົນເບິ່ງຄວາມຕ້ອງການ. ກ່ຽວກັບການຊ່ວຍເຫຼືອດ້ານກົນໄກຕາງໆກໍມີ ລົດເຂັນ ອົງຄະທຽມ/ເຄື່ອງ ຄໍ້າຊູ ຫຼືການປິ່ນປົວຕ່າງໆ. ໃນເດືອນພຶດສະພາ ໄດ້ມີການວາງແຜນຢ້ຽມຢາມການປະເມີນ ຜົນພິເສດ ສໍາລັບຜູ້ທີ່ມີບັນຫາດ້ານການໄດ້ຍິນ ແລະໂລກລົມບ້າໝູ. ກຸ່ມຜູ້ຊ່ວຍເຫຼືອຕົນເອງກຸ່ມທໍາອິດກໍໄດ້ຈັດຕັ້ງຂຶ້ນທີ່ເມືອງເຊໂປນ. ໜ່ວຍງານໂຄງການຟື້ນຟູຄົນພິການໃນຊຸມຊົນໄດ້ລົງຢ້ຽມຢາມ 3 ຕົວເມືອງຢ່າງ ເປັນປະຈໍາແຕ່ລະເດືອນ ແລະໄດ້ມີການຕິດຕາມຄົນພິການຢູ່ໃນຊຸມຊົນ.

## 13.6. ການຝຶກອົບຮົມ

| ກ) ຫຼັກສູດຝຶກອົບຮົມສຳລັບວຽງຈັນ | ຈຳນວນຫຼັກສູດທີ່ໄດ້ຮຽນ | ຜູ້ຮັບການຝຶກອົບຮົມ |
|---|---|---|
| ຝຶກອົບຮົມກິດຈະກຳບຳບັດທີ່ມະຫາວິທະຍາໄລຊຽງໃໝ່ | 2 | 2 |
| ຝຶກອົບຮົມກິດຈະກຳບຳບັດໃຫ້ແກ່ຜູ້ເຮັດວຽກດ້ານການຟື້ນຟູຄົນພິການ | 2 | 40 |
| ກອງປະຊຸມກ່ຽວກັບກຸ່ມຜູ້ຊ່ວຍເຫຼືອຕົນເອງ | 1 | 30 |
| ຫຼັກສູດການເງິນສຳລັບກຸ່ມຝາກເງິນປະຫຍັດບ້ານ | 2 | 26 |
| ການບໍລິຫານຮອບວຽນໂຄງການ | 1 | 13 |
| ການຕິດຕາມແລະປະເມີນຜົນໂຄງການ | 1 | 11 |
| ການບໍລິຫານງົບປະມານ | 1 | 12 |
| ຂຽນບົດສະເໜີ ໂຄງການ | 1 | 11 |
| ສະຫຼຸບ | 11 | 145 |

| ຂ) ຫຼັກສູດຝຶກອົບຮົມສຳລັບສະຫວັນນະເຂດ | ຈຳນວນຫຼັກສູດທີ່ໄດ້ຮຽນ | ຜູ້ຮັບການຝຶກຫັດ |
|---|---|---|
| ການຟື້ນຟູຂັ້ນພື້ນຖານ ໃຫ້ແກ່ຜູ້ເຮັດວຽກດ້ານການຟື້ນຟູຄົນພິ ການ+ ຜູ້ປະສານງານເມືອງ | 1 | 36 |
| ການບໍລິຫານຮອບວຽນໂຄງການ | 1 | 10 |
| ການຊ່ວຍຊູເດັກໃຫ້ແກ່ ສູນຟື້ນຟູຄົນພິການແຂວງ+ຜູ້ປະສານງານ ເມືອງ+ຜູ້ເຮັດວຽກດ້ານການຟື້ນຟູຄົນພິການ | 3 | 44 |
| ຝຶກອົບຮົມກິດຈະກຳບຳບັດທີ່ມະຫາວິທະຍາໄລຊຽງໃໝ່ | 2 | 2 |
| **ລວມ** | **7** | **92** |

## 13.7. ບຸກຄະລາກອນ

ຜູ້ປະສານງານໂຄງການຟື້ນຟູຄົນພິການໃນຊຸມຊົນ 1 ຄົນ, ຜູ້ບໍລິຫານໂຄງການ 1 ຄົນ, ຜູ້ຊ່ວຍໂຄງການ 2 ຄົນ, ຄູຝຶກ ກິດຈະກຳບຳບັດ 1 ຄົນ ແລະ ທີ່ປຶກສາດ້ານຄົນພິການ 1 ຄົນ.

## 13.8. ຄູ່ຮ່ວມປະຕິບັດງານ

ສູນຟື້ນຟູຄົນພິການແຫ່ງຊາດ, ກະຊວງສາທາລະນະສຸກ, ສູນຟື້ນຟູຄົນພິການ ແຂວງສະຫວັນນະເຂດ ສະມາຄົມຄົນພິການລາວ,ໜ່ວຍງານການສຶກສາຄວບຂອງກະຊວງສຶກສາທິການ,ກະຊວງສາທາລະນະສຸກ ກະຊວງແຮງງານ ແລະ ສະຫວັດດີການສັງຄົມ

## 13.9. ຜູ້ໃຫ້ທຶນຕົ້ນຕໍ

ກະຊວງການຕ່າງປະເທດ ຂອງ ລຸກຊຳບວກ.
ອົງການສາກົນເພື່ອຄົນພິການ ລຸກຊຳບວກ, ອົງການສາກົນເພື່ອຄົນພິການ ແບນຢຽມ, ອົງການສາກົນເພື່ອຄົນພິການ ເຢຍລະມັນ.
ອົງການ ຢູນີເຊັບ
ອິສເອດ- ສະຫວັນນະເຂດ

## 13.10. ການປະກອບສ່ວນຈາກຜູ້ໃຫ້ທຶນ

ໂຄງການຟື້ນຟູຄົນພິການ ວຽງຈັນ: 517,600 ເອີໂຣ
ມັງກອນ 2002- ທັນວາ 2006
ໂຄງການ ຟື້ນຟູຄົນພິການ ແຂວງ ສະຫວັນນະເຂດ: 600,000 ໂດລາສະຫະລັດ

## 14. ອົງການ ສຶກສາໂລກ/ຄອນຊອກຊຽມປະຈຳ ສປປ ລາວ

### 14.1. ຄວາມເປັນມາ

ໃນປີ 2006, ອົງການສຶກສາໂລກ/ຄອນຊອກຊຽມ ມີ 4 ໂຄງການທີ່ສະໜັບສະໜູນຜູ້ລອດ ຊີວິດຍ້ອນອຸບັດຕິເຫດຈາກລະເບີດ ແລະຄືນພິການດັ່ງນີ້:

1) ສະໜັບສະໜູນຜູ້ລອດຊີວິດຈາກສົງຄາມ ແລະ ຄົນພິການທີ່ແຂວງສະຫວັນນະເຂດແລະຈຳປາສັກໂດຍ ເລີ່ມການຈັດຕັ້ງປະຕິບັດໃນເດືອນກໍລະກົດ. ຈຸດປະສົງເພື່ອປັບປຸງການບໍລິຫານແລະນະໂຍບາຍສຳລັບ ການປິ່ນປົວຜູ້ລອດຊີວິດຈາກລະເບີດ, ຍົກລະດັບດ້ານເຕັກນິກໃນການຜ່າຕັດແລະການແພດສຸກ ເສີນ ລວມທັງ ຄວາມສາມາດດ້ານການຝຶກອົບຮົມ.

2) ໂຄງການເສດຖະກິດກຸ້ມຕົນເອງສຳລັບຜູ້ລອດຊີວິດ ອຸບັດຕິເຫດ ຍ້ອນລະເບີດ ໂດຍໄດ້ ຮັບທຶນຈາກມູນລະນິທິແມັກໄນ້ ຊຶ່ງໄດ້ມີການສືບຕໍ່ຈາກປີ 2005 ຢູ່ແຂວງ ຊຽງຂວາງ ແລະ ຫົວພັນ ໂດຍສະເພາະການຊ່ວຍເຫຼືອດ້ານເສດ-ຖະກິດສັງຄົມ.

3) ມູນລະນິທິເພື່ອມະນຸດສະທຳຂອງການາດາ ໄດ້ສະໜັບສະໜູນທຶນເພື່ອ ການຊ່ວຍເຫຼືອຜູ້ຖືກເຄາະຮ້າຍ. ໂດຍສະໜອງ ການປິ່ນປົວ ແລະ ຕິດຕາມການຊ່ວຍເຫຼືອຢູ່ ແຂວງ ສາລະວັນ ແລະ ແຂວງ ອື່ນໆ ທາງພາກໄຕ້ ລວມທັງເຄື່ອງມືທີ່ຈຳເປັນທາງການແພດໃຫ້ແກ່ ແຂວງ ສາລະວັນ ອີກດ້ວຍ.

4) ປັບປຸງຄວາມສາມາດຂອງພະນັກງານລາວ ເພື່ອຊ່ວຍເຫຼືອຜູ້ລອດຊີວິດຈາກລະເບີດຢູ່ແຂວງ ຊຽງຂວາງ ແລະຫົວພັນ ໂດຍໄດ້ຮັບທຶນຊ່ວຍເຫຼືອຈາກ ກະຊວງການຕ່າງປະເທດ ອາເມລິກາ ກົມກຳກັບການ ເຄື່ອນຍ້າຍ ແລະ ລົບລ້າງການນຳໃຊ້ອາວຸດສົງຄາມ. ຈຸດປະສົງແມ່ນເພື່ອຍົກຂີດຄວາມສາມາດ ຂອງ ພະນັກ ງານລາວ ໃນການຊ່ວຍສະໜັບສະໜູນການທຳມາຫາກິນ ແລະ ທາງຈິດຕະສາດໃຫ້ແກ່ຜູ້ລອດ ຊີວິດ ຈາກລະເບີດ ໂດຍໄດ ສະໜອງຄ່າປິ່ນປົວສ່ວນໃດສ່ວນໜຶ່ງ ໂດຍກົງ ແລະ ຊ່ວຍເຫຼືອດ້ານ ເສດຖະກິດສັງຄົມ ໃຫ້ແກ່ຜູ້ລອດຊີວິດຈາກລະເບີດ.

ກ່ອນໜ້າປີ 2006, ໄດ້ມີໂຄງການດັ່ງນີ້:

ກອງທຶນຊ່ວຍເຫຼືອຈາກສະຫະລັດ (USAID) ໄດ້ສະໜັບສະໜູນທຶນສຳລັບ ໂຄງການຊ່ວຍເຫຼືອຜູ້ຖືກເຄາະຮ້າຍຈາກ ສົງຄາມ ຊຶ່ງເລີ່ມຕົ້ນທີ່ແຂວງຊຽງຂວາງໃນປີ 1996 ໂດຍມີເປົ້າໝາຍເພື່ອປັບປຸງກ່ຽວກັບການຜ່າຕັດ ແລະ ການປິ່ນປົວ ດ້ານການແພດສຸກເສີນ ໃຫ້ແກ່ປະຊາຊົນທີ່ໄດ້ຮັບບາດເຈັບຍ້ອນອຸປະຕິເຫດ ຈາກລະເບີດ. ໂຄງການໄດ້ ປັບປຸງການບໍລິຫານໂຄງການ ການຝຶກອົບຮົມດ້ານການແພດ ການສະໜອງອຸປະກອນ ການແພດທີ່ຈຳເປັນ ປັບປຸງການບໍລິຫານກອງທຶນຢາໝູນວຽນ ແລະ ການສ້ອມແປງໂຮງໝໍ. ໃນປີ 2001 ໂຄງການໄດ້ ຂະຫຍາຍກິດຈະກຳທີ່ຄ້າຍຄືກັນທີ່ ແຂວງ ຫົວພັນ ແລະ ໄດ້ມອບຮັບໂຄງການ ຂັ້ນສຸດ ທ້າຍໃນປີ 2004. ຕະຫຼອດໄລຍະໂຄງການ ໄດ້ຂະຫຍາຍການບໍລິການລົງສູ່ໂຮງໝໍແຂວງ ແລະ ໂຮງໝໍເມືອງອີກ 6 ແຫ່ງ ທີ່ແຂວງ ຊຽງຂວາງ, ພ້ອມທັງໂຮງໝໍແຂວງແລະໂຮງໝໍເມືອງອີກ 4 ທີ່ແຂວງ ຫົວພັນອີກ. ນອກຈາກ ນີ້ໂຄງການ ໄດ້ສະໜັບສະໜູນໂຮງໝໍແຂວງ ໃນການຝຶກອົບຮົມປະຖົມພະຍາບານຂັ້ນພື້ນຖານໃຫ້ແກ່ ພະນັກງານແລະອາສາສະໝັກແພດບ້ານ ໃນກຸ່ມບ້ານ.

ໃນປີ 2001-02, ອົງການຮ່ວມມືສາກົນຍີ່ປຸ່ນ (ໄຈກາ) ໄດ້ໃຫ້ການຊ່ວຍເຫຼືອໂຄງການຢູ່ແຂວງສະຫວັນນະ ເຂດ ເປັນເວລາ 1 ປີ ໂດຍເນັ້ນໃສ່ການຝຶກອົບຮົມດ້ານການແພດ ສະໜອງອຸປະກອນທີ່ຈຳເປັນດ້ານ ການແພດ ແລະຝຶກອົບຮົມດ້ານການບໍລິຫານ ເພື່ອຈັດຕັ້ງປະຕິບັດກອງທຶນແພດສຳລັບຜູ້ຖືກເຄາະຮ້າຍ ຈາກສົງຄາມ.

ນັບແຕ່ປີ 1996, ອົງການສຶກສາໂລກ/ຄອນຊອກຊຽມໄດ້ລະດົມທຶນ 2 ທຶນແຍກກັນ ເພື່ອໃຫ້ການຊ່ວຍເຫຼືອຜູ້ຖືກເຄາະຮ້າຍຈາກສົງຄາມ. ກອງທຶນຜູ້ຖືກເຄາະຮ້າຍຈາກສົງຄາມ ສະໜັບສະໜູນໂດຍ ກົງສຳລັບຄ່າປິ່ນປົວພະຍາບານທັງໝົດ ລວມທັງຄ່າຢາ, ຄ່າຂົນສົ່ງ ແລະ ເງິນອັດຕາກິນ ລວມທັງ ໄລຍະຫລັງ ຈາກເຫດການເກີດຂຶ້ນ ແລະ ການຕິດຕາມການປິ່ນປົວຕ່າງໆ. ກອງທຶນການຟື້ນຟູເພື່ອຄຸນນະ ພາບຊີວິດໄດ້ໃຫ້ ການຕິດຕາມຢ່າງຕໍ່ ເນື່ອງ ແລະ ມີການປັບການ ຊ່ວຍເຫຼືອໃນບ່ອນທີ່ມີການຊ່ວຍເຫຼືອລ້າ ດ້ານສັດລ້ຽງ, ການຝຶກອົບຮົມ

ວິຊາຊີບ ແລະ ການສະໜັບສະໜູນການສຶກສາ ໃຫ້ແກ່ເດັກນ້ອຍ. ການຊ່ວຍເຫຼືອນີ້ຍັງຄົງດຳເນີນ ຢູ່ໃນ 5 ແຂວງ ເປົ້າ ໝາຍ ແລະ ຍັງມີການສືບຕໍ່ຢູ່.

### 14.2. ຜົນສຳເລັດຕົ້ນຕໍ ໃນປີ 2006

- 2005-07: ໄດ້ເລີ່ມ ໂຄງການ ແມັກໄນ ເພື່ອສິ່ງເສີມດ້ານ ເສດຖະກິດກຸ້ມຕົນເອງ ຢູ່ທີ່ ແຂວງ ຊຽງຂວາງ ແລະຫົວພັນ. ສຳຫຼວດຜູ້ຖືກ ເຄາະຮ້າຍຍ້ອນອຸປະຕິເຫດຈາກ ລະເບີດ ຈຳນວນ 159 ຄົນ, ໄດ້ສະໜັບ ສະໜູນ ດ້ານເສດຖະກິດສັງຄົມ ແລະ ການສຶກສາໃຫ້ແກ່ປະຊາຊົນອີກ 62 ຄົນ. ຈັດຕັ້ງກຸ່ມສົນ ທະນາ ເດັກນ້ອຍທີ່ລອດຊີວິດຈາກອຸປະຕິເຫດລະເບີດ ເພື່ອໃຫ້ການສະໜັບສະໜູນ ດ້ານຈິດຕະສາດ ແລະ ການຕິດຕາມ ເດັກນ້ອຍ.
- ເລີ່ມແຕ່ເດືອນ ກໍລະກົດ ປີ 2006: ຊ່ວຍເຫຼືອຜູ້ຖືກເຄາະຮ້າຍຈາກສົງຄາມ ແລະ ຄົນພິການຢູ່ ແຂວງ ສາລະວັນ ແລະ ຈຳປາສັກ. ຝຶກອົບຮົມການບໍລິຫານ ໂຄງການ ເພື່ອປັບປຸງການປິ່ນປົວທາງການແພດ ສຳລັບ ຜູ້ບາດເຈັບຈາກ ລະເບີດ ຫຼື ບາດເຈັບໜັກອື່ນໆ. ທົບທວນກອງທຶນແພດ ສຳລັບ ຜູ້ໄດ້ທີ່ຖືກຮັບ ເຄາະຮ້າຍ ຈາກສົງຄາມ ໂດຍກອງທຶນຊ່ວຍເຫຼືອ ຈາກສະຫະລັດອາເມລິກາ.
- ສືບຕໍ່ໃຫ້ທຶນການປິ່ນປົວສຳລັບຜູ້ລອດຊີວິດຈາກລະເບີດຢູ່ໃນ 5 ແຂວງ. ສຳລັບປີ 2006 ໄດ້ໃຫ້ການຊ່ວຍ ເຫຼືອປະຊາຊົນຈຳນວນ 44 ຄົນ.
- ນຳສະເໜີເຜີຍແຜ່ຕໍ່ຜູ້ມີສ່ວນຮ່ວມຂອງ ຄຄຊ ໃນວັນທີ 19 ຕຸລາ 2006, ໂດຍໄດ້ສັງລວມ ກິດຈະກຳ ຂອງໂຄງການ ແລະ ການຖອດຖອນບົດຮຽນ.
- ສຳເລັດການຮ່າງປຶ້ມຄູ່ມືກ່ຽວກັບການຖອດຖອນບົດຮຽນ ຈາກກິດຈະການຊ່ວຍເຫຼືອຜູ້ຖືກ ເຄາະຮ້າຍຢູ່ ແຂວງ ຊຽງຂວາງ.

### 14.3. ການປະຕິບັດງານ

**ການກຳນົດຊ່ອງທາງ**

- ການນຳໃຊ້ຊ່ອງທາງແບບມີສ່ວນຮ່ວມເພື່ອເພີ່ມທະວີຄວາມເປັນເຈົ້າຕົນເອງໃຫ້ແກ່ລັດຖະກອນ. ກອງທຶນທາງການແພດ ສຳລັບ ຜູ້ຖືກເຄາະຮ້າຍຈາກສົງຄາມ ໄດ້ດຳເນີນການໂດຍບັນດາແຂວງ ເປົ້າ ໝາຍ ທີ່ສ້າງຕັ້ງຄະນະກຳມະການບໍລິຫານ ຊຸນ ແລະ ທົບທວນນະໂຍບາຍ ພົບປະເພື່ອ ສົນທະນາ ບັນຫາການ ຕັດສິນໃຈອື່ນໆ. ພວກເພິ່ນສະໜອງທຶນສຳລັບການປິ່ນປົວ ເກັບກຳຂໍ້ມູນ ແລະ ສັງລວມ ເພື່ອ ເຮັດໃຫ້ ຜູ້ທີ່ມາ ໂຮງໝໍສາມາດໄດ້ຮັບ ການປິ່ນປົວຢ່າງຮີບດ່ວນໂດຍບໍ່ຕ້ອງມີຄວາມກັງວົນກັບ ຄ່າໃຊ້ ຈ່າຍຕ່າງໆ.
- ໂຄງການທັງໝົດມີໜ້າວຽກໃນການຝຶກອົບຮົມການບໍລິຫານໂຄງການ ເພື່ອສະໜອງເຄື່ອງມືຕ່າງໆ ໃຫ້ພະແນກສາທາລະນະສຸກ ເພື່ອປັບປຸງຄຸນນະພາບຂອງການບໍລິການແກ່ ຄົນເຈັບ. ໂດຍຜ່ານການ ມອບຮັບເປັນກ້າວໆໄປໃນໄລຍະໂຄງການເພື່ອເຮັດໃຫ້ພະນັກງານມີຄວາມກຽມພ້ອມສືບຕໍ່ໃນຕອນ ທ້າຍໂຄງການ.
- ຝຶກອົບຮົມດ້ານການແພດ ແລະພັດທະນາລະບົບການສືບຕໍ່ໃຫ້ການສຶກສາດ້ານແພດ ໃນແຂວງ ເມືອງ ພ້ອມທັງພັດທະນາຄວາມສາມາດໃຫ້ພະນັກງານພາຍໃນໂຮງໝໍ.
- ເພື່ອຕອບສະໜອງການຊ່ວຍເຫຼືອດ້ານການແພດ ແບບຍືນຍົງໃຫ້ແກ່ຜູ້ລອດຊີວິດຈາກລະເບີດ ການຝຶກ ອົບຮົມແລະການຊ່ວຍເຫຼືອແມ່ນຄວາມຈຳເປັນ ໃນການໃຫ້ບໍລິການທາງການແພດສຳລັບ ຜູ້ລອດ ຊີວິດຈາກອຸປະຕິເຫດລະເບີດ ເຊັ່ນການພະຍາບານ, ຫ້ອງທົດລອງ, ລັງສີ ແລະ ອື່ນໆອີກ.

**ພື້ນທີ່ເປົ້າໝາຍ**

ສຳລັບໂຄງການປິ່ນປົວຮີບດ່ວນ (ກອງທຶນທາງການແພດເພື່ອຜູ້ລອດຊີວິດຈາກສົງຄາມ):

- ຊຽງຂວາງ
- ຫົວພັນ
- ສະຫວັນນະເຂດ
- ສາລະວັນ
- ຈຳປາສັກ

ຍັງບໍ່ທັນມີແຜນການຂະຫຍາຍໄປສູ່ເຂດທ້ອງຖິ່ນໃໝ່ ສຳລັບປີ 2007.

## 14.4. ການຝຶກອົບຮົມ

- ແຕ່ປີ 1996-2004, ທີ່ແຂວງຊຽງຂວາງແລະຫົວພັນ ມີພະນັກງານປະມານ 400 ຄົນ ທີ່ໄດ້ຮັບການຝຶກອົບຮົມດ້ານການບໍລິຫານໂຄງການ ດ້ານເຕັກນິກ (ການຜ່າຕັດ, ປິ່ນປົວສຸກເສີນ, ທັກສະການພະຍາບານ ບໍລິຫານການພະຍາບານ, ການບໍລິການປິ່ງມະຕິ, ການບໍລິຫານ ແລະ ອື່ນໆ) ໃນຂັ້ນສູນກາງ ແຂວງ ເມືອງ ແລະລະດັບໝູ່ບ້ານ

ການຊ່ວຍເຫຼືອຜູ້ຖືກເຄາະຮ້າຍຈາກສົງຄາມແລະຄົນພິການ ໃນ 4 ເດືອນທຳອິດຂອງການຈັດຕັ້ງປະຕິບັດໄດ້ມີການຝຶກອົບຮົມດັ່ງນີ້:

| **ຫຼັກສູດຝຶກອົບຮົມ** | **ຫຼັກສູດ** | **ຈຳນວນຜູ້ໄດ້ຮຽນຈົບຫຼັກສູດ** |
|---|---|---|
| ການແນະແນວກ່ຽວກັບໂຄງການ | 2 | ມີປະມານ 150 ຄົນ |
| ຝຶກອົບຮົມການບໍລິຫານໂຄງການຢູ່ແຂວງສາລະວັນແລະຈຳປາສັກ | ໃນ 3 ຫຼັກສູດ 5 ຮອບ | 65 ຄົນ |
| ການເກັບກຳຂໍ້ມູນ | 10 ເມືອງ | |

## 14.5. ຄູ່ຮ່ວມປະຕິບັດງານ

- ສູນຟື້ນຟູຄົນພິການແຫ່ງຊາດ / ກະຊວງສາທາລະນະສຸກ ແມ່ນຄູ່ຮ່ວມງານ ພາກລັດ.
- ພະແນກສາທາລະນະສຸກ ບັນດາໂຮງໝໍ ໃນບັນດາແຂວງ ແລະເມືອງເປົ້າໝາຍ.

## 14.6. ຜູ້ໃຫ້ທຶນຕົ້ນຕໍ

| **ແຫຼ່ງທຶນ/ຜູ້ໃຫ້ທຶນ** | **ຈຳນວນ (ໂດລາສະຫະລັດ)** |
|---|---|
| ມູນລະນິທິແມັກໄນ້ | 50,000 ໂດລາສະຫະລັດ |
| ອົງການເຮັດວຽກເພື່ອມະນຸດສະທຳ | 40,000 ໂດລາສະຫະລັດ |
| ຫ້ອງວ່າການລັດຂອງສະຫະລັດ | 30,000 ໂດລາສະຫະລັດ |
| ທຶນຊ່ວຍເຫຼືອຈາກສະຫະລັດ (USAID) | 320,000 ໂດລາສະຫະລັດ |
| **ລວມ** | **440,000 ໂດລາສະຫະລັດ** |

## 15. ສະມາຄົມການຊ່ວຍເຫຼືອແລະບັນເທົາທຸກ (AAR)

### 15.1. ຄວາມເປັນມາ

ສູນຟື້ນຟູຄົນພິການແຫ່ງຊາດ ພາຍໃຕ້ການຊີ້ນຳຂອງກະຊວງສາທາລະນະສຸກ ໄດ້ສະໜອງລໍ້ເຂັນ ເຊິ່ງເປັນພາກສ່ວນໜຶ່ງຂອງການປະຕິບັດງານຂະໜາດນ້ອຍໃນຊຸມປີທີ່ຜ່ານມາ, ແຕ່ກໍ່ບໍ່ສາມາດຕອບສະ ໜອງຄວາມຕ້ອງການລໍ້ເຂັນຂອງຄົນພິການໄດ້ຢ່າງທົ່ວເຖິງ. ໃນໄລຍະທຳອິດຂອງການປະຕິບັດງານ, ລໍ້ເຂັນ ແມ່ນເຮັດດ້ວຍໄມ້ ແລະ ສາມາດແຈກຈຳໜ່າຍໄດ້ພຽງແຕ່ສອງສາມຄັນເທົ່ານັ້ນຕໍ່ປີ.

ນັບແຕ່ ເດືອນ ທັນວາປີ 2000 ສະມາຄົມການຊ່ວຍເຫຼືອແລະບັນເທົ້າທຸກ ໄດ້ຮ່ວມມືກັບສູນຟື້ນຟູຄົນ ພິການແຫ່ງຊາດ/ກະຊວງສາທາລະນະສຸກ ກ່ຽວກັບໂຄງການສະໜອງລໍ້ເຂັນ ການຈັດຕັ້ງປະຕິບັດໂຄງການນັ້ນໄດ້ຮັບການສະໜັບສະໜູນໂດຍອົງການຮ່ວມມືສາກົນຈາກຍີ່ປຸ່ນ ເຊັ່ນ (JICA). ປະຈຸບັນນີ້ບໍ່ມີໂຄງ ການທີ່ສະໜອງລໍ້ເຂັນໃຫ້ຄົນພິການຢູ່ ສປປ ລາວ ນອກຈາກການບໍລິຈາກເປັນບາງຄັ້ງຄາວຈາກອົງການ ຈັດຕັ້ງຕ່າງໆ. ໂຄງການມີເປົ້າໝາຍທີ່ຈະສະໜອງລໍ້ເຂັນທີ່ເຮັດພາຍໃນປະເທດ ແລະ ສາມລໍ້ໂຍກດ້ວຍມື ໃຫ້ແກ່ຄົນທີ່ພິການທາງຮ່າງກາຍ.

### 15.2. ຜົນສຳເລັດຕົ້ນຕໍໃນປີ 2006

- ປີ 2006 ໂຮງຊ່າງຜະລິດລໍ້ໝູນທັງໝົດໄດ້ 419 ຊຸດ, ໃນນັ້ນລວມມີ ສາມລໍ້ ໂຍກ 166 ຄັນ; ຜູ້ໄດ້ຮັບຜົນປະໂຫຍດຈຳນວນ 30 ຄົນ ຊຶ່ງແມ່ນຜູ້ຖືກເຄາະຮ້າຍຍ້ອນອຸປະຕິເຫດລະເບີດ.
- ລົງຢັ້ງມຍາມຕິດຕາມພາກສະໜາມຢູ່ແຂວງ 6 ຄັ້ງ. ນັກກາຍະບຳບັດຈາກສະມາຄົມການຊ່ວຍເຫຼືອ ແລະບັນເທົາທຸກ ກໍໄດ້ຮ່ວມຢັ້ງມຍາມພາກສະໜາມ ຊຶ່ງໄດຊ່ວຍໃຫ້ຜູ້ກ່ຽວສາມາດຕອບສະໜອງ ໃຫ້ຄຳແນະນຳການປະເມີນເບິ່ງຄວາມຈຳເປັນ ແລະ ຄວາມຕ້ອງການສຳລັບລໍ້ເຂັນ.
- ຜ່ານການລະດົມທຶນສຳລັບການຜະລິດລໍ້ເຂັນ ໄດ້ຮັບເງິນທັງໝົດ 41,538 ໂດລາສະຫະລັດ; ໄດ້ຮັບຈາກກອງທຶນສາກົນຂອງສະມາຄົມການຊ່ວຍເຫຼືອແລະບັນເທົາທຸກ 14,208 ໂດລາສະຫະລັດ (35%), ໄດ້ຮັບຈາກອົງການຈັດຕັ້ງທີ່ກ່ຽວຂ້ອງແລະສ່ວນບຸກຄົນຈາກພາຍໃນແລະຕ່າງປະເທດ 27,330 ໂດລາສະຫະລັດ (65%).
- ນອກຈາກການປະຕິບັດງານກ່ຽວກັບລໍ້ເຂັນ ຢ່າງສະໝ່ຳສະເໝີແລ້ວ ສະມາຄົມການຊ່ວຍເຫຼືອແລະບັນເທົ່າທຸກ ຍັງໄດ້ສະໜັບສະໜູນກິລາສຳລັບຄົນພິການ ໂດຍສະເພາະແມ່ນລໍ້ເຂັນສຳລັບຫຼິ້ນ ກິລາບານບ້ວງ. ໂຮງຊ່າງ ຂອງ ໂຄງການໄດຜະລິດລໍ້ເຂັນສະເພາະຫຼິ້ນກິລາບານບ້ວງ ຈຳນວນ 10 ຄັນ ແລະ ອົງການ ຈັດຕັ້ງອື່ນໆທີ່ວຽງຈັນ ກໍໄດ້ສະໜັບສະໜູນການຈັດການແຂ່ງຂັນກິລາບານ ບ້ວງລໍ້ເຂັນ ທັງລະດັບພາຍໃນ ແລະຕ່າງ ປະເທດອີກດ້ວຍ.

| ລໍ້ເຂັນ ແລະ ສາມລໍ້ໂຍກ ຈາກສະມາຄົມການຊ່ວຍເຫຼືອແລະບັນເທົາທຸກ | | |
|---|---|---|
| ປີ | ປະກອບໃຫ້ຄົນເຈັບ | ຜູ້ໄດ້ຮັບເຄາະຮ້າຍຈາກລະເບີດ |
| 2005 | 371 | ປະມານ 27 |
| 2006 | 419 | ປະມານ 30 |

### 15.3. ການປະຕິບັດງານ

ບັນດາຊຸດກົນໄກການຊ່ວຍເຫຼືອ ໄດ້ແຈກໃຫ້ພາຍໃນຕົວເມືອງວຽງຈັນ ແລະ ໃນແຂວງເປົ້າໝາຍອີກ 10 ແຂວງເຊັ່ນ ຫຼວງພະບາງ, ຊຽງຂວາງ, ວຽງຈັນ, ບໍລິຄຳໄຊ, ຄຳມ່ວນ, ສະຫວັນນະເຂດ, ສາລະວັນ, ເຊກອງ, ອັດຕະປື ແລະ ແຂວງຈຳປາສັກ. ໃນທຸກໆເດືອນ ພະນັກງານຈະລົງຢັ້ງມຍາມປະຊາຊົນຜູ້ທີ່ມີຄວາມຕ້ອງການລໍ້ເຂັນ ເພື່ອປະເມີນເບິ່ງວ່າກົນໄກຊ່ວຍເຫຼືອຊະນິດໃດທີ່ເຂົາຮຽກຮອງຕ້ອງການ. ພາຍຫລັງທີ່ເກັບກຳບົດລາຍງານປະເມີນ ຜົນທັງ ໝົດແລ້ວ ກໍໄດ້ທຳການຜະລິດກົນໄກຊ່ວຍເຫຼືອ ທີ່ໂຮງຊາງຜະລິດລໍ້ເຂັນທີ່ສູນຟື້ນຟູຄົນພິການ ແຫ່ງຊາດ ແລະ ຫລັງ ຈາກ ນັ້ນກໍແຈກຈຳໜ່າຍໃຫ້ພື້ນທີ່ເປົ້າໝາຍທັງໝົດ.
ໃນເບື້ອງຕົ້ນການສະໜອງກົນໄກຕ່າງໆໄດ້ຮັບການສະໜັບສະໜູນຈາກແຫຼ່ງທຶນຂອງໂຄງການ, ແຕ່ມາເຖິງປີ 2004 ໂຄງການໄດ້ຮັບການສະໜັບສະໜູນຈາກບັນດາບໍລິສັດພາຍໃນ ອົງການ ກຸສົນ ແລະ ສ່ວນບຸກຄົນ, ຊຶ່ງໄດ້ຊ່ວຍໃຫ ໂຄງການ ສາມາດປະຄັບປະຄອງການຜະລິດອອກເກືອບ 400 ເຄື່ອງຕໍ່ປີ.

### 15.4. ການຝຶກອົບຮົມ

ປີ 2006 ການຝຶກອົບຮົມມີດັ່ງນີ້:

- ການຝຶກອົບຮົມດ້ານເຕັກນິກການຜະລິດລໍ້ເຂັນ 3 ຄັ້ງ ໄດ້ຈັດຂຶ້ນໂດຍນາຍຊ່າງລໍ້ໝຸນຈາກຍີ່ປຸ່ນ. ການ ຝຶກອົບຮົມໄດເລັງໃສ່ທັກສະການແຕ້ມ ອອກແບບ ແລະ ການຜະລິດລໍ້ເຂັນສໍາລັບຫຼີ້ນກິລາບານບ້ວງ ແລະ ການທົດລອງຜະລິດລໍ້ເຂັນ ສໍາລັບໃຊ້ໃນພື້ນທີ່ໆບໍ່ລຽບໄຫຼ ແລະອື່ນໆ.
- ການຝຶກອົບຮົມດານການປະເມີນຜົນ 1 ຄັ້ງ ໄດ້ຈັດຂຶ້ນໂດຍນັກກາຍຍະບໍາບັດຂອງສະມາຄົມການຊ່ວຍເຫຼືອ ແລະ ບັນເທົາທຸກ ໃຫ້ແກ່ພະນັກງານສູນຟື້ນຟູຄົນພິການແຂວງ ຜູ້ທີ່ຮັບຜິດຊອບລໍ້ເຂັນ.

### 15.5. ຄູ່ຮ່ວມງານຈັດຕັ້ງປະຕິບັດ

ອົງການຮ່ວມມືສາກົນຍີ່ປຸ່ນ (JICA)

### 15.6. ຜູ້ໃຫ້ທຶນຕົ້ນຕໍ

| ແຫຼ່ງທຶນ | ຈໍານວນ (ໂດລາສະຫະລັດ) |
|---|---|
| ອົງການຮ່ວມມືສາກົນຍີ່ປຸ່ນ | 70,945 ໂດລາສະຫະລັດ |
| ກອງທຶນສາກົນສໍາລັບສະມາຄົມການຊ່ວຍເຫຼືອແລະບັນເທົາທຸກ (ການຈັດຕັ້ງປະຕິບັດໂຄງການ) | 5,000 ໂດລາສະຫະລັດ |
| ກອງທຶນສາກົນສໍາລັບສະມາຄົມການຊ່ວຍເຫຼືອແລະບັນເທົາທຸກ (ສະໜັບສະໜູນລໍ້ເຂັນ) | 15,480 ໂດລາສະຫະລັດ |
| ສະໜັບສະໜູນລໍ້ໝຸນທົ່ວໄປ | 27,330 ໂດລາສະຫະລັດ |
| **ລວມ** | **118,755 ໂດລາສະຫະລັດ** |

### 15.7. ການໃຊ້ຈ່າຍ

| ລາຍການ | ຈໍານວນ (ໂດລາສະຫະລັດ) |
|---|---|
| ພະນັກງານຕ່າງດ້າວ | 28,800 ໂດລາສະຫະລັດ |
| ພະນັກງານພາຍໃນ | 15,420 ໂດລາສະຫະລັດ |
| ບໍລິຫານຫ້ອງການ | 10,920 ໂດລາສະຫະລັດ |
| ຝຶກອົບຮົມ | 4,600 ໂດລາສະຫະລັດ |
| ປະຕິບັດງານ | 11,750 ໂດລາສະຫະລັດ |
| ຊັບສິນໃນງົບດຸນ | 4,455 ໂດລາສະຫະລັດ |
| ຜະລິດລໍ້ເຂັນ | 42,810 ໂດລາສະຫະລັດ |
| **ລວມ** | **118,755 ໂດລາສະຫະລັດ** |

# 16. ສະມາຄົມຄົນພິການລາວ (LDPA)

## 16.1. ຄວາມເປັນມາ

ໂຄງການເພື່ອຍົກສູງສິດທິຄົນພິການ ແລະ ການສຶກສາຢູ່ ສປປ ລາວ, ມີຈຸດປະສົງສ້າງສິດທິພື້ນຖານ ດ້ານວັດທະນາທຳໃຫ້ແກ່ຄົນພິການຢູ່ ສປປ ລາວ ໂດຍການໂຄສະນາສິດທິຄົນພິການ ຢູ່ໃນກຸ່ມຄົນພິການ ແລະພະນັກງານທົ່ວໄປ. ໂຄງການຝຶກອົບຮົມແລະການສຶກສາສິດທິຄົນພິການໄດ້ໃຫ້ຄວາມຮູ້ແລະ ຄວາມເຂົ້າໃຈຕໍ່ສິດທິຂອງຄົນພິການ ແລະ ເພື່ອພັດທະນາ ທັດສະນະທາທີ ແລະ ອຸປະນິໄສໃນການເຄົາລົບ ຕໍ່ສິດທິດັ່ງກ່າວ.

ຄົນພິການໄດ້ເຮັດວຽກຮ່ວມກັບອຳນາດການປົກຄອງຂັ້ນບ້ານ ເພື່ອຄົ້ນຄວ້າເບິ່ງທັດສະນະທ່າທີ່ສະພາບແວດລ້ອມ ແລະລະບົບສັງຄົມ ຊຶ່ງປາສະຈາກການມີສ່ວນຮ່ວມຂອງຄົນພິການ ໃນການດຳລົງຊີວິດດານ ເສດຖະກິດສັງຄົມໃນຊຸມຊົນ. ເຄືອຂ່າຍ ຂອງ ກຸ່ມຄົນພິການທີ່ຊ່ວຍເຫຼືອຕົນເອງ ເຮັດວຽກຮ່ວມກັບອຳນາດການປົກຄອງ ບ້ານເພື່ອພັດທະນາຂອງທາງແກ້ໄຂບັນຫາການກີດກັ້ນຕໍ່ຄົນພິການ..

ສະມາຄົມຄົນພິການລາວ ກຳລັງຈັດຕັ້ງປະຕິບັດໂຄງການຮ່າງນິຕິກຳສິດທິຄົນພິການຢູ່ ສປປ ລາວ, ໂດຍຮ່ວມມືກັບ ກະຊວງ ແຮງງານ ແລະ ສະຫວັດດີການສັງຄົມ, ຄະນະກຳມະການ ແຫ່ງຊາດເພື່ອຄົນພິການ, ພ້ອມກັບການສະໜັບສະໜູນ ຈາກສະຖານທູດເນ ເທີແລນ ທີ່ບາງກອກ, ອົງການ ພະລັງແຮງສາກົນ, ໂຄງການ ກົດໝາຍສາກົນຂອງ ອົງການ ສປຊ (APCD) ແລະ ອົງການ ແຮງງານສາກົນ.

ຮ່າງດຳລັດຈະກາຍເປັນເຄື່ອງມືດ້ານນິຕິກຳໃນ ສປປ ລາວ ໃນການຮັບຮູ້ ຄົນພິການຢ່າງເປັນທາງການໃນຖານເປັນ ສະມາຊິກທີ່ມີຄຸນຄ່າໃນສັງຄົມ ແລະ ຍັງຈະກຳນົດບັນດາອຸປະສັກ ໃນການມີສ່ວນຮ່ວມ ທີ່ມີຄວາມຈຳເປັນຈະຕອງແກ້ໄຂ. ໂຄງການມີເປົ້າໝາຍທີ່ຈະວາງຮາກຖານສຳ ລັບການເຊັນ ແລະ ການໃຫ້ສັດຕະຍາບັນສົນທິສັນ ຍາສິດທິ ຂອງ ຄົນພິການໃນລະບົບສາທະປະຊາຊາດ.

ສະໂມສອນການຟັງວິທະຍຸ ເຮັດໃຫ້ສະມາຊິກທຸກຄົນສາມາດສື່ສານເຖິງກັນໄດ້ໃນທົ່ວ ສປປ ລາວ. ນອກນີ້ຍັງເຮັດໃຫ້ຫ້ອງການສະມາຄົມຄົນພິການລາວ ສາມາດໃຫ້ການສຶກສາແກ່ສະມາຊິກກ່ຽວກັບສິດທິຂອງເຂົາ ແລະການກະຈາຍຂໍ້ມູນຂ່າວສານ. ສະມາຊິກຍັງທຳການບັນທຶກຂໍ້ຄວາມເຊັ່ນ ການສຳພາດພະນັກງານ ລັດຫົວໜ່ວຍທຸລະກິດ ແລະ ສິ່ງບົດສຳພາດໄປຫາສຳນັກງານໃຫ່ຍເພື່ອຕັດຕໍ່ອອກອາກາດໃນສະຖານີ ວິທະຍຸກະຈາຍສຽງ ແລະ ເພື່ອອອກລາຍການສົດໃນການສົນທະນາ ລະຫວ່າງສະມາຊິກດວຍກັນ.ໂຄງການ ມີຈຸດປະສົງເພື່ອສ້າງສິດທິ ພື້ນຖານດ້ານ ວັດທະນາທຳໃຫ້ແກ່ຄົນພິການໃນ ສປປ ລາວ. ໂຄງການ ດັ່ງກາວ ໄດ້ຈັດຕັ້ງ ປະຕິບັດໂດຍ ການຮ່ວມມືກັບ ກະຊວງແຮງງານ ແລະ ສະຫວັດດີການສັງຄົມ.

ໂຄງການ ການເຊື່ອມໂຍງຄົນພິການລາວກັບໂລກພາຍນອກ ມີຈຸດປະສົງສົ່ງເສີມອຳນາດລັດ ແລະໃຫ້ການສຶກສາດ້ານສິດທິຄົນພິການ ໃຫ້ແກ່ຄົນພິການ ເພື່ອປຸກຈິດສຳນຶກ ກ່ຽວກັບ ສິດທິຂອງ ຄົນ ພິການ ເຂົ້າໃນຂັ້ນຄົນຕາງໆ ຂອງ ສັງຄົມລາວ. ເປົ້າໝາຍທຳອິດແມ່ນສະມາຊິກຂອງສະມາຄົມຄົນພິການລາວ ແລະ ເປົ້າໝາຍທີສອງແມ່ນມີລັດຖະກອນ ອົງການຈັດຕັ້ງສາກົນທີ່ບໍ່ສັງກັດລັດ ແລະ ຫົວໜ່ວຍທຸລະກິດລາວ.

ສະມາຄົມຄົນພິການລາວ ໄດ້ບັນລຸເປົ້າໝາຍໂດຍການຂະຫຍາຍເຂດປົກຄຸມ ຂອງ ລາຍການສະໂມສອນຟັງວິທະຍຸ ອອກສູ່ສະຖານີວິທະຍຸກະສາຍສຽງປະຈຳແຂວງໄດ້ 4 ແຫ່ງ. ລາຍການວິທະຍຸຈັດຂຶ້ນໂດຍທີ່ສາກົນກໍສາມາດຮັບຟັງໄດ ໂດຍຜ່ານທາງອິນເຕີເນັດໃນເວັບໄຊຂອງສະມາຄົມຄົນພິການລາວ:www.ldpalao s.org. ນອກນີ້ຍັງອອກວາລະສານທຸກໆສາມເດືອນ ເພື່ອການສື່ສານບັນຫາຕົ້ນຕໍໃນແຕ່ລະລາຍກາຍວິທະຍຸໃຫ້ແກ່ສະມາຊິກທຸກຄົນຮັບຊາບທົ່ວໄປ.

## 16.2. ຜົນສຳເລັດຕົ້ນຕໍໃນປີ 2006

- ເລີ່ມຮ່າງບົດສະເໜີໂຄງການສິດທິຄົນພິການ, ເປັນໂຄງການທີ່ບໍ່ຫວັງຜົນກຳໄລເທື່ອທຳອິດໃນ ສປປ ລາວ ແລະກໍເປັນຄັ້ງທຳອິດ ໃນການປົກປ້ອງສິດທິຄົນພິການໃນທາງນິຕິບັນຍັດ.
- ສະມາຄົມຄົນພິການລາວໄດ້ຈັດຕັ້ງສຳມະນາຮ່ວມກັບກະຊວງຕາງໆຊຶ່ງ ເປັນການຮ່ວມມືຄັ້ງທຳອິດກັບ ໂຄງການ ກົດໝາຍສາກົນເພື່ອຄົນພິການ ຂອງສົນທິສັນຍາສະຫະປະຊາຊາດ ແລະ ຄັ້ງທີສອງຮ່ວມກັບ ອົງການແຮງງານສາກົນເພື່ອຄົນພິການກ່ຽວກັບການຝຶກອົບຮົມວິຊາຊີບ,ການຟື້ນຟູແລະ ນະໂຍບາຍການປົກປ້ອງທາງສັງຄົມ.
- ຄະນະຜູ້ແທນສະມະຄົມຄົນພິການລາວ ໄດ້ເຂົ້າຮ່ວມກອງປະຊຸມໃຫ່ຍສະຫະປະ ຊາຊາດ ESCAP ເຂດພາກພື້ນ ເພື່ອຮ່າງສົນທິສັນຍາສະຫະປະຊາຊາດ ກ່ຽວກັບສິດທິຄົນພິການ ທີ່ບາງກອກ ປະເທດໄທ.
- ໜ່ວຍງານໂຄງການຟັງວິທະຍຸຂອງສະມາຄົມຄົນພິການລາວ ໄດ້ຖືກເຊື້ອເຊີນໃຫ້ການຝຶກອົບຮົມ 3 ອາທິດ ກ່ຽວກັບການຜະລິດແລະເຕັກນິກການຈັດລາຍການ ໃຫ້ແກ່ໂຄງການວິທະຍຸຂອງອົງການ ສປຊ ທີ່ແຂວງຊຽງຂວາງ.
- ສະມາຄົມຄົນພິການລາວ ໄດ້ແຈກຢາຍໄມຄ້ຳຂູຈຳນວນ 200 ຄູ່ ແລະ ລົດສາມລໍ້ໃຫ້ແກ່ບັນ ດາສະມາຊິກໃນທົ່ວປະເທດ
- ສະມາຄົມຄົນພິການລາວ ໄດ້ແຈກຢາຍເຂົ້າຈຳນວນ 150 ໂຕນ ໃຫ້ແກ່ສະມາຊິກ ໂດຍໄດ້ຮັບບໍລິຈາກ ໂດຍອົງການສຸພານິມິດ
- ສະມາຄົມຄົນພິການລາວ ໄດ້ຈັດຕັ້ງການຝຶກອົບຮົມດ້ານສິດທິ ແລະ ຄວາມສະເໝີພາບຂອງຄົນພິການໃຫ້ແກ່ພະນັກງານລັດຫຼາຍກວ່າ 90 ຄົນ ແລະຄົນພິການອີກ 200 ຄົນ
- ສະມາຄົມຄົນພິການລາວ ໄດ້ຂະຫຍາຍໂຄງການຟັງວິທະຍຸອອກໄປສູ່ 8 ແຂວງ.

## 16.3. ການປະຕິບັດງານ

- ເພື່ອພັດທະນາການເປັນສະມາຊິກ
- ເພື່ອສ້າງຄວາມສາມາດດ້ານອົງການຈັດຕັ້ງ ຂອງສະມາຄົມຄົນພິການລາວ
- ເພື່ອກະຈາຍກຳມະວິທີ ສຳລັບ ການສ້າງສິ່ງທີ່ຕ້ອງການສຳລັບສະມາຊິກ
- ເພື່ອສະໜັບສະໜູນສິດທິ ແລະ ຄວາມຕ້ອງການຂອງສະມາຊິກ
- ເພື່ອແຈ້ງຕໍ່ສະມາຊິກກ່ຽວກັບສິດທິຂອງພວກເຂົາ ເພື່ອການພັດທະນາ ແລະ ປຸກຈິດສຳນຶກ ຂອງ ພວກເຂົາ
- ເພື່ອສ້າງແລະສະໜັບສະໜູນການບໍລິການ ແລະ ກິດຈະການເພື່ອຕອບສະໜອງຄວາມຮຽກຮ້ອງຕ້ອງການຂອງສະມາຊິກ.
- ເພື່ອຮັກສາການຕິດຕໍ່ພົວພັນກັນ ແລະ ຖອດຖອນບົດຮຽນໃນໝູ່ຊຸມຊົນຄົນພິການຢ່າງກວ້າງຂວາງ.

## 16.4. ການຝຶກອົບຮົມ

| ຫຼັກສູດຈັດຂຶ້ນໂດຍສະມາຄົມຄົນພິການລາວສຳລັບຄົນພິການ ແລະ ຊຸມຊົນ | ວັນທີຈັດຕັ້ງຫຼັກສູດ | ຈຳນວນຫຼັກສູດທີ່ໄດ້ຈັດ | ຈຳນວນຜູ້ເຂົ້າຮ່ວມ |
|---|---|---|---|
| ຝຶກອົບຮົມສະໂມສອນຟັງວິທະຍຸ | ມັງກອນ-ທັນວາ 2006 | 11 | 265 |
| ຝຶກອົບຮົມດ້ານສິດທິຄົນພິການແລະການສຶກສາ – ຝຶກອົບຮົມຄົນພິການແລະພະນັກງານລັດ | ມີນາ 2006-ມີນາ 2007 | 16 | 440 |
| ການນຳໃຊ້ຄອມພິວເຕີສຳລັບຄົນພິການ | ທັນວາ 2006 | 1 | 25 |

| **ຫຼັກສູດທີ່ພະນັກງານໄດ້ເຂົ້າຮ່ວມ** | **ວັນທີຈັດຕັ້ງຫຼັກສູດ** | **ຈຳນວນຜູ້ເຂົ້າຮ່ວມ** |
|---|---|---|
| ການສຶກສາຮ່ວມລະບົບ | ທັນວາ 2006 | 1 |
| ຄອມພີວເຕີ | ມັງກອນ 2007 | 8 |
| ບົດບາດຄວາມສະເໝີພາບຍິງ-ຊາຍ | ມັງກອນ 2007 | 20 |
| ການຕະຫຼາດຂັ້ນພື້ນຖານໃຫ້ແກ່ຜູ້ຈັດການໃໝ່ | ມັງກອນ 2007 | 1 |
| ຝຶກອົບຮົມຖານຂໍ້ມູນຂ່າວສານ | ກຸມພາ 2007 | 1 |
| ເຊື້ອເອສໄອວີ/ ເອດ | ມີນາ 2007 | 1 |

## 16.5. ຄູ່ຮ່ວມງານຈັດຕັ້ງປະຕິບັດ

ສະມາຄົມຄົນພິການລາວໄດ້ ຈັດຕັ້ງປະຕິບັດໂຄງການ ໂດຍຮ່ວມມືຫຼືການຮ່ວມງານ ກັບຄະນະ ກຳມະການແຫ່ງຊາດເພື່ອຄົນພິການ, ກະຊວງແຮງງານແລະສະຫວັດດີການສັງຄົມ, ອົງການສາກົນເພື່ອ ຄົນພິການແບບຢຽມ, ESCAP ສະຫະປະຊາຊາດ, ໂຄງການ ກົດໝາຍສາກົນຂອງອົງການ ສປຊ, ໂຄງການ ວິທະຍຸຂອງອົງການ ສປຊ ທີ່ແຂວງຊຽງຂວາງ, ສູນກາງ ອາຊີປາຊີຟິກ ເພື່ອຄົນພິການ.

## 16.6 ຜູ້ໃຫ້ທຶນຕົ້ນຕໍ

**ສະມາຄົມຄົນພິການລາວໄດ້ຮັບທຶນ ເລີ່ມຈາກວັນທີ 1 ມັງກອນ – 31 ທັນວາ 06**

| **ແຫຼ່ງທຶນ** | **ຈຳນວນ (ໂດລາສະຫະລັດ)** |
|---|---|
| ອົງການພະລັງແຮງສາກົນ | 214,139 ໂດລາສະຫະລັດ |
| ອົງການຈັດຕັ້ງສະວີເດັນສຳລັບສະມາຄົມຊ່ວຍເຫຼືອຄົນພິການສາກົນ (SHIA) | 10,367 ໂດລາສະຫະລັດ |
| ທະນາຄານໂລກ | 6,959 ໂດລາສະຫະລັດ |
| ອົງການສາກົນເພື່ອຄົນພິການແບບຢຽມ | 6,000 ໂດລາສະຫະລັດ |
| ສະຖານທູດເນເທີແລນ | 27,070 ໂດລາສະຫະລັດ |
| ສະຖານທູດຍີ່ປຸ່ນ | 126,524 ໂດລາສະຫະລັດ |
| ສະຖານທູດອີຕາລີ | 5,000 ໂດລາສະຫະລັດ |
| ການປະກອບສ່ວນຈາກທ້ອງຖິ່ນ | 4,228 ໂດລາສະຫະລັດ |
| **ລວມ** | **400,287 ໂດລາສະຫະລັດ** |

**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

**ສໍານັກງານນາຍົກລັດຖະມົນຕີ**

ເລກທີ 01 / ນຍ
ວຽງຈັນ, ວັນທີ **29.04.2004**

# ມະຕິຕົກລົງ
# ຂອງລັດຖະບານແຫ່ງ ສ.ປ.ປ.ລາວ
# ວ່າດ້ວຍ ການຮັບຮອງເອົາ ແລະ ປະກາດໃຊ້ ແຜນຍຸດທະສາດແຫ່ງຊາດ ກ່ຽວກັບ ການແກ້ໄຂບັນຫາລະເບີດບໍ່ທັນແຕກທີ່ ຕົກຄ້າງ ຢູ່ໃນ ສ.ປ.ປ.ລາວ (2003 - 2013)
# "ເສັ້ນທາງກ້າວໄປສູ່ຄວາມປອດໄພ"

## ພາກທີ I: ບົດແນະນໍາ

1. ເລີ້ມແຕ່ໄລຍະຕົ້ນຂອງຊຸມປີ 1960 ເຖິງກາງ ຊຸມປີ 1970, ສົງຄາມ ໄດ້ເຮັດໃຫ້ມີລູກລະເບີດທີ່ບໍ່ທັນແຕກ (UXO) ຈໍານວນປະມານ 10 - 30% ຂອງລະເບີດທີ່ຖືກຖິ້ມທັງໝົດ 2 ລ້ານກວ່າໂຕນ ຢັ່ງຢາຍຢູ່ ທົ່ວປະເທດ. ເພື່ອແກ້ໄຂ ວິກິດການທາງດ້ານມະນຸດສະທໍາ ທີ່ສືບເນື່ອງມາຈາກສະພາບດັ່ງກ່າວ, ໂຄງການເກັບກູ້ລະເບີດ ແຫ່ງຊາດລາວ (UXO Lao) ໄດ້ຖືກສ້າງຕັ້ງຂຶ້ ນ ໃນປີ 1996, ໂດຍລັດຖະບານ ແຫ່ງ ສປປ ລາວ ໄດ້ມອບໝາຍໃຫ້ ກະຊວງແຮງງານ ແລະ ສະຫວັດດີການສັງຄົມ ເປັນຜູ້ຄຸ້ມຄອງ.

2. ເຈັດປີຕໍ່ມາ, ຫຼັງຈາກໄດ້ເກັບກູ້ລະເບີດ ອອກຈາກເນື້ອທີ່ຫຼາຍກ່ວາ 3,500 ເຮັກຕາ, ລັດຖະບານ ຈຶ່ງເຫັນຄວາມຈໍາເປັນທີ່ຈະຕ້ອງເບິ່ງກ້ວາງໄກໄປຂ້າງໜ້າ ກ່ຽວກັບບັນຫາທີ່ພົວພັນກັບລູກລະເບີດທີ່ບໍ່ທັນແຕກ ແລະ ສ້າງການເຊື່ອມໂຍງທີ່ເໝາະສົມ ລະຫວ່າງ ປະເດັນລະເບີດທີ່ບໍ່ທັນແຕກ ແລະ ເປົ້າໝາຍ ການພັດທະນາ ແຫ່ງຊາດ.

3. ໂດຍຄໍານຶງເຖິງ ເຈດຕະນາລົມ ທາງການເມືອງ ຂອງສົນທິສັນຍາ ໂອຕາວາ (Ottawa convention) ວ່າດ້ວຍລະເບີດຝັງດິນ ຕໍ່ຕ້ານບຸກຄົນ, ລັດຖະບານແຫ່ງ ສປປລາວ ຈະສືບຕໍ່ພິຈາລະນາ ຄວາມອາດສາມາດໃນການເຂົ້າຮ່ວມເປັນ ພາຄີ ຂອງ ສົນທິສັນຍາດັ່ງກ່າວ.

4. ດ້ວຍເຫດນັ້ນ, ໃນທ້າຍປີ 2002, ປະທານຄະນະກໍາມະການຊີ້ນໍາໂຄງການເກັບກູ້ລະເບີດ ແຫ່ງ ສປປ ລາວ ຈຶ່ງໄດ້ລິເລີ່ມຂະບວນການວາງແຜນຍຸດທະສາດ, ທີ່ກວມເອົາການປຶກສາຫາລື ກັບຜູ້ຕາງໜ້າຂອງ ບັນດາກະຊວງຕ່າງໆທີ່ກ່ຽວຂ້ອງ, ກັບບັນດາໜ່ວຍງານຕ່າງໆພາຍໃນໂຄງການເກັບກູ້ລະເບີດເອງ, ກັບອົງການສະຫະປະຊາຊາດ ແລະ ບັນດາອົງການຮ່ວມມືອື່ນໆ, ກັບບັນດາຜູ້ໃຫ້ການຊ່ວຍເຫຼືອ ແລະ ບັນດາຄູ່ຮ່ວມຈັດຕັ້ງປະຕິບັດໂຄງການ. ຜົນງານຂອງຂະບວນການນີ້ ແມ່ນແຜນຍຸດທະສາດສະບັບນີ້, ຊຶ່ງໄດ້ພິຈາລະນາ ແລະ ຮັບຮອງເອົາຢູ່ກອງປະຊຸມລັດຖະບານ ຄັ້ງວັນທີ 29-31 ກໍລະກົດ 2003 ແລະ ເປັນທິດທາງແນະນໍາ ໃຫ້ແກ່ການປະຕິບັດບັນດາກິດຈະກໍາທີ່ພົວພັນກັບການເກັບກູ້ລະເບີດບໍ່ທັນແຕກ ຢູ່ໃນ ສປປ ລາວ ໃນ ໄລຍະປີ 2003-2013.

## **ພາກທີ II: ເປົ້າໝາຍ ແລະ ຂອບເຂດ**

5. ແຜນຍຸດທະສາດສະບັບນີ້ ໄດ້ສັງລວມເອົາບັນດາວິທີທາງ ຂອງ ລັດຖະບານ ແຫ່ງ ສປປ ລາວ ເພື່ອແກ້ໄຂບັນຫາ ຂອງ ລະເບີດບໍ່ທັນແຕກ, ພາຍໃນໄລຍະເວລານັບແຕ່ວັນທີໄດ້ຮັບຮອງ ຈົນຮອດ ທ້າຍປີ 2013. ຍົກເວັ້ນ ສໍາລັບກໍລະນີທີ່ລະບຸໄວ້ສະເພາະ, ແຜນການດັ່ງກ່າວ ກວມເອົາບັນດາກິດຈະກໍາຕ່າງໆ ພົວພັນເຖິງການເກັບກູ້ລະເບີດທີ່ບໍ່ທັນແຕກ ໃນ 9 ແຂວງ ດັ່ງຕໍ່ໄປນີ້:

1. ສະຫວັນນະເຂດ
2. ຊຽງຂວາງ
3. ສາລະວັນ
4. ຄຳມ່ວນ
5. ເຊກອງ
6. ຈຳປາສັກ
7. ຫົວພັນ
8. ອັດຕະປື
9. ຫຼວງພະບາງ

6. ໂດຍສອດຄ່ອງກັບ ບູລິມະສິດຕ່າງໆ ທີ່ໄດ້ລະບຸໄວ້ໃນໂຄງການ ລຶດຜ່ອນຄວາມທຸກຈົນ (NPEP), ຈຸດປະສົງສຸດທ້າຍ ຂອງການສືບຕໍ່ ປະຕິບັດແຜນການນີ້ແມ່ນເພື່ອ ***"ໃຫ້ປະຊາຊົນທີ່ຢູ່ໃນໝູ່ບ້ານ ທີ່ມີຜົນກະທົບຫຼາຍກວ່າໝູ່ ດຳເນີນຊີວິດໂດຍປາສະຈາກຜົນກະທົບຈາກ ລະເບີດຝັງດິນ ແລະ ລະເບີດບໍ່ທັນແຕກ"***. ຜົນກະທົບຕ່າງໆ ເຫຼົ່າ ນັ້ນ ຈະຫຼຸດຜ່ອນລົງໄດ້ ດ້ວຍການປະສົມປະສານລະຫວ່າງ ການເກັບກູ້ລະເບີດ, ການສຶກສາຊຸມຊົນ ໃຫ້ຮັບຮູ້ເຖິງ ຄວາມອັນຕະລາຍ ຈາກລະເບີດທີ່ບໍ່ທັນແຕກ ແລະ ການຊ່ວຍເຫຼືອຜູ້ທີ່ລອດຊີວິດຈາກອຸປະຕິເຫດ ຍອນລະເບີດ ພອມທັງບັນດາຜູ້ທີ່ ເປັນພາລະເບິ່ງແຍງຂອງພວກເຂົາ ແລະ ການປັກໝາຍເຂດ ທີ່ຖືກຈັດເປັນ ບຸລິມະສິດລະດັບຕ່ຳ ເພື່ອດຳເນີນການເກັບກູ້ຕາມພາຍຫຼັງ (ໃນຂັ້ນຕໍ່ໄປ).

7. ການຈັດບຸລິມະສິດຂອງວຽກງານ ຈະອີງໃສ່ຄວາມຕ້ອງການຂອງປະຊາຊົນທີ່ອາໄສຢູ່ໃນ 46 ເມືອງ ຊຶ່ງໄດ້ກຳນົດເປັນເຂດບຸລິມະສິດການພັດທະນາແຫ່ງຊາດ ຢູ່ໃນແຜນການລົບລ້າງຄວາມທຸກຍາກແຫ່ງຊາດ (NPEP) ເປັນສຳຄັນ ໂດຍຮັບປະກັນ ບໍ່ໃຫ້ມີຜົນກະທົບຕໍ່ໂຄງການເກັບກູ້ລະເບີດທັງໝົດ ແຕ່ຢ່າງໃດ.

## <u>ພາກທີ III</u>: <u>ເປົ້າໝາຍ</u>

### 8. ເປົ້າໝາຍລະອຽດ,

ກ. ວຽກງານໂຄສະນາສຶກສາໃຫ້ຊຸມຊົນມີສະຕິລະວັງຕົວ, ທີມງານໂຄສະນາສຶກສາ ຄວາມສ່ຽງໄພອັນຕະລາຍ ຂອງລະເບີດທີ່ບໍ່ທັນແຕກ ຈະໄດ້ຈັດຕັ້ງການຝຶກອົບຮົມໃຫ້ທຸກຊຸມຊົນທີ່ໄດ້ຮັບຜົນກະທົບ ຢູ່ໃນ ສປປ ລາວ (ອີງຕາມຜົນຂອງການສຳຫຼວດທົ່ວປະເທດ ກ່ຽວກັບຜົນກະທົບ ໃນປີ 1997), ແລະ ອຸບັດຕິເຫດ ອັນເນື່ອງຈາກລະເບີດທີ່ບໍ່ທັນແຕກ ຈະຫຼຸດຜ່ອນລົງສູ່ລະດັບ ບໍ່ເກີນຈຳນວນ 100 ຄົນ/ປີ ໃນທົ່ວປະເທດ.

ຂ. ກ່ຽວກັບວຽກງານການສຳຫຼວດແລະການເກັບກູ້, ເນື້ອທີ່ກະສິກຳທັງໝົດ ທີ່ຖືວ່າເປັນເນື້ອທີ່ "ບຸລິມະສິດລະດັບສູງ" ແລະ ເນື້ອທີ່ຈຳນວນກ້ວາງຂວາງສົມຄວນ ທີ່ຖືວ່າຢູ່ໃນ "ບຸລິມະສິດລະດັບກາງ" ຈະຖືກກວດເກັບກູ້ ເພື່ອເຮັດໃຫ້ກາຍເປັນເຂດປອດລະເບີດ ໃນເນື້ອທີ່ທັງໝົດ ບໍ່ຕ່ຳກວ່າ 18,000 ເຮັກຕາ (180 km2) ໂດຍແມ່ນຄວາມຮັບຜິດຊອບ ຂອງໂຄງການເກັບກູ້ລະເບີດແຫ່ງ ສປປ ລາວ (ຄກລ).

ຄ. ກ່ຽວກັບວຽກງານການຊ່ວຍເຫຼືອຜູ້ປະສົບເຄາະຮ້າຍ, ຖານຂໍ້ມູນແຫ່ງຊາດ ກ່ຽວກັບ ອຸປະຕິເຫດ ທີ່ເກີດຈາກລະເບີດບໍ່ທັນແຕກ (ກວມເອົາທັງໝົດ 18 ແຂວງ) ຈະຖືກສ້າງຂຶ້ນ ແລະ ຖືກປັບປຸງໃຫ້ທັນກັບ ສະພາບການຕົວຈິງຢູ່ສະເໝີ ເພື່ອນຳໃຊ້ເຂົ້າໃນການຈັດບຸລິມະສິດຂອງ ໜ່ວຍງານເກັບກູ້ ແລະ ໂຄສະນາສຶກສາ ຊຸມຊົນ. ຄວາມຮຽກຮ້ອງຕ້ອງການສະເພາະ ຂອງຜູ້ທີ່ລອດຊີວິດຈາກອຸປະຕິເຫດ ລະເບີດທັງໃນ ດ້ານການຟື້ນຟູຮ່າງ ກາຍ ແລະ ໃນດ້ານ ການເຊື່ອມສານ ເຂົ້າໃນຊີວິດເສດຖະກິດສັງຄົມຈະຖືກພິຈາລະນາເຂົ້າໃນແຜນການ ນະໂຍບາຍ ຂອງຂະແໜງ ສາທາລະນະສຸກ ທັງໃນ ລະດັບຊາດ ແລະ ລະດັບທ້ອງຖິ່ນ.

## <u>ພາກທີ IV</u>: <u>ກົງຈັກການຈັດຕັ້ງ</u>

9. ລັດຖະບານແຫ່ງ ສປປ ລາວ ຈະມີການປັບປຸງກົງຈັກການຈັດຕັ້ງຂະແໜງການເກັບກູ້ລະເບີດບໍ່ທັນແຕກຄືນໃໝ່ ດັ່ງຕໍ່ໄປນີ້ (ເບິ່ງເອກະສານຕິດຄັດ ແຜນວາດການຈັດຕັ້ງ1):
(ກ) ຄະນະກຳມະການຄຸ້ມຄອງແຫ່ງຊາດ ເພື່ອແກ້ໄຂບັນຫາລະເບີດບໍ່ທັນແຕກຕົກຄ້າງ (ຄຄຊ) ຈະຖືກ ສ້າງຕັ້ງຂຶ້ນ ແລະ ລາຍງານໂດຍກົງ ຕໍ່ສຳນັກງານນາຍົກລັດຖະມົນຕີ. ຄຄຊ ຈະປະກອບດ້ວຍຜູ້ຕາງໜ້າ ຂອງກະຊວງຕ່າງໆ ທີ່ກ່ຽວຂ້ອງ, ຄະນະກຳມະການ ແຜນການ ແລະ ການລົງທຶນ ກໍຄືຜູ້ສັງເກດການ ຈາກອົງການ ໃຫ້ທຶນ ຄຄຊ ຈະຮັບຜິດຊອບວຽກງານຕ່າງໆ ດັ່ງນີ້:
- ການທົບທວນແຕ່ລະໄລຍະ ແລະ ການປະຕິບັດແຜນການຍຸດທະສາດສະບັບນີ້.
- ການກຳນົດທິດທາງ ແລະ ເນື້ອໃນ ຂອງ ນະໂຍບາຍ.
- ການຢັ້ງຢືນຮອງຮັບໃບອະນຸຍາດ, ແລະ ຊີ້ນຳບັນດາ ອົງການ ປະຕິບັດງານເກັບກູ້ລະເບີດບໍ່ທັນແຕກ (ໃນການຮັບຮອງການເກັບກູ້ລະເບີດ, ການໂຄສະນາສຶກສາຊຸມຊົນ ແລະ ການຊ່ວຍເຫຼືອຜູ້ໄດ້ຮັບເຄາະຮ້າຍຈາກລະເບີດ).

- ການຄຸ້ມຄອງຖານຂໍ້ມູນ ແລະ ການຈັດບຸລິມະສິດ ກ່ຽວກັບ ການຈັດໜ້າວຽກຂອງບັນດາ ອົງການປະຕິບັດງານເກັບກູ້ລະເບີດທັງໝົດ.
- ການປະສານງານກິດຈະກຳຕ່າງໆ ກ່ຽວກັບ ລະເບີດບໍ່ທັນແຕກ ໃນທົ່ວປະເທດ,
- ການຢັ້ງຢືນຄຸນນະພາບຈາກພາຍນອກ ຂອງບັນດາກິດຈະການເກັບກູ້ລະເບີດທັງໝົດ,
- ການດຳເນີນການປະເມີນຜົນ ຂອງຜົນກະທົບທັງການເກັບກູ້ ແລະ ອື່ນໆ;

(ຂ) ທຸກໆອົງການປະຕິບັດງານ ເກັບກູ້ລະເບີດບໍ່ທັນແຕກ ຈະປະຕິບັດງານ ພາຍໃຕ້ການຊີ້ນຳຂອງ ຄຄຊ. ແຕລະອົງການປະຕິບັດງານ ເກັບກູ້ລະເບີດບໍ່ທັນແຕກ ຈະປະຕິບັດໜ້າທີ່ຂອງຕົນ ຢ່າງເປັນເອກະລາດ ແລະ ດ້ວຍຄວາມຮັບຊອບຢ່າງເຕັມສ່ວນ ຕໍ່ຜູ້ໃຫ້ທຶນ ແລະ ຕໍ່ ຄຄຊ. ໃນໄລຍະການປະຕິບັດງານ ບັນດາອົງການປະຕິບັດງານເກັບກູ້ລະເບີດ ຈາກສາກົນ ຈະຊຸກຍູ້ໃນການສ້າງຕັ້ງ ແລະ ປັບປຸງ ບັນດາອົງການ ປະຕິບັດງານເກັບກູ້ລະເບີດ ພາຍໃນປະເທດ ແລະ ຈະປະຕິບັດງານທຸກຢ່າງ ໃຫ້ຖືກຕ້ອງມາດຕະຖານ ແຫງ ຊາດ ຫຼັກການດຳເນີນງານ ທີ່ ຄຄຊ ວາງອອກ. ບັນດາອົງການປະຕິບັດງານ ເກັບກູ້ລະເບີດບໍ່ທັນແຕກ ຈະຖືກຈັດເຂົ້າເປັນ ອົງປະກອບຂອງ ໜວຍງານ ດັ່ງລຸ່ມນີ້:

i. ໜ່ວຍງານໂຄສະນາສຶກສາຊຸມຊົນ ດ້ານຄວາມສ່ຽງໄພອັນຕະລາຍ ຈາກ ລະເບີດບໍ່ທັນແຕກ ທັງຈາກພາຍໃນ ແລະ ສາກົນ ຕາມຄວາມເໝາະສົມ.

ii. ໜ່ວຍງານເກັບກູ້ລະເບີດ, ລວມມີໜ່ວຍງານ ເພື່ອມະນຸດສະທຳ, ທຸລະກິດ ຫຼື ການທະຫານ, ໜ່ວຍງານພາຍໃນປະເທດ ແລະ ສາກົນ ຕາມຄວາມເໝາະສົມ. ໂຄງການເກັບກູ້ລະເບີດ ແຫ່ງ ສປປ ລາວ (ຄກລ)ຈະສືບຕໍ່ເປັນ "ໜ່ວຍງານເກັບກູ້ລະເບີດເພື່ອມະນຸດສະທຳແຫ່ງຊາດ ທີ່ໄດ້ຮັບບູລິມະສິດພິເສດ.

iii ໜ່ວຍງານຊ່ວຍເຫຼືອຜູ້ຖືກເຄາະຮ້າຍ ຊຶ່ງອາດເປັນໜ່ວຍງານພາຍໃນ ຫຼື ສາກົນ ອີງຕາມຄວາມເໝາະສົມ;ແຕ່ລະໜ່ວຍງານ ຈະປະກອບມີກຸ່ມນັກວິຊາການຂອງຕົນ (Technical Working Group-TWG) ຮັບຜິດຊອບໃນການປະສານງານ ແລະ ການວາງແຜນກິດຈະກຳຕ່າງໆ ຂອງແຕ່ລະໜວຍງານ. ກອງປະຊຸມຂອງກຸ່ມນັກວິຊາການ ຈະຈັດຂຶ້ນເປັນປະຈຳ ພາຍໃຕ້ການເປັນປະທານຂອງ ຄຄຊ.

(ຄ) ອົງກອນຮ່ວມມືຫຼາຍຝ່າຍ (ອົງການສະຫະປະຊາຊາດ, ສະຫະພາບຢູໂຣບ, ສະຖາບັນການເງິນສາກົນ ແລະ ອົງກອນອື່ນໆ) ຈະຖືກເຊື້ອເຊີນໃຫ້ສະໜັບສະໜູນແຜນການດັ່ງກ່າວໃນທຸກດ້ານ ແລະ ຈະຮຽກຮ້ອງໃຫ້ຮ່ວມມືກັບລັດຖະບານ ໃນການ ສ້າງຕັ້ງ ຄະນະກຳມະການຄຸມຄອງແຫງຊາດ (ຄຄຊ).

(ງ) ບັນດາອົງການຜູ້ໃຫ້ທຶນ ຈະຖືກເຊື້ອເຊີນໃຫ້ເຂົ້າມາປະກອບສ່ວນ ໃນການອອກແບບ ແລະ ການປະຕິບັດແຜນງານ ແລະ ອາດຈະຖືກຮຽກຮ້ອງ ໃຫ້ເຂົ້າມາປະກອບສວ່ນເຂົ້າໃນກິດຈະກຳຂອງ ຄະນະກຳມະການຊີ້ນຳຄກລ ແລະ ໃນກິດຈະກຳຂອງ ຄຄຊ.

10. ກອງທຶນ ພິເສດ (Trust Fund ຂອງ UNDP) ທີ່ຖືກສ້າງຕັ້ງຂຶ້ນໃນປີ 1996 ຈະຖືກຮັກສາໄວ້ ແລະ ປັບປຸງ"ໃຫ້ດີຂຶ້ນ ແລະ ຈະເປັນພາຫະນະຕົ້ນຕໍ ໃນການສະໜັບສະໜູນ ການປະຕິບັດງານໃນທຸກດ້ານ ກ່ຽວກັບລະເບີດບໍ່ທັນແຕກ ຢູ່ໃນ ສປປ ລາວ. ຊັບພະຍາກອນຂອງກອງທຶນດັ່ງກ່າວ ອາດຖືກນຳໃຊ້ ເພື່ອສະໜັບສະໜູນການຈັດຕັ້ງປະຕິບັດໂຄງການ ໃນດ້ານຕ່າງໆ. ເພື່ອສ່ອງແສງເຖິງ ການປ່ຽນແປງດັ່ງກ່າວ ການທົບທວນຂໍ້ຕົກລົງກ່ຽວກັບກອງທຶນ ກອງທຶນ ພິເສດ ຄືນໃໝ່ ຈະຖືກເຊັນຮັບຮອງຈາກ ສປຊ ແລະ ລັດຖະບານ. ສປຊ ຈະສືບຕໍ່ເປັນຜູ້ຄຸ້ມຄອງກອງທຶນ ກອງທຶນ ໂດຍ ມີລັດຖະບານແຫ່ງ ສປປ ລາວ ເປັນຜູ້ປະຕິບັດພາຍໃຕ້ ລະ ບຽບການການປະຕິບັດງານແຫ່ງຊາດ (NEX) ອີງຕາມມາດຕະຖານດ້ານການເງິນ ທີ່ຮັບຮູ້ໃນ ລະດັບສາກົນ ແລະ ສ່ວນກິດຈະກຳຕ່າງໆ ທີ່ ໄດ້ຮັບການຊ່ວຍເຫຼືອຈາກກອງທຶນ ພິເສດ ກໍ່ຈະປະຕິບັດ ເຊັ່ນດຽວກັນ.

**<u>ພາກທີ V</u>: <u>ບຸລິມະສິດຕ່າງໆ</u>**

11. ການສຳຫຼວດຜົນກະທົບໃນປີ 1997 ໄດ້ພົບວ່າມີຈຳນວນທັງໝົດ 2,861 ໝູ່ບ້ານ (ເທົ່າກັບ 25% ຂອງຈຳນວນບ້ານທັງໝົດ ໃນ ສປປ ລາວ) ມີລະເບີດທີ່ຍັງບໍ່ທັນແຕກຝັງຢາຍຢູ່ ໃນຂອບເຂດທີ່ພັກອາໃສ ຂອງຊຸມຊົນ ຫຼືໃນບໍລິເວນໃກ້ຄຽງ ໃນນັ້ນ 2,636 ໝູ່ບ້ານ ແມ່ນຕັ້ງຢູ່ໃນ 9 ແຂວງ ບ່ອນທີ່ມີໂຄງການ ຄກລ ກຳລັງ ປະຕິບັດງານຢູ່. ເຖິງຢ່າງໃດກໍ່ດີ, ການສຳຫຼວດກໍ່ບໍ່ໄດ້ໃຫ້ລາຍລະອຽດ ກ່ຽວກັບ ຂະໜາດເນື້ອທີ່ ຂອງເຂດທີ່ມີລະເບີດບໍ່ທັນແຕກຝັງຢູ່ ທັງຢູ່ໃນລະດັບແຕ່ລະບ້ານ ຫຼື ໃນລະດັບລວມ. ດັ່ງນັ້ນ, ການປະເມີນຜົນທີ່ ທີ່ຂອບຂາງຊັດເຈນດ້ານເນື້ອທີ່ທີ່ຄາດວ່າມີລະເບີດຝັງຢູ່ ຈະຕ້ອງຈັດເປັນບຸລິມະສິດ, ຊຶ່ງຈະຕອງຜານຂະບວນການສຳຫຼວດທາງດ້ານວິຊາການອີກຕື່ມ.

12. ນອກນີ້, ຍັງມີຄວາມຈຳເປັນ ຈະຕ້ອງກຳນົດ ແລະ ຈັດລະດັບບຸລິມະສິດ ເຂດທີ່ມີລະເບີດບໍ່ທັນແຕກ. ເພາະສະນັ້ນ, ການສຳຫຼວດດ້ານວິຊາການ ຍັງຈະໄດ້ສຸມໃສ່ ການຈັດປະເພດນຳໃຊ້ທີ່ດິນ ໃນ 3 ປະເພດໃຫຍ່, ຊຶ່ງ ປະກອບດ້ວຍປະເພດຍ່ອຍຕ່າງໆໃນຕາຕະລາງ 1 ຂ້າງລຸ່ມ.

<u>ຕາຕະລາງ 1: ບຸລິມະສິດຕ່າງໆ ຂອງການເກັບກູ້ລະເບີດທີ່ຍັງບໍ່ທັນແຕກ</u>

| ບຸລິມະສິດ | ປະເພດຂອງວຽກ |
|---|---|
| ບຸລິມະສິດ I(ສູງ) | 1. ວຽກງານກະສິກຳ<br>2. ວຽກງານເກັບກູ້ເຄື່ອນທີ່<br>3. ສາທາລະນຸປະໂຫຍດຕ່າງໆ (ສຸກສາລາ, ຈຸດນ້ຳລິນແລະອື່ນໆ)<br>4. ອາຄານສະຖານທີ ສຳລັບການສຶກສາ |
| ບຸລິມະສິດ II(ປານກາງ) | 1. ທົ່ງຫຍ້າລ້ຽງສັດ ແລະ ເຂດປ່າໄມ້<br>2. ສາທາລະນະປະໂຫຍດ/ຊຸມຊົນ (ບັນດາສະຖານທີ່ ທາງ ສາດສະໜາ ແລະ ວັດທະນະທຳ, ຕະຫຼາດ, ສະຖານທີ່ພັກຜ່ອນ ແລະ ອື່ນໆ )<br>3. ສຳນັກງານຂອງ ອົງການລັດ |
| ບຸລິມະສິດ III(ຕ່ຳ) | 1. ວຽກງານໂຄງລ່າງພື້ນຖານ ສາທາລະນະ<br>2. ເຂດ "ສ້າງຜົນກຳໄລ" ຂອງຊຸມຊົນ<br>3. ສະຖານທີ່ທ່ອງທ່ຽວ<br>4. ສະຖານທີ ປະກອບການຄ້າຂາຍ/ທຸລະກິດເອກະຊົນ |

13. ສຳລັບຈຸດປະສົງຂອງແຜນການນີ້, ກິດຈະການເກັບກູ້ລະເບີດບໍ່ທັນແຕກເພື່ອມະນຸດສະທຳ ຈະເນັ້ນ ໜັກ ໃສ່ ບຸລິມະສິດ I ແລະ II, ໂດຍໃຫ້ຄວາມສຳຄັນເປັນພິເສດ ແກ່ວຽກງານໃນບຸລິມະສິດ I. ເຖິງທ້າຍປີ 2013, ວຽກງານຢູ່ໃນບຸລິມະສິດ I ທັງໝົດປະຕິບັດໃຫ້ສຳເລັດ (ໝາຍຄວາມວ່າ ສຳເລັດການເກັບກູ້ ຫຼື ສຳເລັດການ ປັກໝາຍເຂດໄວ້).

14. ວຽກງານໃນບຸລິມະສິດ III ທີ່ຈະຖືກປະຕິບັດໂດຍໜ່ວຍງານເກັບກູ້ ແບບໄລ່ລຽງທຸລະກິດ ເປັນຕົ້ນຕໍ. ສ່ວນໜ່ວຍງານເກັບກູ້ ຜ່ານໂຄງການຊ່ວຍເຫຼືອທາງດ້ານມະນຸດສະທຳ. ຖ້າວ່າມີ, ກໍຈະມີພຽງຈຳນວນໜ້ອຍ ທີ່ສຸດ.

## <u>ພາກທີ VI</u>: <u>ຂໍ້ສົມມຸດ ສຳລັບການວາງແຜນ</u>

15. ແຜນການສະບັບນີ້ ແມ່ນປະຕິບັດຕາມຂໍ້ມູນຂອງການສຳຫຼວດຜົນກະທົບ (1997) ກໍຄືຕາມເປົ້າໝາຍ ຂອງ ແຜນການລຶບລ້າງຄວາມທຸກຍາກ ແຫ່ງ ຊາດ (NPEP).

16. ປະຈຸບັນ "ຂໍ້ມູນແນ່ນອນຕົວຈິງ" ລະອຽດ ແລະ ທັນການ ກ່ຽວກັບ ທຸກປະເດັນລະເບີດບໍ່ທັນແຕກ ແມ່ນມີ ຢູ່ໃນຂັ້ນຈຳກັດ ເຊັ່ນວ່າ ຈຳນວນຂອງຜູ້ໄດ້ຮັບເຄາະຮ້າຍໃນທົ່ວປະເທດ, ການທົດລອງ ກຳມະ ວິທີ ແລະ ເຕັກໂນ ໂລຊີໃໝ່ໆ ຢູ່ໃນ ສປປ ລາວ, ຫຼື ກ່ຽວກັບຜົນກະທົບ ຂອງຂະບວນການວາງແຜນ ທີ່ລະອຽດກວ່າ. ສະນັ້ນ, ແຜນ ການນີ້ຈະຖືກທົບທວນໃໝ່ໃນແຕ່ລະປີ ເນື່ອງຈາກວ່າມີການເກັບກຳຂໍ້ມູນໃໝ່ໆ ເມື່ອໃດຫາກມີເຫດການໃໝ່ ເກີດຂຶ້ນ.

17. ແຜນການນີ້ ແມ່ນອີງໃສ່ການສືບຕໍ່ ສົ່ງ24 ທີມງານເກັບກູ້ລະເບີດຂອງ ຄກລ ໄປປະຕິບັດງານຢູ່ 9 ແຂວງ ດັ່ງທີ່ໄດ້ກ່າວ ໃນວັກທີ 5 ຂ້າງເທິງ. ຈຳນວນກຳລັງແຮງງານ ຂອງ ຄກລ ຈະສືບຕໍ່ຢູ່ໃນ ປະມານ 1100 ຄົນ ໃນນັ້ນ 1000 ຄົນ ຈະປະຈຳການຢູ່ຕ່າງແຂວງ ໂດຍມີໜ້າທີ່ ໂດຍກົງໃນການ ດຳເນີນງານ ແລະ ການສະໜັບສະໜູນ ການເກັບກູ້ລະເບີດໃນພາກສະໜາມ.

18. ມີການສົມມຸດຖານທີ່ວ່າ ຂະແໜງການເກັບກູ້ລະເບີດ ປະກອບດ້ວຍ ອົງກອນປະຕິບັດງານ ເກັບກູ້ແບບເອກະລາດຢ່າງເຕັມສ່ວນລວມທັງ ຄກລ, ພາກສ່ວນກອງທັບ (ຊຶ່ງເຄີຍມີສ່ວນຮ່ວມ ໃນຫຼາຍໆ ສັນຍາແບບໄລ່ລຽງ ທຸລະ ກິດ), ໜ່ວຍເກັບກູ້ຈາກສາກົນ, ທັງໃນດ້ານມະນຸດສະທຳ ແລະ ທຸລະກິດ. ເປົ້າໝາຍ ການເກັບກູ້ລະເບີດ ຂອງ ແຜນ ການນີ້ ຊຶ່ງມີປະມານ 180 ຕະລາງກິໂລແມັດ ແມ່ນອີງໃສ່ຜົນງານຂອງ ຄກລ ແຕ່ພາກສ່ວນດຽວ; ສ່ວນຜົນງານ ຂອງການເກັບກູ້ລະເບີດຈາກໜ່ວຍເກັບກູ້ອື່ນໆ ຈະບໍ່ນັບເຂົ້າໃນເປົ້າໝາຍໝາຍ ຂອງ ແຜນການນີ້.

19. ອີງໃສ່ການປະເມີນລ່ວງໜ້າ ການເພີ່ມຂຶ້ນຂອງຜົນງານໃນແຕ່ລະປີຂອງ ຄກລ ຈາກ 850 ເຮັກຕາ (2002) ໄປເຖິງຈຸດສູງສຸດ ເຖິງ 2000 ເຮັກຕາ ໃນປີ 2008, ຊຶ່ງຈະເປັນໄປໄດ້ກໍ່ຕໍ່ເມື່ອມີ:

ກ. ການປັບປຸງການຈັດບຸລິມະສິດ ແລະ ການຈັດສັນການນຳໃຊ້ຊັບພະຍາກອນ ໃສ່ໜ້າວຽກການເກັບກູ້ຢ່າງເໝາະສົມ

ຂ. ການຍົກລະດັບຄວາມສາມາດ ຂອງຂະບວນການຄຸ້ມຄອງພາຍໃນການຈັດຕັ້ງ (ເຊັ່ນ ການຂຶ້ນງົບປະມານ, ການຈັດຊື້, ການຊົມສິ່ງ ໆລໆ...) ໂດຍການນຳໃຊ້ລະບົບການຄຸ້ມຄອງຄຸນນະພາບ (2003).

ຄ. ການປັບປຸງວິທີການຈັດຊື້ອຸປະກອນ, ການບົວລະບັດຮັກສາອຸປະກອນ ແລະ ໂດຍສະເພາະ ວຽກງານສະໜັບສະໜູນ ເພື່ອຮັບປະກັນການນຳໃຊ້ຊັບພະຍາກອນ ຢ່າງມີປະສິດທິຜົນ.

ງ. ການນຳໃຊ້ຢ່າງແຜ່ຫຼາຍກຳມະວິທີ ແລະ ລະບຽບການເກັບກູ້ລະເບີດ (ເຊັ່ນ ການເກັບກູ້ລະເບີດ ໂດຍປະຊາຊົນ ມີສ່ວນຮ່ວມ) ເພື່ອນຳໃຊ້ພະນັກງານ ທີ່ໄດ້ຮັບການຝຶກອົບຮົມດ້ານ ວິຊາການ ໃຫ້ມີປະສິດທິຜົນສູງສຸດ;

ຈ. ການຝຶກອົບຮົມ/ຍົກລະດັບພະນັກງານຂອງອົງການຢ່າງຕໍ່ເນື່ອງ ຜ່ານການນຳໃຊ້ຊ່ຽວຊານສາກົນໄລຍະສັ້ນ ແລະ ໄລຍະຍາວ, ໆລໆ.

20. ການວາງແຜນລະອຽດ ແລະ ການຈັດສັນຊັບພະຍາກອນ ໃສ່ໜ້າວຽກການເກັບກູ້ລະເບີດບໍ່ທັນແຕກຈະໄດ້ປະຕິບັດ ໃຫ້ສຳເລັດໃນລະດູຝົນ ຊຶ່ງອາດກວມເອົາວຽກງານດັ່ງຕໍ່ໄປນີ້:

(ກ) "ວຽກງານເຂດແຫ້ງ" ຈະໄດ້ແນໃສ່ລົງມືປະຕິບັດໃນລະດູຝົນ ຊຶ່ງເປັນສ່ວນໜຶ່ງ ຂອງຂະບວນການວາງແຜນດິນຂອງແຂວງ;

(ຂ) ສ່ວນໜຶ່ງຂອງຊັບພະຍາກອນ ເພື່ອເກັບກູ້ລະເບີດຈະໄດ້ຖືກແບ່ງໄປໃຫ້ໜ່ວຍເກັບກູ້ເຄື່ອນທີ່.

(ຄ) ຄວາມສາມາດໃນການສຳຫຼວດດ້ານວິຊາການ ຈະເພີ່ມຂຶ້ນດ້ວຍການຮັບໂຮມເອົາຊັບພະຍາກອນທີ່ບໍ່ໄດ້ຖືກນຳໃຊ້ເທົ່າທີ່ຄວນ ເຂົ້າໃສເຂດເກັບກູ.

21. ຄ່າໃຊ້ຈ່າຍ ສຳລັບການປ່ຽນຖ່າຍອຸປະກອນ ໄດ້ຈັດໄວ້ຢູ່ໃນລາຍການມູນຄ່າປະເມີນການໃຊ້ ຈ່າຍທີ່ລະບຸໄວ້ໃນພາກ VIII ຂ້າງລຸ່ມນີ້.

22. ຜະລິດຕະພາບຂອງນັກເກັບກູ້ລະເບີດຂອງ ຄກລ ຈະບັນລຸເຖິງຈຸດສູງສຸດ 235 ຕະລາງແມັດ ຕໍ່ມື້ ຕໍ່ຄົນໃນປີ 2005 ຈາກຕົວເລກສະເລັ່ຍທົ່ວປະເທດ ໃນປະຈຸບັນ ຢູ່ໃນລະດັບ 133 ຕະລາງແມັດ/ມື້/ຄົນ.

23. ຄກລ ຈະນຳໃຊ້ ກຳມະວິທີ ແລະ ເຕັກໂນໂລຊີ ການເກັບກູ້ລະເບີດແບບໃໝ່ ເປັນຂັ້ນໆໄປ (ເຊັ່ນວ່າການເກັບກູ້ລະເບີດ ໂດຍມີການຊ່ວຍເຫຼືອຈາກຊາວບ້ານ, ການໃຊ້ໝາ ເພື່ອຊອກຫາລູກລະເບີດ, ເຕັກໂນໂລຊີບາຍໂອແຊນເຊີ ໆລໆ...) ການເພີ່ມຂຶ້ນຂອງຜົນງານປະຈຳປີ ຂອງ ຄກລ ໄດ້ມາຈາກການປັບປຸງກຳມະວິທີເຮັດວຽກແບບໃໝ່ແຕ່ບໍ່ແມ່ນການນຳໃຊ້ເຕັກໂນໂລຊີໃໝ່. ດັ່ງນັ້ນຈຶ່ງ ອາດຈະພິຈາລະນາຕາມຄວາມເໝາະສົມ ໃນວາລະການທົບທວນແຜນການ ໃນອະນາຄົດ.

24. ທຸກໆອົງການ ປະຕິບັດງານ ເກັບກູ້ລະເບີດ ຈະເຮັດວຽກຂອງຕົນເອງ ຢ່າງເປັນເອກະລາດ ແລະ ຈະລາຍງານ ໂດຍກົງ ຕໍ່ ຄຄຊ.

25. ຄກລ ຈະສືບຕໍ່ການປະຕິບັດງານພາຍໃຕ້ການຊີ້ນຳ ຂອງກະຊວງແຮງງານ ແລະ ສະຫວັດດີການສັງຄົມ.

26. ໃນທ້າຍປີ 2003 ການໂຄສະນາສຶກສາຊຸມຊົນ ດ້ານຄວາມສ່ຽງໄພ ອັນຕະລາຍຈາກລະເບີດທີ່ບໍ່ທັນແຕກຈະ ດຳເນີນພາຍໃຕ້ການຊີ້ນຳຂອງ ກະຊວງ ຖະແຫຼງຂ່າວ ແລະ ວັດທະນະທຳ. ບັນດາກິດຈະກຳ ໂຄສະນາ ສຶກສາຊຸມຊົນດັ່ງກ່າວ ຈະສືບຕໍ່ໄດ້ຮັບການສະໜັບສະໜູນທຶນ ໂດຍຜ່ານກອງທຶນ ພິເສດ.

27. ການສ້າງຕັ້ງໂຄງການຊ່ວຍເຫຼືອຜູ້ປະສົບເຄາະຮ້າຍແຫ່ງຊາດ ຈະຖືກດຳເນີນ ພາຍໃຕ້ການຊີ້ນຳ ຂອງກະຊວງສາທາລະນະສຸກ. ສປຊ, ອົງການຊ່ວຍເຫຼືອອື່ນໆ ແລະ ກອງທຶນພິເສດ ຈະເປັນຜູ້ ສະໜັບສະໜູນ ໂຄງການນີ້.

28. ພາລະບົດບາດຂອງ ອົງການປະຕິບັດງານ ຄກລ ກໍ່ຈະຖືກປ່ຽນແປງ ເພື່ອສ່ອງແສງເຖິງໜ້າທີ່ຮັບຜິດຊອບໃໝ່ ໃນຖານະທີ່ ເປັນເກັບກູ້ລະເບີດ ຢ່າງແທ້ຈິງ. ກະຊວງ ແຮງງານ ແລະ ສະຫວັດດີການສັງຄົມ, ໂດຍຜ່ານການ ປຶກສາຫາລືກັບບັນດາອົງການຜູ້ໃຫ້ທຶນ ຈະກຳນົດລະບຽບການ ເພື່ອຊີ້ນຳການປະຕິບັດງານຂອງ ຄກລ.

29. ສູນຝຶກອົບຮົມທີ່ດຳເນີນງານໂດຍ ຄກລ ໃນປະຈຸບັນ ຈະສືບຕໍ່ຮັກສາໄວ້ ແລະ ຈະໃຊ້ເປັນສະ ຖານທີ່ສຳລັບການຝຶກອົບຮົມແຫ່ງຊາດ ຕາມຄວາມຕ້ອງການທຸກຢ່າງ ທີ່ກ່ຽວພັນກັບກິດຈະການເກັບກູ້ລະເບີດບໍ່ທັນແຕກ. ສະນັ້ນ ຄກລ ຈະຈັດຕັ້ງການຝຶກອົບຮົມ ໃຫ້ນັກວິຊາການເກັບກູ້ລະເບີດ ແລະ ພະນັກງານ ບໍລິຫານອື່ນໆຂອງບັນດາ ອົງກອນປະຕິບັດງານເກັບກູ້ລະເບີດແບບເອກະລາດ ບົນພື້ນຖານການໄລ່ລຽງເສດຖະກິດ.

30. ໃນປີ 2003, ຄກລ ຈະສຳເລັດການທົບທວນການຄຸ້ມຄອງພາຍໃນ ຢ່າງຄົບຊຸດ ເພື່ອປັບປຸງ ໂຄງຮ່າງ ແລະ ການບໍລິຫານຄຸ້ມຄອງໃຫ້ສົມເຫດສົມຜົນ. ການທົບທວນ ຈະກວມເອົາການບັນດາຂໍ້ສະເໜີແນະດ້ານຄວາມຕ້ອງການຕົວຈິງ ແລະ ໄລຍະເວລາທີ່ຄາດຫວັງ ສຳລັບການຊ່ວຍເຫຼືອດ້ານວິຊາການທີ່ຈຳເປັນ.

31. ເພື່ອຈຸດປະສົງຂອງການວາງແຜນ, ຄວາມສາມາດໃນການເກັບກູ້ຂອງ ຄກລ ຈະຮັກສາໄວ້ຢູ່ໃນລະດັບຂອງເດືອນ ມິຖຸນາ 2002, ເຊັ່ນ:

| <u>ແຂວງ</u> | | <u>ແຂວງ</u> | |
|---|---|---|---|
| ສະຫວັນນະເຂດ: | 4 ທີມ | ຈຳປາສັກ: | 2 ທີມ |
| ຊຽງຂວາງ: | 4 ທີມ | ຫົວພັນ: | 3 ທີມ |
| ສາລະວັນ: | 3 ທີມ | ອັດຕະປື: | 2 ທີມ |
| ຄຳມ່ວນ: | 2 ທີມ | ຫຼວງພະບາງ: | 2 ທີມ |
| ເຊກອງ: | 2 ທີມ | | |

ການຈັດແບ່ງຊັບພະຍາກອນຂອງໂຄງການເກັບກູ້ລະເບີດຢູ່ລາວ ສຳລັບແຕ່ລະແຂວງ ອາດຈະຖືກດັດແກ້ ໃຫ້ສອດຄ່ອງກັບຜົນຂອງການສຳຫຼວດທາງດ້ານວິຊາການ ເພື່ອຮັບປະກັນການຈັດແບ່ງຊັບພະຍາກອນ ສຳລັບ ການເກັບກູ້ ໃຫ້ໄດ້ຜົນສູງສຸດ.

32. ຄຄຊ ຈະຮັບຜິດຊອບ ໃນການຈັດຕັ້ງປະຕິບັດແຜນການນີ້ ໃນການຈັດບຸລິມະສິດ ຂອງ ໜ້າວຽກການເກັບກູ້ ແລະ ການມອບໜາວຽກທີ່ກ່ຽວຂ້ອງ ໃຫ້ອົງການປະຕິບັດງານເກັບກູ້ຕ່າງໆ.

33. ອົງການປະຕິບັດງານເກັບກູ້ອື່ນໆ ອາດເສີມຂະຫຍາຍຄວາມສາມາດ ໃນການເກັບກູ້ຂອງຕົນຫຼາຍກວ່າຈຳນວນ ຫຼື ຄວາມສາມາດຂອງ ຄກລ ໃນປັດຈຸບັນ. ໃນແງ່ຂອງສະຖິຕິທາງດ້ານການເກັບກູ້, ຜົນງານຂອງໜ່ວຍງານ ເກັບກູ້ອື່ນໆ ຈະເພີ່ມໃສ່ເປົ້າໝາຍທີ່ໄດ້ກຳນົດໄວ້ ໃນແຜນການນີ້.

<u>ພາກທີ VII</u>: <u>ຄາດຄະເນຜົນໄດ້ຮັບ</u>

34. ໃນຈຳນວນທັງໝົດ 2,636 ໝູ່ບ້ານ ໄດ້ພົບວ່າຍັງມີລະເບີດທີ່ບໍ່ທັນແຕກຢັ່ງຢາຍຢູ່ ອີງຕາມ ການສຳຫຼວດ ຜົນກະທົບ (1997) ໃນ 9 ແຂວງ. ກ່ອນອື່ນໝົດ ຈະເນັ້ນໜັກໃສ່ການສຳຫຼວດທາງດ້ານວິຊາການ ຢູ່ໃນບັນດາ ໝູ່ບ້ານດັ່ງກ່າວ ເພື່ອໃຫ້ເຂົ້າໃຈແຈ້ງກວ່າເກົ່າເພື່ອຈະຕອບສະໜອງ. ຄວາມຕ້ອງການອັນຮີບດ່ວນ ຂອງແຕ່ລະຊຸມຊົນ/ເມືອງ/ແຂວງ ແລະ ການຈັດວາງ ຊັບພະຍາກອນ ທີ່ຕ້ອງການເພື່ອແກ້ໄຂບັນຫາທີ່ພົ້ນ ເດັ່ນຕ່າງໆ.

35. ລະບຽບຂັ້ນຕອນການສຳຫຼວດດ້ານວິຊາການ ຈະໄດ້ຖືກປ່ຽນແປງ ເພື່ອຈັດທຸກໆ ໜ້າວຽກການເກັບກູ້ອີງຕາມແຜນການຈັດບຸລິມະສິດຢູ່ໃນຕາຕະລາງຂ້າງເທິງ. ຂໍ້ມູນການສຳຫຼວດດ້ານວິຊາການທັງໝົດ ຈະໄດ້ປ້ອນເຂົ້າໃນຖານຂໍ້ມູນແຫ່ງຊາດ ຢູ່ໃນລະບົບບໍລິຫານ ຂໍ້ມູນດ້ານກິດຈະການລະເບີດບໍ່ທັນແຕກ/ມິນ (IMSMA) ທີ່ຈະເປັນເຄື່ອງມືພື້ນຖານ ສຳລັບການຈັດບຸລິມະສິດໜ້າວຽກງານ ແລະ ການ ບັນທຶກ ຄວາມຄືບໜ້າ ໂດຍອີງໃສ່ແຜນການປະຈຸບັນ.

36. ເພື່ອເຮັດໃຫ້ການສຳຫຼວດທາງວິຊາການສຳເລັດໄດ້ໃນທ້າຍເດືອນ ມິຖຸນາ 2005, ໜ່ວຍງານ ສຳຫຼວດ ໃນແຕ່ລະແຂວງ ຈະຖືກຈັດຕັ້ງຂຶ້ນ ໂດຍການຖອນເອົາຈາກບັນດາໜ່ວຍງານເກັບກູ້ ທີ່ມີຢູ່ ໃນປະຈຸບັນ ຕາມ ຄວາມຈຳເປັນ ດັ່ງຕໍ່ລົງໄປນີ້:

| ແຂວງ | | ແຂວງ | |
|---|---|---|---|
| ສະຫວັນນະເຂດ: | 8 ທີມ | ຈຳປາສັກ: | 4 ທີມ |
| ຊຽງຂວາງ: | 8 ທີມ | ຫົວພັນ: | 6 ທີມ |
| ສາລະວັນ: | 6 ທີມ | ອັດຕະປື: | 4 ທີມ |
| ຄຳມ່ວນ: | 4 ທີມ | ຫຼວງພະບາງ: | 4 ທີມ |
| ເຊກອງ: | 4 ທີມ | | |

ດ້ວຍການຖອນເອົາຊັບພະຍາກອນຈາກ ແຕ່ລະທີມງານເກັບກູ້ທີ່ກ່ຽວຂ້ອງ, ບັນດາແຂວງ ຈະເພີ້ມ ໜ່ວຍງານ ໃນການສຳຫຼວດດ້ານວິຊາການຕື່ມ ໃນລະດູຝົນ ຈົນກວ່າວຽກງານສຳຫຼວດ ຈະສຳເລັດ.

37. ເມື່ອພິຈາລະນາເບິ່ງສົມມຸດຖານທີ່ໄດ້ກ່າວມາຂ້າງເທິງນັ້ນ ເຖິງແມ່ນວ່າ ຍັງບໍ່ໄດ້ຄິດໄລ່ເອົາ ບັນ ດາຂີດຄວາມສາມາດ ທີ່ອາດຈະເພີ້ມຂຶ້ນຂອງ ໜ່ວຍງານເກັບກູ້ອື່ນໆ ກໍ່ຕາມ, ໂຄງການເກັບກູ້ລະເບີດກໍຍັງຈະບັນ ລຸຜົນດັ່ງທີ່ໃນຕາຕະລາງທີ 2 ລຸ່ມນີ້.

**ຕາຕະລາຄ 2: ຄາດໝາຍຜົນໄດ້ຮັບປະຈຳປີ ຂອງໂຄງການເກັບກູ້ລະເບີດ**

| ປີ | ກິດຈະກຳ | ວັນທີ ສຳເລັດ | ໝາຍເຫດ |
|---|---|---|---|
| 2003 | 1. ສຶກສາຄວາມເປັນໄປໄດ້ຂອງຖານຂໍ້ມູນຜູ້ປະສົບເຄາະຮ້າຍແຫ່ງຊາດ | 30 ກັນຍາ 2003 | ອົງການສາກົນເພື່ອຄົນພິການ, ກະຊວງສາທາລະນະສຸກ |
| | 2. ທົບທວນຄືນການຄຸ້ມຄອງຂອງ ຄກລ | 30 ກັນຍາ 2003 | |
| | 3. ລິເລີ່ມການປະເມີນຜົນກະທົບຫຼັງການເກັບກູ້ (PCIA) | 01 ຕຸລາ 2003 | ໂດຍ UNDP, ຫຼັງຈາກນັ້ນຈະແມ່ນ ຄຄຊ ຈະເປັນຜູ້ສືບຕໍ່ປະຕິບັດ |
| | 4. ເພີ່ມຄວາມສາມາດການສຳຫຼວດວິຊາການ | 31 ທັນວາ 2006 | ຈົນກວ່າຈະເຖິງ ປີ 2006 |
| | 5. ຈັດຕັ້ງອົງການ ຄຄຊ | 31 ທັນວາ 2003 | ດຳລັດ ເລກທີ່ 33/ນຍ 2004 |
| | 6. ຕິດຕັ້ງ IMSMA ແລະນຳໃຊ້ | 31 ທັນວາ 2003 | Version 2 ທີ່ໄດ້ນຳໃຊ້. |
| | 7. ມອບຄວາມສາມາດໂຄສະນາສຶກສາຊຸມຊົນໃຫ້ຄູ່ຮ່ວມຈັດຕັ້ງປະຕິບັດອື່ນໆ | 31 ທັນວາ 2003 | ກະຊວງ ຖະແຫຼງຂ່າວ ແລະ ວັດທະນະທຳ, ກະຊວງສຶກສາທິການ,ສະຫະພັນແມ່ຍິງ,ສູນກາງຊາວໜຸ່ມ ແລະ ພາກສ່ວນອື່ນໆ |
| | 8. ສຳຫຼວດທາງວິຊາການໃນ 500 ໝູ່ບ້ານ | 31 ທັນວາ 2003 | |
| | 9. ສຳເລັດການເກັບກູ້ໃນເນື້ອທີ່ 942 ເຮັກຕາ ໂດຍ ຄກລ | 31 ທັນວາ 2003 | ຕາມແຜນການຂອງ ຄກລ ທີ່ໄດ້ຮັບການອະນຸມັດແລ້ວ |
| | 10. ໜ່ວຍໂຄສະນາສຶກສາຊຸມຊົນຢ້ຽມຢາມ 60 ໝູ່ບ້ານ "ໃໝ່" | 31 ທັນວາ 2003 | ໜ່ວຍງານສຶກສາຊຸມຊົນ ຂອງ ຄກລ |
| | 11. ແຜນການປະຕິບັດງານຊ່ວຍເຫຼືອແກ່ຜູ້ປະສົບເຄາະຮ້າຍ | 31 ທັນວາ 2003 | ກະຊວງສາທາ, ບັນໜ່ວຍງານເກັບກູ້ |
| 2004 | 1. ສ້າງຫຼັກສູດໃໝ່ຂອງການໂຄສະນາສຶກສາຊຸມຊົນສຳເລັດ | 30 ມິຖຸນາ 2004 | ພາຍໃຕ້ການຊີ້ນຳ ຂອງ ກະຊວງ ຖະແຫລງ ຂ່າວ ແລະ ວັດທະນະທຳ ແລະ ກະຊວງສຶກ ສາທິການ. |
| | 2. ທົບທວນແຜນຍຸດທະສາດ | | |
| | 3. ໜ່ວຍໂຄສະນາສຶກສາຊຸມຊົນເຂົ້າເຖິງ 300 ໝູ່ບ້ານ "ໃໝ່" | 31 ສິງຫາ 2004 | |
| | 4. ສຳຫຼວດດ້ານວິຊາການໃນ1300 ໝູ່ບ້ານ | 31 ທັນວາ 2004 | |
| | 5. ສຳເລັດການເກັບກູ້ໃນເນື້ອທີ່ 1300 ເຮັກຕາ ໂດຍ UXO Lao | 31 ທັນວາ 2004 | ຜົນຮັບເພີ່ມຂຶ້ນຍ້ອນການນຳໃຊ້ການຄຸ້ມຄອງຄຸນນະພາບ |

| | | | |
|---|---|---|---|
| | | | ແລະ ກຳມະວິທີແບບໃໝ່ |
| 2005 | 1. ສຳຫຼວດດ້ານວິຊາການໃນ 840 ໝູ່ບ້ານ<br>2. ທົບທວນຄືນແຜນຍຸດທະສາດ<br>3. ໜ່ວຍໂຄສະນາສຶກສາຊຸມຊົນເຂົ້າເຖິງ 450 ໝູ່ບ້ານ "ໃໝ່"<br>4. ສຳເລັດການເກັບກູ້ໃນເນື້ອທີ່ 1500 ເຮັກຕາ ໂດຍ ຄກລ | 30 ມິຖຸນາ 2005<br>31 ສິງຫາ 2005<br>31 ທັນວາ 2005<br>31 ທັນວາ 2005 | ສຳເລັດ ທຸກວຽກງານສຳຫຼວດວິຊາການ |
| 2006 | 1. ທົບທວນແຜນຍຸດທະສາດ<br>2. ໜ່ວຍງານໂຄສະນາສຶກສາຊຸມຊົນເຂົ້າຮອດ 450 ໝູ່ບ້ານ "ໃໝ່"<br>3. ສຳເລັດການເກັບກູ້ໃນເນື້ອທີ່ 1800 ເຮັກຕາ ໂດຍ ຄກລ | 31 ສິງຫາ 2006<br>31 ທັນວາ 2006<br>31 ທັນວາ 2006 | |
| 2007 | 1. ທົບທວນແຜນຍຸດທະສາດ<br>2. ໜ່ວຍງານໂຄສະນາສຶກສາຊຸມຊົນເຂົ້າຮອດ 450 ໝູ່ບ້ານ "ໃໝ່"<br>3. ສຳເລັດການເກັບກູ້ໃນເນື້ອທີ່ 1800 ເຮັກຕາ ໂດຍ ຄກລ | 31 ສິງຫາ 2007<br>31 ທັນວາ 2007<br>31 ທັນວາ 2007 | |
| 2008 | 1. ທົບທວນແຜນຍຸດທະສາດ<br>2. ໜ່ວຍງານໂຄສະນາສຶກສາຊຸມຊົນເຂົ້າຮອດ 450 ໝູ່ບ້ານ "ໃໝ່"<br>3. ສຳເລັດການເກັບກູ້ໃນເນື້ອທີ່ 2000 ເຮັກຕາ ໂດຍ ຄກລ | 31 ສິງຫາ 2008<br>31 ທັນວາ 2008<br>31 ທັນວາ 2008 | |
| 2009 | 1. ທົບທວນແຜນຍຸດທະສາດ<br>2. ໜ່ວຍງານໂຄສະນາສຶກສາຊຸມຊົນເຂົ້າຮອດ 450 ໝູ່ບ້ານ "ໃໝ່"<br>3. ສຳເລັດການເກັບກູ້ໃນເນື້ອທີ່ 2000 ເຮັກຕາ ໂດຍ ຄກລ | 31 ສິງຫາ 2009<br>31 ທັນວາ 2009<br>31 ທັນວາ 2009 | ທຸກໆ ໝູ່ບ້ານທີ່ໄດ້ຮັບຜົນກະທົບຈາກ ຄກລ ໄດ້ຮັບການຢ້ຽມ ຢາມຈາກໜ່ວຍໂຄສະນາສຶກສາຊຸມຊົນ ຢ່າງຕ່ຳສຸດໜຶ່ງຄັ້ງ |
| 2010<br><br>2011 | 1. ທົບທວນແຜນຍຸດທະສາດ<br>2. ສຳເລັດການເກັບກູ້ໃນເນື້ອທີ່ 2000 ເຮັກຕາ ໂດຍ ຄກລ<br>1. ທົບທວນແຜນຍຸດທະສາດ<br>2. ສຳເລັດການເກັບກູ້ໃນເນື້ອທີ່ 2000 ເຮັກຕາ ໂດຍ ຄກລ | 31 ສິງຫາ 2010<br>31 ທັນວາ 2010<br>31 ສິງຫາ 2011<br>31 ທັນວາ 2011 | |
| 2012 | 1. ສ້າງແຜນຍຸດທະສາດໃໝ່ | 31 ມິຖຸນາ 2012 | ອີງຕາມຄວາມຮຽກຮ້ອງຕ້ອງການ |
| <br><br>2013 | 2. ສຳເລັດການເກັບກູ້ໃນເນື້ອທີ່ 2000 ເຮັກຕາ ໂດຍ ຄກລ<br>1. ສຳເລັດການເກັບກູ້ໃນເນື້ອທີ່ 2000 ເຮັກຕາ ໂດຍ ຄກລ | 31 ທັນວາ 2012<br>31 ທັນວາ 2013 | |

## ພາກທີ VIII: ຄວາມຮຽກຮ້ອງຕ້ອງການຂອງໂຄງການ.

38. ໃນປີ 2003, ງົບປະມານຂອງ ຄກລ ຕາມການເຫັນດີຂອງຄະນະກຳມະການການຊີ້ນຳ ຄກລ ແຫ່ງຊາດ ໃນ ເດືອນ ກຸມພາ 2003 ມີ $ 4.2 ລ້ານ ດອນລາສະຫະລັດ. ຄາດວ່າໃນຊຸມປີຕໍ່ໜ້າ ແລະ ໂດຍການສ້າງຕັ້ງ ຄຄຊ ແລະ ການສ້າງຕັ້ງແຜນການໃໝ່ ເພື່ອຊ່ວຍເຫຼືອຜູ້ປະສົບເຄາະຮ້າຍ, ຄວາມຕ້ອງການຂອງໂຄງການເກັບກູ້ລະເບີດ ຕາມທີ່ລັດຖະບານ ສປປ ລາວ ຈັດຕັ້ງປະຕິບັດຈະສືບຕໍ່ຢູ່ຄືງທີ.

39. ຂໍ້ສົມມຸດຖານ ສຳລັບການວາງແຜນຄວາມຮຽກຮ້ອງຕ້ອງການຂອງໂຄງການ ມີດັ່ງນີ້:

(ກ) ຄ່າໃຊ້ຈ່າຍ ສຳລັບການປ່ຽນຖ່າຍອຸປະກອນຈຳນວນ $ 400,000 ດອນລາ ເພື່ອປ່ຽນ ເຄື່ອງກວດລະເບີດ ທີ່ບໍ່ສາມາດສ້ອມແປງໄດ້ ແລະ ອຸປະກອນອື່ນໆ ຂອງ ຄກລ ແມ່ນໄດ້ຂື້ນງົບປະມານ ແຕ່ລະປີ.

(ຂ) ຄ່າໃຊ້ຈ່າຍພົວພັນກັບການນຳໃຊ້ເຕັກໂນໂລຊີໃໝ່ ບໍ່ໄດ້ນັບເຂົ້າໃນການຄາດຄະເນຕໍ່ໄປນີ້ (ຕົວຢ່າງ, ຄ່າໃຊ້ຈ່າຍ ສຳລັບການກະກຽມ ແລະ ນຳໃຊ້ ໝາຊອກລູກລະເບີດ ອາດຕ້ອງການ ງົບປະມານເພີ່ມຕື່ມ $ 600,000 ດອນລາສະຫະລັດ ຕໍ່ປີ).

(ຄ) ການຝຶກອົບຮົມການສຳຫຼວດດ້ານວິຊາການ ຕ້ອງການງົບປະມານປະມານ $ 20,000 ດອນລາສະຫະລັດ ໃນປີ 2003/2004;

(ຄ) ໃນອະນາຄົດອັນໃກ້ນີ້, ລັດຖະບານ ສປປ ລາວ ຈະສືບຕໍ່ປະກອບສ່ວນດ້ານງົບປະມານເງິນສົດ ເທົ່າກັບ $ 50,000 ດອນລາ ໃຫ້ແກ່ ຄກລ.

40. ຄ່າໃຊ້ຈ່າຍ ໃນບັ້ນເລີ້ມຕົ້ນ (ອຸປະກອນ, ຈັດສັນຫ້ອງການ ໆລໆ) ຂອງ ຄຄຊ ຈະຕົກຢູ່ປະມານ $ 215,000 (ສອງແສນສິບຫ້າພັນ) ດອນລາສະຫະລັດ. ຄ່າໃຊ້ຈ່າຍ ດ້ານປະຕິບັດງານໃນແຕ່ລະປີຂອງ ຄຄຊ ຊຶ່ງມີພະນັກງານສູງສຸດ ຈຳນວນ 25 ຄົນ ຄາດວ່າຈະຢູ່ໃນ ລະຫວ່າງ $175,000 (ໜຶ່ງແສນເຈັດສິບຫ້າພັນ) ດອນລາສະຫະລັດ ບໍ່ກວມເອົາຄ່າໃຊ້ຈ່າຍພົວພັນກັບ ການນຳໃຊ້ ທີ່ປຶກສາວິຊາການ ເພື່ອສະໜັບ ສະໜູນ ແກ່ການພັດທະນາ ຄຄຊ (ປະມານ 3,5 ເທື່ອຄົນ ປະຈຳການເຕັມເວລາ ຢ່າງໜ້ອຍ ໃນໄລຍະ 3 ປີ ເບື້ອງຕົ້ນ).

41. ຄ່າໃຊ້ຈ່າຍປະຈຳປີ ສຳລັບການປະຕິບັດງານຂອງ ຄກລ ຄາດວ່າຈະຢູ່ໃນລະດັບ $ 3,5 ລ້ານ (ສາມລ້ານຫ້າແສນ) ດອນລາສະຫະລັດ.

42. ຄ່າໃຊ້ຈ່າຍປະຈຳປີ ສຳລັບກິດຈະກຳໂຄສະນາສຶກສາຊຸມຊົນ ກ່ຽວກັບ ຄວາມສ່ຽງໄພ ອັນຕະລາຍ ຂອງລະເບີດທີ່ບໍ່ ທັນແຕກທົ່ວປະເທດ ຄາດວ່າຈະຢູ່ໃນລະດັບ $ 750,000 (ເຈັດແສນ) ດອນລາສະຫະລັດ.

43. ຄ່າໃຊ້ຈ່າຍປະຈຳປີ ສຳລັບກິດຈະກຳ ຊ່ວຍເຫຼືອຜູ້ປະສົບເຄາະຮ້າຍໃນທົ່ວປະເທດ ຄາດວ່າຈະຢູ່ໃນລະດັບ $ 700,000 ດອນລາ.

44. ສະຫຼຸບແລ້ວ ຄ່າໃຊ້ຈ່າຍປະຈຳປີ ສຳລັບປະຕິບັດໂຄງການ ຂອງ ຄກລ ທົ່ວປະເທດ ຄາດວ່າຈະມີຕົວເລກດັ່ງຕໍ່ໄປນີ້:

| | ກິດຈະກຳ | ຄ່າໃຊ້ຈ່າຍປະຈຳປີ |
|---|---|---|
| 01. | ຄູຄຊ(ບວກກັບ ຄ່າໃຊ້ຈ່າຍໃນບັ້ນເລີ່ມຕົ້ນພຽງຄັ້ງດຽວປະມານ$ 215,000) | US$ 175,000 |
| 02. | ການປະຕິບັດງານ ເກັບກູ້ຂອງ ຄກລ | US$ 3,500,000 |
| 03. | ການໂຄສະນາສຶກສາຊຸມຊົນ ກ່ຽວກັບອັນຕະລາຍ ຂອງ ລະເບີດບໍ່ທັນແຕກ/ມີນ | US$ 750,000 |
| 04. | ການຊ່ວຍເຫຼືອຜູ້ປະສົບເຄາະຮ້າຍ ລະເບີດບໍ່ທັນແຕກ/ມີນ | US$ 700,000 |
| | ລວມທັງໝົດ | US$ 5,125,000 |

45. ນອກຈາກການປະກອບສ່ວນຂອງງົບປະມານລັດຕໍ່ໂຄງການ, ຊຶ່ງອາດຈະເພີ່ມຂຶ້ນ ໃນເມື່ອລາຍຮັບຂອງລັດຫາກເພີ່ມຂຶ້ນ. ລັດຖະບານ ສປປ ລາວ ຈະສືບຕໍ່ຊອກຫາການສະໜັບສະໜູນ ຈາກວົງສາຄະນາຍາດສາ

ກົນໃນການປະຕິບັດ ແລະ ຊ່ວຍເຫຼືອດ້ານທຶນຮອນເພື່ອຈັດຕັ້ງປະຕິບັດແຜນການຍຸດທະສາດ.

## ພາກທີ IX: ວ່າດ້ວຍການຈັດຕັ້ງປະຕິບັດ ແຜນຍຸດທະສາດ ແຫ່ງຊາດ.

46. ຄະນະກຳມະການຊີ້ນຳ ໂຄງການເກັບກູ້ລະເບີດແຫ່ງ ສປປ ລາວ ເຜີຍແຜ່ແຜນຍຸດທະສາດ ສຳລັບການແກ້ໄຂບັນຫາລະເບີດຕົກຄ້າງຢູ່ໃນ ສປປ ລາວ ຢ່າງເປັນເອກະພາບ ແລະ ປະສານສົມ ທົບກັບ ພາກ ສ່ວນຕ່າງໆ ໃນການສ້າງແຜນການ, ແຜນງານ ແລະ ໂຄງການຕ່າງໆ ທີ່ກ່ຽວຂ້ອງກັບບັນຫາ ລະເບີດ ບໍ່ທັນແຕກ ທີ່ຕົກຄ້າງຢູ່ໃນ ສປປ ລາວ.

47. ບັນດາກະຊວງ, ອົງການທຽບເທົ່າກະຊວງ, ບັນດາແຂວງ, ນະຄອນຫລວງວຽງຈັນ ແລະ ເຂດພິເສດ ເປັນເຈົ້າການ ຈັດຕັ້ງປະຕິບັດ ແຜນຍຸດທະສາດ ແຫງ ຊາດ ເພື່ອການແກ້ໄຂບັນຫາລະເບີດບໍ່ທັນແຕກ ຕົກຄ້າງຢູ່ໃນ ສປປ ລາວ ໃຫ້ໄດ້ຮັບຜົນດີ.

(ແຜນຍຸດທະສາດແຫ່ງຊາດໄດ້ຖືກພິຈາລະນາ ແລະ ຮັບຮອງເອົາ ຢູ່ກອງປະຊຸມລັດຖະບານ ຄັ້ງວັນທີ 29-31 ກໍລະກົດ 2003 ຕາມການສະເໜີ ຂອງລັດຖະມົນຕີວ່າການ ກະຊວງແຮງງານ ແລະ ສະຫວັດດີການສັງຄົມ, ປະທານຄະນະກຳມະການຊີ້ນຳ ໂຄງການເກັບກູ້ລະເບີດແຫ່ງ ສປປລາວ ສະບັບເລກທີ 2480/ຮສສ, ລົງວັນທີ 25 ສິງຫາ 2003).

**ນາຍົກລັດຖະມົນຕີ ,**

ເຊັນ: ບຸນຍັງ ວໍລະຈິດ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ
---------------------------

<u>ສຳນັກງານນາຍົກລັດຖະມົນຕີ</u>

ເລກທີ່ 33/ນຍ
ນະຄອນຫລວງວຽງຈັນ, ວັນທີ 17/03/2004

# ດຳລັດ
# ວ່າດ້ວຍການແຕ່ງຕັ້ງ ຄະນະກຳມະການຄຸ້ມຄອງແຫ່ງຊາດ (ຄຄຊ) ເພື່ອແກ້ໄຂບັນຫາລະເບີດບໍ່ທັນແຕກ ທີ່ຕົກຄ້າງ ໃນ ສປປ ລາວ

---------------------------

- ອີງຕາມ ລັດຖະທຳມະນູນແຫ່ງ ສປປ ລາວ.
- ອີງຕາມ ກົດໝາຍ ວ່າດ້ວຍລັດຖະບານ ແຫ່ງ ສປປ ລາວ.
- ອີງຕາມ ການສະເໜີ ຂອງລັດຖະມົນຕີວ່າການ ກະຊວງແຮງງານ ແລະ ສະຫວັດດີການສັງຄົມ ສະບັບເລກທີ 528/ຮສສ, ລົງວັນທີ 13/02/2004.

## ນາຍົກລັດຖະມົນຕີອອກ ດຳລັດ :

**<u>ມາດຕາ 1:</u>**

ແຕ່ງຕັ້ງ ຄະນະກຳມະການຄຸ້ມຄອງແຫ່ງຊາດ ເພື່ອການແກ້ໄຂບັນຫາລະເບີດບໍ່ທັນແຕກຕົກຄ້າງໃນ ສປປ ລາວ ຊຶ່ງປະກອບດ້ວຍບັນດາທ່ານ ທີ່ມີລາຍຊື່ດັ່ງລຸ່ມນີ້:

1. ພະນະທ່ານ ຮອງນາຍົກລັດຖະມົນຕີ, ເປັນປະທານ
2. ທ່ານ ລັດຖະມົນຕີວ່າການ ກະຊວງແຮງງານ ແລະ ສະຫວັດດີການສັງຄົມ, ເປັນຮອງປະທານ ທັງເປັນຜູ້ປະຈຳການ.
3. ທ່ານ ຜູ້ຕາງໜ້າ ກະຊວງ ການຕ່າງປະເທດ ເປັນ ກຳມະການ
4. ທ່ານ ຜູ້ຕາງໜ້າ ກະຊວງ ປ້ອງການປະເທດ ເປັນ ກຳມະການ
5. ທ່ານ ຜູ້ຕາງໜ້າ ກະຊວງ ປ້ອງກັນຄວາມສະຫງົບ ເປັນ ກຳມະການ
6. ທ່ານ ຜູ້ຕາງໜ້າ ກະຊວງ ສຶກສາທິການ ເປັນ ກຳມະການ
7. ທ່ານ ຜູ້ຕາງໜ້າ ກະຊວງ ຖະແຫລງຂ່າວ ແລະ ວັດທະນະທຳ ເປັນ ກຳມະການ
8. ທ່ານ ຜູ້ຕາງໜ້າ ກະຊວງ ສາທາລະນະສຸກ ເປັນ ກຳມະການ
9. ທ່ານ ຜູ້ຕາງໜ້າ ກະຊວງ ກະສິກຳ ແລະ ປ່າໄມ້ ເປັນ ກຳມະການ
10. ທ່ານ ຜູ້ຕາງໜ້າ ຄະນະກຳມະການ ແຜນການ ແລະ ການລົງທຶນ ເປັນ ກຳມະການ

**<u>ມາດຕາ 2:</u>**

ຄະນະກຳມະການ ຄຸ້ມຄອງແຫ່ງຊາດ ເພື່ອການແກ້ໄຂ ບັນຫາລະເບີດ ບໍ່ທັນແຕກທີ່ຕົກຄ້າງ ມີໜ້າທີ່ຮັບຜິດ ຊອບ ດັ່ງຕໍ່ໄປນີ້:

1. ທົບທວນ ການປະຕິບັດແຜນຍຸດທະສາດ ກ່ຽວກັບການແກ້ໄຂບັນຫາລະເບີດ ຕົກຄ້າງ ຢູ່ ສປປ ລາວ, ເປັນແຕ່ລະໄລຍະ.
2. ກຳນົດ ແລະ ສະໜອງທິດທາງນະໂຍບາຍ ກ່ຽວກັບການແກ້ໄຂບັນຫາລະເບີດ ຕົກຄ້າງ.
3. ຢັ້ງຢືນ, ອອກໃບອະນຸຍາດ, ກວດກາ ບັນດາອົງການປະຕິບັດງານ ເກັບກູ້ລະເບີດ.
4. ຄຸ້ມຄອງ ຖານຂໍ້ມູນ, ການຈັດລຽງ ບູລິມະສິດ ແລະ ວຽກງານ ກ່ຽວຂ້ອງອື່ນໆ ຂອງບັນດາ ອົງການ ປະຕິບັດງານ ເກັບກູ້ລະເບີດ.

5. ປະສານງານ ໃນການຈັດ ກິດຈະກຳຕ່າງໆ ກ່ຽວກັບເກັບກູ້ລະເບີດ ບໍ່ທັນແຕກໃນທົ່ວປະເທດ.
6. ຢັ້ງຢືນ ຄຸນນະພາບ ຂອງບັນດາກິດຈະກຳ ເກັບກູ້ລະເບີດທັງໝົດ.
7. ປະເມີນຜົນກະທົບ ພາຍຫລັງ ສຳເລັດການດຳເນີນການ ເກັບກູ້ລະເບີດ ແລະ ວຽກອື່ນໆ ທີ່ພົວພັນ ກັບການເກັບກູ້ລະເບີດ.

<u>ມາດຕາ 3:</u>

ມອບໃຫ້ ຄະນະກຳມະການຄຸ້ມຄອງແຫ່ງຊາດ ເພື່ອການແກ້ໄຂບັນຫາລະເບີດ ບໍ່ທັນແຕກທີ່ຕົກຄ້າງຢູ່ ສປປ ລາວຄົ້ນຄວ້າ ອອກຂໍ້ກຳນົດ, ກົດລະບຽບ ການເຄື່ອນໄຫວ ແລະ ການຈັດຕັ້ງ ທີ່ກ່ຽວຂ້ອງກັບກິດຈະກຳ ເກັບກູ້ລະເບີດ ແຕ່ຂັ້ນສູນກາງ ລົງຮອດທ້ອງຖິ່ນ.

<u>ມາດຕາ 4:</u>

ຫ້ອງວ່າການ ສນຍ, ບັນດາ ກະຊວງ, ອົງການ ແລະ ທ້ອງຖິ່ນ ກ່ຽວຂ້ອງ ພ້ອມດ້ວຍ ບັນດາທ່ານ ທີ່ໄດ້ຮັບການແຕ່ງຕັ້ງຈົ່ງຮັບຮູ້ ແລະ ປະຕິບັດ ຕາມດຳລັດສະບັບນີ້ ຢ່າງເຂັ້ມງວດ.

<u>ມາດຕາ 5:</u>

ບັນດາດຳລັດ, ຂໍ້ກຳນົດ ແລະ ລະບຽບການອື່ນໆ ທີ່ຂັດກັບດຳລັດ ສະບັບນີ້ ລ້ວນແຕ່ຖືກລົບລ້າງ.

<u>ມາດຕາ 6:</u>

ດຳລັດ ສະບັບນີ້ ມີຜົນສັກສິດ ນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ.

**ນາຍົກລັດຖະມົນຕີ ,**

ເຊັນ: ບຸນຍັງ ວໍລະຈິດ

**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ
------------------

ສຳນັກງານນາຍົກລັດຖະມົນຕີ
ຄະນະກຳມະການຄຸ້ມຄອງແຫ່ງຊາດ
ເພື່ອການແກ້ໄຂບັນຫາລະເບີດບໍ່ທັນແຕກ
ທີ່ຕົກຄ້າງຢູ່ໃນ ສປປ ລາວ (ຄຄຊ)

ເລກທີ 01 / ຄຄຊ.
ນະຄອນຫຼວງວຽງຈັນ, ວັນທີ 30/03/ 06

**ຂໍ້ຕົກລົງ**
**ວ່າດ້ວຍ ການຈັດຕັ້ງ ແລະ ການເຄື່ອນໄຫວຂອງ**
**ຄະນະກຳມະການຄຸ້ມຄອງແຫ່ງຊາດ ເພື່ອການ**
**ແກ້ໄຂບັນຫາລະເບີດບໍ່ທັນແຕກທີ່ຕົກຄ້າງ ຢູ່ໃນ ສປປ ລາວ**

- ອີງຕາມດຳລັດຂອງນາຍົກລັດຖະມົນຕີ ສະບັບເລກທີ 33/ນຍ, ລົງວັນທີ 17/03/2004 ວ່າດ້ວຍການແຕ່ງຕັ້ງ ຄະນະກຳມະການຄຸ້ມຄອງແຫ່ງຊາດ ເພື່ອການແກ້ໄຂບັນຫາລະເບີດບໍ່ທັນແຕກ ທີ່ຕົກຄ້າງຢູ່ໃນ ສປປ ລາວ .
- ອີງຕາມມະຕິຕົກລົງຂອງລັດຖະບານ ສະບັບເລກທີ 01/ນຍ, ລົງວັນທີ 29/04/2005 ວ່າດ້ວຍ ການຮັບຮອງ ແລະ ປະກາດໃຊ້ ແຜນຍຸດທະສາດແຫ່ງຊາດ ກ່ຽວກັບ ການແກ້ໄຂບັນຫາລະເບີດບໍ່ທັນແຕກ ທີ່ຕົກຄ້າງຢູ່ໃນ ສປປ ລາວ.

**ປະທານ ຄຄຊ ອອກຂໍ້ ຕົກລົງ:**

## ໝວດທີ 1
## ບົດບັນຍັດທົ່ວໄປ

<u>ມາດຕາ 1:</u> **ຈຸດປະສົງ**

ຂໍ້ຕົກລົງສະບັບນີ້ ວາງອອກເພື່ອ ກຳນົດພາລະບົດບາດ, ໜ້າທີ່ຄວາມຮັບຜິດຊອບ ແລະ ໂຄງປະກອບການຈັດຕັ້ງຂອງ ຄຄຊ ໃນການເຄື່ອນໄຫວ, ຄຸ້ມຄອງກວດກາບັນດາອົງການປະຕິບັດງານ ທີ່ກ່ຽວກັບການແກ້ໄຂບັນຫາ ລະເບີດບໍ່ທັນແຕກທີ່ ຕົກຄ້າງຢູ່ໃນ ສປປ ລາວ ແລະ ຄຸ້ມຄອງກວດ ກາທຶນ ຊ່ວຍເຫຼືອລ້າເຂົ້າໃນວຽກງານການ ແກ້ໄຂ ບັນຫາລະເບີດບໍ່ທັນແຕກທີ່ຕົກຄ້າງຢູ່ໃນ ສປປ ລາວ.

<u>ມາດຕາ 2:</u> **ທີ່ຕັ້ງ ພາລະບົດບາດ ແລະ ຄວາມຮັບຜິດຊອບ ຂອງ ຄຄຊ.**

ຄຄຊ ແມ່ນອົງການຈັດຕັ້ງທີ່ຂຶ້ນກັບລັດຖະບານແຫ່ງ ສປປ ລາວ ມີພາລະບົດບາດໃນການວາງແຜນນະໂຍບາຍ, ການບໍລິຫານຄຸ້ມຄອງ, ການປະສານງານ ບັນດາອົງການຈັດຕັ້ງ, ຂະແໜງການຕ່າງໆທັງພາຍ ໃນ ແລະ ຕ່າງ ປະເທດທີ່ໄດ້ຮັບອະນຸຍາດໃຫ້ປະຕິບັດວຽກງານ ແກ້ໄຂບັນຫາລະເບີດບໍ່ທັນແຕກທີ່ຕົກຄ້າງ ຢູ່ ໃນ ສປປ ລາວ , ເປັນຈຸດໃຈກາງໃນການປະສານງານການສະໜອງຂໍ້ມູນດ້ານວິຊາ ການ,ເອກະສານຕ່າງໆ ກ່ຽວກັບ ການເຊັນສັນຍາອະນຸ ສັນຍາສາກົນ ແລະ ເຂົ້າຮ່ວມກອງປະຊຸມສາກົນ, ການຈັດສຳມະນາທີ່ກ່ຽວພັນ ເຖິງ ການແກ້ໄຂບັນຫາລະເບີດບໍ່ທັນ ແຕກທີ່ຕົກຄ້າງ/ວັດຖຸລະເບີດທີ່ເສດເຫຼືອຂອງສົງຄາມໃນຖານະຕາງ ໜ້າໃຫ້ແກ່ລັດຖະບານແຫ່ງ ສປປ ລາວ ຕາມ ການມອບໝາຍ.

## ໝວດທີ 2
## ໂຄງປະກອບການຈັດຕັ້ງ

**ມາດຕາ 3 : ໂຄງປະກອບບຸກຄະລະກອນ**

ຄຄຊ ປະກອບສະມາຊິກທັງໝົດຈຳນວນ 10 ທ່ານ. ຖືກແຕ່ງຕັ້ງຕາມດຳລັດຂອງນາຍົກລັດຖະມົນຕີ ສະບັບເລກ ທີ 33/ນຍ,ລົງວັນທີ17/03/2004 ວ່າດວຍການແຕ່ງຕັ້ງຄະນະກຳມະການ ຄຸ້ມຄອງແຫ່ງຊາດ ເພື່ອການ ແກ້ໄຂບັນຫາລະເບີດ ບໍ່ທັນແຕກ ທີ່ຕົກຄ້າງ ຢູ່ໃນ ສປປ ລາວ ຊຶ່ງ ປະກອບດ້ວຍ:

| | | |
|---|---|---|
| 1. | ທ່ານ ຮອງນາຍົກລັດຖະມົນຕີແຫ່ງ ສປປ ລາວ | ເປັນ ປະທານ |
| 2. | ທ່ານ ລັດຖະມົນຕີວ່າການ ກະຊວງແຮງງານ ແລະ ສະຫວັດດີການສັງຄົມ | ເປັນຮອງປະທານ, ຜູ້ປະຈຳການ ຄຄຊ . |
| 3. | ທ່ານ ຜູ້ຕາງໜ້າກະຊວງການຕ່າງປະເທດ | ເປັນກຳມະການ |
| 4. | ທ່ານ ຜູ້ຕາງໜ້າກະຊວງປ້ອງກັນປະເທດ | ເປັນກຳມະການ |
| 5. | ທ່ານ ຜູ້ຕາງໜ້າກະຊວງປ້ອງກັນຄວາມສະຫງົບ | ເປັນກຳມະການ |
| 6. | ທ່ານ ຜູ້ຕາງໜ້າກະຊວງສຶກສາທິການ | ເປັນກຳມະການ |
| 7. | ທ່ານ ຜູ້ຕາງໜ້າກະຊວງຖະແຫລງຂ່າວ ແລະ ວັດທະນະທຳ | ເປັນກຳມະການ |
| 8. | ທ່ານ ຜູ້ຕາງໜ້າກະຊວງສາທາລະນະສຸກ | ເປັນກຳມະການ |
| 9. | ທ່ານ ຜູ້ຕາງໜ້າກະຊວງກະສິກຳ ແລະ ປ່າໄມ້ | ເປັນກຳມະການ |
| 10. | ທ່ານ ຜູ້ຕາງໜ້າ ຄະນະກຳມະການ ແຜນການ ແລະ ການລົງທຶນ | ເປັນກຳມະການ |

ຄຄຊ ມີຫ້ອງການຊ່ວຍວຽກຂອງຕົນເອງຊຶ່ງປະກອບມີ ພະແນກນະໂຍບາຍ ແລະ ບໍລິຫານ, ຄຸ້ມຄອງມາດຕະຖານ, ພະແນກ ປະຕິບັດງານ, ໃນນັ້ນມີພະນັກງານລາວ ແລະ ທີ່ປຶກສາດ້ານວິຊາການ ຕ່າງປະເທດ ຈຳນວນໜຶ່ງ ໂດຍ ອີງໃສ່ຄວາມຕ້ອງການຂອງວຽກ.ຂັ້ນທ້ອງຖິ່ນມີຫ້ອງການ ປະສານງານປະຈຳ ແຕ່ລະແຂວງທີ່ຢູ່ໃນ ເປົ້າໝາຍໃນການເກັບກູ້ລະເບີດທີ່ຍັງບໍ່ທັນແຕກ ຊຶ່ງປະກອບມີພະນັກງານຈຳນວນໜຶ່ງ ຕາມຄວາມເໝາະສົມ. ຫ້ອງການ ຄຄຊ ຂັ້ນສູນກາງປະກອບດ້ວຍ:

1. ຫົວໜ້າຫ້ອງການ 01 ທ່ານຊຶ່ງຖືກແຕ່ງຕັ້ງ ແລະ ປົດຕຳແໜ່ງໂດຍປະທານ ຄຄຊ ຕາມການເຫັນດີຂອງຄະນະກຳມະການຄຸ້ມຄອງແຫ່ງຊາດທີ່ໄດ້ກຳນົດໄວ້ໃນມາດຕາ 03 ຂອງຂໍ້ຕົກລົງສະບັບນີ້ ແລະ ໂດຍການປຶກສາຫາລື ເຫັນດີເຫັນພ້ອມຈາກ ອົງການ ສປຊ ເພື່ອການພັດທະນາປະຈຳ ສປປ ລາວ ກໍ່ຄືບັນດາຜູ້ໃຫ້ທຶນ.
2. ຮອງຫົວໜ້າຫ້ອງການທັງເປັນຫົວໜ້າພະແນກທີ່ຖືກແຕ່ງຕັ້ງແລະປົດຕຳແໜ່ງໂດຍປະທານ ຄຄຊ ຕາມການສະ ເໜີ ຂອງ ຫົວໜ້າຫ້ອງການ ຄຄຊ,
3. ມີພະນັກງານວິຊາການຈຳນວນໜຶ່ງ ຕາມຄວາມຈຳເປັນຂອງວຽກງານ.ຫ້ອງການປະສານງານ ຄຄຊ ຂັ້ນທ້ອງຖິ່ນປະກອບດ້ວຍ: ຫົວໜ້າ 01 ທ່ານ ແລະ ຮອງ 01 ທ່ານຊຶ່ງຖືກແຕ່ງຕັ້ງ ແລະປົດຕຳ ແໜງ ໂດຍປະທານ ຄຄຊ ຕາມການສະເໜີຂອງຫົວໜ້າຫ້ອງການ ຄຄຊ ແລະ ໄດ້ຮັບການເຫັນດີເປັນ ເອກະພາບຈາກອຳນາດການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງພ້ອມນັ້ນຍັງຈະປະກອບມີຜູ້ຊ່ວຍວຽກຈຳນວນ ໜຶ່ງຕາມຄວາມ ເໝາະສົມ.

## ໝວດທີ 3
## ໜ້າທີ່ ແລະ ຂອບເຂດສິດ ຂອງ ຄຄຊ

**ມາດຕາ 5: ໜ້າທີ່ ແລະ ຂອບເຂດສິດ ຂອງ ຄຄຊ**

1. ສ້າງນະໂຍບາຍ ແລະ ຕັດສິນທຸກບັນຫາທີ່ພົວພັນກັບກິດຈະການແກ້ໄຂບັນຫາລະເບີດບໍ່ທັນແຕກທີ່ຕົກຄ້າງ, ຮັບຜິດ ຊອບໃນການຈັດຕັ້ງປະຕິບັດແຜນຍຸດທະສາດແຫ່ງຊາດ ວ່າດ້ວຍ ການແກ້ໄຂ ບັນຫາລະເບີດບໍ່ທັນແຕກ ທີ່ຕົກຄ້າຄ ຢູ່ໃນ ສປປ ລາວ. ໂດຍການຈັດໃຫ້ມີລະບົບປະສານງານຢ່າງກ້ວາງ ຂວາງ, ມີສ່ວນຮ່ວມ ແລະ ການປຶກສາຫາລື ກັບທຸກໆພາກສ່ວນ ທີ່ກ່ຽວຂ້ອງຢ່າງ ເປັນປົກກະຕິ,

2. ທົບທວນຄືນການປະຕິບັດແຜນຍຸດທະສາດແຫ່ງຊາດກ່ຽວກັບການແກ້ໄຂບັນຫາລະເບີດບໍ່ທັນແຕກທີ່ຕົກຄ້າງຢູ່ໃນ ສປປ ລາວ.
3. ກຳນົດ ແລະ ສະໜອງທິດທາງນະໂຍບາຍກ່ຽວກັບການແກ້ໄຂບັນຫາລະເບີດບໍ່ທັນແຕກທີ່ຕົກຄ້າງ ຢູ່ໃນ ສປປ ລາວກ
4. ຢັ້ງຢືນ, ອອກໃບອະນຸຍາດ ແລະ ກວດກາບັນດາອົງການປະຕິບັດງານແກ້ໄຂບັນຫາລະເບີດບໍ່ທັນແຕກທີ່ຕົກ ຄ້າງຢູ່ໃນ ສປປ ລາວ.
5. ຄຸ້ມຄອງບໍລິຫານຖານຂໍ້ມູນ, ການຈັດວາງບຸລິມະສິດ ແລະ ກິດຈະການທີ່ ກ່ຽວຂ້ອງອື່ນໆ ຂອງ ບັນດາອົງການປະຕິບັດງານ ເກັບກູ້ລະເບີດບໍ່ທັນແຕກ.
6. ປະສານງານ ໃນການຈັດກິດຈະກຳຕ່າງໆ ກ່ຽວກັບ ກິດຈະການເກັບກູ້ລະເບີດບໍ່ທັນແຕກທີ່ຕົກ ຄ້າງຢູ່ໃນທົ່ວປະເທດ.
7. ກວດການຄຸນນະພາບຂອງບັນດາກິດຈະກຳການແກ້ໄຂບັນຫາລະເບີດບໍ່ທັນແຕກທີ່ຕົກຄ້າງຢູ່ໃນ ສປປ ລາວ.
8. ປະເມີນຜົນກະທົບພາຍຫຼັງສຳເລັດການດຳເນີນເກັບກູ້ລະເບີດ ແລະ ວຽກງານອື່ນໆທີ່ພົວພັນ ກັບການເກັບກູ້ລະເບີດ ຢູ່ ໃນ ສປປ ລາວ.
9. ກຳນົດ ແລະ ຈັດຕັ້ງປະຕິບັດກົນໄກການປະສານງານສຳລັບ ຂະແໜງການແກ້ໄຂບັນຫາລະ ເບີດບໍ່ທັນແຕກ ທີ່ຕົກຄ້າງຢູ່ໃນ ສປປ ລາວ.
10. ກຳນົດ ແລະ ຈັດຕັ້ງປະຕິບັດລະບົບ ນິຕິກຳ ສຳລັບຂະແໜງການແກ້ໄຂບັນຫາລະເບີດບໍ່ທັນແຕກທີ່ຕົກຄ້າງຢູ່ໃນ ສປປ ລາວ ບົນພື້ນຖານທີ່ບໍ່ ຂັດກັບ ຂໍ້ຕົກລົງສະບັບນີ້, ກົດໝາຍ ແລະ ນະໂຍບາຍ ຂອງ ລັດຖະບານ ແຫ່ງ ສປປ ລາວ.
11. ພັດທະນາ ແລະ ດຳເນີນລະບົບການວາງແຜນ, ການຈັດບູລິມະສິດ ແລະ ການກຳນົດໜ້າວຽກ ສຳລັບ ບັນດາອົງການ ປະຕິບັດງານ ການແກ້ໄຂບັນຫາລະເບີດບໍ່ທັນແຕກທີ່ຕົກຄ້າງ.
12. ພັດທະນາ ແລະ ດຳເນີນລະບົບກວດຕິດຕາມ ສຳລັບ ຂະແໜງການແກ້ໄຂບັນຫາລະເບີດບໍ່ທັນແຕກທີ່ຕົກຄ້າງ ຢູ່ໃນ ສປປ ລາວ.
13. ອອກໃບຢັ້ງຢືນ ອະນຸມັດໃຫ້ພາກເອກະຊົນດຳເນີນການເກັບກູ້ລະເບີດໃນນາມທຸລະກິດ ໂດຍປະສານງານ ກັບ ຄະນະກຳມະການແຜນການແລະການລົງທຶນ(ຄຜລ).
14. ອະນຸມັດ ແລະ ກວດກາຕິດຕາມການນຳໃຊ້ທຶນຊ່ວຍເຫຼືອລ້າໃຫ້ແກ່ວຽກງານແກ້ໄຂບັນຫາລະເບີດບໍ່ທັນແຕກທີ່ຕົກ ຄ້າງຢູ່ໃນ ສປປ ລາວຢ່າງສະໝຳສະເໝີ.
15. ຄຸ້ມຄອງບັນຊີພາຫະນະ, ວັດຖຸອຸປະກອນ ແລະ ອຸປະກອນເຕັກນິກຕ່າງໆຂອງ ຄຄຊ ແລະ ຂອງ ບັນດາອົງການປະຕິບັດງານ ການແກ້ໄຂບັນຫາລະເບີດບໍ່ທັນແຕກທີ່ຕົກຄ້າງຢູ່ໃນ ສປປ ລາວ.
16. ປະຕິບັດສິດ ແລະໜ້າທີ່ອື່ນໆຕາມການມອບໝາຍ ຈາກ ລັດຖະບານ.

## ໝວດທີ 4
## ຂອບເຂດສິດ ແລະ ໜາທີ່ ຂອງ ຫ້ອງການ ຄຄຊ

**<u>ມາດຕາ 6</u> : ຂອບເຂດສິດ ແລະ ໜ້າທີ່ ຂອງ ຫ້ອງການ ຄຄຊ**

1. ເປັນເສນາທິການໃຫ້ ຄຄຊ ໃນທຸກໆບັນຫາ ກ່ຽວກັບ ກິດຈະການແກ້ໄຂບັນຫາລະເບີດບໍ່ທັນແຕກທີ່ຕົກຄ້າງ ຢູ່ໃນ ສປປ ລາວ ຕາມການມອບຫມາຍ,
2. ຄົ້ນຄ້ວານຳສະເໜີບັນດາ ນະໂຍບາຍ, ຍຸດທະສາດ, ງົບປະມານ ແລະ ແຜນການດຳເນີນງານຕ່າງໆ ທີ່ກ່ຽວ ພັນກັບກິດຈະການແກ້ໄຂບັນຫາລະເບີດບໍ່ທັນແຕກທີ່ຕົກຄ້າງ ເພື່ອຂໍທິດຊີ້ນຳ, ຂໍການດັດແກ ແລະ ຂໍອະນຸມັດຢ່າງເປັນ ທາງການ ຈາກປະທານ ຄຄຊ,
3. ກຳນົດ, ປັບປຸງ ຫຼື ປ່ຽນແປງ ໂຄງປະກອບການຈັດຕັ້ງ, ພະແນກການ ແລະ ໜ່ວຍງານຕ່າງໆ ຂອງ ຫ້ອງການ ຄຄຊ ຕາມຄວາມຮຽກຮ້ອງຕ້ອງການ ແລະ ຄວາມຈຳເປັນ ຂອງວຽກງານຕົວຈິງ ເພື່ອສະເໜີຂໍການອະນຸມັດຈາກ ຄຄຊ,
4. ຮັບຜິດຊອບການຄຸ້ມຄອງບໍລິຫານ, ບັນຊີ - ການເງິນ ແລະ ການນຳໃຊ້ຊັບສິນບັດທັງໝົດ ຂອງ ຄຄຊ.
5. ສັງລວມ, ວິໄຈ ແລະ ເຜີຍແຜ່ຂໍ້ມູນຂ່າວສານ ທີ່ພົວພັນກັບກິດຈະການແກ້ໄຂບັນລະເບີດ ບໍ່ທັນ ແຕກຕົກຄ້າງຢູ່ໃນ ສປປ ລາວ,
6. ຕາງໜ້າໃຫ້ ຄຄຊ ໃນການປະສານສົມທົບກັບ ບັນດາຂະແໜງການ, ທ້ອງຖິ່ນ ແລະ ທຸກພາກສ່ວນທີ່ກ່ຽວຂ້ອງ ເພື່ອສຶກສາຄົ້ນຄວ້າ ແຜນການຄຸ້ມຄອງ ແລະ ກວດຕິດຕາມກິດຈະການແກ້ໄຂບັນຫາລະເບີດບໍ່ທັນແຕກຕົກຄ້າງ ຢູ່ໃນ ສປປ ລາວ, ນັບທັງການຮ່າງ ນະໂຍບາຍ, ລະບຽບການ ຄຸ້ມຄອງ,

ບັນຫາເຕັກນິກ, ການໂຄສະນາເຜີຍແຜ່ຜົນກະທົບ ຂອງລະເບີດບໍ່ທັນແຕກຕົກຄ້າງ ທີ່ມີຕໍ່ການພັດທະນາເສດຖະກິດ - ສັງຄົມ ແລະ ຂະບວນການແກ້ໄຂບັນຫາດັ່ງ ກ່າວ.

7. ກວດຕິດຕາມຊຸກຍູ້ ແລະ ສະໜັບສະໜູນການຈັດຕັ້ງປະຕິບັດແຜນຍຸດທະສາດແຫ່ງຊາດ ກ່ຽວກັບ ການແກ້ໄຂບັນຫາລະ ເບີດບໍ່ທັນແຕກທີ່ຕົກຄ້າງຢູ່ ໃນ ສປປ ລາວ ແລະ ລະບຽບກົດໝາຍອື່ນໆ ທີ່ກ່ຽວ ຂອງ.
8. ກວດຕິດຕາມ ກິດຈະກຳຕ່າງໆ ຂອງ ບັນດາ ອົງການປະຕິບັດງານແກ້ໄຂບັນຫາລະເບີດບໍ່ທັນແຕກທີ່ຕົກຄ້າງ ໃນສປປ ລາວ, ບັນດາຫ້ອງການໃນທ້ອງຖິ່ນ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ ເພື່ອລາຍງານໃຫ້ ຄຄຊ ແຕ່ລະໄລຍະຢ່າງປົກກະຕິ.
9. ຕາງໜ້າ ຄຄຊ ໃນການອະນຸມັດການໃຊ້ຈ່າຍຂອງຫ້ອງການ ຄຄຊ ໂດຍອີງຕາມແຜນງົບປະມານທີ່ຖືກຮັບຮອງແລ້ວ, ທັງຮັບຜິດຊອບໂດຍກົງຕໍ່ໜ້າກົດໝາຍ ຂອງ ສປປ ລາວ ໃນກໍລະນີການສໍ້ໂກງ ແລະ ບໍ່ໂປ່ງໃສໃນການນຳໃຊ້ທຶນ ຂອງ ຄຄຊ.

**<u>ມາດຕາ 7</u>: ຂອບເຂດສິດ ແລະ ໜ້າທີ່ ຂອງ ພະແນກ ນະໂຍບາຍ ບໍລິຫານ ແລະ ຄຸ້ມຄອງມາດຕະຖານ**

1. ບໍລິຫານວຽກງານປະຈຳວັນ ຂອງ ຫ້ອງການ ຄຄຊ (ວຽກຈັດຕັ້ງ, ຄຸ້ມຄອງບໍລິຫານບັນຊີ - ການເງິນ, ການສະ ໜອງ-ຈັດຊື້ ແລະ ອື່ນໆ),
2. ຄຸ້ມຄອງຄຸນນະພາບຂອງກິດຈະການແກ້ໄຂບັນຫາລະເບີດບໍ່ທັນແຕກທີ່ຕົກຄ້າງຢູ່ໃນ ສປປ ລາວ ຊຶ່ງລວມມີ: ການຢັ້ງຢືນຮັບຮອງ, ການອະນຸຍາດ, ການຊີ້ນຳ, ການດຳເນີນ, ການຮັບປະກັນ ຄຸນນະພາບ ແລະ ການປະເມີນຜົນກະທົບພາຍຫຼັງການເກັບກູ້ ໂດຍອີງຕາມຄຳນິຍາມ ຂອງ ມາດຕະຖານ ແຫ່ງຊາດ.

**<u>ມາດຕາ 8</u>: ຂອບເຂດສິດ ແລະ ໜ້າທີ່ ຂອງ ພະແນກປະຕິບັດງານ** :

1. ຈັດບຸລິມະສິດ ແລະ ໜ້າວຽກ ໃຫ້ແກ່ ບັນດາປະຕິບັດງານ,
2. ປະສານງານ ກິດຈະການແກ້ໄຂບັນຫາລະເບີດບໍ່ທັນແຕກທີ່ຕົກຄ້າງຢູ່ໃນ ສປປ ລາວ ກັບບັນດາກຸ່ມປະຕິບັດງານດ້ານ ດານເຕັກນິກ.
3. ດຳເນີນງານຕາມມາດຕະຖານການປະຕິບັດງານແຫ່ງຊາດ ແລະ ບົດຮຽນພຶດຕິກຳ ທີ່ດີ ແລະ ຍອມຮັບໃນເວທີສາກົນ.
4. ກະກຽມແຜນປະຕິບັດງານປະຈຳປີຂອງພະແນກ, ກວດຕິດຕາມການປະຕິບັດ ແຜນງານ ດັ່ງກ່າວ ແລະ ຊຸກຍູ້ໃຫ້ ບັນລຸຜົນສຳເລັດຕາມວັດຖຸປະສົງ ແລະ ເປົ້າໝາຍທີ່ ຄຄຊ ໄດ້ກຳນົດໄວ້.
5. ຄຸ້ມຄອງບໍລິຫານ ຖານຂໍ້ມູນແຫ່ງຊາດ ກ່ຽວກັບ ກິດຈະການແກ້ໄຂບັນຫາລະເບີດບໍ່ທັນແຕກ ທີ່ຕົກຄ້າງ ແລະ ວິເຄາະຂໍ້ມູນພ້ອມທັງສະໜອງຂໍ້ມູນດັ່ງກ່າວໃຫ້ແກ່ບັນດາອົງການປະຕິບັດງານ ແລະ ຂະແໜງການອື່ນ ທີ່ກ່ຽວຂ້ອງທັງພາຍໃນ ແລະ ຕ່າງປະເທດ ຕາມຄວາມເໝາະສົມເພື່ອເປັນບ່ອນອີງ ໃນການຈັດບຸລິມະສິດ ແລະ ສ້າງແຜນການປະຕິບັດງານ.

**<u>ມາດຕາ 9</u> : ທີ່ຕັ້ງ, ສິດ ແລະ ໜ້າທີ່ ຂອງ ຫ້ອງການປະສານງານ ຄຄຊ ຂັ້ນທ້ອງຖິ່ນ.**

ຫ້ອງການປະສານງານ ຄຄຊ ຂັ້ນທ້ອງຖິ່ນເປັນຕົວແທນໃຫ້ແກ່ຫ້ອງການ ຄຄຊ ສູນກາງ ໂດຍສາຍຕັ້ງຂຶ້ນກັບ ຫ້ອງການ ຄຄຊ ສູນກາງ ແລະ ສາຍຂວາງ ຂຶ້ນກັບອຳນາດການປົກຄອງແຂວງ. ດ້ານວິຊາສະເພາະ ໃຫ້ລາຍງານໂດຍກົງ ຕໍ່ຫ້ອງການ ຄຄຊ ສູນກາງ ໂດຍມີການຢັ້ງຢືນຈາກອຳນາດການປົກຄອງແຂວງ. ຫ້ອງການ ປະສານງານ ຄຄຊ ຂັ້ນທ້ອງຖິ່ນ ມີສິດ ແລະ ໜ້າທີ່ດັ່ງນີ້:

1. ເປັນໜ່ວຍງານເສນາທິການໃຫ້ແກ່ຫ້ອງການ ຄຄຊ ສູນກາງໃນທຸກບັນຫາທີ່ກ່ຽວພັນກັບກິດຈະການແກ້ໄຂບັນຫາລະ ເບີດບໍ່ທັນແຕກທີ່ຕົກຄ້າງຢູ່ຂັ້ນທ້ອງຖິ່ນ ຕາມການມອບໝາຍ.
2. ສັງລວມ ແລະ ເຜີຍແຜ່ຂໍ້ມູນຂ່າວສານທີ່ພົວພັນເຖິງການແກ້ໄຂບັນຫາລະເບີດບໍ່ທັນແຕກທີ່ຕົກຄ້າງໃນລະດັບທ້ອງຖິ່ນ.
3. ປະສານສົມທົບກັບບັນດາພະແນກການທີ່ກ່ຽວຂ້ອງໃນທ້ອງຖິ່ນແລະ ບັນດາອົງການ ປະຕິບັດງານ ທັງພາຍໃນ ແລະ ຕ່າງປະເທດ ເພື່ອແກ້ໄຂບັນຫາ ລະເບີດທີ່ບໍ່ທັນແຕກຕົກຄ້າງຢູ່ທ້ອງຖິ່ນ ໃນການຄຸ້ມຄອງ, ອຳນວຍ ຄວາມສະດວກ ແລະ ການເຜີຍແຜ່ຜົນກະທົບ ຂອງ ລະເບີດບໍ່ທັນແຕກຕົກຄ້າງ ທີ່ມີຕໍ່ການພັດທະນາເສດຖະກິດ - ສັງຄົມຂອງ ແຂວງ ແລະ ການແກ້ໄຂບັນຫາ ດັ່ງກ່າວ,
4. ສົມທົບກັບ ອຳນາດການປົກຄອງແຂວງ ແລະ ບັນດາອົງການຈັດຕັ້ງທີ່ກ່ຽວຂ້ອງ ທັງພາຍໃນ ແລະ ຕ່າງປະເທດ ໃນການເກັບກຳຂໍ້ມູນກ່ຽວກັບລະເບີດບໍ່ທັນແຕກທີ່ຕົກຄ້າງ ແລະ ການຈັດບູລິມະສິດຂອງແຂວງໃນການແກ້ໄຂບັນ ຫາດັ່ງກ່າວ ແລ້ວລາຍງານໃຫ້ຫ້ອງ ການ ຄຄຊ ສູນກາງເພື່ອສ້າງແຜນການລວມໃນແຕ່ລະໄລຍະ ຮັບປະກັນໃຫ້ແຜນບຸລິມະສິດນັ້ນສອດຄ່ອງ ກັບແຜນພັດທະນາເສດຖະກິດ-ສັງຄົມ ໃນລະດັບ ທ້ອງຖິ່ນ ກໍ່ຄື ສູນ ກາງ,

5. ກວດຕິດຕາມ, ຊຸກຍູ້ ແລະ ສະໜັບສະໜູນການຈັດຕັ້ງປະຕິບັດ ແຜນຍຸດທະສາດ ແຫ່ງ ຊາດ ເພື່ອການແກ້ໄຂບັນຫາ ລະເບີດບໍ່ທັນແຕກທີ່ຕົກ ຄ້າງ ຢູ່ໃນທ້ອງຖິ່ນ.
6. ປະສານສົມທົບກັບອຳນາດການປົກຄອງທ້ອງຖິ່ນ ແລະ ບັນດາ ອົງການ ປະຕິບັດງານ ທັງພາຍໃນ ແລະ ຕ່າງປະເທດ ເພື່ອການແກ້ໄຂບັນ ຫາລະເບີດບໍ່ທັນ ແຕກທີ່ຕົກຄ້າງພ້ອມທັງເຮັດບົດສະຫຼຸບລາຍງານ ກ່ຽວກັບ ຄວາມຄືບໜ້າ ແລະ ຜົນໄດ້ຮັບ ຂອງ ການປະກົດບັດກິດຈະກຳ ດັ່ງກ່າວ ໃນທ້ອງຖິ່ນໃຫ້ ຫ້ອງການ ຄຄຊ ສູນກາງ ເປັນແຕ່ລະໄລຍະ ຢ່າງເປັນປົກກະຕິ.

## ໝວດທີ 5
## ລະບອບແບບແຜນວິທີເຮັດວຽກ

**ມາດຕາ 10: ການວາງແຜນ**

1. ການວາງແຜນການປະຕິບັດງານຢູ່ຂັ້ນສູນກາງຕ້ອງສອດຄ່ອງກັບບັນດາບຸລິມະສິດ ດັ່ງທີ່ໄດ້ ລະບຸໄວ້ໃນ ແຜນຍຸດທະສາດແຫ່ງຊາດ ວ່າດ້ວຍ ການຈະເລີນເຕີບໂຕ ແລະ ການລຶບລ້າງຄວາມທຸກຍາກ (NGPES) ແລະ ແຜນພັດທະນາເສດຖະກິດ - ສັງຄົມ ຂອງ ທ້ອງຖິ່ນດ້ວຍ.
2. ການວາງແຜນປະຕິບັດງານຕ້ອງຕອບສະໜອງຕາມບັນດາບຸລິມະສິດ ແລະ ຄວາມຮຽກຮ້ອງຕ້ອງການ ຂອງທ້ອງຖິ່ນຕາມ ການສະເໜີຂອງຊຸມຊົນທີ່ຖືກຜົນກະທົບຈາກລະເບີດບໍ່ທັນແຕກທີ່ຕົກຄ້າງ,
3. ໃນການດຳເນີນລະບົບການວາງແຜນ ຈະຕ້ອງເລີ້ມຈາກຂັ້ນທ້ອງຖິ່ນໂດຍການມີສ່ວນຮ່ວມ ຂອງທຸກ ຝ່າຍທີ່ກ່ຽວຂ້ອງ ເຊັ່ນຊຸມຊົນທີ່ຖືກກະທົບ, ອົງການປະຕິບັດງານ, ອຳນາດການປົກຄອງ ແລະ ອົງການພັດທະນາ ໃນເຂດເປົ້າໝາຍ ໃນການສະໜອງຂໍ້ມູນເຂົ້າໃນການວາງແຜນ.

**ມາດຕາ 11: ຖານຂໍ້ມູນ**

ຂໍ້ມູນທັງໝົດທີ່ພົວພັນກັບກິດຈະການແກ້ໄຂບັນຫາລະເບີດບໍ່ທັນແຕກທີ່ຕົກຄ້າງຕ້ອງຖືກ ບັນ ທຶກໄວ້ໃນ ຖານ ຂໍ້ມູນແຫ່ງຊາດ ພາຍໃຕ້ການຄຸ້ມຄອງຂອງຫ້ອງການ ຄຄຊ. ຄຄຊ ຈະ ເປີດ ກວ້າງໃຫ້ ທຸກພາກສ່ວນ ທີ່ກ່ຽວຂ້ອງ ສາມາດນຳໃຊ້ຂໍ້ມູນດັ່ງກ່າວເຂົ້າໃນການວາງແຜນ. ບັນດາອົງການ ປະຕິບັດງານ ແລະ ບັນດາຂະແໜງການທີ່ກ່ຽວ ຂ້ອງກັບການແກ້ໄຂບັນຫາລະເບີດບໍ່ທັນແຕກ ທີ່ຕົກຄ້າງ ຕ້ອງລາຍງານແຜນປະຕິບັດງານ, ກິດຈະກຳ, ຜົນໄດ້ ຮັບ ຂອງການປະຕິບັດງານຂອງຕົນ ແລະ ຂໍ້ມູນ ອື່ນໆທີ່ກ່ຽວຂ້ອງໃຫ້ຫ້ອງການ ຄຄຊ ຢ່າງເປັນປົກກະຕິ ຕາມແບບຮ່າງບົດ ລາຍງານ ແລະ ໄລຍະເວລາ ທີ່ຫ້ອງການ ຄຄຊ ໄດ້ກຳນົດໄວ້.

**ມາດຕາ 12: ລະບອບປະຊຸມ ຂອງ ຄຄຊ**

1. ຄຄຊ ຈະຈັດກອງປະຊຸມສາມັນຂອງຕົນຂຶ້ນ ປີລະ 2 ຄັ້ງ (ທຸກໆ 6 ເດືອນ) ຕາມການຕົກລົງຂອງ ປະທານ ເພື່ອ ຄົ້ນຄວ້າປະກອບຄຳເຫັນໃສ່ບົດສະຫຼຸບລາຍງານຕ່າງໆ ຂອງ 6 ເດືອນຕົ້ນປີ ແລະ ວາງ ທິດທາງ ແຜນການ 6 ເດືອນ ຕໍ່ໜ້າ. ພ້ອມນັ້ນ ກອງປະຊຸມຍັງຈະໄດ້ຄົ້ນຄວ້າບັນຫາອື່ນໆ ທີ່ເຫັນວາຈຳເປັນ.
2. ກອງປະຊຸມ ຄຄຊ ຈະສາມາດຈັດຂຶ້ນໄດ້ກໍຕໍ່ເມື່ອມີຄະນະກຳມະການຢ່າງໜ້ອຍສຸດ 5 ທ່ານທີ່ເຂົ້າຮ່ວມ ໂດຍບວກໃສ ປະທານ ຫຼື ຮອງປະທານ.
3. ການລົງປະຊາມະຕິຮັບຮອງເອົາບັນຫາຕ່າງໆ ຢູ່ໃນກອງປະຊຸມນັ້ນໃຫ້ ຖືເອົາຫຼັກການລວມ ສູນປະ ຊາທິປະໄຕໂດຍຖືເອົາສຽງສ່ວນຫລາຍ,ໃນກໍລະນີການອອກສຽງເທົ່າກັນໃຫ້ຂຶ້ນກັບການຕັດສິນໃຈ ຂອງປະທານກອງປະຊຸມໃນຄັ້ງນັ້ນ.
4. ອົງການ ສປຊ ເພື່ອການພັດທະນາ ປະຈຳ ສປປ ລາວ ແລະ ບັນດາຜູ້ໃຫ້ທຶນ ຈະຖືກເຊີນເຂົ້າຮ່ວມກອງ ປະຊຸມສາມັນ ຂອງ ຄຄຊ ໃນ ຖານະເປັນຜູ້ສັງເກດການ.
5. ປະທານ ຄຄຊ ສາມາດຕົກລົງຮຽກກອງປະຊຸມວິສາມັນຂຶ້ນເພື່ອພິຈາລະນາແກ້ໄຂບັນຫາຕ່າງໆ ທີ່ເຫັນວ່າ ຈຳເປັນ ແລະ ຮີບດ່ວນ.
6. ກອງປະຊຸມ ຄຄຊ ທຸກໆຄັ້ງຕ້ອງມີການບັນທຶກຜົນໄດ້ຮັບກໍ່ຄືການຕົກລົງບັນຫາຕ່າງໆ ຢ່າງລະອຽດ ແລະ ຖືກຕ້ອງ.

**ມາດຕາ 13: ການເຂົ້າຮ່ວມກອງປະຊຸມສາກົນ**

ຄຄຊ ເປັນຜູ້ຕາງໜ້າໃຫ້ແກ່ລັດຖະບານແຫ່ງ ສປປ ລາວ ໃນການເຂົ້າຮ່ວມກອງປະຊຸມ ທີ່ພົວພັນ ກັບການແກ້ ໄຂ ບັນຫາລະເບີດບໍ່ທັນແຕກທີ່ຕົກຄ້າງ ແລະ ບັນຫາວັດຖຸລະເບີດທີ່ເສດເຫລືອຈາກສົງ ຄາມໃນເມື່ອໄດ້ຮັບອະນຸມັດ ຈາກລັດຖະບານ. ໃນກໍລະນີຈຳເປັນ, ຄຄຊ ອາດຈະສະເໜີໃຫ້ ກະຊວງ ການຕ່າງປະເທດແຕ່ງຕັ້ງເຈົ້າໜ້າທີ່ຈາກ ສະຖານ ເອກອັກຄະລັດຖະທູດລາວທີ່ປະຈຳຢູ່ໃນ ປະເທດ ກ່ຽວຂ້ອງ ເຂົ້າຮ່ວມແທນຕົນກໍ່ໄດ້ .

<u>ມາດຕາ 14:</u> **ການເຊັນ ຂໍ້ຕົກລົງ ແລະ ສັນຍາຕ່າງໆ**

- ຕາມການມອບໝາຍຂອງລັດຖະບານ, ຄຄຊ ຈະປະຕິບັດຕາມຂັ້ນຕອນ ແລະ ລະບຽບການ ຕ່າງໆຂອງລັດຖະບານແຫ່ງ ສປປ ລາວ ໃນການຂໍອະນຸມັດສັນຍາກ່ຽວກັບກິດຈະການແກ້ໄຂບັນຫາ ລະເບີດບໍ່ທັນແຕກທີ່ຕົກຄ້າງ, ໂດຍການເຮັດສັນຍາຍ່ອຍ ກັບ ອົງການປະຕິບັດງານ ຕາມລະບຽບການເຊັນບົດບັນ ທຶກຄວາມເຂົ້າໃຈ (MOU) ລະຫວ່າງ ຄຄຊ ກັບອົງການປະຕິບັດງານ. ທຸກໆເອກະສານທີ່ກ່ຽວ ພັນກັບບັນດາ ຂໍ້ຕົກລົງການສະໜອງທຶນ ລະຫວ່າງ ຜູ້ໃຫ້ທຶນກັບບັນດາອົງການປະຕິບັດງານຕ້ອງຖືກຈັດສົ່ງ ແລະ ເກັບຮັກສາໄວ້ຢູ່ໃນຫ້ອງການ ຄຄຊ.
- ສໍາລັບພາກທຸລະກິດການລົງທຶນ ທັງພາຍໃນ ແລະ ຕ່າງປະເທດເຂົ້າໃນເຂດພື້ນທີ່ ທີ່ຖືກກະທົບຈາກລະເບີດບໍ່ ທັນແຕກຕົກຄ້າງ ທີ່ມີຄວາມປະສົງ ຢາກນໍາໃຊ້ບໍລິການ ການເກັບກູ້ລະເບີດ, ບໍລິສັດເກັບກູ້ລະເບີດຕ່າງປະເທດ ຕ້ອງໄດ້ຮັບອະນຸຍາດຈາກ ຄຄຊ.
- ເພື່ອປະຕິບັດຕາມແຜນຍຸດທະສາດ ແຫ່ງຊາດ ແລະ ເພື່ອໃຫ້ພາກເອກະຊົນມີສ່ວນຮ່ວມ, ຄຄຊ ເປັນຜູ້ເຊັນອະນຸມັດ ທາງດ້ານວິຊາການໃຫ້ພາກເອກະຊົນສ້າງຕັ້ງບໍລິສັດເກັບກູ້ລະເບີດຢູ່ ສປປ ລາວ ໂດຍອີງ ຕາມລະບຽບ ກົດໝາຍ.

<u>ມາດຕາ 15 :</u> **ການຄຸ້ມຄອງບໍລິຫານຊັບສິນ**

1. ຄຄຊ ເປັນຜູ້ຮັບ ແລະ ຄຸ້ມຄອງຊັບສິນບັດທັງໝົດທີ່ບັນດາຜູ້ໃຫ້ທຶນ ມອບ - ໂອນ ໃຫ້ແກ່ລັດຖະບານບໍ່ວ່າຈະ ເປັນວັດຖຸອຸປະກອນ ແລະ ຊັບສິນອື່ນໆ ຂອງວຽກງານການແກ້ໄຂບັນຫາລະເບີດບໍ່ ທັນແຕກທີ່ຕົກຄ້າງ, ຊຶ່ງໄດ້ມີ ການວາງແຜນ ແລະ ມອບຮັບແລ້ວຢ່າງຖືກຕ້ອງ ແລະ ສອດຄ່ອງຕາມກົດໝາຍວ່າດ້ວຍງົບປະມານ, ການຄຸ້ມຄອງ ບໍລິຫານຊັບສິນບັດເຫຼົ່ານັ້ນ ຕ້ອງປະຕິບັດຕາມຂໍ້ຕົກລົງ ແລະບົດບັນທຶກຄວາມເຂົ້າໃຈທີ່ໄດ້ເຊັນ ຮ່ວມກັນ ລະຫວ່າງ ຜູ້ໃຫ້ທຶນ ແລະ ລັດຖະບານແຫ່ງ ສປປ ລາວ.
2. ການຄຸ້ມຄອງບໍລິຫານວັດຖຸອຸປະກອນຕ່າງໆ ທີ່ຖືກຈັດຊື້ ໂດຍທຶນຂອງກອງທຶນພິເສດ ເພື່ອກິດຈະການແກ້ໄຂບັນ ຫາລະເບີດບໍ່ທັນແຕກຕົກຄ້າງຕ້ອງໄດ້ປະຕິບັດຕາມກົດລະບຽບຂອງອົງການ ສປຊ ເພື່ອການພັດທະນາທີ່ຖືກຮັບ ຮອງເອົາໂດຍລັດຖະບານ ແຫ່ງ ສປປ ລາວ,
3. ໃນກໍລະນີທີ່ບົດບັນທຶກຄວາມເຂົ້າໃຈ ຫຼື ຂໍ້ຕົກລົງທີ່ເຊັນກັນ ລະຫວ່າງ ລັດຖະບານແຫ່ງ ສປປ ລາວ ແລະ ບັນດາ ຜູ້ໃຫ້ທຶນກ່ຽວກັບການແກ້ບັນຫາລະເບີດບໍ່ທັນແຕກຕົກຄ້າງ ແຕ່ບໍ່ໄດ້ກໍານົດລະອຽດ ກ່ຽວກັບ ການມອບ - ໂອນວັດຖຸອຸປະກອນ ເມື່ອໂຄງການສິ້ນສຸດລົງ ຜູ້ຕາງໜ້າ ທັງສອງຝ່າຍຕ້ອງປຶກສາຫາລືກັນເພື່ອຄົ້ນຄ້ວາຫາວິທີການ ແກ້ໄຂ ບັນຫາ ດັ່ງກ່າວ ຢ່າງສົມເຫດສົມຜົນ.
4. ບັນດາອົງການຈັດຕັ້ງ ທີ່ບໍ່ສັງກັດລັດຖະບານ (NGO's) ທາງພາຍໃນ ແລະ ຕ່າງປະເທດທີ່ປະຕິບັດງານກ່ຽວກັບ ການແກ້ໄຂບັນຫາລະເບີດບໍ່ທັນແຕກຕົກຄ້າງເພື່ອມະນຸດສະທໍາຢູ່ ສປປ ລາວ ແຕ່ລະປີຕ້ອງໄດ້ແຈ້ງຊັບສິນບັດ, ພາຫະນະຮັບໃຊ້ ແລະຈໍານວນທຶນທີ່ນໍາໃຊ້ເຂົ້າໃນການດໍາ ເນີນງານໃຫ້ແກ່ ຄຄຊ.

<u>ມາດຕາ 16</u> : **ບັນດາ ແຫຼ່ງທຶນ ແລະ ງົບປະມານ**

ຄຄຊ ມີລະບົບບັນຊີການເງິນເປັນຂອງຕົນເອງຊຶ່ງໄດ້ເປີດໄວ້ໃນທະນາຄານທຸລະກິດທີ່ຕົນເອງເຊື່ອໝັ້ນ, ຊຶ່ງລັດຖະບານແຫ່ງ ສປປ ລາວ ຫຼື ບັນດາຜູ້ ໃຫ້ທຶນສາມາດກວດຕິດຕາມໄດ. ບັນດາແຫຼ່ງລາຍຮັບ ແລະ ງົບປະມານ ສໍາລັບ ການໃຊ້ຈ່າຍ ຂອງ ຄຄຊ ໄດ້ມາຈາກຫຼາຍແຫຼ່ງ ດັ່ງຕໍ່ໄປນີ້:

1. ທຶນສົມທົບປະຈໍາປີຂອງລັດຖະບານ ,
2. ການປະກອບສ່ວນຂອງອົງການຈັດຕັ້ງທັງພາກລັດ, ເອກະຊົນ, ບໍລິສັດຫ້າງຮ້ານ ແລະ ບັນດາຫົວໜ່ວຍ ທຸລະ ກິດຕ່າງໆທາງພາຍໃນ ແລະ ຕ່າງປະເທດ,
3. ການຊ່ວຍເຫຼືອຈາກ ຕ່າງປະເທດ, ອົງການຈັດຕັ້ງສາກົນ ແລະ ພາກສ່ວນອື່ນໆ,
4. ບັນດາລາຍຈ່າຍທັງໝົດຂອງ ຄຄຊ ຈະຕອງອີງຕາມງົບປະມານປະຈໍາປີທີ່ໄດ້ຮັບອະນຸມັດແລ້ວ.

<u>ມາດຕາ 17</u>: ການຕົກລົງ ແລະ ການຕັດສິນບັນຫາ.

ລະບອບແບບແຜນວິທີເຮັດວຽກ ຂອງ ຄຄຊ ຕ້ອງປະຕິບັດຕາມຫຼັກການລວມສູນປະຊາທິປະໄຕ, ການຕົກລົງ ແລະ ຕັດສິນບັນຫາຕ່າງໆເປັນໝູ່ຄະນະ, ບຸກຄົນຮັບຜິດຊອບ.

## ໝວດທີ 6
## ບົດບັນຍັດສຸດທ້າຍ

**<u>ມາດຕາ 18</u>: ກາປະທັບ**

ຄຄຊ , ຫ້ອງການ ຄຄຊ ສູນກາງ ແລະ ທ້ອງຖິ່ນມີກາປະທັບເປັນຂອງຕົນເອງເພື່ອຮັບໃຊ້ການເຄື່ອນໄຫວວຽກງານ. ພ້ອມນັ້ນ, ຍັງອະນຸຍາດໃຫ້ ຄຄຊ ມີກາສັນຍາລັກເປັນຂອງຕົນເອງ.

**<u>ມາດຕາ 19</u> : ການຈັດຕັ້ງປະຕິບັດ**

ມອບໃຫ້ ຄູຄຊ, ຫ້ອງການ ຄຄຊ ແລະ ທູກພາກສ່ວນກ່ຽວຂ້ອງຈົ່ງຮັບຮູ້ ແລະ ຈັດຕັ້ງປະຕິບັດ ຂໍ້ຕົກລົງສະບັບນີ້ ຢ່າງເຂັ້ມງວດ. ໃນການຈັດຕັ້ງປະຕິບັດຕົວຈິງຫາກເຫັນວ່າ ມາດຕາໃດບໍ່ສອດຄ່ອງກັບສະພາບຕົວຈິງສາມາດດັດແປງແກ້ໄຂໄດ້.

**<u>ມາດຕາ 20</u>: ຜົນສັກສິດ**

ຂໍ້ຕົກລົງສະບັບນີ້ມີຜົນບັງຄັບໃຊ້ນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ. ບັນດາຂໍ້ຕົກລົງ ແລະ ລະບຽບອື່ນພົວພັນ ກັບ ວຽກງານແກ້ໄຂບັນຫາລະເບີດບໍ່ທັນແຕກຕົກຄ້າງທີ່ຂັດກັບຂໍ້ຕົກລົງສະບັບນີ້ລ້ວນແລ້ວແຕ່ຖືກລົບລ້າງ.

**ປະທານ ຄຄຊ,**

**ເຊັນ: ອາຊາງ ລາວລີ**

*ຕ້ອງການຂໍ້ມູນເພີ່ມເຕີມ ກະຣຸນາພົວພັນ:*

ຄະນະກຳມະການຄຸ້ມຄອງແຫ່ງຊາດ ເພື່ອແກ້ໄຂບັນ
ຫາລະເບີດບໍ່ທັນແຕກ ທີ່ຕົກຄ້າງ ຢູ່ ສປປ ລາວ

ຕູ້ ປ.ນ 345
ໂທ: (856-21)  244 228, 252 617, 244 218
ແຟກ:  (856-21)  244 219
ອີແມວ: nra@laopdr.com     ແວບໄຊ: www.nra.gov.la